# ປະຫວັດສາດໂລກຕາເວັນຕົກສະໄໝໃໝ່

## ເຫຼັ້ມທີ1






ວິທະຍາໄລຄູສາລະວັນ

**2022**

# ປະຫວັດສາດໂລກຕາເວັນຕົກສະໄໝໃໝ່

## ເຫຼັ້ມທີ 1

ຮຽບຮຽງໂດຍ: ວູ໊ເຢືອງນາມ

ຫາງວຽນວັນໂຮ່ງ

ແປ ແລະ ຕີພິມໂດຍ: ຊອ ປທ ນ ສິງອຳໄພ ພິມພາພອນ

ກວດແກ້ໂດຍ: ວັດທະນາ ໝັ້ນວິໄລ

ຊອ ນ ອິນປອນ ເພັງສຸວັນ

ປທ ບຸນທັນ ສຸກສະຫວັນ

ປທ ນ ລຸ້ງຟ້າ ຂັນຕິວົງ

ວິທະຍາໄລຄູສາລະວັນ

**2022**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 100 ......ສພ. ວສ

# ເອກະສານຮັບຮອງ

## ອະນຸມັດຜ່ານການຮັບຮອງການການແປເອກະສານຈາກພາສາຫວຽດນາມມາເປັນພາສາລາວ

ປະຫວັດສາດໂລກຕາເວັນຕົກສະໄໝໃໝ່ (ເຫຼັ້ມ 1)

- ***ອີງຕາມ:*** *ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກໍາສະພາວິທະຍາສາດຂອງໂຮງຮຽນ* ວິທະຍາໄລຄູສາລະວັນປະຈໍາປີ 2021.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກໍາມະການເຫັນວ່າ ບົດຮຽນຮຽງປຶ້ມມີຄວາມຖືກຕ້ອງຕາມຕາມເນື້ອໃນຫຼັກສູດທີ່ໄດ້ກໍາ. ສະນັ້ນ, ສະພາວິທະຍາສາດຈຶ່ງໄດ້ຮັບຮອງ ເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນໍາໃຊ້ເຂົ້າໃນກິດຈະກໍາການຮຽນ - ການສອນໃນ ໂຮງຮຽນວິທະ ຍາໄລຄູສາລະວັນ.

| ຄະນະກໍາມະການກວດສອບ | ລາຍເຊັນ |
|---|---|
| 1. ຊອ ປອ ໂພທອງ ພົງສົງຄາມ | |
| 2. ອຈ ປທ ນ. ຄໍາຂຽງ ຈັນທະວົງສັກ | |
| 3. ຊອ ປທ ມອນໄຊ ຂັນທະຈັກ | |

ທີ່, ສາລະວັນ, ວັນທີ 20 APR 2022

ປະທານສະພາວິທະຍາສາດ

ອຈ. ນ. ສົມປອງ ແສນທະວີສຸກ

Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການແລະກິລາ

ກົມສ້າງຄູ

ວິທະຍາໄລຄູສາລະວັນ

ເລກທີ..............ວຄວ

## ເອກະສານຮັບຮອງ

### ອະນຸມັດຜ່ານການຮັບຮອງການແປເອກະສານຈາກພາສາຫວຽດນາມມາເປັນພາສາລາວ

| ລຳດັບ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຄົ້ນຄວ້າວິໃຈ | ຜູ້ກວດແກ້ |
|---|---|---|---|---|
| 1 | ປະຫວັດສາດໂລກຕາເວັນຕົກລະໄໝໃໝ່ | ສັງຄົມ | ຊອ ປທ ນ ສີງອຳໄພ ພົມພາພອນ | 1.ທ່ານ ວັດທະນາ ໝັ້ນອິໄລ<br>2.ທ່ານ ຊອ ນ ອິນປອນ ເພັງສຸວັນ<br>3.ທ່ານ ປທ ບຸນທັນ ສຸກສະຫວັນ<br>4.ທ່ານ ປທ ນ ລຸ້ງຟ້າ ຂັນຕິວົງ |

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ວັດທະນາ ໝັ້ນອິໄລ | [signature] |
| 2. ທ່ານ ນ ອິນປອນ ເພັງສຸວັນ | [signature] |
| 3. ທ່ານ ປທ ບຸນທັນ ສຸກສະຫວັນ | |
| 4. ທ່ານ ປທ ນ ລຸ້ງຟ້າ ຂັນຕິວົງ | [signature] |

ທີ່, ສາລະວັນ, ວັນທີ ..18/4/2022.....

ຈ ຫົວໜ້າຫ້ອງການວິທະຍາສາດສັງຄົມ

[signature]

ນ. ຄຳສະຫວັນ ຈັນສີຍະວົງ

Khamsavan CHANSEEYAVONG

# ສາລະບານ


ສາລະບານ ........................................................................................................a

ບົດທີ 1.......................................................................................................... 1

ຂະບວນການປະຕິວັດຂອງຊົນຊັ້ນກາງຢູ່ອັງກິດໃນສະຕະວັດທີ XVIII............................................... 1

I. ປະເທດອັງກິດກ່ອນການປະຕິວັດ........................................................................... 1

ຮູບທີ 1 ພະເຈົ້າຊາກເລີທີ 1 Charles I (ປີ ຄ.ສ 1625-1649) ................................................. 14

II. ສົງຄາມພາຍໃນເພື່ອການປະຕິວັດ (ປີ ຄ.ສ 1642-1649)................................................ 16

III. ລະບົບສາທາລະນະລັດ ແລະ ຜະເດັດການຂອງໂຄຣມແວນ ...........................................23

IV. ການຟື້ນຟູລາດຊະວົງ ສະຈອດ ແລະ ສົງຄາມໃນປີ 1688. ...........................................29

V. ສະຫຼຸບ........................................................................................................33

ບົດທີ 2 .........................................................................................................36

ການປະຕິວັດອຸດສະຫະກຳອັງກິດ ສະຕະວັດທີ 18..........................................................36

I ລະບອບການເມືອງອັງກິດຫຼັງການປະຕິວັດນາຍທຶນ..........................................................36

II. ໄລຍະການສະສົມທຶນຮອນຢູ່ປະເທດອັງກິດ..................................................................38

III. ການປະຕິວັດອຸດສະຫະກຳໃນໄລຍະຕົ້ນ..................................................................... 41

III. ໝາກຜົນຂອງການປະຕິວັດຸດສະຫະກຳ.......................................................................47

ບົດທີ 3 ......................................................................................................... 51

ການຕໍ່ສູ້ເພື່ອປົດປ່ອຍຊາດຂອງບັນດາປະເທດຫົວເມືອງຂຶ້ນອັງກິດຢູ່ທະວີບອາເມຣິກາເໜືອ ແລະ ການກຳເນີດປະເທດອາເມຣິກາ. ....................................................................................... 51

I ສະພາບການຂອງ 13 ອະນານິຄົມກ່ອນການປະຕິວັດ.......................................................... 51

II. ສົງຄາມຍາດເອກະລາດຂອງບັນດາຫົວເມືອງຂຶ້ນຢູ່ອາເມຣິກາເໜືອ ແລະ ການກຳເນີດປະເທດອາເມຣິກາ. ......................................................................................................68

III. ປະເທດອາເມຣິກາຫຼັງການປະກາດເອກະລາດ ...............................................................76

IV. ສະພາບການ ແລະ ຄວາມໝາຍຂອງຂະບວນການປະຕິວັດ ................................................. 81

ບົດທີ 4 .........................................................................................................84

ຂະບວນການປະຕິວັດນາຍທຶນຝຣັ່ງຫຼັງສະຕະວັດທີ 18........................................................84

I. ລະບອບລາຊາທິປະໄຕສົມບູນສິດ ບວກບົງ....84
II. ຄວາມຜັນແປຂອງການປະຕວັດນາຍທຶນຝຣັ່ງ (1789-1794) .... 106
III. ທາດແທ້ ແລະ ຄວາມໝາຍປະຫວັດສາດຂອງການປະຕິວັດນາທຶນຢູ່ຝຣັ່ງ. .... 142
ບົດທີ 5 .... 147
ການປະຕິວັດນາຍທຶນ ແລະ ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງກຳມະກອນຢູ່ເອີຣົບ .... 147
ແຕ່ປີ ຄ.ສ 1815-1848.... 147
I ກອງປະຊຸມທາງການທູດໃນປີ 1815 ແລະ ການສ້າງຕັ້ງກຸ່ມພັນທະມິດໃນປີ 1848 .... 147
II. ຂະບວນການປະຕິວັດນາຍທຶນ ແລະ ການຂະຫຍາຍຕົວຂອງລັດທິທຶນນິຍົມ.... 148

# ບົດທີ 1

# ຂະບວນການປະຕິວັດຂອງນາຍທຶນຢູ່ອັງກິດໃນສະຕະວັດທີ XVIII

ຂະບວນການປະຕິວັດນາຍທຶນ ຢູ່ອັງກິດໃນສະຕະວັດທີ XVIII ເປັນຂະບວນການລຸກຂຶ້ນປະທ້ວງຕ້ານອຳນາດການປົກຄອງເກົ່າເພື່ອສ້າງຕັ້ງລະບອບສັງຄົມໃໝ່, ລົບລ້າງການພົວພັນການຜະລິດແບບສັກດີນາທີ່ຫຼ້າຫຼັງ, ເປີດກວ້າງການຜະລິດແບບທຶນນິຍົມທີ່ທັນສະໄໝ. ການປະຕິວັດອັງກິດເປັນຂະບວນການປະຕິວັດຂອງຊົນຊັ້ນກາງທີ່ເກີດຂຶ້ນເປັນອັນດັບທີ 2 ຂອງໂລກ ຖັດມາຈາກຂະບວນການປະຕິວັດ ໂຮນລັງໃນສະຕະວັດທີ XVI ແຕ່ເປັນຂະບວນການປະຕິວັດທຳອິດທີ່ທີ່ມີຄວາມໝາຍອັນໃຫຍ່ຫຼວງຕໍ່ກັບຂະບວນການປະຕິວັດລັດທິທຶນນິຍົມໃນຂົງເຂດທະວີບເອີຣົບ ແລະ ທົ່ວໂລກ.

## I. ປະເທດອັງກິດກ່ອນການປະຕິວັດ

### 1. ພື້ນຖານເສດຖະກິດທີ່ສົ່ງຜົນຕໍ່ກັບຂະບວນການປະຕິວັດອັງກິດ.

**ການຂະຫຍາຍຕົວຂອງອຸດສະຫະກຳ ແລະ ການຄ້າແບບລັດທິທຶນນິຍົມ**

ນັບແຕ່ສະຕະວັດທີ XVI ຂະແໜງອຸດສະຫະກຳອັງກິດມີການຂະຫຍາຍຕົວຢ່າງແຂງແຮງ ມີການພັດທະນາທາງດ້ານເຕັກນິກແບບໃໝ່ ໂດຍສະເພາະແມ່ນຮູບແບບການຈັດຕັ້ງໃໝ່ໃນການອອກແຮງງານເຮັດໃຫ້ກຳລັງແຮງຂອງການຜະລິດນັບມື້ນັບເພີ່ມຂຶ້ນເລື້ອຍໆ.

ການນຳໃຊ້ເຄື່ອງຈັກອາຍນ້ຳເຂົ້າໃນຂະແໜງການຂຸດຄົ້ນບໍ່ແຮ່ໄດ້ຊຸກຍູ້ເຮັດໃຫ້ອຸດສະຫະກຳຂຸດຄົ້ນບໍ່ແຮ່ມີການພັດທະນາ ແລະ ຂະຫຍາຍຕົວເພີ່ມຂຶ້ນ. ໃນຊ່ວງໄລຍະເວລາ 100 ປີ (ຄ.ສ 1551-1651) ປະລິມານຖ່ານຫີນທີ່ຖືກຂຸດຄົ້ນເພີ່ມຂຶ້ນເປັນ 14 ເທົ່າ, ແຕ່ລະປີຂຸດຄົ້ນໄດ້ຫຼາຍກວ່າ 3 ລ້ານໂຕນ. ມາຮອດກາງສະຕະວັດທີ XVII ອັງກິດສາມາຜະລິດຖ່ານຫີນໄດ້ 4/5 ຂອງປະລິມານຖ່ານຫີນທັງໝົດທີ່ຜະລິດໃນຂົງເຂດທະວີບເອີຣົບ, ໃນເວລາດຽວກັນນັ້ນການຂຸດຄົ້ນເຫຼັກເພີ່ມຂຶ້ນ 2 ເທົ່າ, ສັງກະສີ, ທອງແດງ, ເກືອເພີ່ມຂຶ້ນ 6-8 ເທົ່າ. ການນຳໃຊ້ເຕົາຫຼໍ່ໄດ້ຊຸກຍູ້ໃຫ້ການຫຼອມເຫຼັກມີການຂະຫຍາຍຕົວ. ໃນຕອນຕົ້ນຂອງສະຕະວັດທີ XVII ຢູ່ອັງກິດມີເຕົາຫຼອມເຫຼັກທັງໝົດ 800 ເຕົາ ແຕ່ລະອາທິດສາມາດຜະລິດເຫຼັກໄດ້ 3-4 ໂຕນ. ການຜະລິດເຮືອ, ເຄື່ອງປັ້ນດິນເຜົາ ແລະ ເຄື່ອງໂລຫະຕ່າງໆກໍ່ປະສົບຜົນສຳເລັດຫຼາຍສົມຄວນ.

ເດັ່ນກວ່າໝູ່ແມ່ນການຕໍ່າແຜນແພຈາກຂົນແກະ ຖືວ່າເປັນຂະແໜງການຜະລິດທີ່ເກົ່າແກ່, ມີມາແຕ່ເຫິງນານມາແລ້ວໃນອັງກິດຈົນມາຮອດສະຕະວັດທີ XVII ຂະແໜງການຜະລິດນີ້ໄດ້ຂະຫຍາຍຕົວກວ້າງຂວາງທົ່ວອັງກິດ. ຈີນມີນັກການທູດທ່ານໜຶ່ງໄດ້ເວົ້າວ່າ: ທົ່ວລາຊະອານາຈັກອັງກິດນັບແຕ່ຕົວເມືອງຈົນເຖິງຊົນນະບົດທຸກຄົວເຮືອນລ້ວນແຕ່ພາກັນເຮັດເສັ້ນດ້າຍຈາກຂົນສັດ. ໃນກາງສະຕະວັດທີ XVI ປະລິມານເສັ້ນດ້າຍທີ່ອັງກິດສົ່ງອອກຂາຍໃຫ້ຕ່າງປະເທດກວມເຖິງ 80% ຂອງສິນຄ້າສົ່ງອອກທັງໝົດຂອງອັງກິດ. ປີ ຄ.ສ 1964 ການສົ່ງເສັ້ນດ້າຍອອກຂາຍໃຫ້ຕ່າງປະເທດຖືກເກືອດຫ້າມ. ເຮັດໃຫ້ອຸດສະຫະກຳປຸງແຕ່ງໄດ້ເພີ່ມຂຶ້ນຢ່າງແຂງແຮງ ແລະ ອັງກິດໄດ້ກາຍເປັນປະເທດສົ່ງສິນຄ້າທີ່ເຮັດຈາກດ້າຍອອກສູ່ຕະຫຼາດຕ່າງປະເທດ.

ຄຽງຄູ່ກັບບັນດາຂະແໜງອຸດສະຫະກຳແບບເກົ່ານັ້ນຍັງປະກົດມີຂະແໜງອຸດສະຫະກຳໃໝ່ເຊັ່ນການຜະລິດເຈ້ຍ, ແພໄໝ, ເຄື່ອງທີ່ເຮັດດ້ວຍແກ້ວ, ສະບູ່ ...

ດ້ານການຄ້າຂອງອັງກິດໄດ້ປະສົບຜົນສຳເລັດຫຼາຍສົມຄວນ , ຕະຫຼາດຊຸມຊົນໄດ້ປະກົດຕົວຂຶ້ນ ແລະ ພື້ນຖານທຸລະກິດຂອງຊາວຕ່າງປະເທດຄ່ອຍໆລົດນ້ອຍຖອຍລົງ, ບັນດາພໍ່ຄ້າຊາວອັງກິດໄດ້ເປີດກວ້າງການຄ້າຂາຍສິນຄ້າກັບຕະຫຼາດການຄ້າຂອງໂລກ. ມີການສ້າງຕັ້ງບໍລິສັດການຄ້າທີ່ດຳເນີນການເຄື່ອນໄຫວຄ້າຂາຍນັບຕັ້ງແຕ່ທະເລບານຕິກຈົນເຖິງທະວີບອາຟຣິກກາ, ນັບແຕ່ປະເທດຈີນຈົນເຖິງທະວີບອາເມຣິກາ.

ບັນດາບໍລິສັດທີ່ມີຊື່ສຽງໄດ້ແກ່: ບໍລິສັດອາຟຣິກກາ (ຄ.ສ 1533) ທີ່ທຳການຄ້າຂາຍ ຄຳ, ງາຊ້າງ ແລະ ຂ້າທາດຜິວດຳ, ບໍລິສັດ ເອັມອັດຊເກືອາ ທີ່ຄ້າຂາຍລຽບຕາມແມ່ນ້ຳໂວນກາ, ເຂດເປີເຊຍ ແລະ ປະເທດອິນເດຍ, ບໍລິສັດຕາເວັນອອກ (ຄ.ສ 1579) ພົວພັນຄ້າຂາຍກັບບັນດາປະເທດທີ່ລຽບຕາມແຄມທະເລບານຕິກ, ນໍເວ, ສະວິດເຊີແລນ, ໂປແລນ... ບໍລິສັດ ສະເປນ (ຄ.ສ 1577), ບໍລິສັດ ຕວຽກກີ (ຄ.ສ 1581). ມາຮອດປີ 1600 ບໍລິສັດອິນເດຍຕາເວັນອອກໄດ້ຮັບການສ້າງຕັ້ງຂຶ້ນ ໄດ້ຕັ້ງເຂດການຄ້າຫຼາຍແຫ່ງຢູ່ ເຊີຣາດ (Surat), ມາຣາດ, ແບງການ (ອິນເດຍ) ທີ່ກຳລັງແຂ່ງຂັນກັນກັບພໍ່ຄ້າຊາວໂຮນລັງ ແລະ ຊາວຝຣັ່ງ.

ສູນກາງການຄ້າ ແລະ ການເງິນໃຫຍ່ຂອງອັງກິດແມ່ນເຂດຕົວເມືອງ (ລອນດອນ) ປີຄ.ສ 1568 ພະແນກທຸລະກິດໄດ້ຮັບການສ້າງຕັ້ງຂຶ້ນເຊິ່ງສິ່ງຜົນກະທົບອັນໃຫຍ່ຫຼວງຕໍ່ກັບອັງກິດນັບທັງບັນດາປະເທດ

ເອີຣົບ. ຮອດໄລຍະການປະຕິວັດ ການຈໍລະລະຈອນສິນຄ້າ ແລະ ການຄ້າຕ່າງປະເທດເພີ່ມຂຶ້ນເປັນ 2 ເທົ່າຖ້າທຽບໃສ່ຕົ້ນສະຕະວັດ XVII.

ການຂະຫຍາຍຕົວທາງດ້ານການຄ້າຕ່າງປະເທດໄດ້ເຮັດໃຫ້ຂະແໜງອຸດສະຫະກໍາປ່ຽນແປງຢ່າງໄວວາ. ຂະແໜງອຸດສະຫະກໍາ, ການຄ້າ ແລະ ການເດີນເຮືອທາງທະເລຂະຫຍາຍຕົວສູງສຸດເຊິ່ງບໍ່ເຄີຍມີມາກ່ອນ ເປັນປັດໄຈໜຶ່ງທີ່ພາໃຫ້ມີການປະຕິວັດໃນສັງຄົມສັກດີນາທີ່ກໍາລັງອ່ອນແອລົງໃນແຕ່ລະມື້, ຮູບແບບການຜະລິດແບບໃໝ່ໄດ້ຄ່ອຍໆປະກົດຕົວຂຶ້ນ.

ຢູ່ອັງກິດໄດ້ປະກົດມີບໍລິສັດການຄ້າຮຸ້ນສ່ວນກັນທີ່ມີແຮງງານຮັບຈ້າງເປັນຮ້ອຍເປັນພັນຄົນ. ຮູບແບບການຜະລິດທີ່ປະກົດຕົວໃຫ້ເຫັນຫຼາຍໃນເວລານັ້ນແມ່ນໂຮງງານຫັດຖະກໍາ. ໃນການຂະຫຍາຍທຸລະກິດໃນຕົວເມືອງຂອງນາຍທຶນພົບຄວາມຫຍຸ້ງຍາກສຸດໃນຂົງເຂດທີ່ມີລະບອບສັກດີນາຍັງປົກຄອງຢູ່ ເຮັດໃຫ້ເຈົ້າຂອງໂຮງຈັກໂຮງງານຕ້ອງຫັນປ່ຽນການຜະລິດລົງສູ່ເຂດຊົນນະບົດ. ພວກເຂົາສ່ວນຫຼາຍຫັນໄປຊອກຫາຊື້ວັດຖຸດິບເພື່ອຕອບສະໜອງໃຫ້ບັນດາໂຮງງານຜະລິດຂະໜາດນ້ອຍ, ຕອບສະໜອງວັດຖຸກິບໃຫ້ແກ່ບັນດາຄອບຄົວທີ່ເຮັດການຜະລິດ ພ້ອມດຽວກັນນັ້ນພວກເຂົາກໍ່ຈະຊື້ຜະລິດຕະພັນເພື່ອນໍາໄປຂາຍຕໍ່ອີກ. ສະນັ້ນ, ຈິ່ງເຮັດໃຫ້ບັນດານາຍຊ່າງຈິ່ງຫວ່າງງານອາໄສຢູ່ແຕ່ໃນບ້ານເຮືອນ ຫຼື ແຈກຢາຍກັນຢູ່ເຮັດວຽກໃນເຮືອນຂອງນາຍທຶນ. ສ່ວນເຈົ້າຂອງໂຮງງານຫັດຖະກໍາກໍ່ສ້າງໂຮງງານຂະໜາດນ້ອຍຂຶ້ນເພື່ອຜະລິດ ຫຼື ດັດແປງປັບປຸງທຸລະກິດຄັ້ງສຸດທ້າຍເພື່ອຜະລິດສິນຄ້ານໍາໄປຂາຍ. ການຄ້າຂາຍວັດຖຸດິບ ແລະ ການຊື້ຜົນຜະລິດມາຂາຍຕໍ່ຕ້ອງໄດ້ກູ້ຢືມເງິນທີ່ມີດອກເບ້ຍສູງຫຼາຍ ເຮັດໃຫ້ຊີວິດການເປັນຢູ່ຂອງນາຍຊ່າງຫັດຖະກໍານັບມື້ພົບຄວາມຫຍຸ້ງຍາກຂາດເຂີນ, ແຕ່ລະມື້ຕ້ອງໄດ້ອອກງານຫຼາຍ, ເງິນເດືອນພັດຕໍ່າ, ທຸກຍາກລໍາບາກລົ້ມລະລາຍ ຈົນກາຍເປັນກໍາມະກອນຮັບຈ້າງຕາມໂຮງງານ. ໃນເວລາດຽວກັນນັ້ນບັນດາຜູ້ຜະລິດສິນຄ້າເອກະລາດພັດສາມາດຮັກສາບົດບາດ ແລະ ມີຖານະໃນສັງຄົມ.

ການຂະຫຍາຍຕົວຂອງອຸດສະກະກໍາການຄ້າແບບທຶນນິຍົມເຮັດໃຫ້ສະພາບການຂອງປະເທດອັງກິດມີການປ່ຽນແປງ. ບັນດາຕົວເມືອງໃຫຍ່ໄດ້ເກີດຂຶ້ນ, ລອນດອນໄດ້ກາຍເປັນສູນກາງທາງດ້ານອຸດສະຫະກໍາ-ການຄ້າທີ່ສໍາຄັນທີ່ສຸດ ມີປະຊາກອນອາໄສຢູ່ 20 ພັນຄົນ. ເຖິງຢ່າງໃດກໍ່ຕາມອັງກິດໃນຊ່ວງກາງສະຕະວັດທີ XVII ຍັງຖືວ່າອັງກິດຍັງເປັນຮອງບໍ່ສາມາດເອົາຊະນະໂຮນລັງໄດ້ທາງດ້ານອຸດສະຫະກໍາ, ການ

ຄ້າ ແລະ ການເດີນທະເລ. ເວລາໃດອັງກິດກໍ່ພົບກັບການຍາດແຍ່ງລູກຄ້າຈາກເຮືອສິນຄ້າຂອງໂຮນລັງມາໂດຍຕະຫຼອດ.

**ສະພາບທາງດ້ານອຸດສະຫະກຳ ແລະ ຂະຫຍາຍລັດທິທຶນນິຍົມເຂົ້າສູ່ເຂດຊົນນະບົດ**

ເຖິງແມ່ນວ່າໃນເບື້ອງຕົ້ນອັງກິດຈະປະສົບຜົນສຳເລັດທາງດ້ານອຸດສະຫະກຳການຄ້າກໍ່ຕາມແຕ່ມາຮອດຕົ້ນສະຕະວັດທີ XVII ອັງກິດກໍ່ຍັງຖືວ່າເປັນປະເທດທີ່ມີກະສິກຳເປັນພື້ນຖານທາງດ້ານເສດຖະກິດຕົ້ນຕໍ. ໃນຈຳນວນພົນລະເມືອງ 5 ລ້ານຄົນ ມີພົນລະເມືອງທີ່ອາໄສຢູ່ຕາມຕົວເມືອງພຽງແຕ່ 1/5 ຂອງພົນລະເມືອງທັງໝົດ ສ່ວນອີກ 4/5 ແມ່ນພົນລະເມືອງທີ່ອາໄສຢູ່ຕາມເຂດຊົນນະບົດ. ຮູບແບບການຜະລິດແບບສັກດີນາຄອບງຳສັງຄົມອັງກິດເປັນເວລາດົນນານໃນເຂດຊົນນະບົດ. ດິນນາແມ່ນຊັບສິນບັດອັນມີຄ່າຂອງພວກສັກດີນາທ້ອງຖິ່ນ. ຊາວນາທີ່ເຮັດການຜະລິດຕ້ອງໄດ້ເສຍພາສີໃຫ້ເຈົ້າທີ່ດິນຕາມກຳນົດເວລາ ແລະຕາມການຕົກລົງຢ່າງເຄັ່ງຄັດ. ຊາວນາບໍ່ມີສິດທີ່ຈະແບ່ງຂາຍດິນນາໃຫ້ຄົນອື່ນພວກເຂົາພຽງແຕ່ມອບດິນໄຮ່ນາໃຫ້ລູກຫຼານເຮັດ ແລະ ສືບຕໍ່ເສຍພາສີໃຫ້ເຈົ້າທີ່ດິນ ແຕ່ຕ້ອງໄດ້ຮັບອະນຸຍາດຈາກເຈົ້າທີ່ດິນ. ນັບທັງຊາວນາທີ່ພໍມີຖານະໃນສັງຄົມຈະມີດິນເປັນຂອງຕົນເອງກໍ່ຍັງຕ້ອງເສຍພາສີໃຫ້ພວກສັກດີນາ. ເຖິງແມ່ນວ່າຕໍ່ມາລະບອບທາດດີນາໄດ້ພັງທະລາຍລົງກໍ່ຕາມແຕ່ເຈົ້າທີ່ດິນກໍ່ຍັງມີສິດໃນການຄອບຄອງ ແລະ ຄຸ້ມຄອງທາງດ້ານການເງິນໃນເຂດຄຸ້ມຄອງ ແລະ ເຂດປົກຄອງຂອງພວກເຂົາ. ນອກຈາກດິນນາຈະເປັນຂອງພວກເຈົ້າທີ່ດິນແລ້ວ ຊາວນາຮັບຈ້າງກໍ່ຍັງຖືເປັນຊັບສິນບັດສ່ວນຕົວຂອງພວກເຂົາອີກ. ນອກນັ້ນເນື້ອທີ່ດິນຂອງສັກດີນາແລ້ວຍັງມີທີ່ດິນທີ່ເປັນຂອງລວມກໍ່ຍັງຕົກຢູ່ໃນກຳມືຂອງພວກສັກດີນາເຊັ່ນ: ດິນທີ່ເປັນສ່ວນທີ່ເຫຼືອຈາກດິນສ່ວນຕົວ, ເຂດປ່າໄມ້ ແລະ ເຂດທົ່ງຫຍ້າ ເຊິ່ງທຸກຄົນມີສິດນຳໃຊ້ດິນລວມດັ່ງກ່າວນີ້ເຂົ້າໃນການລ້ຽງສັດ. ບັນດາຊາວນາທີ່ທຸກຍາກຕ້ອງອາໄສດິນລວມໃນການເຮັດການຜະລິດກະສິກຳເພື່ອຄວາມຢູ່ລອດໃນການດຳລົງຊີວິດ.

ເຖິງແມ່ນວ່າການຂະຫຍາຍຕົວທາງດ້ານການຜະລິດດ້າຍທີ່ເຮັດຈາກຂົນສັດຈະນັບມື້ນັບເພີ່ມຂຶ້ນກໍ່ຕາມ, ອາຊີບລ້ຽງແກະຖືວ່າເປັນອາຊີບທີ່ມີປະໂຫຍດ ແລະ ສຳຄັນທີ່ສຸດ. ເຈົ້າທີ່ດິນບໍ່ພຽງແຕ່ມີລາຍຮັບຈາກການເກັບພາສີຜົນຜະລິດຈາກຊາວນາເທົ່ານັ້ນ ພວກເຂົາຍັງເພີ່ມລາຍຮັບຂອງຕົນຈາກການຄິດໄລ່ຄ່າເສຍຫາຍ ຫຼື ຄ່າບູລະນາດິນນາທີ່ຊາວນຳກຳລັງຄາດໄຖ, ການອ້ອມຮົ້ວດິນນາ ແລະ ນັບທັງການນຳໃຊ້ດິນລວມເພື່ອສ້າງ

ເປັນທົ່ງຫຍ້າລ້ຽງແກະ, ປູກຝັງ ແລະ ລ້ຽງສັດອື່ນໆ ເຮັດໃຫ້ຊາວນາຕ້ອງໜີປະດິນໄຮ່ນາ, ຊີວິດການເປັນຢູ່ຍິ່ງລໍາບາກຂຶ້ນກວ່າເກົ່າ. ກັບຄືນໄປໃນສະຕະວັດທີ 16 ໂທມັດ ມໍເຣີ ໄດ້ກ່າວເຖິງເຫດການນີ້ວ່າ: ບັນດາແກະທີ່ຄໍາຮູ້ອັນຫຼວງຫຼາຍໃນເມື່ອກ່ອນມາເຖິງປັດຈຸບັນມັນໄດ້ກາຍເປັນສັດທີ່ໃຊ້ໃນການຮຸກຮານ ແລະ ຕອບສະໜອງຄວາມໂລບມາກໂລພາຂອງເຈົ້າທີ່ດິນ. ຍຸກແກະກິນຊີ້ນຄົນ, ມີການທໍາລາຍໄຮ່ນາຮົ້ວສວນ, ເຮືອນຊານບ້ານຊ່ອງ ແລະ ບ້ານເມືອງ. ການປ່ຽນທົ່ງນາມາເປັນທົ່ງຫຍ້າເພື່ອລ້ຽງແກະ ເພິ່ນເອີ້ນຊ່ວງເວລານີ້ວ່າ: ຂະບວນການແກະກິນຊີ້ນຄົນ ເຮັດໃຫ້ເກີດມີຜົນຕາມມາ 2 ຢ່າງຄື: ຊາວນາຖືກຍຶດເອົາດິນນາເຮັດໃຫ້ເຂົາບໍ່ມີດິນທໍາການຜະລິດ ໝາຍຄວາມວ່າຊາວນາຖືກຕັດແຍກອອກຈາກການຜະລິດ ແລະ ກາຍເປັນກໍາລັງການຜະລິດຕົ້ນຕໍທາງດ້ານກະສິກໍາ. ຄວາມຈິງແລ້ວ ມັນແມ່ນຂະບວນການສະສົມທຶນໃນເບື້ອງຕົ້ນ ເປັນປັດໄຈສໍາຄັນໃຫ້ແກ່ການຂະຫຍາຍລັດທິທຶນນິຍົມຢູ່ອັງກິດ. ມາກ ໄດ້ຂຽນໄວ້ວ່າ: ພື້ນຖານວິວັດທະນາການທັງໝົດແມ່ນການຍຶດເອົາດິນາຂອງປະຊາຊົນພຽງແຕ່ເກີດຂຶ້ນໃນປະເທດອັງກິດເທົ່ານັ້ນ. ຍ້ອນແນວນັ້ນສິ່ງທີ່ເກີດຂຶ້ນຫຼັງຈາກນີ້ ແນ່ນອນວ່າອັງກິດຈະຕ້ອງມີບົດບາດສູງທີ່ສຸດ[1].

ໃນທົ່ວປະເທດອັງກິດຍັງສືບຕໍ່ເຮັດການຜະລິດກະສິກໍາ, ພວກເຈົ້າທີ່ດິນຍັງບໍ່ລົດລະໃນການເກັບພາສີ ພວກເຂົາໄດ້ເຮັດການປະຕິຮູບອ້ອມຮົ້ວດິນນາ ແລະ ມອບດິນໃຫ້ນາຍທຶນເຮັດທຸລະກິດຕາມຮູບແບບການຜະລິດແບບໃໝ່, ເຮັດນິຄົມການກະເສດ, ນໍາໃຊ້ແຮງງານຮັບຈ້າງ, ມີການນໍາໃຊ້ປຸ໋ຍເຄມີ, ປັບປຸງລະບອບທົດແທນແຮງງາຄົນດ້ວຍການນໍາໃຊ້ເຄື່ອງຈັກຫວ່ານກ້າ ແລະ ເຄື່ອງມືປະເພດອື່ນອີກ. ການເກັບກ່ຽວຜົນຜະລິດໃນຕອນດິນທີ່ມີຂະໜາດດຽວກັນນັ້ນເຫັນວ່າຜົນຜະລິດເພີ່ມຂຶ້ນຈາກເມື່ອກ່ອນ 3-4 ເທົ່າຕົວຂອງການຜະລິດແບບເກົ່າ ເຮັດໃຫ້ສັງຄົມເກີດມີຊົນຊັ້ນໃຝມໝ່ ນັ້ນກໍ່ຄື: ເຈົ້າຂອງນິຄົມການກະເສດຜູ້ຮັ່ງມີ.

## 2. ການແບ່ງຊັ້ນວັນນະໃນສັງຄົມ.

### ການຈໍາແນກຊົນຊັ້ນໃນກຸ່ມຂຸນນາງຊັ້ນສູງ

ຈຸດພິເສດຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງອັງກິດສິ່ງຜົນໃຫ້ມີການຈໍາແນກຊັ້ນວັນນະໃນສັງຄົມ.

[1] ກາກ ມາກ: ນາຍທຶນ ບົດທີ 26 ເຫຼັ້ມ 2 ໂຮງພິມ ຄວາມຈິງ, 1960 ໜ້າທີ 221-222

ພວກຂຸນນາງຊັ້ນສູງ: ຂຸນນາງພາກຕາເວັນຕົກ ແລະ ຂຸນນາງທາງພາກເໜືອດຳລົງຊີວິດດ້ວຍການເກັບພາສີດິນນາຂອງລະບອບສັກດີນາ, ອີງໃສ່ອຳນາດໃນການເປັນເຈົ້າທີ່ດິນ ແລະ ຮູບແບບການກົດຂີ່ຂູດຮີດແບບສັກດີນາ. ພວກເຂົາຈະມີບົດບາດສູງໃນສັງຄົມ, ມີຄວາມຢູ່ດີກິນດີ, ຕັ້ງບ້ານເຮືອນອ້ອມຮອບພະລາດຊະວັງຂອງກະສັດ, ໄດ້ຮັບການອຸປະຖຳ ແລະ ຊ່ວຍເຫຼືອຈາກກະສັດ. ພວກເຂົາຈະມີຊີວິດຂຶ້ນກັບບອບການປົກຄອງຂອງເຈົ້າຊີວິດ, ປົກປ້ອງລະບອບສັກດີນາ ແລະ ໄດ້ຮັບການຊ່ວຍເຫຼືອຈາກສັກດີນາພາຍນອກ. ນັ້ນແມ່ນຂະບວນການລຸກຂຶ້ນປະທ້ວງຕໍ່ກັບອຳນາດຂອງສັກດີນາ ໄດ້ກາຍເປັນເປົ້າໝາຍຕົ້ນຕໍຂອງການປະຕິວັດ.

ພວກສັກດີນາຈຳນວນໜຶ່ງເປັນຕົ້ນແມ່ນຊົນຊັ້ນກາງໄດ້ກ້າວເຂົ້າສູ່ການເປັນນັກທຸລະກິດຕາມລັດທິທຶນນິຍົມເອີ້ນວ່າພວກຂຸນນາງໃໝ່ ຫຼື ຂຸນນາງນາຍທຶນ. ພວກເຂົາເປັນເຈົ້າການໃນການຈັດສັນເນື້ອທີ່ດິນ, ຂັບໄລ່ຊາວໄຮ່ນາ ແລະ ປັບປ່ຽນໄຮ່ນາຮົ້ວສວນມາເປັນທົ່ງຫຍ້າສຳລັບລ້ຽງສັດ. ກາກມາກໄດ້ຂຽນເຫດການນີ້ວ່າແມ່ນການປ່ຽນທົ່ງໄຮ່ທົ່ງນາມາເປັນທົ່ງຫຍ້າ ນັ້ນແມ່ນຄຳຂວັນໃນການຕໍ່ສູ້ຂອງພວກຂຸນນາງໃໝ່.[2] ເພື່ອເພີ່ມກຳໄລພວກຂຸນນາງໃໝ່ໄດ້ດຳເນີນທຸລະກິດອື່ນເພີ່ມອີກເຊັ່ນ: ຄ້າຂາຍເສັ້ນດ້າຍທີ່ເຮັດຈາກຂົນແກະ, ຊິດ, ເຮັດວາຍ ແລະ ຫຼອມໂລຫະ... ກົງກັນຂ້າມບັນດາພໍ່ຄ້າຜູ້ຮັ່ງມີ ຫຼື ນັກການເງິນ ແລະ ນາຍທຶນອຸດສະຫະກຳລ້ວນແຕ່ກ້າວຂຶ້ນມາເປັນບັນດາຂຸນນາງໃໝ່ດ້ວຍວິທີການຮັບຊື້ດິນນາ ແລະ ເຮັດທຸລະກິດຄ້າຂາຍດິນນາ.

ກຳລັງແຮງທາງດ້ານເສດຖະກິດຂອງພວກຂຸນນາງໃໝ່ມີຄວາມເຂັ້ມແຂງ, ໃນປີ ຄ.ສ 1600 ລາຍຮັບຂອງພວກຂຸນນາງໃໝ່ແມ່ນຫຼາຍກວ່າບັນດາຂຸນນາງເກົ່າ ແລະ ພວກນັກບວດ. ປະມານປີ ຄ.ສ 1561 ເນື້ອທີ່ດິນຂອງກະສັດຫຼຸດລົງ 75% ແຕ່ ດິນນາທີ່ຂຶ້ນກັບຂຸນນາງໃໝ່ເພີ່ມຂຶ້ນເປັນ 20%.

ຍ້ອນແນວນັ້ນເງື່ອນໄຂທາງດ້ານເສດຖະກິດຂອງຂຸນນາງໃໝ່ແມ່ນສະທ້ອນໂດຍກົງຕໍ່ຮູບແບບການຜະລິດແບບລັດທິທຶນນິຍົມໃນເຂດຊົນນະບົດຂອງປະເທດອັງກິດ. ພວກຂຸນນາງໃໝ່ໄດ້ປະກົດຕົວຂຶ້ນມາໃນສັງຄົມໄດ້ກາຍເປັນຊົນຊັ້ນໜຶ່ງໃນສັງຄົມໂດຍສະເພາະແມ່ນມີຄວາມຕິດພັນກັບສິດຜົນຜະໂຫຍດຂອງຊົນຊັ້ນນາຍທຶນ. ເປົ້າໝາຍຂອງພວກເຂົາແມ່ນຕ້ອງການປ່ຽນສິດໃນການຄອບຄອງດິນນາຂອງຂຸນນາງມາເປັນການຄອບຄອງຂອງນາຍທຶນ, ຫຼຸດຜ່ອນຂໍ້ຈຳກັດຕ່າງໆຂອງລະບອບສັກດີນາ. ກົງກັນຂ້າມລະບອບສັກດີນາ

[2] ກາກມາກນາຍທຶນ ເຫຼັ້ມ1 ພາກທີ 3 ໂຮງພິມຄວາມຈິງ, ຮ່າໂນ້ຍ, 1960 ໜ້າທີ 226

ໄດ້ເພີ່ມທະວີບການກວດກາສິດໃນການຄອບຄອງຂອງພວກຂຸນນາງໃໝ່, ປົກປ້ອງ ແລະ ຮັກສາສິດຜົນປະໂຫຍດ ຂອງພວກຂຸນນາງເກົ່າ ແລະ ນັກບວດ. ສະນັ້ນ, ຈຶ່ງເຮັດໃຫ້ພວກນາຍທຶນຕິດຕໍ່ພົວພັນກັບພວກຂຸນນາງໃໝ່ໄດ້ຢ່າງງ່າຍດາຍ ເພື່ອປົກປ້ອງລະບອບສັກດີນາ. ຂະບວນການຮ່ວມມືກັນລະຫວ່າງພວກຂຸນນາງໃໝ່ກັບພວກນາຍທຶນໃນຂະບວນການຕໍ່ສູ້ປະຕິວັດເປັນຈຸດໂດດເດັ່ນໜຶ່ງຂອງການປະຕິວັດປະເທດອັງກິດໃນສະຕະວັດທີ 17.

ສິ່ງທີ່ຄວນເອົາໃຈໃສ່ໃນການປະຕິວັດດິນນາຂອງພວກຂຸນນາງໃໝ່ແມ່ນແນໃສ່ຄວາມປາດຖະໜາ ແລະ ຄວາມມຸ້ງຫວັງຂອງຊາວນາ. ໃນເວລານັ້ນຊາວນາຕ້ອງການທຳລາຍສິດໃນການຄອບຄ້ອງດິນນາຂອງຊົນຊັ້ນຂູດຮີດ ເພື່ອໃຫ້ຊາວນາມີດິນດອນເປັນຂອງຕົນເອງ ແຕ່ພວກຂຸນນາງໃໝ່ພັດຕ້ອງການພຽງແຕ່ປ່ຽນສິດໃນການຄອບຄອງດິນນາຈາກພວກສັກດີນາມາເປັນການຄອບຄອງຂອງພວກຂຸນນາງໃໝ່. ຍ້ອນແນວນັ້ນຂະບວນການປະຕິວັດນາຍທຶນອັງກິດຈຶ່ງບໍ່ສາມາດກ້າວໄປສູ່ການເຮັດໃຫ້ອຳນາດສັກດີນາພັງທະລາຍລົງ ເປັນພຽງແຕ່ການປະຕິວັດແບບເຄິ່ງທາງ (ບໍ່ສຸດກົກສຸດປາຍ) ກໍ່ຢຸດຕິລົງ, ບໍ່ສາມາດປົດປ່ອຍຊາວນາໄດ້ຢ່າງແທ້ຈິງ ແລະ ເປັນການປະຕິວັດທີ່ມີລັກສະນະຫຼ້າຫຼັງບໍ່ຮັບໃຊ້ສັງຄົມ.

**ຊົ້ນຊັ້ນກາງ**

ໃນຕົ້ນສະຕະວັດທີ 17 ຊັ້ນຊັ້ນກາງກໍ່ດມີຈຳນວນບໍ່ຫຼາຍປານໃດ, ຊົນຊັ້ນທີ່ມີອຳນາດສູງກວ່າພວກເຂົາຍັງມີຫຼາຍ, ມີຫຼາຍຮ້ອຍນັກອຸດສະຫະກຳ-ການຄ້າ ຢູ່ຕາມໂຮງຈັກໂຮງງານຕ່າງໆທີ່ມີສິດໃນການດຳເນີນທຸລະກິດຢ່າງເອກະລາດ. ກຸ່ມຄົນດັ່ງກ່າວນີ້ໄດ້ກາຍເປັນເຈົ້າໜີ້ຂອງພວກກະສັດ ແລະ ສັກດີນາທ້ອງຖິ່ນ, ພວກເຂົາມີສິດຜົນປະໂຫຍດຫຼາຍຢ່າງ. ຍ້ອນແນວນັ້ນກຸ່ມຄົນດັ່ງກ່າວຈຶ່ງເປັນຜູ້ກຳຊະຕາກຳຂອງລະບອບສັກດີນາ, ມີນະໂຍບາຍໃນການປົກປັກຮັກສາອຳນາດຂອງເຈົ້າຊີວິດ ລະບອບສັກດີນາ. ພວກເຂົາພຽງແຕ່ມີການປັບປຸງບາງນະໂຍບາຍທີ່ຈຳເປັນເພື່ອຍົກຖານະ, ສິດອຳນາດທາງດ້ານການເມືອງ ແລະ ຜົນປະໂຫຍດທາງດ້ານເສດຖະກິດເທົ່ານັ້ນ.

ຊົນຊັ້ນທີ່ມີຄົນຫຼາຍໃນຊົນຊັ້ນກາງແມ່ນພໍ່ຄ້າຊາວຂາຍອິດສະຫຼະ, ບັນດາເຈົ້າຂອງໂຮງງານຫັດຖະກຳ, ບັນດານັກທຸລະກິດຢູ່ອະນານິຄົມ, ພວກເຂົາມີແນວຄິດບໍ່ລະປັກກັບກະສັດ ຍ້ອນບັນດາມາດຕະການໃນການຮັກສາອຳນາດ, ນະໂຍບາຍຜູກຂາດທາງດ້ານການຄ້າຂອງກະສັດກີດຂວາງການ

ຂະຫຍາຍຕົວທຂອງເສດຖະກິດການຄ້າຂອງພວກຊົນຊັ້ນກາງ. ສະນັ້ນຈຶ່ງເຮັດໃຫ້ພວກເຂົາກາຍເປັນຊົນຊັ້ນຂຸນນາງຜູ້ກ້າວໜ້າໃນຂະບວນການຕໍ່ສູ້ຕ້ານກັບລະບອບສັກດີນາ,ກາຍເປັນຮູບແບບຂອງກຳລັງການຜະລິດໃໝ່ ທີ່ຕໍ່ຕ້ານກັບຮູບແບບການຜະລິດທີ່ຫຼ້າສະໄໝຂອງສັກດີນາ.

### ຊົນຊັ້ນຊາວນາ ແລະ ປະຊາຊົນຊາວຜູ້ອອກແຮງງານ

ລະບອບທາດດິນນາຢູ່ອັງກິດໄດ້ຮັບການພັງທະລາຍລົງຢ່າງໄວວາ, ຊາວນາມີຊີວິດທີ່ເປັນອິດສະຫຼະ. ເຖິງແມ່ນວ່າລະບອບສັກດີນາຕອນດິນທັງໝົດແມ່ນຢູ່ພາຍໃຕ້ກຳມະສິດຂອງເຈົ້າຊີວິດ ແລະ ຂຸນນາງ. ຊາວກະສິກອນກໍ່ຍັງບໍ່ສາມາດຫຼຸດພົ້ນອອກຈາກການກົດຂີ່ຂູດຮີດຂອງລະບອບສັກດີນາ. ຊາວນາອັງກິດຖືກຕັດແບ່ງອອກເປັນຫຼາຍຊັ້ນຄົນແຕກຕ່າງກັນໃນສັງຄົມຄື: ຊາວນາອິດສະຫຼະ freeholder , ຊາວນາທີ່ເຊົ່າດິນນາເພື່ອທຳການຜະລິດ copyhoder ແລະ ຊາວນາທີ່ອອກແຮງງານຮັບຈ້າງຕາມນິຄົມ cotter.

ໃນນັ້ນຊາວນາທີ່ເຊົ່າດິນນາເພື່ອທຳການຜະລິດກວມຈຳນວນພົນຫຼາຍກວ່າໝູ່ໃນຊົນນະບົດປະມານ 60% ຫາ 75% ຂອງຊາວນາທັງໝົດ. ພວກເຂົາເປັນກັບລັງພື້ນຖານຕົ້ນຕໍຂອງຊາວນາອັງກິດ ແລະ ກໍ່ເປັນເປົ້າໝາຍສຳຄັນຕົ້ນຕໍໃນການກົດຂີ່ຂູດຮີດຂອງເຈົ້າທີ່ດິນ ຫຼື ຂຸນນາງຊັ້ນກາງ. ພວກເຂົາທຳການຜະລິດປູກເຂົ້າໃນຕອນດິນຂອງເຈົ້າທີ່ດິນ ໂດຍມີສັນຍາເຊົ່າດິນປະມານ 21 ປີ. ເມື່ອຄົບຕາມສັນຍາພວກເຂົາສາມາດເຮັດການປູກຝັງຕໍ່ ຫຼື ສາມາດປ່ຽນໄປເຮັດໃນຕອນດິນບ່ອນໃໝ່ກໍ່ໄດ້. ການເສຍພາສີທີ່ດິນແມ່ນບໍ່ມີການປ່ຽນແປງໄດ້ ຊາວນາຕ້ອງໄດ້ຈ່າຍພາສີເພີ່ມເປັນຜົນຜະລິດອື່ນອີກໃນປະລິມານທີ່ຫຼາຍ. ເວລາໃດຕ້ອງການຕໍ່ໄລຍະເວລາໃນການເຊົ່າດິນນາ ຫຼື ຕ້ອງການມອບໃຫ້ລູກຫຼານສືບຕໍ່ເຮັດ ຜູ້ເຊົ່າດິນຕ້ອງໄດ້ຈ່າຍເງິນໃຫ້ເຈົ້າທີ່ດິນເປັນຈຳນວນຫຼາຍ ແລະ ເຈົ້າທີ່ດິນເທົ່ານັ້ນຈະເປັນຜູ້ກຳນົດລາຄາ. ເຮັດໃຫ້ຊາວນາກຸ່ມນີ້ຕ້ອງໄດ້ເສຍພາສີຫຼາຍຢ່າງເຊັ່ນ: ພາສີສີເຂົ້າ, ພາສີທົ່ງຫຍ້າ, ພາສີປ່າໄມ້. ພວກເຂົາມີຫຼາຍໜ້າທີ່ແຕກຕ່າງກັນ. ຊາວນາກຸ່ມນີ້ຖືກບັງຄັບໃຫ້ປະຖິ້ມໄຮ່ນາຮົ້ວສວນ ຫຼື ບາງຄົນກໍ່ຕ້ອງທົນເຮັດວຽກຕາມຄຳສັ່ງຂອງພວກເຈົ້າທີ່ດິນທຸກຢ່າງຍ້ອນແນວນັ້ນຈຶ່ງເຮັດໃຫ້ຊາວນາຈຳພວກນີ້ມີຖານະພໍກິນພໍໃຊ້ຈຳນວນໜ້ອຍ ສ່ວນຫຼາຍແມ່ນຈະມີຖານະທຸກຍາກຂາດເຂີນ, ອອກແຮງງານໜັກໜ່ວງ, ດຳລົງຊີວິດແບບອຶດຫິວພວກນີ້ເປັນກຳລັງຕົ້ນຕໍໃນຂະບວນການປະຕິວັດຕ້ານກັບລະບອບສັກດີນາ.

ຊົນຊັ້ນຊາວນາອິດສະຫຼະຈະມີດິນຂະໜາດນ້ອຍເປັນຂອງຕົນເອງ, ການຜະລິດບໍ່ໄດ້ຂຶ້ນກັບເຈົ້າທີ່ດິນ. ສະນັ້ນຈຶ່ງເຮັດໃຫ້ມີຜູ້ຮັ່ງມີໜ້ອຍ, ຄົນສ່ວນຫຼາຍດຳລົງຊີວິດທຸກຍາກລຳບາກ, ລົ້ມລະລາຍຈົນກາຍເປັນຊາວນາທີ່ເຊົ່າດິນນາທຳການຜະລິດ. ຍ້ອນແນວນັ້ນຈຶ່ງເຮັດໃຫ້ພວກຊາວນາອິດສະຫຼະເກີດຄວາມບໍ່ພໍໃຈຕໍ່ກັບລະບອບສັກດີນາ, ຕ້ອງການສິດຄອບຄອງດິນ ແລະ ຕ້ອງການໃຫ້ອຳນາດຂອງພວກເຈົ້າທີ່ດິນລົ້ມລະລາຍ.

ພາກສ່ວນທີ່ໄດ້ຮັບຄວາມລຳບາກທີ່ສຸດໃນຊົນນະບົດຂອງອັງກິດແມ່ນຈຳພວກທາດດິນນາກວມປະມານ 40.000 ຄົນ. ພວກເຂົາລ້ວນແຕ່ບໍ່ມີດິນທຳການຜະລິດ, ຕ້ອງໄດ້ອອກແຮງງານຮັບຈ້າງ, ກາຍເປັນກຳມະກອນກະສິກຳ ຫຼື ກຳມະກອນໃນເຂດໂຮງງານຫັດຖະກຳ. ພວກເຂົາຖືກພວກຂຸນນາງສັກດີນາ ແລະຊົນຊັ້ນກາງກົດຂີ່. ຊີວິດການເປັນຢູ່ຂອງພວກເຂົາໄດ້ຖືກຂຽນໂດຍນັກປະພັນຂອງຍຸກສະໄໝໄດ້ເວົ້າວ່າ: ພວກເຂົາມີຊີວິດທ່າມກາງຄວາມລຳບາກ ແລະ ທຸກຍາກຂາດເຂີນບໍ່ມີວັນສິ້ນສຸດ ສະນັ້ນ, ພວກເຂົາຈຶ່ງມີຄຳຂວັນໃນການຕໍ່ສູ້ວ່າ: ຈົ່ງທຳການກຳຈັດພວກຂຸນນາງໃຫ້ຮາບກ້ຽງ ແລະ ລົງມືຂ້າພວກຮັ່ງມີໃຫ້ໝົດ ເພາະພວກເຂົາແມ່ນຕົ້ນເຫດຂອງການລ້ອມຮົ້ວດິນນາ, ຂັບໄລ່ຊາວນາເຮັດໃຫ້ຊາວນາຕ້ອງມີຊີວິດແບບເລື່ອນລອຍ, ດຳລົງຊີວິດແບບຫາເຊົ້າກິນຄ່ຳ, ທຸກຍາກຂາດເຂີນ. ຍ້ອນແນວນັ້ນພວກເຂົາຈຶ່ງຕ້ອງການປ່ຽນແປງຊີວິດ ແລະ ປະກອບສ່ວນສຳຄັນໃນຂະບວນການຕໍ່ສູ້ປົດປ່ອຍຊາວນາຕະຫຼອດສະຕະວັດທີ 16 ຫາຕົ້ນສະຕະວັດທີ 17 ແລະ ນັບທັງຂະບວນການປະຕິວັດໃນໄລຍະຕໍ່ມາ.

## 3. ແນວຄິດສຳຄັນຂອງຂະບວນການປະຕິວັດ

ຕໍ່ກັບການຂະຫຍາຍຕົວຂອງໜໍ່ແໜງເສດຖະກິດທຶນນິຍົມ, ແນວຄິດທຶນນິຍົມໄດ້ປະກົດຕົວຂຶ້ນ ແລະຄ່ອຍໆແຊກຊຶມເຂົ້າໃນລະບອບສັກດີນາ. ສະພາບຂອງປະເທດອັງກິດໃນເວລານັ້ນຖືວ່າອັງກິດເປັນປະເທດທຳອິດທີ່ກ້າວເຂົ້າສູ່ໄລຍະການພັງທະລາຍຂອງລະບອບສັກດີນາ, ເປັນຜົນກະທົບອັນໜັກໜ່ວງມາຈາກການປະຕິວັດໃນຍຸກກາງອັນພາໃຫ້ເກີດມີກະແສແນວຄິດໃໝ່ເກີດຂຶ້ນ, ເຊິ່ງແນວຄິດໃນເມື່ອກ່ອນງຶມງວາຍປຽບດັ່ງເສື້ອຜ້າທີ່ຫຸ້ມຫໍ່ສາສະໜາເອົາໄວ້, ເຊິ່ງເສື້ອຜືນນັ້ນເຮັດໜ້າທີ່ໃນການປົກປ້ອງສາສະໜາເກົ່ານັ້ນກໍ່ຄື ນິກາຍແອັງກລີຄັນ. ນິກາຍ ແອັງກລີຄັນແມ່ນອີງໃສ່ແນວຄິດທິດສະດີ ຂອງສາສະໜາຄຣິສ ແຕ່ດ້ານການຈັດຕັ້ງນິກາຍນີ້ແຍກອອກຈາກສາສະໜາຄຣິສໂຣມັນກາໂຕຣິກ. ບຸກຄົນທີ່ມີອຳນາດສູງສຸດຂອງສາສະໜາຄຣິສ

ນິກາຍ ແອັງກລິຄັນ ແມ່ນເຈົ້າຊີວິດອັງກິດ ສະນັ້ນ, ສາສນາຄຣິສ ນິກາຍແອັງກລິຄັນຈຶ່ງເປັນເຄື່ອງມືໃນການປົກຄອງຂອງຊົນຊັ້ນສັກດີນາ.

ສົງຄາມຕໍ່ສູ້ລະຫວ່າງສາສະໜາຄຣິສນິກາຍ ພົວລິຕັນ ແລະ ນິກາຍ ແອັງກລິຄັນ ແມ່ນຂະບວນການຕໍ່ສູ້ທາງສາສະໜາ. ເຊິ່ງທາດແທ້ຂອງສົງຄາມສ່ອງແສງໃຫ້ເຫັນການຕໍ່ສູ້ລະຫວ່າງ 2 ກະແສແນວຄວາມຄິດ ຄື: ກະແສແນວຄິດທຶນນິຍົມ ແລະ ກະແສແນວຄິດສັກດີນາ, ຂະບວນການຕໍ່ສູ້ຊົນຊັ້ນໃນສັງຄົມອັງກິດ ໃນຂະນະທີ່ລະບອບສັກດີນາເຊື່ອມໂຊມ ແລະ ລັດທິທຶນນິຍົມກໍ່ກ້າວເຂົ້າມາແທນທີ່.

ນິກາຍ ພົວລິຕັນ ໄດ້ນຳເອົາ ກະແສແນວຄິດຂອງ Jean Calvin (ຄົນຝຣັ່ງ) ເຂົ້າມາໃນປະເທດອັງກິດຈົນກາຍເປັນຫຼັກຄຳສັ່ງສອນທີ່ປະຕິບັດກັນ. ຊາວອັງກິດມີຄວາມສັດທາ ແລະ ເຊື່ອຖືຕາມທິດສະດີນີ້ຝັງເລິກໃນໃຈ ພວກເຂົາມີຄວາມເຊື່ອທີ່ວ່າພະເຈົ້າໄດ້ປະທານໜ້າທີ່ຮັບຜິດຊອບໃຫ້ບັນດາພວກນາຍທຶນພັດທະນະທາງດ້ານອຸດສະຫະກຳ-ການຄ້າ. ພວກເຂົາໄດ້ຂັບໄລ່ນັກບວດທີ່ປະກອບພິທີກຳທີ່ຫຼອກລວງ, ທຳລາຍບັນດາສິ່ງປະດັບປະດາ, ຫໍບູຊາ ແລະ ຕໍ່ຕ້ານການອ່ານບົດສູດດ້ວຍໜັງສືສັກສິດ ແລະ ສູດມົນດ້ວຍປາກເປົ່າໂດຍບໍ່ອ່ານໃນປື້ມຕຳລາ, ພວກເຂົາຮຽກຮ້ອງໃຫ້ມີການເຄື່ອນໄຫວທາງສາສະໜາແບບລຽບງ່າຍບໍ່ເຄັ່ງຄັດ. ສິ່ງດັ່ງກ່າວນີ້ສະແດງໃຫ້ເຫັນລັກສະນະກ້າວໜ້າຂອງນິກາຍພົວລິຕັນຖ້າທຽບໃສ່ນິກາຍແອັງກລິຄັນ ເຊິ່ງເໝາະສົມກັບຄວາມປາດຖະໜາຂອງຊົນຊັ້ນນາຍທຶນທີ່ຕ້ອງການໃຊ້ເວລາ ແລະ ເງິນຄຳສ່ວນໃຫຍ່ເຂົ້າໃນການພັດທະນາທຸລະກິດຫຼາຍກວ່າກິດຈະກຳທາງສາສະໜາ.

ພາຍໃນນິກາຍພົວລິຕັນກໍ່ຖືກຕັດແບ່ງໃຫ້ມີຫຼາຍທ່າອ່ຽງ (ຫຼາຍກຸ່ມ) ແຕກຕ່າງກັນ, ພວກນາຍທຶນໃຫຍ່ໄດ້ຮັບຜົນປະໂຫຍດຈາກລະບອບສັກດີນາ ພວກເຂົາໄດ້ລຸກຂຶ້ນຕໍ່ຕ້ານກັບສະພາສາສະໜາຄຣິດນິກາຍແອັງກລິຄັນ ແຕ່ພວກເຂົາບໍ່ໄດ້ດຳເນີນການປະຕິວັດຢ່າງແທ້ຈິງ ພວກເຂົາຕ້ອງການພຽງແຕ່ຕ້ອງການປ່ຽນສະພາຂອງນັກບວດມເປັນສະພາຜູ້ສູງອາຍຸ ແລະ ພະເຈົ້າ ຍ້ອນແນວນັ້ນຈຶ່ງເອີ້ນສະມາຄົມນີ້ວ່າ ຝ່າຍອາວຸດໂສ, ຍ້ອນພາລະບົດບາດທາງດ້ານເສດຖະກິດຍັງບໍ່ໝັ້ນຄົງມີການປ່ຽນແປງໜ້າທີ່ຂອງຝ່າຍອາວຸດໂສຈຶ່ງເຮັດໃຫ້ພວກເຂົາມີການປະນີປະນອມກັບກຳລັງຂອງພວກສັກດີນາ ພວກນີ້ເອີ້ນວ່າ ພົວລິຕັນຝ່າຍຂວາ.

ສ່ວນພົວລິຕັນຝ່າຍຊ້າຍມີແນວຄິດຕໍ່ຕ້ານກັບນິກາຍແອັງກລິຄັນພວກນີເອີ້ນວ່າຝ່າຍເອກະລາດ (ບໍ່ຂຶ້ນກັບສັກດີນາ) ເຊິ່ງປະກອບມີນາຍທຶນ ແລະ ຂຸນນາງໃໝ່ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີ

ສິດຜົນປະໂຫຍດຂັດກັບພວກສັກດີນາ. ຝ່າຍເອກະລາດໄດ້ລຸກຂຶ້ນປະທ້ວງຕ້ານກັບສະຖາບັນກະສັດ ແລະ ຍັງບໍ່ເຫັນດີນໍາສະພາຜູ້ອາວຸດໂສ ເພາະພວກເຂົາຄິດວ່າ ສະພາຜູ້ອາວຸດໂສເປັນພຽງສະຖາບັນພະມະຫາກະສັດໃໝ່ເທົ່ານັ້ນ. ພວກເຂົາບໍ່ຍອມຮັບພະລັງອໍານາດສິ່ງສັກສິດໃດ, ແລະ ຈະບໍ່ເຊື່ອຟັງຄໍາສັ່ງໃດໆທີ່ຝືນຈາກກົດເກນຂອງທໍາມະຊາດ. ອີງການຈັດຕັ້ງຂອງ ພິວລິຕັນຝ່າຍເອກະລາດແມ່ນ ສະຫະພາບກອມມູນ ທີ່ມີຄວາມເປັນເອກະລາດຕໍ່ກັນ ແຕ່ລະກອມມູນຖືກປົກຄອງໂດຍທາງສຽງສ່ວນຫຼາຍ (ປະຊາທິປະໄຕ) ຂະບວນການປະຕິວັດຂອງພວກເຂົາມີລັກສະນະປະຊາທິປະໄຕກວ່າ.

ໃນນິກາຍພິວລິຕັນໄດ້ປະກົດມີທິດສະດີທາງດ້ານການເມືອງ ແລະ ລັດຖະທໍາມະນູນເກີດຂຶ້ນໃນການປະຕິວັດນາຍທຶນອັງກິດ. ສໍາຄັນທີ່ສຸດແມ່ນ ພັນທະສັນຍາທາງສັງຄົມ. ເຊິ່ງພັນທະສັນຍາທາາງສັງຄົມໄດ້ກໍານົດອໍານາດສູງສຸດຂອງເຈົ້າຊີວິດແມ່ນຂຶ້ນກັບປະຊາຊົນມອບໃຫ້ (ອໍານາດກະສັດຂຶ້ນກັບປະຊາຊົນ ບໍ່ແມ່ນຂຶ້ນກັບກະສັດຄືກັບເມື່ອກ່ອນ). ສະນັ້ນ, ເຈົ້າຊີວິດດໍາເນີນການປົກຄອງປະເທດຊາດເພື່ອສິດຜົນປະໂຫຍດຂອງປະຊາຊົນ ເຮັດແບບນີ້ກະສັດຈິ່ງຈະສາມາດປົກຄອງປະເທດໄດ້ ຖ້າບໍ່ດັ່ງນັ້ນຈະຖືວ່າກະສັດເປັນກະບົດທໍລະຍົດຕໍ່ກັບປະຊາຊົນ ແລະ ກະສັດກໍ່ຈະຖືກປະຊາຊົນຢຶດອໍານາດທີ່ມອບໃຫ້ໃນເມື່ອກ່ອນຄືນມາ. ນັບແຕ່ນັ້ນມາບັນດານັກປັນຍາຊົນຜູ້ມີແນວຄິດກ້າວໜ້າໄດ້ປຸກລະດົມປະຊາຊົນໃຫ້ມີການລຸກຂຶ້ນຕໍ່ສູ້ກັບອໍານາດທີ່ບໍ່ຢຸດຕິທໍາຂອງກະສັດ ແລະ ຈົນກະທັ້ງຖືກປະຫານຊີວິດກໍ່ມີ. ຕົວແທນທີ່ມີຊື່ສຽງຂອງກະແສແນວຄິດດັ່ງກ່າວນີ້ຢູ່ອັງກິດໃນສະຕະວັດທີ 16 ຫາ ສະຕະວັດທີ 17 ເຊັ່ນ: ຈອດ ໂປແນັດ, ເອັກເປນເຊີ, ຈອດມິນເຕີນ. ຄວາມຈິງແລ້ວພວກເຂົາແມ່ນປັນຍາຊົນກ້າວໜ້າທີ່ເຂົ້າຮ່ວມໃນການກະກຽມແນວຄິດຂອງການປະຕິວັດອັງກິດທີ່ກໍາລັງຈະລະເບີດຂຶ້ນ.

## 4. ລະບອບລາຊາທິປະໄຕສົມບູນສິດທິລາດສະຈອດ Stuart ແລະ ຂໍ້ຂັດແຍ່ງພາຍໃນ.

### 4.1. ລະບອບລາຊາທິປະໄຕສົມບູນສິດທິລາດໃນອັງກິດ

ຮອດກາງສະຕະວັດທີ 17 ອັງກິດຍັງເປັນປະເທດທີ່ນອນໃນລະບອບສັກດີນາປົກຄອງແບບລາຊາທິປະໄຕສົມບູນສິດທິລາດ ທີ່ມີເຈົ້າຊີວິດເປັນເຈົ້າຂອງດິນນາທັງໝົດໃນປະເທດ. ກະສັດຈະມອບຕອນດິນໃຫ້ກັບຂ້າລາດຊະການ-ຂຸນນາງ ແລະ ຜູ້ຢູ່ໃຕ້ການປົກຄອງ. ບັນດາຂຸນນາງ ແລະ ຂ້າລາດຊະການທີ່ຢູ້ໃຕ້ການປົກຄອງຕ້ອງເສຍພາສີໃຫ້ກະສັດໃນແຕ່ລະປີ.

ກະສັດເປັນຜູ້ກຳອຳນາດສູງສຸດໃນການປົກຄອງປະເທດ, ເຮັດໜ້າທີ່ສຳຄັນໃນສະຖາບັນການປົກຄອງທີ່ເອີ້ນວ່າສະພາແຫ່ງຄວາມລັບ. ບັນດາສະມາຊິກຂອງສະພາດັ່ງກ່າວນີ້ປະກອບດ້ວຍພວກຂຸນນາງທີ່ມີຊື່ສຽງຕາມການແຕ່ງຕັ້ງຂອງເຈົ້າຊີວິດ ແລະ ກຸ່ມຄົນນີ້ໄດ້ກາຍມາເປັນທີ່ປຶກສາແຜ່ນດິນໃຫ້ແກ່ເຈົ້າຊີວິດ. ເຈົ້າຊີວິດມີສິດໃນການກວດກາການເຄື່ອນໄຫວວຽກງານທັງວຽກຕຸລາການ, ວຽກການປົກຄອງ ແລະ ວຽກງານຂອງນັກບວດຢູ່ໃນໂບດອີກດ້ວຍ, ບໍ່ພຽງແຕ່ເທົ່ານັ້ນເຈົ້າຊີວິດຍັງເປັນຜູ້ກຳອຳນາດສູງສຸດໃນສາສາໜາຄຣິສ ນິກາຍແອັງກລິຄັນ ອີກດ້ວຍ. ກະສັດກຳອຳນາດທາງດ້ານການປົກຄອງຄຽງຄູ່ກັບອຳນາດທາງສາສະໜາ.

ນອກຈາກງົບປະມານເງິນຄຳທີ່ໄດ້ຈາກການເກັບພາສີຈາກພວກຂຸນນາງ ແລະ ພວກຢູ່ໃຕ້ການປົກຄອງແລ້ວ ຖືວ່າກະສັດບໍ່ມີແຫຼ່ງລາຍຮັບອື່ນອີກ ເພື່ອໃຊ້ເຂົ້າໃນການຫຼິ້ນກິນ, ຟຸມເຟືອຍ ສະນັ້ນຈຶ່ງເຮັດໃຫ້ເຈົ້າຊີວິດພົບກັບສະພາບຄວາມຂາດເຂີນເງິນທອງຂອງໃຊ້. ລາຊະອານາຈັກຍັງບໍ່ມີກຳລັງທະຫານໃນການອາລັກຂາອານາຈັກ. ຈາກເງື່ອນໄຂດັ່ງກ່າວມານັ້ນ ຈຶ່ງເຮັດໃຫ້ອຳນາດຂອງເຈົ້າຊີວິດມີລັກສະນະຈຳກັດ ຍ້ອນສະພາ. ສະພາແມ່ນອົງການຈັດຕັ້ງຂອງຕົວແທນຊົນຊັ້ນສັກດີນາທີ່ມີສິດອະນຸມັດ ແລະ ມອບພາສີ. ກະສັດຈຶ່ງລວບລວມອຳນາດເຂົ້າໃນກຳມືເຮັດໃຫ້ສະພາຖືກຫຼຸດຜ່ອນໜ້າທີ່ ແລະ ບົດບາດລົງ ແລະມອບສິດທິບາງຢ່າງໃຫ້ແກ່ຂຸນນາງຮັບຜິດຊອບແທນ ແຕ່ວ່າການມອບເງິນພາສີ ແລະ ວຽກງານການເງິນຂອງກອງທັບຍັງແມ່ນວຽກງານຕົ້ນຕໍຂອງສະພາ.

ສະພາອັງກິດໄດ້ຮັບການສ້າງຕັ້ງຂຶ້ນນັບຕັ້ງແຕ່ສະຕະວັດທີ 13 ປະກອບມີ 2 ສະຖານບັນ ຫຼື 2 ສະພາຄື: ວຸດທິສະພາ ແລະ  ສະພາຜູ້ແທນລາດສະດອນ, ວຸດທິສະພາມີສິດຮ່າງກົດໝາຍ ແລະ ນີ້ຖືເປັນບ່ອນອີງອັນໜຶ່ງໃນການປົກຄອງຂອງເຈົ້າຊີວິດ ຄວາມຈິງແລ້ວເຈົ້າຊີວິດກໍ່ແມ່ນຜູ້ມີອຳນາດສູງສຸດ ແລະ ເປັນປະທານໃນວຸດທິສະພາ (ສະພາຊັ້ນສູງ). ປະທານລັດທະສະພາເຊິ່ງແມ່ນເຈົ້າຊີວິດເປັນຜູ້ເລືອກຈະໄດ້ຮັບການຖ່າຍທອດຈາກພໍ່ສູ່ລູກ. ສ່ວນສະພາຜູ້ແທນລາດສະດອນ ແມ່ນອົງການຮັກສາຜົນປະໂຫຍດຂອງພວກຂຸນນາງຊັ້ນຕ່ຳ ໂດຍດຳລົງຕຳແໜ່ງຈາກການເລືອກຕັ້ງຢ່າງເຂັ້ມງວດຈົນມາຮອດກາງສະຕະວັດທີ 17 ສະພາຜູ້ແທນລາດສະດອນມີການປ່ຽນແປງສະມາຊິກສ່ວນຫຼາຍແມ່ນພວກຂຸນນາງໃໝ່. ທີ່ສິ່ງຜົນສະທ້ອນອັນໃຫຍ່ຫຼວງ ເພາະພວກເຂົາມີບົດບາດ ແລະ ມີອຳນາດທາງດ້ານເສດຖະກິດ, ມີສິດໃນການປະກາດໃຊ້ກົດໝາຍກ່ຽວ

ກັບພາສີ ຍ້ອນແນວນັ້ນຈິ່ງມີສິດໃນການກວດກາວຽກງານຂອງເຈົ້າຊີວິດ ແລະ ຄະນະລັດຖະບານ ສະນັ້ນ ສະພາຜູ້ແທນລາດສະດອນຈິ່ງກາຍເປັນສະໜາມຣົບຕໍ່ສູ້ຢ່າງດຸເດືອດຂອງກຳລັງປັນຍາຊົນໃໝ່ທີ່ມີຄວາມກ້າວໜ້າຕ້ານກັບອຳນາດຂອງເຈົ້າຊີວິດ ແລະ ຊົນຊັ້ນສັກດີນາ.

ສະພາດຳເນີນການເຄື່ອນໄຫວຕາມຄວາມຕ້ອງການຂອງເຈົ້າຊີວິດ ແລະ ຂໍ້ກຳນົດກົດໝາຍກໍ່ເປັນພຽງສັນຍາລັກໃນການປົກຄອງພາຍຫຼັງທີ່ກະສັດໄດ້ໃຫ້ສັດຕະຍະບັນແລ້ວ. ກະສັດມີສິດໃນການແກ້ໄຂບັນຫາໃນສະພາຕາມແນວຄິດສ່ວນຕົວຂອງຕົນເອງ ແຕ່ກໍ່ບໍ່ແມ່ນຈະມີສິດທັງໝົດໃນວຽກງານ. ຍ້ອນແນວນັ້ນມາໃນຕົ້ນສະຕະວັດທີ 17 ລະຫວ່າງກະສັດ ແລະ ສະພາ ຫຼື ເວົ້າອີກຢ່າງກໍ່ຄື ກຳລັງພວກສັກດີນາ ແລະ ພວກນາຍທຶນເລີ່ມມີຂໍ້ຂັດແຍ່ງຮຸນແຮງຂຶ້ນເລື້ອຍໆໂດຍສະເພາະແມ່ນຂໍ້ຂັດແຍ່ງທາງດ້ານການເງິນ.

ໃນປີ ຄ.ສ 1603 ເຈົ້າຍິງ ອາລິສະເບດ ສິ້ນພະຊົນ, ເຮັດໃຫ້ບໍ່ມີຜູ້ສືບທອດລາດຊະບັນລັງ ເປັນການສິ້ນສຸດການປົກຄອງຂອງລາດຊະວົງ ທິວດໍ. ພະເຈົ້າເຈມທີ 1 ໄດ້ຂຶ້ນປົກຄອງປະເທດເຊິ່ງຖືວ່າເປັນກະສັກອົງທຳອິດຂອງລາດຊະວົງ ສະຕຸຍອາກ ທີ່ຂຶ້ນປົກຄອງອັງກິດ.

## 4.2. ນະໂຍບາຍການປົກຄອງຂອງລາດຊະວົງສະຕຸຍອາກ

### 1) ການປະຕິວັດເລີ່ມສຸກາງອມ

ພາຍຫຼັງຂຶ້ນຄອງລາດຊະບັນລັງ ພະເຈົ້າເຈມທີ 1 (ປີ ຄ.ສ 1566-1625) ກໍ່ສືບຕໍ່ກ້າວເຂົ້າສູ່ໄລຍະການປົກຄອງຂອງພະເຈົ້າຊາກເລີທີ 1 (ປີ ຄ.ສ 1625-1649) ເປັນຕົວແທນໃຫ້ແກ່ຊົນຊັ້ນສັກດີນາ ແລະ ຂຸນນາງເກົ່າທີ່ຕ້ານກັບກຳລັງຂອງຊົນຊັ້ນນາຍທຶນ, ຂຸນນາງໃໝ່ ແລະ ກຳລັງປະຊາຊົນ. ສະພາບການຂອງອັງກິດມີການປ່ຽນແປງໃໝ່ ບັນດາກະສັດໃນລາດສະວົງສະຕຸຍອາກລ້ວນແຕ່ຕ້ອງການປົກປ້ອງສິດຜົນປະໂຫຍດຂອງຊົນຊັ້ນສັກດີນາ ແລະ ພະຍາຍາມຮັກສາອຳນາດລາດຊະບັນລັງຂອງຕົນໄວ້. ເຖິງແມ່ນວ່າພວກນາຍທຶນຈະມີຄວາມມຸ້ງມາດປາດຖະໜາຢາກມີອິດສະຫຼະໃນການດຳເນີນທຸລະກິດກໍ່ຕາມ, ແຕ່ພວກກະສັດກໍ່ດຳເນີນນະໂຍບາຍຜູກຂາດທາງດ້ານການຜະລິດ, ການຄ້າພາຍນອກ ແລະ ການຄ້າພາຍໃນໃນບາງຂະແໜງການ. ມີການວາງຂໍ້ກຳນົດກົດໝາຍຢ່າງເຄັ່ງຄັດເພື່ອກວດກາບັນດາຂະແໜງອຸດສະຫະກຳ, ພວກກະສັດໄດ້ສະກັດກັ້ນ ແລະ ຂັບໄລ່ພວກທີ່ນັບຖືສາສະໜາຄຣິສນິກາຍ ພິວລິຕັນ. ຜູກສຳພັນກັບລາດຊະວົງສະເປນ ຖືວ່າເປັນຄູແຂ່ງທີ່ອັນຕະລາຍສຳລັບຊົນຊັ້ນນາຍທຶນຢູ່ອັງກິດ. ດຳເນີນສົງຄາມອັນນອງເລືອດກັບປະຊາຊົນຊາວສະກັອດ

ແລັນ ຕໍ່ໜ້າສະພາບການດັ່ງກ່າວກຳລັງການປະຕິວັດຂອງປະຊາຊົນໄດ້ລຸກຂຶ້ນຕໍ່ສູ້ຕ້ານຄືນເພື່ອປົດປ່ອຍຕົນເອງ. ຂະບວນການຕໍ່ສູ້ເພື່ອປົດປ່ອຍຕົນເອງເກີດຂຶ້ນໃນປີ ຄ.ສ 1607 ຢູ່ເຂດສູນກາງຂອງປະເທດອັງກິດ ມີປະຊາຊົນເຂົ້າຮ່ວມ 8.000 ຄົນ ຕໍ່ສູ້ດ້ວຍກຳລັງປະກອບອາວຸດພາຍໃຕ້ຄຳຂວັນທີ່ວ່າ"ຍອມຕາຍດີກວ່າມີຊີວິດທີ່ເຕັມໄປດ້ວຍຄວາມທຸກຍາກລຳບາກ" ສາມາດສັງຫານພວກເຈົ້າທີ່ດິນ ບາງຄົນກາຍເປັນຄົນທຸກຍາກ, ຂາດເຂີນ, ບໍ່ມີກິນ. ນັບຕັ້ງແຕ່ສົງຄາມເກີດຂຶ້ນເຮັດໃຫ້ອັງກິດແບ່ງອອກເປັນ 2 ຝ່າຍຄື: ກຸ່ມໜຶ່ງແມ່ນພວກສັກດິນາ, ຂຸນນາງເກົ່າ ແລະ ສາສະໜາຈັກ ເອີ້ນວ່າຝ່າຍນິຍົມກະສັດ ແລະ ອີກກຸ່ມໜຶ່ງແມ່ນພວກນາຍທຶນ, ຂຸນນາງໃໝ່, ປະຊາຊົນຊາວຜູ້ອອກແຮງງານເອີ້ນວ່າຝ່າຍຕໍ່ຕ້ານກະສັດ. ກຳລັງການປະຕິວັດຂອງພວກສາມັນຊົນເປັນຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບລະບົບການປົກຄອງຂອງອັງກິດໃນໄລຍະຕໍ່ມາ.



ພະເຈົ້າຊາກເລີທີ 1 Charles I (ປີ ຄ.ສ 1625-1649)

ການຕໍ່ສູ້ອັນດຸເດືອດລະຫວ່າງກະສັດ ແລະ ນາຍທຶນ, ຂຸນນາງໃໝ່ ເກີດຂຶ້ນອີກຄັ້ງໃນສະພາໂດຍຍົກເອົາມາບັນຫາງດ້ານການເງິນມາປະທະກັນ ໂດຍສະເພາະແມ່ນຈຳນວນເງິນທີ່ກະສັດນຳໃຊ້ເຂົ້າໃນການເຮັດສົງຄາມກັບຊາວສະກັອດແລນ, ໄອແລັນ, ການໃຊ້ຈ່າຍແບບຫຼູຫຼາຟຸມເຟືອຍຂອງລາດຊະວົງກະສັດ ມີຫຼາຍຄັ້ງກະສັດກໍ່ເປີດກອງປະຊຸມເພື່ອຮ່າງກົດໝາຍເພີ່ມເງິນໃນການເກັບພາສີ ແລະ ກຳນົດການເສຍພາສີຄືນໃໝ່

ຂອງເຈົ້າຊີວິດເຊິ່ງພວກນາຍທຶນ ແລະ ຂຸນນາງໃໝ່ທີ່ໄດ້ຮັບແຮງສະໜັບສະໜູນຈາກມະຫາຊົນແມ່ນບໍ່ເຫັນດີຢ່າງຍິ່ງ.

ມາຮອດກາງສະຕະວັດທີ 17 ເຈົ້າຊີວິດອັງກິດໄດ້ຮຽກຮ້ອງໃຫ້ມີການຍຸບສະພາ. ໃນປະຫວັດສາດອັງກິດບັນທຶກໄວ້ວ່າມີສະພາທີ່ຄົງຕົວໄດ້ໜ້ອຍກວ່າທີ່ສຸດ 3 ອາທິດ ແລະ ດົນທີ່ ສຸດ 13 ປີ.

ໃນການປະຊຸມສະພາພວກສັກດີນາໃໝ່ ແລະ ນາຍທຶນບໍ່ໃຫ້ການສະໜັບສະໜູນແກ່ຄວາມຄິດເຫັນຂອງເຈົ້າຊີວິດຊໍ້າບໍ່ໜ່ຳຍັງບໍ່ຍອມເສຍພາສີອີກດ້ວຍ. ສະມາຊິກສະພາໄດ້ກ່າວປະນາມ ແລະ ຕໍ່ຕ້ານການກະທຳຂອງເຈົ້າຊີວິດໃນກອງປະຊຸມສະພາເດືອນພະຈິກ ປີ 1641 ເຊິ່ງຄວາມຜິດມີທັງໝົດ 204 ຂໍ້ກ່າວຫາ ແລະ ກ່າວໂທດກະສັດທີ່ວາງນະໂຍບາຍທີ່ເປັນການກີດຂວາງການຫຍາຍຕົວຂອງວຽກງານອຸດສະຫະກຳ ແລະ ການຄ້າຂອງອັງກິດ.

ໄຊຊະນະຂະບວນການປົດປ່ອຍຕົນເອງຂອງປະຊາຊົນສະກັອດແລັນ ແລະ ໄອແລັນຢູ່ທາງພາກເໜືອບວກກັບຂະບວນການລຸກຂຶ້ນຕໍ່ສູ້ຂອງກຳລັງມະຫາຊົນ ແລະ ປະຊາຊົນຜູ້ອອກແຮງງານເຮັດໃຫ້ສະພາບທາງດ້ານການເມືອງວຸ້ນວາຍບໍ່ສະຫງົບ, ຄວາມຂັດແຍ່ງໃນສັງຄົມນັບມື້ນັບກ້າວເຂົ້າສູ່ລະດັບສູງ. ໃນເດືອນພະຈິກ ແລະ ເດືອນຕຸລາ ປີ ຄ.ສ 1641 ປະຊາຊົນຊາວລອນດອນໄດ້ລຸກຂຶ້ນປະທ້ວງຕໍ່ໜ້າສະພາພາຍໃຕ້ຄຳຂວັນທີ່ວ່າ ”ມ້າງເພທຳລາຍອຳນາດອາຍາສິດ ແລະ ສາສະໜາຈັກ” ແລະ ໄດ້ສົ່ງຄຳຮ້ອງຟ້ອງທີ່ລົງລາຍເຊັນຈຳນວນ 2.000 ຄົນເພື່ອຮຽກຮ້ອງໃຫ້ຂັບໄລ່ພະສັງຄະລາດອອກຈາກສະພາ. ພະເຈົ້າຊາກເລີທີ1 ເກີດຄວາມບໍ່ພໍໃຈ ມາໃນວັນທີ 3 ພະຈິກ 1642 ຈິ່ງໄດ້ສັ່ງຈັບຜູ້ນຳພາຂະບວນການປະຕິວັດທີ່ມີຊື່ສຽງຈຳນວນ 5 ທ່ານເພື່ອຕັດແຍກຂະບວນການປະຕິວັດແຕ່ບໍ່ປະສົບຜົນສຳເລັດຍ້ອນຖືກກຳລັງປະຊາຊົນລຸກຂຶ້ນສະກັດການຈັບກຸມ ແລະ ຊ່ວຍໃຫ້ພວກເຂົາທັງ 5 ຄົນໂຕນໜີໄດ້ທັນກັບເວລາ. ເຫດການດັ່ງກ່າວນີ້ສະແດງໃຫ້ເຫັນວ່າກຳລັງປະຕິວັດຂອງປະຊາຊົນແມ່ນເສົາຫຼັກສຳຄັນໃນການປົກປັກຮັກສາສະພາເອົາໄວ້.

ມາໃນວັນທີ 7 ມັງກອນ 1642 ກຳລັງມວນຊົນຈຳນວນ 10 ພັນຄົນໄດ້ເຕົ້າລວມກັນຢູ່ຕາມເສັ້ນທາງໃນຕົວເມືອງລອນດອນເພື່ອຕໍ່ຕ້ານກັບກຳລັງທະຫານຂອງເຈົ້າຊີວິດທີ່ກຳລັງຈະບຸກໂຈມຕີສະພາ. ເຮັດໃຫ້ກຳລັງຂອງເຈົ້າຊີວິດປະລາໄຊ. ສະນັ້ນ, ພະເຈົ້າຊາກເລີ 1 ຈິ່ງຖອນກຳລັງໜີຂຶ້ນໄປທາງພາກເໜືອເພື່ອເຕົ້າໂຮມກຳລັງ ແລະ ລວບລວມສັກດີນາເພື່ອກັບຄືນມາບຸກໂຈມຕີກຳລັງປະຕິວັດຄືນ.

## II. ສົງຄາມພາຍໃນເພື່ອການປະຕິວັດ (ປີ ຄ.ສ 1642-1649)

### 1. ສົງຄາມພາຍໃນຄັ້ງທີ 1 (ປີ ຄ.ສ 1642-1646)

ໃນວັນທີ 22 ສິງຫາ 1642 ພະເຈົ້າຊາກເລີໄດ້ຍົກກຳລັງພົນບຸກຕີທີ່ ນອດຕິນແຮັມ ຂະບວນການຕໍ່ສູ້ໄດ້ລະເບີດຂຶ້ນ ເຊິ່ງເປັນສົງຄາມລະຫວ່າງກຳລັງຂອງພວກສັກດີນາທີ່ມີກະສັດເປັນຜູ້ນຳ ແລະ ກຳລັງຂອງພວກນາຍທຶນທີ່ມີມະຫາຊົນໃຫ້ການສະໜັບສະໜູນ. ພວກສັກດີນາ, ຂ້າລາດສະບໍລິຍະພານ ແລະ ນັກບວດສາສະໜາຄຣິດນິກາຍແອັງກລີກັນ, ກຳລັງທະຫານລາຊະອານາຈັກໄດ້ນຳກຳລັງບຸກຕີການປະຕິວັດພາຍໃຕ້ຄຳຂວັນທີ່ວ່າ "ເພື່ອພະເຈົ້າ ແລະ ພະມະຫາກະສັດ". ກຳລັງດັ່ງກ່າວນີ້ມີພື້ນຖານແມ່ນຢູ່ພາກເໜືອ ແລະ ພາກຕາເວັນຕົກເຊິ່ງເປັນເຂດທີ່ເສດຖະກິດຍັງບໍ່ທັນມີການພັດທະນາ, ອຳນາດພວກສັກດີນາຍັງມີຄວາມເຂັ້ມແຂງ. ສ່ວນຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ນຳພາກຳລັງມວນຊົນປະກອບມີ: ຊາວນາ, ກຳມະກອນ, ນາຍຊ່າງຫັດຖະກຳ, ຊົນຊັ້ນກາງຕາມຕົວເມືອງ ກຸ່ມນີ້ແມ່ນອີງໃສ່ຄວາມໝັ້ນຄົງຂອງສະພາກຳລັງປະຕິວັດນີ້ເຄື່ອນໄຫວຕາມເຂດພາດຕາເວັນອອກສ່ຽງໃຕ້ ແລະ ພາກກາງເຊິ່ງເປັນເຂດທີ່ມີພື້ນຖານທາງດ້ານອຸດສະຫະກຳການຄ້າຕາມລັດທິທຶນນິຍົມຂະຫຍາຍຕົວ. ການປະຕິວັດອັງກິດເກີດຂຶ້ນດ້ວຍການເຮັດສົງຄາມພາຍໃນທີ່ສົ່ງຜົນຕໍ່ກັບບັນດາປະເທດສັກດີນາໃນທະວີບເອີຣົບ.

ໃນເວລາດຽວກັນນັ້ນສະເປນກ້າວເຂົ້າສູ່ໄລຍະຊຸດໂຊມ, ສ່ວນຝຣັ່ງກໍ່ຍັງບໍ່ທັນຈັດການກັບສິ່ງຕ່າງໆໃຫ້ເປັນລະບຽບພາຍຫຼັງຂະບວນການປົດປ່ອຍປະຊາຊົນສິ້ນສຸດລົງ, ເຢຍລະມັນກໍ່ຍັງອ່ອນແອພາຍຫຼັງການເຮັດສົງຄາມ 30 ປີ. ສ່ວນຣັດເຊຍ, ໂປແລນ ແລະ ສະວີດເຊີແລນ ກໍ່ມີການເຮັດສົງຄາມລະຫວ່າງ 3 ປະເທດ. ຍ້ອນແນວນັ້ນກຳລັງກະປະຕິວັດຂອງອັງກິດຈຶ່ງບໍ່ມີຄວາມກັງວົນໃຈຕໍ່ກັບກຳລັງຂອງບັນດາປະເທດພາຍນອກທີ່ຈະໃຫ້ການຊ່ວຍເຫຼືອແກ່ກະສັດອັງກິດອີກ.

ໃນເບື້ອງຕົ້ນສົງຄາມພາຍໃນໄດ້ເກີດຂຶ້ນເຊິ່ງເປັນການຕໍ່ສູ້ກັນລະຫວ່າງກະສັດ ກັບ ສະພາ ທີ່ມີສິດຜົນປະໂຫຍດຂັດກັນ. ຢູ່ພາຍໃນຖືກຕັດແບ່ງອອກເປັນ 2 ກຸ່ມຄືນຄື: ພວກຂຸນນາງເກົ່າແກ່ທີ່ກວມອັດຕາສ່ວນຫຼາຍແມ່ນອີງໃສ່ກຳລັງຂອງຂຸນນາງຊັ້ນສູງທີ່ຕ້ອງການຮັກສາອຳນາດຂອງກະສັດໄວ້ (ຕົ້ນຕໍແມ່ນຢູ່ຕົວເມືອງລອນດອນ) ແລະ ອີກກຸ່ມໜຶ່ງແມ່ນພວກຂຸນນາງທີ່ມີແນວຄິດແຕກຕ່າງໄປຈາກກຸ່ມທີໜຶ່ງຄືມີແນວຄິດບໍ່ນິຍົມກະສັດ ໂດຍຖືເອົາສົງຄາມເປັນເຄື່ອງມືໃນການບີບບັງຄັບໃຫ້ກະສັດຫຼຸດຜ່ອນສິດອຳນາດລົງກຸ່ມນີ້ເອີ້ນ

ວ່າ ກຸ່ມເອກະລາດເຊິ່ງມີຈຳນວນຄົນໜ້ອຍໃນສະພາເຊິ່ງປະກອບດ້ວຍ, ຂຸນນາງກາງ, ຂຸນນາງນ້ອຍ ເຊິ່ງເປັນຕົວແທນໃຫ້ແກ່ພວກນາຍທຶນຊັ້ນກາງ ໂດຍໄດ້ຮັບການສະໜັບສະໜູນຢ່າງຫຼວງຫຼາຍຈາກມວນຊົນທີ່ມີແນວຄິດໃນການຕໍ່ຕ້ານກະສັດ, ມີແນວຄິດໃນການເຮັດສົງຄາມ ແລະ ການຕໍ່ສູ້ເພື່ອຍາດຊີງກັນນຳພາພາຍໃນສະພາ ເຊິ່ງສິ່ງຜົນສະທ້ອນໂດຍກົງເຮັດໃຫ້ເກີດມີສົງຄາມພາຍໃນປະເທດ.

ສົງຄາມພາຍໃນປະເທດອັງກິດຖືກຕັດແບ່ງອອກເປັນ 2 ໄລຍະຄື:

- ໄລຍະທີ1: ແຕ່ປີ ຄ.ສ 1642 ຫາລະດູຮ້ອນຂອງປີ ຄ.ສ 1644 ໄລຍະນີ້ເຫັນວ່າກຳລັງຂອງຝ່າຍກະສັດຢູ່ໃນທ່າເປັນເຈົ້າການ. ສ່ວນຝ່າຍສະພາຍັງຖືວ່າເສຍປຽບຢູ່.
- ໄລຍະທີ 2: ແຕ່ລະດູຮ້ອນຂອງປີ ຄ.ສ 1644 ຫາ ປີ ຄ.ສ 1646 ໄລຍະນີ້ເຫັນວ່າກຳລັງຂອງຝ່າຍສະພາມີທ່າເປັນເຈົ້າການໃນສົງຄາມ.

ສົງການກາງເມືອງໃນໄລຍະທຳອິດເຫັນວ່າຝ່າຍສະພາຕົກຢູ່ໃນທ່າປຣາໄຊລຽນຕິດ ຍ້ອນແນວນັ້ນມາຮອດລະດູຮ້ອນຂອງປີ ຄ.ສ 1643 ກຳລັງຂອງຝ່າຍສະພາຕົກຢູ່ໃນສະພາບວິກິດ. ແຕ່ວ່າກຳລັງຂອງມວນຊົນຢູ່ລອນດອນໄດ້ລຸກຂຶ້ນປະທ້ວງແມ່ນໄດ້ຮັບໄຊຊະນະ. ຂະບວນການຕໍ່ສູ້ຂອງມວນຊົນນຳພາໂດຍໂອລິເວີ ໂຄຣມແວນ (ຕົວແທນຂອງສະພາ) ມີບົດບາດຍາດເອົາໄຊຊະນະໃນການຕໍ່ສູ້ຄັ້ງນີ້. ປະຊາຊົນຢູ່ສະກັອດແລນໄດ້ໃຫ້ການສະໜັບສະໜູນແກ່ຝ່າຍປະຕິວັດໄດ້ນຳກຳລັງຈຳນວນ 20.000 ຄົນເຂົ້າມາສະໜັບສະໜູນຝ່າຍສະພາກໍ່ຄືຝ່າຍປະຕິວັດ. ມາຮອດເດືອນກໍລະກົດ ກຳລັງທະຫານນຳພາໂດຍໂຄຣມແວນສາມາດຍາດເອົາໄຊຊະນະໃນການຕໍ່ສູ້ຢູ່ເມືອງແວກເຕີ, ມໍເລີ (ໃກ້ກັບເຂດ ໄອໂອອ໊ອກ) ເຮັດໃຫ້ສົງຄາມກາງເມືອງກ້າວເຂົ້າສູ່ໄລຍະໃໝ່.

ໂອລິເວີ ໂຄຣແວນ (ປີຄ.ສ 1599-1658) ແມ່ນຜູ້ນຳພາຂະບວນການປະຕິວັດທີ່ມີຄວາມເກັ່ງກ້າສາມາດຮອບດ້ານຂອງຝ່າຍເອກະລາດ ເປັນຕົວແທນໃຫ້ແກ່ພວກຂຸນນາງໃໝ່ ທ່ານເປັນຄົນໜຶ່ງທີ່ມີຮ່າງກາຍແຂງແຮງສົມບູນ, ເປັນນັກປຸກລະດົມການຈັດຕັ້ງ ແລະ ເປັນນາຍທະຫານຜູ້ເກັ່ງກ້າສາມາດ ພ້ອມດຽວກັນນັ້ນທ່ານຍັງເປັນຜູ້ທີ່ມີຄວາມສັດທາໃນສາສະໜາຄຣິສນິກາຍພິວລິຕັນ, ທ່ານມີແບບແຜນໃນການດຳລົງຊີວິດທີ່ລຽບງ່າຍ ສະນັ້ນປະຊາຊົນຈິ່ງມີຄວາມຮັກແພງຕໍ່ທ່ານ. ຜ່ານຂະບວນການຕໍ່ສູ້ທ່ານໄດ້ຢັ້ງຢືນວ່າ: ຖ້າກຳລັງທະຫານຫາດຂາດຄວາມເຊື່ອໝັ້ນໃນການປະຕິວັດການຕໍ່ສູໃດໆກໍ່ບໍ່ສາມາດຍາດເອົາໄຊຊະນະມາໄດ້. ໂຄຣມ

ແອນດຳເນີນການປະຕິວັດຢ່າງແທ້ຈິງ ແລະ ໝູນໃຊ້ກຳລັງສະໜັບສະໜູນຈາກມອນຊີນເພື່ອຍາດເອົາໄຊຊະນະໃນການຕໍ່ສູ້ຕ້ານກັບເຈົ້າຊີວິດ. ກອງທັບ ເຫຼັກກ້າ ມີກຳລັງພົນເຖິງ 22.000 ຄົນ, ໃນນັ້ນມີທະຫານມ້າ 6.000 ຄົນ. ນັ້ນແມ່ນກຳລັງທະຫານຂອງມອນຊີນ ເຊິ່ງສ່ວນຫຼາຍແມ່ນພວກຊາວນາ ແລະ ນາຍຊ່າງຫັດຖະກຳ ທີ່ມີຜູ້ບັນຊາການທະຫານສູງສຸດແມ່ນ ໂທມັດ ແຟບຟັກ, ບັນດານາຍທະຫານສ່ວນຫຼາຍແມ່ນພວກຂຸນນາງນ້ອຍແຕ່ກໍ່ຍັງມີບັນດານາຍຊ່າງເຮັດເກີບ, ຊ່າງຫຼອມເຫຼັກ ຄົນຂັບລົດ, ຄົນຂັບເຮືອ. ຈຸດພິເສດຂອງກຳລັງທະຫານແບບໃໝ່ແມ່ນມີເຕັກນິກທີ່ແຂງແກ່ນແໜ້ນໜາ, ມີຄວາມກະຕືລືລົ້ນໃນການປະຕິວັດ ແລະ ມີຄວາມສັດທາອັນແຮງກ້າໃນສາສະໜານິການພິວລິຕັນ ໃນການດຳເນີນສິງຄາມແຕ່ລະຄົນຕ້ອງປະຕິບັດຕາມກົດທີ່ວ່າ ບໍ່ໃຫ້ມີການຖອຍຫຼັງ ໝາຍຄວາມວ່າສະມາຊິກສະພາຕ້ອງແມ່ນຜູ້ບັນຊາກອງທັບ, ສະເພາະ ໂຄຣມແອນແລ້ວຈະຮັບຮູ້ນຳກັນວ່າເພິ່ນເປັນທັງສະມາຊິກສະພາ ແລະ ເປັນທັງຜູ້ບັນຊາການທະຫານຊ່ວຍ ໂທມັດ ແຟັບພັກ ແຕ່ຄວາມຈິງແລ້ວໂຄຣມແອນເປັນບຸກຄົນສຳຄັນທີ່ມີບົດບາດຕໍ່ກັບການປະຕິວັດອັງກິດ. ນັບຕັ້ງແຕ່ນັ້ນມາພວກສະມາຊິກສະພາອາວຸດໂສທີ່ນິຍົມກະສັດກໍ່ປຣາໄຊ ແລະ ໄຊຊະນະກໍ່ຕົກຢູ່ໃນກຳມືຂອງສະມາຊິກສະພາເອກະລາດ.



ໂອລິເວີ ໂຄຣແອນ (ປີຄ.ສ 1599-1658)

ຍ້ອນການປ່ຽນແປງໃໝ່ທາງດ້ານກຳລັງ ແລະ ທາດແທ້ນ້ຳໃຈການປະຕິວັດຂອງກຳລັງທະຫານໃໝ່ດັ່ງກ່າວນີ້ຈິ່ງຖືກຂະໜານນາມວ່າເປັນກອງທັບເຫຼັກກ້າ Iron Side. ກອງທັບເຫຼັກກ້າຂອງກຳລັງປະຕິວັດສາມາດຍາດເອົາໄຊຊະນະ ໂດຍສະເພາະແມ່ນບັ້ນຮົບທີ່ ເນເຊິບີ ໃນວັນທີ 14 ມິຖຸນາ 1645 ສາມາດ ຈັບກຳລັງທະຫານຂອງກະສັດໄດ້ 5.000 ຄົນ ແລະ ຢຶດອາວຸດໄດ້ທັງໝົດ. ເຮັດໃຫ້ພະເຈົ້າ ຊາກເລີທີ 1 ຕ້ອງຫຼົບໜີຂຶ້ນໄປລີ້ໄພຢູ່ທາງພາກເໜືອເຂດສະກັອດແລນ ແຕ່ກໍ່ຖືກກຳລັງປະຕິວັດຈັບຕົວເປັນນັກໂທດຂອງສະພາ. ບັນດາຜູ້ນຳສະກັອດແລນຮູ້ສຶກຍິນດີເປັນຢ່າງຍິ່ງ, ມາຮອດປີ ຄ.ສ 1646 ສົງຄາມກາງເມືອງຄັ້ງທີ 1 ໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງສະພາ



ການຮົບທີ່ ເນເຊບີ ຄັ້ງວັນທີ 14 ມິຖຸນາ ປີ 1645 ເຊິ່ງເປັນຈຸດປ່ຽນຂອງການປະຕິວັດ

ພາຍຫຼັງສົງຄາມກາງເມືອງເກືອບ 4 ປີ ສະພາບການຂອງອັງກິດກໍ່ຄ່ອຍໆຢຸດຕິລົງເຊິ່ງເປັນປະໂຫຍດຕໍ່ກັບຂະບວນການປະຕິວັດ.

## 2. ການເຄື່ອນໄຫວຂອງພວກລາດຊະດອນ (ກຸ່ມການປະຕິວັດຢ່າງແທ້ຈິງ)

ໃນໄລຍະສົງຄາມຕ້ານກັບກຳລັງທະຫານຂອງເຈົ້າຊີວິດ ແລະ ຕໍ່ມາກໍ່ຕໍ່ສູ້ຕ້ານກັບພວກຂຸນນາງເກົ່າ ໃນສະພາອາວຸດໂສນິຍົມກະສັດ, ຢູ່ພາຍໃນກຳລັງທະຫານ ແລະ ກຳລັງມວນຊົນໄດ້ກຳເນີດມີກຸ່ມຄົນໜຶ່ງມີຊື່ ເອີ້ນວ່າພວກລາດຊະດອນ. ພວກລາດຊະດອນເປັນຕົວແທນແກ່ປະຊາຊົນ, ຊາວນາ, ນາຍຊ່າງຫັດຖະກຳ ແລະ ພວກຊົນຊັ້ນກາງ. ພວກເຂົາມີຄວາມສະເໝີພາບທາງດ້ານການເມືອງ, ດຳເນີນການລົງຄະແນນສຽງ ເລືອກຕັ້ງ, ສ້າງຕັ້ງລະບອບສາທາລະນະລັດຂຶ້ນ, ອິດສະຫຼະໃນການນັບຖືສາສະໜາ, ອິດສະຫຼະໃນການ ຄ້າຂາຍ, ເຄື່ອນໄຫວບົນຫຼັກການສະເໝີພາບຕໍ່ໜ້າກົດໝາຍ. ຜູ້ນຳຂອງກຸ່ມຊັກໂກແບັງແມ່ນ ຈອນ ລິນເບີກ ເນີ (ຄ.ສ 1616-1657) ແມ່ນໜຶ່ງໃນຈຳນວນນັກການເມືອງທີ່ມີຄວາມເກັ່ງກ້າສາມາດ ແລະ ມີຄວາມຊື່ສັດ. ມີຫຼາຍຄັ້ງທີ່ຖືກຈັບເປັນສະເລີຍເສິກ ແລະ ຖືກທໍລະມານໃຫ້ໄຂຄວາມລັບແຕ່ທ່ານກໍ່ບໍ່ຍອມປ່ຽນແປງແນວ ຄວາມຄິດ ແລະ ຍັງຄົງຮັກສາຄວາມລັບໄວ້ໄດ້.

ໃນກອງທັບຂອງພວກລາດຊະດອນແມ່ນອີງໃສ່ກຳລັງສະໜັບສະໜູນຂອງມວນຊົນທີ່ມີຖານະຕໍ່າ ກວ່າ. ພວກເຂົາຕ້ອງການຊຸກຍູ້ໃຫ້ຂະບວນການປະຕິວັດດຳເນີນໄປຕໍ່, ບໍ່ຕອບສະໜອງຕາມຄວາມປາດຖະ ໜາຂອງພວກສະພາອາວຸດໂສ ແຕ່ໃຫ້ປະຕິບັດຕາມຄວາມຕ້ອງການຂອງສະພາເອກະລາດ.

ສ່ວນຝ່າຍສະພາເອກະລາດກໍ່ຍັງແມ່ນຕົວແທນຂອງຊົນຊັ້ນຂຸນນາງໃໝ່, ນາຍທຶນນ້ອຍ ແລະ ນາຍທຶນກາງທີ່ມີແນວຄິດກົງກັນຂ້າມກັບແນວຄິດຂອງກຳລັງມວນຊົນ. ໃນການຕໍ່ສູ້ຕ້ານກັບກະສັດ ແລະ ພວກຂຸນນາງເກົ່າ, ສະມາຊິກສະພາເອກະລາດມີບົດບາດສຳຄັນໃນການນຳພາ ແລະ ດຶງດູດເອົາກຳລັງມວນ ຊົນເຂົ້າມາຮ່ວມຂະບວນການ. ແຕ່ພາຍຫຼັງທີ່ອຳນາດຂອງຊົນຊັ້ນກາງໄດ້ຮັບການປົກປ້ອງ ແລະ ສະພາຕົກຢູ່ ໃນກຳມືເຂົາເຈົ້າແລ້ວສຳລັບພວກເຂົາແລ້ວຖືວ່າວຽກງານການປະຕິວັດແມ່ນຢຸດຕິລົງ. ສິ່ງດັ່ງກ່າວນີ້ຂັດແຍ່ງ ກັບຄວາມປາດຖະໜາຂອງປະຊາຊົນ, ເວລານັ້ນຝ່າຍຊັກໂກແບັງເປັນຕົວແທນໃຫ້ແກ່ປະຊາຊົນ, ຕ້ອງການ ໃຫ້ຂະບວນການປະຕິວັດດຳເນີນໄປຕໍ່ຢ່າງສຸດກົກສຸດປາຍ. ຍ້ອນແນວນັ້ນຈິ່ງເຮັດໃຫ້ເກີດມີສົງຄາມລະຫວ່າງ ກຸ່ມສະພາເອກະລາດ ແລະ ກຸ່ມຊັນໂກແບັງຕົວແທນຂອງມວນຊົນ. ແຕ່ທາດແທ້ຂອງສົງຄາມແມ່ນການຕໍ່ສູ້ ລະຫວ່າງພວກຂຸນນາງໃໝ່ ແລະ ນາຍທຶນ ກັບ ກຳລັງມວນຊົນທີ່ເປັນຕົວແທນຂອງປະຊາຊົນທົ່ວປະເທດ.

ພາຍຫຼັງທີ່ຄອບຄຸມສະພາໄດ້, ພວກເອກະລາດໄດ້ດຳເນີນການເຈລະຈາກັບກະສັດ ເພື່ອລວບລວມກິດໝາຍ. ອຳນາດທາງການເມືອງຕົກຢູ່ໃນກຳມືຂອງພວກເຂົາ ແລະ ຢຸດຕິຄວາມເປັນປະຊາທິປະໄຕພາຍໃນກອງທັບ.

ການເຈລະຈາລະຫວ່າງກະສັດ ແລະ ຝ່າຍເອກະລາດໄດ້ສ້າງຄວາມຂຸ່ນເຄືອງ ແລະ ຄວາມບໍ່ພໍໃຈໃຫ້ແກ່ກຳລັງທະຫານ ແລະ ປະຊາຊົນ. ມາໃນວັນທີ 18 ຕຸລາ ປີ ຄ.ສ 1647 ໄດ້ປະກາດຖະແຫຼງການທີ່ມີຊື່ວ່າໜ້າທີ່ຂອງກຳລັງທະຫານ ໃນຖະແຫຼງການດັ່ງກ່າວນັ້ນ ພວກເຂົາໄດ້ວາງໂຄງຮ່າງການເມືອງ ພາຍໃຕ້ຫົວຂໍ້ທີ່ວ່າ ຂໍ້ຮຽກຮ້ອງຂອງປະຊາຊົນ. ຂໍ້ຕົກລົງຮຽກຮ້ອງມີການຍຸບສະພາ, ຮຽກຮ້ອງໃຫ້ສະພາມີການເລືອກຕັ້ງ 2 ປີຕໍ່ໜຶ່ງຄັ້ງ. ຈຳນວນສະມາຊິກສະພາໃນແຕ່ລະຂົງເຂດຕ້ອງກວມເອົາອັດຕາສ່ວນຂອງປະຊາຊົນໃນເຂດນັ້ນ, ໃນຂໍ້ຕົກລົງດັ່ງກ່າວພວກເຂົາບໍ່ໄດ້ກ່າວເຖິງກະສັດ ແລະ ຂຸນນາງອາວຸດໂສເລີຍ. ສະພາຜູ້ແທນລາດຊະດອນປະກອບມີສະມາຊິກທີ່ເປັນຕົວແທນແກ່ປະຊາຊົນຈຳນວນ 400 ຄົນ ຖືວ່າເປັນຫ້ອງການໜຶ່ງ ຫຼື ອົງການຈັດຕັ້ງໜຶ່ງທີ່ມີສິດອຳນາດສູງສຸດໃນປະເທດ, ສິ່ງສຳຄັນທີ່ສຸດຮຽກຮ້ອງໃຫ້ມີການເລືອກຕັ້ງທົ່ວໄປ (ສຳລັບຜູ້ຊາຍ), ຮຽກຮ້ອງໃຫ້ມີຄວາມເປັນອິດສະຫຼະໃນນັບຖືສາສະໜາ, ລົບລ້າງພາສີທາງອ້ອມ, ຫຼຸດຜ່ອນພາສີຊັບສິນ, ລົບລ້າງທຸກຮູບການທີ່ມີລັກສະນະຈຳແນກເຮັດໃຫ້ເກີດຄວາມບໍ່ສະເໝີພາບ. ລັດຖະບານຕ້ອງຮັບຜິດຊອບໃນການລ້ຽງ ດູຄົນພິການ ແລະ ຄົນຊະລາ. ພວກເຂົາລົບລ້າງພາສີ 1/10 ທີ່ຈະມອບເຂົ້າໂບດ.

ຂໍ້ຮຽກຮ້ອງຂອງປະຊາຊົນ ເປັນໂຄງຮ່າງລະອຽດກ່ຽວກັບລະບອບການເມືອງຂອງປະເທດອັງກິດ, ທີ່ໄດ້ສະແດງໃຫ້ເຫັນລັກສະນະກ້າວໜ້າ, ມີລັກສະນະປະຊາທິປະໄຕ, ພ້ອມດຽວກັນນັ້ນມັນຍັງໄດ້ກີດຂວາງບັນດາສິ່ງທີ່ກົງກັນຂ້າມ, ສິ່ງທີ່ຜິດພາດ ໂດຍສະເພາະແມ່ນພວກເຂົາບໍ່ໄດ້ກ່າວເຖິງກ່ຽວກັບດິນນາ ແລະ ປະຖິ້ມຊາວນາຜູ້ທຸກຍາກເປັນຈຳນວນຫຼວງຫຼາຍ ຍ້ອນແນວນັ້ນມວນຊົນຈຶ່ງຄ່ອຍໆແຍກຕົວອອກຈາກພວກເຂົາ ແລະ ນີ້ກໍ່ເປັນສາເຫດທີ່ພາໃຫ້ການປະຕິວັດປະຊາທິປະໄຕອ່ອນເພຍລົງ.

ເຖິງຢ່າງໃດກໍ່ຕາມໜັງສືຮຽກຮ້ອງຂອງພວກມວນຊົນຍັງມີຄວາມໝາຍທີ່ສະແດງໃຫ້ເຫັນລັກສະນະກ້າວໜ້າ ແລະ ລັກສະນະຂອງການປະຕິວັດ. ການປະກາດໜັງສືຮຽກຮ້ອງ ສາມາດເຮັດໃຫ້ລະບອບສັກດີນາອ່ອນເພຍ ແລະ ສາມາດສ້າງຕັ້ງລະບອບປະຊາທິໄປະໄຕນາຍທຶນຢູ່ອັງກິດ. ສະນັ້ນໜັງສືຮຽກຮ້ອງດັ່ງກ່າວນັ້ນຈຶ່ງໄດ້ຮັບການສະໜັບສະໜູນຈາກກອງທັບ ແລະ ໄດ້ຝັງເລິກລົງໃນຄັນທຸງແຫ່ງການປະຕິວັດ.

## 3. ສົງຄາມກາງເມືອງຄັ້ງທີ 2 ປີຄ.ສ 1648 ແລະ ການລົງໂທດປະຫານຊີວິດຊາກເລີທີ 1

ເມື່ອສິ້ນສຸດໃນການເຈລະຈາກັບຝ່າຍຂຸນນາງອາວຸດໂສ, ສະພາຝ່າຍເອກະລາດໄດ້ຊອກຫາວິທີທາງໃນການເຈລະຈາກັບເຈົ້າຊີວິດ ເພື່ອໃຫ້ກະສັກຍອມຮັບຮູ້ສິດອຳນາດທາງການເມືອງຂອງພວກເຂົາ ແຕ່ເພະເຈົ້າຊາກເລີທີ 1 ຍັງດື້ດ້ານທີ່ຈະຮັກສາລະບອບຜະເດັດການສັກດີນາໄວ້. ພະເຈົ້າຊາກເລີທີ 1 ໄດ້ສວຍໃຊ້ໂອກາດທີ່ສະພາເກີດມີຂໍ້ຂັດແຍ່ງກັນລະຫວ່າງສະພາກັບກອງທັບ ໂຕນໜີໄປລີ້ໄພຢູ່ເກາະໄວອເຕີທີ່ຕັ້ງຢູ່ພາກໃຕ້ຂອງອັງກິດ.

ລະດູໃບໄມ້ຫຼົ່ນຂອງປີ ຄ.ສ 1648 ສົງຄາມກາງເມືອງຄັ້ງທີ II ໄດ້ລະເບີດຂຶ້ນ ເວລານີ້ຝ່າຍສະພາເອກລາດ ແລະ ຝ່າຍມວນຊົນຈຳເປັນຕ້ອງໄດ້ຮ່ວມມືກັນອີກຄັ້ງພາຍໃຕ້ການນຳພາຂອງໂຄຣມແວນ, ເພື່ອຕໍ່ສູ້ຕ້ານກັບກອງທະຫານຝ່າຍກະສັດ, ຂະບວນການຕໍ່ສູ້ໄດ້ເກີດຂຶ້ນລຽນຕິດຢູ່ໃນ 3 ຂົງເຂດໃຫຍ່ຂອງປະເທດອັງກິດຄື: ພາກເໜືອ, ພາກຕາເວັນອອກສ່ຽງໃຕ້ ແລະ ພາກຕາເວັນຕົກສ່ຽງໃຕ້. ກຳລັງທະຫານຂອງເຈົ້າຊີວິດເປັນຝ່າຍປຣາໄຊຢ່າງໜັກໜ່ວງ ແລະ ຮອດເດືອນສິງຫາ ປີ ຄ.ສ 1648 ສົງຄາມກາງເມືອງຄັ້ງທີ II ໄດ້ສິ້ນສຸດລົງເປັນອີກຄັ້ງໜຶ່ງທີ່ຝ່າຍປະຕິວັດໄດ້ຮັບໄຊຊະນະ.

ວັນທີ 23 ທັນວາ 1648 ສະພາໄດ້ຕົກຢູ່ໃນກຳມືຂອງຝ່າຍເອກະລາດ, ຜ່ານດຳລັດວ່າດ້ວຍການຕັດສິນກະສັດ ແລະ ມາໃນວັນທີ 4 ມັງກອນປີ 1649 ສະພາໄດ້ປະກາດເປັນອົງການຈັດຕັ້ງໜຶ່ງທີ່ມີອຳນາດສູງສຸດໃນປະເທດ. ສະພາໄດ້ແຕ່ງຕັ້ງສານທີ່ມີອຳນາດສູງສຸດໃນການຕັດສິນປະກອບມີສະມາຊິກ 135 ຄົນຮັບຜິດຊອບໃນການຕັດສິນຊະຕາກຳຂອງກະສັດ. ມາໃນວັນທີ 30 ມັງກອນ 1649 ເຈົ້າຊີວິດຊາກເລີ I ຖືກຕັດສິນປະຫານຊີວິດຕາມການຮຽກຮ້ອງຂອງກຳລັງມວນຊົນ.

ການປະຫານຊີວິດ ຊາກເລີ I ເປັນສັນຍາລັກທີ່ບົ່ງບອກເຖິງການເຕີບໃຫຍ່ຂະຫຍາຍຕົວຂອງການປະຕິວັດ, ເປັນໄຊຊະນະຄັ້ງໃຫຍ່ຫຼວງຂອງກຳລັງມວນຊົນ. ໃນຂະບວນການປະຕິວັດ ກຳລັງມວນຊົນໄດ້ສະແດງຄວາມຄິດເຫັນ, ຄວາມປາດຖະໜາ ແລະ ກຳລັງແຮງໃນການຊຸກຍູ້ຂະບວນການປະຕິວັດໃຫ້ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆ, ບໍ່ອະນຸຍາດໃຫ້ຜູ້ນຳການປະຕິວັດຢຸດຕິການປະຕິວັດໃນເວລາດຳເນີນການຕໍ່ສູ້ຕ້ອງເຮັດໃຫ້ສຸດກົກສຸດປາຍ. ໃນເວລາດຽວກັນນັ້ນຊົນຊັ້ນນາຍທຶນ ແລະ ພວກຂຸນນາງໃໝ່ ໄດ້ຜ່ານໄລຍະທີ່ມີຄວາມກ້າວໜ້າໄດ້ສະແດງແນວຄິດອະນຸລັກນິຍົມ ແລະ ປານີປະນອມອອກມາ. ເຖິງຢ່າງໃດກໍ່ຕາມ

ປະຫວັດສາດຍັງບໍ່ຢຸດຢູ່ທີ່ຄວາມຕ້ອງການຮັກສາສະຖາບັນກະສັດໄວ້ ແຕ່ສືບຕໍ່ພັດທະນາຕາມຄວາມຮຽກຮ້ອງຂອງກຳລັງມະຫາຊົນ.

## III. ລະບົບສາທາລະນະລັດ ແລະ ຜະເດັດການຂອງໂຄຣມແວນ

### 1. ລະບອບສາທາລະນະລັດ ແລະ ຂະບວນການເຄື່ອນໄຫວຕໍ່ສູ້ຂັ້ນສຸດທ້າຍຂອງກຳລັງມວນຊົນ.

ການປະຫານຊີວິດ ຊາກເລີ I ໄດ້ເປັນສັນຍາລັກສະແດງໃຫ້ເຫັນເຖິງຄວາມອ່ອນແອຂອງລະບອບຜະເດັດການສັກດີນາ ແລະ ເປັນໄຊຊະນະອັນຍິ່ງໃຫຍ່ຂອງຂະບວນການປະຕິວັດຢູ່ອັງກິດ. ວັນທີ 19 ພຶດສະພາ 1649 ຍ້ອນ ການຕໍ່ສູ້ຂອງກຳລັງມະຫາຊົນ ເຮັດໃຫ້ລະບອບສາທາລະນະລັດໄດ້ຮັບການສະຖາປະນາຂຶ້ນ. ສະມາຊິກສະພາຝ່າຍເອກະລາດໄດ້ກາຍເປັນຕົວແທນຂອງຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ຂຶ້ນກຳອຳນາດ, ສິດໃນການຮ່າງກົດໝາຍແມ່ນຂຶ້ນກັບສະພາຜູ້ແທນລາດຊະດອນ, ສ່ວນສະພາອາວຸດໂສ (ພວກຂຸນນາງເກົ່າທີ່ນິຍົມກະສັດ) ແມ່ນຖືກລົບລ້າງ. ສ່ວນໜ້າທີ່ຂອງພວກເຂົາແມ່ນມອບໃຫ້ອົງການຈັດຕັ້ງໜຶ່ງທີ່ສະພາເປັນຄົນແຕ່ງຕັ້ງຂຶ້ນມາມີວາລະໃນການເຮັດວຽກ 1 ປີ. ສ່ວນເຈົ້າໜ້າໃນກຳລັງທະຫານທີ່ນຳໂດຍໂຄຣມແວນ ຖືກແຕ່ງຕັ້ງໃຫ້ດຳລົງຕຳແໜ່ງທີ່ສຳຄັນ.

ສະພາບເສດຖະກິດພາຍໃຕ້ລະບອບສາທາລະນະລັດບໍ່ໄດ້ຮັບການປັບປຸງຫຍັງຫຼາຍ, ຊໍ້າຍັງໄດ້ຮັບຜົນກະທົບຈາກການຂະຫຍາຍອຸດສະຫະກຳນັບມື້ນັບຮຸນແຮງຂຶ້ນເລື້ອຍໆ ແລະ ຄົງຕົວເປັນເວລາດົນນານເຮັດໃຫ້ເກີດມີໄພຫວ່າງງານເກີດຂຶ້ນຢູ່ທີ່ ລອນດອນ ແລະ ເຂດອຸດສະຫະກຳອື່ນໆອີກ. ໄພແຫ້ງແລ້ງໃນປີ 1647-1648 ເຮັດໃຫ້ເກີດໄພອຶດຫິວ, ລາຄາສິນຄ້າແພງແຕ່ເງິນເດືອນຂອງກຳມະກອນພັດຕໍ່າ ແລະ ມີທ່າອ່ຽງຈະຫຼຸດລົງເລື້ອຍໆ, ໜ້າທີ່ໃນການເຮັດສົງຄາມໄດ້ຖືກກຳນົດໃນກອງທັບ, ການປົ້ນຈີ້ຂີ້ລັກນັບມື້ນັບເພີ່ມຂຶ້ນ, ການໃຊ້ອຳນາດລ່ວງລະເມີດສິດຂອງພວກທະຫານນັບມື້ຍິ່ງເພີ່ມຂຶ້ນເຮັດໃຫ້ປະຊາຊົນທຸກຍາກລຳບາກ. ຍ້ອນແນວນັ້ນຈິ່ງເວົ້າໄດ້ວ່າ ນອກຈາກການສະຖາປະນາສາທາລະນະລັດແລ້ວຖືວ່າບໍ່ມີສິ່ງໃດທີ່ກຳນົດໃນໜັງສືຮຽກຮ້ອງຂອງປະຊາຊົນໄດ້ຮັບການປະຕິບັດ ແລະ ຕອບສະໜອງຕາມຄຳຮຽກຮ້ອງຂອງປະຊາຊົນຕາມທີ່ຝ່າຍເອກະລາດໄດ້ໃຫ້ຄຳສັນຍາໃນເບື້ອງຕົ້ນໃນເວລາດຳເນີນສົງຄາມກາງເມືອງຄັ້ງທີ II.

ດັ່ງນັ້ນ, ຂະບວນການຕໍ່ສູ້ເພື່ອການປະຕິວັດຂອງກຳລັງມະຫາຊົນຖືວ່າຍັງບໍ່ທັນໄດ້ຮັບການພັດທະນາໃຫ້ດີຂຶ້ນ. ການເຮັດຜິດສັນຍາຕໍ່ກັບໜັງສືຮຽກຮ້ອງຂອງປະຊາຊົນ ເຮັດໃຫ້ກຳລັງມະຫາຊົນໝົດສັດທາ ແລະ

ບໍ່ພໍໃຈຢ່າງຍິ່ງ ເຮັດໃຫ້ມອນຊິນລຸກຂຶ້ນຕໍ່ສູ້ ໂດຍມີ ຈອນ ລິນເບີກ ເປັນຜູ້ນຳກຳລັງມອນຊິນ ບຸກໂຈມຕີລັດຖະບານຢ່າງຮຸນແຮງ. ພວກມະຫາຊົນຖືວ່າອຳນາດຂອງພວກເອກະລາດເປັນດັ່ງ ໂສ້ຄ້ອງຄໍອັນໃໝ່ ແລະ ຮຽກຮ້ອງໃຫ້ກຳລັງມອນຊິນທຳການຕໍ່ສູ້.

ກຳລັງກຸ່ມມອນຊິນໄດ້ນຳພາກອງທັບຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທີ່ບັນທຶກໄວ້ໃນໜັງສືຮຽນຮ້ອງຂອງປະຊາຊົນ ດຳເນີນການປົດປ່ອຍ ແລະ ປະຕິຮູບຫົວໜ່ວຍຕ່າງໆໃນກຳລັງທະຫານ ແຕ່ກໍ່ຖືກກຳລັງຂອງໂຄຣມແວນປາບປາມ ແລະ ຈັບກຸມກຸ່ມມອນຊິນເປັນຈຳນວນຫຼວງຫຼາຍ ເຮັດໃຫ້ກຸ່ມມອນຊິນສະຫຼາຍຕົວລົງ.

## 2. ຂະບວນການຕໍ່ສູ້ຂອງຄົນເພື່ອບຸກເບີກດິນ

ລະດູໃບໄມ້ຫຼົ່ນຂອງປີ 1949 ຢູ່ອັງກິດເກີດມີຂະບວນການຕໍ່ສູ້ປະຊາທິປະໄຕໜຶ່ງເອີ້ນວ່າ ກຸ່ມ ຂຸດຄົ້ນດິນ (ບຸກເບີກດິນ). ຄວາມຕ້ອງການຂອງ ຈອນ ລິນເບີກ ແມ່ນບໍ່ສາມາດແກ້ໄຂບັນຫາຄວາມທຸກຍາກຂອງມະຫາຊົນ  ຜູ້ທຸກຍາກອະນາຖາ ແລະ ຊົນຊັ້ນກຳມະກອນ. ຄວາມຕ້ອງການຂອງປະຊາຊົນຜູ້ທຸກຍາກແມ່ນຕ້ອງການຄວາມສະເໝີພາບທາງດ້ານຊັບສິນ. ພວກເຂົາເອີ້ນຕົນເອງວ່າ ກຸ່ມລາດຊະດອນຢ່າງແທ້ຈິງ. ນັກຈິດຕະວິທະຍາທີ່ເປັນຕົວແທນແກ່ພວກເຂົາແມ່ນ *Uynxtenlay* (1609-1657) ເປັນນັກທຸລະກິດຂະໜາດນ້ອຍຢູ່ນະຄອນລອນດອນ ທີ່ເຄີຍຜ່ານຄວາມທຸກຍາກມາແລ້ວ ຕໍ່ມາທ່ານໄດ້ກາຍເປັນເປັນເຈົ້າຂອງຟາມກະເສດ. ທ່ານ ແລະ ພັກພວກທີ່ຢູ່ໃນກຸ່ມຮັບຮູ້ໄດ້ເຖິງຄວາມຮູ້ສຶກຂອງຊາວນາ ເມື່ອກຳມະສິດໃນການຄອບຄອງດິນນາໃນລະບອບສັກດີນາຈະຖືກປ່ຽນມາເປັນກຳມະສິດຄອບຄອງຂອງພວກນາຍທຶນ. ພວກເຂົາໄດ້ຍົກບັນຫາຂຶ້ນມາວ່າ ການປະຕິວັດຍັງບໍ່ສິ້ນສຸດເພາະເຖິງແມ່ນວ່າອຳນາດຂອງເຈົ້າຊີວິດຖືກທຳລາຍລົງແຕ່ອຳນາດດັ່ງກ່າວພັດຕົກໃນກຳມືຂອງພວກຂຸນນາງໃໝ່, ເຮັດແນວໃດກໍ່ບໍ່ມີອິດສະຫຼະຖ້າຫາກຕອນດິນຕ້ອງຕົກຢູ່ໃນກຳມືຂອງພວກຂຸນນາງໃໝ່ ແລະ ພວກນາຍທຶນ. ສະນັ້ນ, ພວກເຂົາຈິ່ງພາກັນລຸກຂຶ້ນຕໍ່ສູ້ຕ້ານການເປັນເຈົ້າຂອງກຳມະສິດດິນນາຂອງພວກຂຸນນາງໃໝ່. ກຸ່ມຂຸດຄົ້ນດິນໄດ້ໃຫ້ຄຳເຫັນວ່າ ດິນນາຮົ້ວສວນຈະບໍ່ຕົກຢູ່ໃນກຳມືຂອງບຸກຄົນໃດໜຶ່ງອີກ, ຕ້ອງແມ່ນຊັບສົມບັດສ່ວນລວມ ແລະ ເປັນບ່ອນທຳມາຫາກິນລວມ. ຍ້ອນແນວນັ້ນພວກ ຂຸດຄົ້ນດິນ ຈິ່ງສ້າງລັດທິປະຊາທິປະໄຕໃນກອງກຳລັງຂອງພວກຊາວນາ. ໃນປີ ຄ.ສ 1652 ຢູ່ໃນຮ່າງກົດໝາຍອິດສະຫຼະ ພວກເຂົາໄດ້ສ້າງຕັ້ງລະບອບສັງຄົມໃໝ່ ໃນນັ້ນລະບອບການຍຶດຄອງກຳມະສິດ

ສ່ວນຕົວຖືກລຶບລ້າງ ແລະ ລະບອບຄົນກົດຂີ່ຂູດຮີດຄົນແມ່ນບໍ່ມີອີກແລ້ວ. ເງື່ອນໄຂປະຫວັດສາດໃນເວລານັ້ນແນວຄິດຂອງກຸ່ມ ຂຸດຄົ້ນດິນ ຖືວ່າເປັນແນວຄິດທີ່ກ້າວໜ້າ, ມີລັກສະນະສັງຄົມນິຍົມແຕ່ແນວຄິດນັ້ນຍັງເປັນແນວຄິດຂອງກຸ່ມຄົນຂະໜາດນ້ອຍທີ່ມີລັກສະນະເພີ້ຝັນເປັນໄປບໍ່ໄດ້. ແຕ່ມັນສະແດງໃຫ້ເຫັນຢ່າງຈະແຈ້ງເຖິງແນວຄິດສ່ວນໃຫ່ຍຂອງຊົນຊັ້ນຊາວນາຜູ້ທຸກຍາກ.

ກົງກັນຂ້າມພື້ນຖານຂອງຂະບວນການລຸກຮື້ຂຶ້ນຕໍ່ສູ້ຄັ້ງນີ້ແມ່ນບໍ່ໄດ້ຮຽນຮ້ອງໃຫ້ເຮັດເສິກສົງຄາມກັບຝ່າຍສັດຕູເພື່ອຢຶດຄອງຄວາມເປັນເຈົ້າຂອງທີ່ດິນ. *Uynxtenlay* ໄດ້ປະກາດອອກມາວ່າ: ດ້ວຍຄວາມຮັກ ແລະ ຄວາມມານະອົດທົນ ພວກເຮົາຈະໄດ້ຮັບໄຊຊະນະ(ໝາຍຄວາມວ່າຈະສາມາດເປັນເຈົ້າຂອງດິນດອນຕອນຫຍ້າ)ຄື: ພວກເຂົາໄດ້ເຕົ້າລວມກັນເປັນກຸ່ມເປັນກ້ອນປະມານ 30-40 ຄົນ. ນຳໃຊ້ຈິກ-ສຽມໃນການຂຸດຄົ້ນດິນດອນຕອນຫຍ້າເພື່ອບຸກເບີກດິນຕາມຈອມພູທີ່ສູງຊັນ ແລະ ທຸລະກັນດານ ຍ້ອນແນວນັ້ນພວກເຂົາຈຶ່ງຖືກເອີ້ນວ່າ: ກຸ່ມຄົນ ຂຸດຄົ້ນດິນ. ຍ້ອນຄວາມຕ້ອງການມີກິນມີຢ່າງຫຼວງຫຼາຍຈຶ່ງເຮັດໃຫ້ກຳລັງຂອງພວກເຂົາໄດ້ຮັບການສະໜັບສະໜູນຈາກມະຫາຊົນ ແລະ ແຜ່ຂະຫຍາຍຢ່າງໄວວາ.

ເຖິງແມ່ນວ່າຂະບວນການລຸກຮື້ຂຶ້ນຕໍ່ສູ້ຈະມີລັກສະນະສັນຕິກໍ່ຕາມ ແຕ່ວ່າ ຄຳຖະແຫຼງການປະຕິວັດຂອງພວກເຂົາໄດ້ແຕະຕ້ອງເຖິງຫຼັກການຂອງລະບອບການຢຶດຄອງກຳມະສິດສ່ວນຕົວເຮັດໃຫ້ພວກທີ່ມີກຳມະສິດສ່ວນຕົວມີຄວາມວິຕົກກັງວົນ ສະນັ້ນ ຈອນ ລິນເບີກ ຈຶ່ງກ່າວປະນາມພວກເຂົາ ຕໍ່ມາ ກຸ່ມຄົນຂຸດຄົ້ນດິນກໍ່ຖືກປາບປາມ ແລະ ຮຸກຮານດ້ວຍການທຳລາຍເຮືອນຊານບ້ານຊ່ອງ, ໄຮ່ນາຮົ້ວສວນຕະຫຼອດຮອດສັດສາວາສິ່ງທີ່ພວກເຂົາລ້ຽງເກືອ. ພວກນາຍທຶນ ແລະ ພວກຂຸນນາງໃໝ່ເຫັນຊາວຜູ້ອອກແຮງງານແບບສັນຕິເປັນສັດຕູຕົວອັນຕະລາຍຂອງລະບອບກຳມະສິດສ່ວນຕົວ. ສະນັ້ນ, ພວກນາຍທຶນ ແລະ ພວກຂຸນນາງໃໝ່ຈຶ່ງມອບອາວຸດໃຫ້ທະຫານ ແລະ ຕຳຫຼວດ ປາບປາມກຳລັງຂອງພວກຂຸດຄົ້ນດິນ. ບໍ່ດົນປານໃດຂະບວນການລຸກຮື້ຂຶ້ນເພື່ອປົດປ່ອຍກໍ່ພັງທະລາຍລົງ.

### 3. ສົງຄາມຮຸກຮານໄອແລນ, ສະກັອດແລນ ແລະ ການພັງທະລາຍຂອງລະບອບສາທາລະນະລັດ.

ພາຍຫຼັງການປາບປາມຂະບວນການລຸກຮື້ຂຶ້ນສູ້ເພື່ອປະຊາທິປະໄຕຢູ່ອັງກິດ ໂຄຣມແວນໄດ້ດຳເນີນການຮຸກຮານພາຍນອກ. ກ່ອນອື່ນໝົດແມ່ນບຸກຕີເຂົ້າໄອແລນ ແລະ ສະກັອດແລນ. ຊົນຊັ້ນນາຍທຶນໜີຈາກ

ໂສ້ຜູກຄໍຂອງລະບອບສັກດີນາ ແຕ່ກໍ່ບໍ່ສາມາດປົດປ່ອຍກຳລັງມະຫາຊົນໄດ້ ຊ້ຳບໍ່ໜຳຍັງນຳເອົາໂສ້ມັດແບບຂ້າທາດມາຖິ້ມໃສ່ບ່າຂອງປະຊາຊົນຊາວຜູ້ອອກແຮງງານທັງພາຍໃນ ແລະ ຕ່າງປະເທດ.

ເດືອນສິງຫາ 1649 ໂຄຣມແວນ ໄດ້ນຳກຳລັງບຸກຕີເຂົ້າໄອແລນ ເຊິ່ງເປັນໝູ່ເກາະທີ່ອຸດົມສົມບູນຂຽວງາມ. ນີ້ແມ່ນຂະບວນການຕໍ່ສູ້ຮຸກຮານຄັ້ງທຳອິດຂອງປະເທດສາທາລະນະລັດອັງກິດ, ສົງຄາມຄັ້ງນີ້ໄດ້ດຳເນີນໄປຢ່າງໂຫດຮ້າຍ ແລະ ໄຮ້ມະນຸດສະທຳທີ່ບໍ່ເຄີຍມີມາກ່ອນໃນປະຫວັດສາດຂອງການຕໍ່ສູ້ໃນໄອແລນ. ເຖິງຢ່າງໃດກໍ່ຕາມປະຊາຊົນໄອແລນໄດ້ລຸກຂຶ້ນຕໍ່ສູ້ຢ່າງພິລະອາດຫານເພື່ອຕໍ່ສູ້ຕ້ານກັບການຮຸກຮານ. ໂດຍໝູນໃຊ້ຄວາມໄດ້ປຽບດ້ານກຳລັງທະຫານ ແລະ ເຕັກນິກ, ຂໍ້ຂັດແຍ່ງພາຍໃນກຳລັງທະຫານ ໂຄຣມແວນໄດ້ດຳເນີນການຕໍ່ສູ້ປາບປາມພວກຕໍ່ຕ້ານການຮຸກຮານໃນປະເທດນັ້ນ. ກຳລັງທະຫານອ່ອນນ້ອຍໄດ້ຖືກໂຈມຕີຈົນຖອຍທັບໜີຮອດພາກຕາເວັນຕົກ. ຮອດປີ ຄ.ສ 1652 ໂຄຣມແວນສາມາດຍາດໄດ້ໄຊຊະນະ. ປະຊາກອນເກືອບເຄິ່ງໜຶ່ງຖືກຂ້າຕາຍ ແລະ ທີ່ຍັງເຫຼືອແມ່ນຖືກຈັບເປັນສະເລີຍເສິກຕ້ອງອອກແຮງງານຄືກັບຂ້າທາດຜິວດຳຢູ່ເຂດອະນານິຄົມຂອງອັງກິດຢູ່ທະວີບອາເມຣິກາ. ບັນດາດິນໄຮ່ນາຮົ້ວສວນຢູ່ໄອແລນໄດ້ຕົກຢູ່ໃນກຳມືຂອງພວກເຈົ້າຂອງທະນາຄານ ແລະ ຜູ້ນຳຊັ້ນສູງໃນກອງກຳລັງທະຫານ. ການຮຸກຮານ ແລະ ຍຶດຄອງດິນນາຢູ່ໄອແລັຍເຮັດໃຫ້ມີຊົນຊັ້ນໃໝ່ເກີດຂຶ້ນໃນກຸ່ມຂຸນນາງອັງກິດ. ຍ້ອນແນວນັ້ນຂະບວນຮຸກຮານເຂົ້າໄອແລນແມ່ນແນໃສ່ເພື່ອຕ້ອງການຍຶດດິນາ ແລະ ກໍ່ເພື່ອສ້າງພື້ນຖານສັງຄົມໃໝ່ໃນລະບອບ ໂຄຣມແວນ.

ປີຄ.ສ 1560 ໂຄຣມແວນໄດ້ນຳກຳລັງບຸກຕີເຂົ້າສະກັອດແລນ ແລະ ຕາມຄວາມຄິດຂອງໂຄຣມແວນແມ່ນຖ້າເອົາຊະນະສົງຄາມຢູ່ສະກັອດແລນກໍ່ຖືວ່າສາມາດເອົາຊະນະກຳລັງປະຕິວັດໃນທົ່ວປະເທດ. ບັນດາອຳນາດການປົກຄອງຢູ່ສະກັອດແລນຖືກຍຶດຄອງ ແລະ ຕົກຢູ່ໃນກຳມືຂອງຊົນຊັ້ນຂຸນນາງອັງກິດ. ໃນທີ່ນີ້ນະໂຍບາຍໃນການປົກຄອງບັນດາຫົວເມືອງຂຶ້ນ ຖືກປະຕິບັດອັນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນອັງກິດທຸກຍາກລຳບາກ.

ໃນປີ ຄ.ສ 1652 ຍ້ອນມີພື້ນຖານທາງດ້ານກຳລັງທະຫານທີ່ແຂ່ງແກ່ນ ອັງກິດຈຶ່ງດຳເນີນນະໂຍບາຍຮຸກຮານ ແລະ ບຸກຕີເອົາບັນດາປະເທດທີ່ຢູ່ໃກ້ຄຽງຢູ່ໜ້ານ້ຳທະເລປະເທດໂຮນລັງ. ຂະບວນການຕໍ່ສູ້ລະຫວ່າງອັງກິດ- ໂຮນລັງແກ່ຍາວເປັນເວລາ 2 ປີ ແລະ ສິ້ນສຸດລົງໂດຍໄຊຊະນະເປັນຂອງອັງກິດ. ໂຮນລັງ

ຕ້ອງຍອມຮັບເອົາການນຳເອົາສິນຄ້າທາງທະເລຂອງອັງກິດໝາຍຄວາມວ່າຕ້ອງອະນຸຍາດໃຫ້ເຮືອບັນທຸກສິນຄ້າຂອງອັງກິດ. ໂຮນລັງຖືກຫຼຸດພາລະບົດບາດໃນການເປັນຜູ້ຂົນສົ່ງສິນຄ້າຢູ່ໃນທະເລ.

ການປາບປາມກຳລັງປະຕິວັດພາຍໃນ ແລະ ໄຊຊະນະໃນການເຮັດສົງຄາມກັບພາຍນອກເຮັດໃຫ້ກຳລັງທາງດ້ານເສດຖະກິດ ແລະ ການເມືອງຂອງຊົນຊັ້ນຂຸນນາງໃໝ່ມີການຂະຫຍາຍຕົວຢ່າງແຂງແຮງ. ໃນເວລານັ້ນກຳລັງແຮງຂອງປະຊາຊົນຜູ້ທີ່ໄດ້ຮັບຜົນສະທ້ອນຫຼາຍທີ່ສຸດໃນຂະບວນການປະຕິວັດພວກເຂົາຕ້ອງຖືກຍຶດດິນໄຮ່ນາຮົ້ວສວນ ແລະ ຊັບສົມບັດອັນມີຄ່າ. ອຳນາດຂອງພວກຂຸນນາງໃໝ່ນັບມື້ນັບເພີ່ມຂຶ້ນ. ເຮັດໃຫ້ກະແສຟອງແຫ່ງຄວາມຄຽດແຄ້ນຂອງປະຊາຊົນນັບມື້ນັບສູງຂຶ້ນ. ຍ້ອນໄດ້ຮັບການສະໜັບສະໜູນໂຄຣມແວນຈຶ່ງປະກາດນຳໃຊ້ກົດໝາຍເພື່ອປົກປ້ອງສິດອຳນາດຂອງຕົນ. ວັນທີ 20 ເມສາ ປີ ຄ.ສ 1652 ໂຄຣມແວນໄດ້ນຳກຳລັງບຸກຍຶດລັດຖະສະພາ ທີ່ຄົງຕົວເປັນເວລາ 13 ປີ ນີ້ແມ່ນການຮຸກຮານໂຈມຕີລະບອບສາທາລະນະລັດຄັ້ງທຳອິດ ໂຄຣມແວນ ໄດ້ສ້າງຕັ້ງ ສະພານ້ອຍ ປະກອບມີສະມາຊິກສະພາທີ່ໄດ້ມາຈາກການແນະນຳໃນທ້ອງຖິ່ນ. ສະພານ້ອຍ ຈະເຮັດໜ້າທີ່ໃນການປະຕິຮູບໃນລະບົບຂ້າລາດຊະການ ແລະ ການສໍ້ລາດບັງຫຼວງຂອງຜູ້ຕັດສິນຄະດີ (ຜູ້ພິພາກ ຫຼື ສານ), ຫຼຸດຜ່ອນການເກັບພາສີ ແລະ ລົບລ້າງການເສຍພາສີໃຫ້ໂບດ, ຫຼຸດຜ່ອນກຳລັງທະຫານ... ສິ່ງດັ່ງກ່າວນັ້ນມັນໄດ້ເຮັດໃຫ້ຝ່າຍຍຶດຄອງກຳມະສິດມີຄວາມກັງວົນໃຈ ຕໍ່ກັບໂຊກສະຕາກຳຂອງຕົນ ການບຸກໂຈມຕີສະພາຄັ້ງນີ້ທາດແທ້ແມ່ນເພື່ອທັບມ້າງລະບອບສາທາລະນະລັດຢູ່ອັງກິດ.

**4. ການປົກປັກຮັກສາລະບອບຜະເດັດການໂຄຣມແວນ (1653-1658)**

ຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ມີຄວາມກັງວົນໃຈຕໍ່ກັບກຳລັງຂອງຝ່າຍປະຊາຊົນ ຫຼື ຝ່າຍລາດຊະດອນ. ເວລາໃດພວກເຂົາກໍ່ກຽມພ້ອມທີ່ຈະທຳລາຍລະບອບສາທາລະນະລັດ ເພື່ອສ້າງຕັ້ງອຳນາດໃໝ່ທີ່ເປັນດັ່ງມືເຫຼັກກ້າ ທີ່ສາມາດຕີເອົາຊະນະກຳລັງປະຕິວັດພາຍໃນປະເທດ ແລະ ບັນດາປະເທດອ້ອມຂ້າງ. ນັບແຕ່ນັ້ນມາສະພາກໍ່ເປັນພຽງຮູບແບບການຈັດຕັ້ງຂອງສະມາຊິກສະພາທີ່ໄດ້ຮັບການຄັດເລືອກຢ່າງລະມັດລະວັງ. ໂຄຣມແວນໄດ້ກາຍເປັນຜູ້ປົກປັກຮັກສາ ອຳນາດຜະເດັດການ, ກຳອຳນາດທຸກຂົງເຂດເປັນຜູ້ມີອຳນາດສົມບູນຄື: ເປັນທັງຜູ້ບັນຊາການທະຫານສູງສຸດທະຫານບົກ ແລະ ກອງທັບເຮືອ. ມີສິດກວດສອບທາງດ້ານການເງິນ ແລະ ກວດກາການດຳເນີນງານຂອງຜູ້ຕັດສິນຄະດີ, ມີສິດກຳນົດນະໂຍບາຍພາຍໃນ ແລະ

ພາຍນອກ, ຮ່າງກົດໝາຍ... ໂຄຣມແວນມີກຳລັງທະຫານທີ່ແຂງແກ່ນເພື່ອປົກປ້ອງອຳນາດຂອງພວກນາຍທຶນ, ທົ່ວປະເທດອັງກິດຖືກຕັດແບ່ງອອກເປັນ 11 ເຂດຕາມຈຳນວນຜູ້ບັນຊາການທະຫານຂອງລູກມືຂອງໂຄຣມແວນ. ໂຄຣມແວນ ປົກຄອງຢູ່ມີອຳນາດອະພິສິດທີ່ກວ້າງຂວາງຄືກັບ ເກາະປ້ອງກັນ. ມີຄຳສັ່ງເດັດຂາດ ແລະ ຄອຍສອດແນມການປະຕິບັດງານຂອງຂ້າລາດຊະການໃນປະເທດ.

ລັດຖະບານພິທັກກໍ່ບໍ່ສາມາດແກ້ໄຂບັນຫາຄວາມທຸກຍາກ, ນັບມື້ນັບເພີ່ມທະວີຂຶ້ນ. ຂະບວນການຕໍ່ຕ້ານຂອງກຳລັງມະຫາຊົນກໍ່ບໍ່ຢຸດຕິລົງ ແລະ ແຜ່ລາມທົ່ວປະເທດ. ສົງຄາມລະຫວ່າງອັງກິດ-ສະເປນ (ປີ ຄ.ສ 1654) ເຖິງວ່າຈະໄດ້ຮັບໄຊຊະນະກໍ່ຕາມແຕ່ຜົນປະໂຫຍດທີ່ໄດ້ຮັບແມ່ນບໍ່ຄຸ້ມຄ່າກັບຄ່າໃຊ້ຈ່າຍໃນກອງທັບ ລັດຖະບານຕ້ອງໄດ້ຕິດໜີ້ເປັນຈຳນວນເງິນ 2 ລ້ານ ຢູໂຣອັງກິດ. ອຸດສະຫະກຳການຄ້າບໍ່ຂະຫຍາຍຕົວຍ້ອນສົງຄາມສິນຄ້າປະເພດທີ່ເຮັດຈາກຂົນສັດມີທ່າອ່ຽງຫຼຸດລົງເຊິ່ງແຕ່ກ່ອນສາມາດຜະລິດໄດ້ 10.000 ໂຕນ ຫຼຸດລົງເປັນ 2.000 ໂຕນ, ຫຼາຍພັນຄອບຄົວທຸກຍາກຂາດເຂີນ. ຍ້ອນສະພາບການເປັນຄືແນວນີ້ຈິ່ງເຮັດໃຫ້ຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ບໍ່ເຊື່ອໝັ້ນຕໍ່ອຳນາດຂອງພວກພິທັກ, ບໍ່ຍອມໃຫ້ໂຄຣມແວນຢືມງົບປະມານອີກ ແລະ ຕ້ອງການຟື້ນຟູລັດທິຈັກກະພັດໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ.

ການຕາຍຂອງ ໂຄຣມແວນໃນວັນທີ 3 ກັນຍາ 1658 ຍິ່ງເຮັດໃຫ້ລະບອບຜະເດັດການເຊື່ອມໂຊມລົງຢ່າງໄວວາ. ລູກຊາຍຂອງ ໂຄຣມແວນ ມີຊື່ວ່າ ຣິຊາດ ຂຶ້ນກຳອຳນາດແທນເປັນຜູ້ທີ່ບໍ່ມີຄວາມສາມາດ, ບໍ່ສາມາດແກ້ໄຂຄວາມຫຍຸ້ງຍາກທີ່ຜູ້ເປັນພໍ່ໄດ້ປະຖິ້ມໃຫ້. ລະດູໃບໄມ່ຫຼົ່ນຂອງປີຄ.ສ 1659 ຊົນຊັ້ນນາຍທຶນ, ຂຸນນາງ ແລະ ນາຍທະຫານທີ່ມີອຳນາດສູງ ໄດ້ໂຄ່ນລົ້ມອຳນາດລະບອບຜະເດັດການທີ່ໂຄຣມແວນສ້າງຂຶ້ນມາໃຫ້ສິ້ນສຸດລົງ, ຂະບວນການປະຕິວັດສິ້ນສຸດລົງ.



ຣິຊາດ ໂຄຣມແວນ Richard Cromwell (1626-1712)

# IV. ການຟື້ນຟູລາດຊະວົງ ສະຈວດ ແລະ ສົງຄາມໃນປີ 1688.

## 1. ການຟື້ນຟູລາດຊະວົງສະຈວດ ແລະ ນະໂຍບາຍໃນການປົກຄອງ

ໃນໄລຍະການປົກຄອງຂອງ ຣິຊາດ ໂຄຣມແວນ Richard Cromwell (1626-1712) ຂໍ້ຂັດແຍ່ງນັບມື້ນັບເພີ່ມຂຶ້ນຢ່າງຮຸນແຮງ ພ້ອມດຽວກັນນັ້ນກຳລັງທະຫານກໍ່ມີຂໍ້ຂັດແຍ່ງ. ເຮັດໃຫ້ພວກນາຍທຶນ ແລະ ຂຸນນາງມີທ່າອ່ຽງຕ້ອງການຟື້ນຟູລະບອບກະສັດຄືນໃໝ່ເພື່ອປົກປ້ອງສິດຜົນປະໂຫຍດ. ນາຍພົນ ໂມນເກີຕົວແທນໃຫ້ແກ່ກະແສແນວຄິດດັ່ງກ່າວທີ່ເປັນຜູ້ບັນຊາການທະຫານອັງກິດຢູ່ສະກັອດແລນ ຕັດສິນໃຈຍົກທັບ

ກັບຄືນມາລອນດອນເພື່ອສະໜັບສະໜູນຝ່າຍນາຍທຶນ, ຂຸນນາງ ທີ່ນິຍົມກະສັດ. ໂມນເກີໄດ້ຟື້ນຟູລະບອບທີ່ມີ 2 ສະພາຄື: ສະພາກ່ອນການປະຕິວັດສະມາຊິກສ່ວນຫຼາຍແມ່ນພວກມີແນວຄິດກົງກັນຕ້ອງການຮັກສາອຳນາດກະສັດໄວ້ຈິ່ງໄດ້ແຕ່ງຕັ້ງໃຫ້ນາຍພົນ ໂມນເກີ ໄປເຈລະຈາກັບ ພະເຈົ້າ ຊາກເລີທີ 2 (ລູກຊາຍຂອງພະເຈົ້າຊາກເລີທີ 1)ທີ່ກຳລັງລີ້ໄພຢູ່ຕ່າງປະເທດ.



ພະເຈົ້າຊາກເລີທີ 2 (ລູກຊາຍຂອງພະເຈົ້າຊາກເລີທີ 1)

ປີ ຄ.ສ 1660 ຊາກເລີທີ 2 ໄດ້ກັບຄືນມາອັງກິດເພື່ອຂຶ້ນຄອງລາດຊະບັນລັງ ໄດ້ໃຫ້ຄຳໝັ້ນສັນຍາວ່າ: ຈະໃຫ້ອະໄພແກ່ບັນດາຜູ້ທີ່ເຂົ້າຮ່ວມຂະບວນການປະຕິວັດໂຄ່ນລົ້ມກະສັດໃນອະດີດ ແລະ ຈະຮັກສາດິນດອນທີ່ພວກຂຸນນາງຍາດມາໄດ້ ແຕ່ພາຍຫຼັງຂຶ້ນກຳອຳນາດ ຊາກເລີທີ 2 ບໍ່ໄດ້ປະຕິບັດຕາມສັນຍາທີ່ໃຫ້ໄວ້ດຳເນີນການທຳລາຍພວກທີ່ເຂົ້າຮ່ວມການປະຕິວັດ, ສຸສານຂອງໂຄຣມແວນ ແລະ ບັນດາຜູ້ນຳອື່ນ. ໃນປີ ຄ.ສ 1685 ຊາກເລີ 2 ໄດ້ສິ້ນພະຊົນລົງ, ພະເຈົ້າເຈມທີ 2 ຜູ້ເປັນນ້ອງຊາຍຂຶ້ນຄອງລາດຊະບັນລັງແທນແຕ່ປົກຄອງໄດ້ພຽງ 3 ປີກໍ່ດຳເນີນການແກ້ແຄ້ນສັດຕູທີ່ເປັນສະມາຊິກສະພາ ແລະ ຮັບເອົາການຊ່ວຍຈາກກະສັດຝຣັ່ງແບບປິດລັບ. ແລ້ວມອບຄວາມຮັບຜິດຊອບໃນການເຮັດວຽກໃຫ້ພວກທີ່ເດີນຕາມແນວຄິດຂອງກະສັດ. ຍ້ອນແນວນັ້ນພວກທີ່ນິຍົມກະສັດຈິ່ງໄດ້ດຳລົງຕຳແໜ່ງສຳຄັນ. ນະໂຍບາຍດັ່ງກ່າວເປັນການຟື້ນຟູ

ຄືນລະບອບສັກດີນາທີ່ເປັນໄພອັນຕະລາຍຂົ່ມຂູ່ພວກນາຍທຶນ ແລະ ຂຸນນາງໃໝ່. ສິ່ງທີ່ພວກນາຍທຶນ ແລະ ຂຸນນາງຕ້ອງການແມ່ນອຳນາດກະສັດທີ່ເຂັ້ມແຂງ ຮັບປະກັນໃຫ້ແກ່ການຂະຫຍາຍຕົວຂອງລັດທິທຶນນິຍົມ. ຄວາມຈິງແລ້ວການເຄື່ອນໄຫວຂອງລາດຊະວົງສະຈວດ ໄດ້ສະແດງໃຫ້ເຫັນວ່າ: ບັນດາກະສັດບໍ່ໄດ້ຕ້ອງການປົກປັກຮັກສາຊັບສິນ ແລະ ໜ້າທີ່ທາງການເມືອງຂອງຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ໄວ້. ດັ່ງນັ້ນ, ພວກເຂົາຈິ່ງຊອກວິທີທາງໃນການໂຄ່ນລົ້ມອຳນາດຂອງພະເຈົ້າເຈມທີ 2 ແລະ ຊອກຫາກະສັດອົງໃໝ່ທີ່ຈະເຈລະຈາໄດ້ງ່າຍຂຶ້ນກວ່າເກົ່າ.



ພະເຈົ້າເຈມທີ 2 ນ້ອງຊາຍຂອງຊາກເລີທີ 2

## 2. ສົງຄາມໃນປີ 1688 ແລະ ຜົນຂອງສົງຄາມ

ບັນດາຕົວແທນຂອງຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ໃນທັງສອງຝ່າ ຄື: ພັກ ອວິກ (ຜູ້ທີ່ເປັນຄົນບຸກເບີກພັກອະນຸລັກນິຍົມປະກອບມີ ເຈົ້າຂອງທະນາຄານ, ພໍ່ຄ້າ, ເຈົ້າຂອງອະນານິຄົມຢູ່ຕ່າງປະເທດ) ແລະ ພັກ ໂຕຣີ (ພັກອິດສະຫຼະປະກອບດ້ວຍເຈົ້າທີ່ດິນ) ລ້ວນແຕ່ມີຂໍ້ຂັດແຍ່ງກັນກ່ຽວກັບການຄັດເລືອກເອົາ

ບຸກຄົນທີ່ຈະມາກຳອຳນາດແທນ ພະເຈົ້າເຈມທີ 2, ພວກເຂົາໄດ້ແຕ່ງຕັ້ງໃຫ້ ວິນເຣມ ອໍເຣນຈ໌ ທີ່ມີເຊື້ອສາຍໂຮນລັງເພາະວ່າຖ້າຈະພິຈະລະນາທາງດ້ານເຊື້ອສາຍຖືວ່າ ວິນແຮມມີຄວາມເໝາະສົມທີ່ສຸດທີ່ຈະຄອງລາດຊະບັນລັງແທນເຈມທີ 2 ເພາະວ່າ ວິນແຮມເປັນລູກເຂີຍຂອງພະເຈົ້າເຈມທີ 2 ແຕ່ຄວາມຈິງແລ້ວ ວິນແຮມຂຶ້ນຄອງລາດຍ້ອນພວກນາຍທຶນ, ໂດຍໄດ້ຮັບການຊ່ວຍເຫຼືອຈາກພວກນາຍທຶນໂຮນລັງ. ມະຕິຕົກລົງຕ່າງໆຂອງອັງກິດລ້ວນແຕ່ໄດ້ຮັບຄວາມເຫັນດີເຫັນພ້ອມຈາກຊົນຊັ້ນນາຍທຶນໂຮນລັງ ພວກເຂົາຕ້ອງການທຳລາຍກຸ່ມພັນທະມິດອັງກິດ-ຝຣັ່ງ (ລະຫວ່າງ ພະເຈົ້າເຈມທີ 2 ຂອງອັງກິດ ແລະ ພະເຈົ້າຫຼຸຍທີ 14ຂອງຝຣັ່ງ). ເຊິ່ງເປັນກຸ່ມພັນທະມິດໜຶ່ງທີ່ຄຸກຄາມຕໍ່ກັບການຄົງຕົວຂອງລະບອບສາທາລະນະລັດໂຮນລັງ.

ຕົ້ນເດືອນພະຈິກ ປີ ຄ.ສ 1688 ວິນແຮມ ອໍເລນຈ໌ເຊີ ນຳກຳລັງທະຫານ 12.000 ຄົນບຸກເຂົ້າປະເທດອັງກິດ ແລະ ສືບຕໍ່ບຸກເຂົ້າ ລອນດອນ ໂດຍໄດ້ຮັບການສະໜັບສະໜູນຈາກຊົນຊັ້ນນາຍທຶນ ແລະຂຸນນາງໃໝ່ຢູ່ອັງກິດເຮັດໃຫ້ ວິນແຮມ ໄດ້ຮັບໄຊຊະນະຢ່າງງ່າຍດາຍ ແລະ ບໍ່ໄດ້ເຮັດສິ່ງຄາມໃດໆກັບກັບເຈົ້າຊີວິດ. ພະເຈົ້າເຈມທີ 2 ໄດ້ຖອນກຳລັງ ແລະ ຫຼົບໜີໄປລີ້ໄພຢູ່ປະເທດຝຣັ່ງ ເຮັດໃຫ້ວິນແຮມ ອໍເຣນເຢີ ຂຶ້ນຄອງລາດຊະບັນລັງແທນ ແລະ ປ່ຽນຊື່ເປັນ ພະເຈົ້າວິນແຮມທີ 3 ປົກຄອງອັງກິດໄດ້ 13 ປີ ແຕ່ປີ ຄ.ສ 1689-ປີ ຄ.ສ 1702.

ເພື່ອຮັບປະກັນສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່ມາໃນເດືອນ ກຸມພາ ປີ ຄ.ສ 1689 ສະພາໄດ້ຜ່ານ ກົດໝາຍວ່າດ້ວຍສິດອຳນາດ ນັບແຕ່ນັ້ນກະສັດບໍ່ມີສິດປົກຄອງ ຫຼື ລົບລ້າງກົດໝາຍ, ການເກັບພາສີ ຫຼື ການເສຍພາສີ...ຖ້າບໍ່ເຫັນດີຈາກສະພາ. ສະນັ້ນບັນຫາສຳຄັນຕ້ອງຂຶ້ນກັບສະພາເປັນຜູ້ຕັດສິນໃຈ. ສິດອຳນາດຂອງກະສັດມີລັກສະນະຈຳກັດໃຫ້ແຄບເຂົ້າ ຄຳຕັດສິນຂອງກະສັດຈະມີຜົນສັກສິດກໍ່ຕໍ່ເມື່ອມີລາຍເຊັນຂອງນາຍົກລັດຖະມົນຕີ. ບັນດາກະຊວງການຕ່າງໆຕ້ອງປະຕິບັດຕາມມະຕິຂອງສະພາ ແລະ ຍອມຮັບໜ້າທີ່ໃນການປະຕິບັດວຽກງານຕໍ່ໜ້າສະພາບໍ່ແມ່ນ ຕໍ່ໜ້າເຈົ້າຊີວິດ.

ບັນດາຂໍ້ຕົກລົງດັ່ງກ່າວນັ້ນໄດ້ຈຳກັດສິດອຳນາດຂອງກະສັດສະກັດກັ້ນທຸກຢ່າງທີ່ຈະເປັນການຟື້ນຟູອຳນາດຂອງລະບອບລາຊາທິປະໄຕສົມບູນສິດ ແລະ ປ່ຽນເປັນລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນ. ຄວາມຈິງແລ້ວສິດອຳນາດຂອງກະສັດໄດ້ປ່ຽນໄປເປັນອຳນາດຂອງສະພາທີ່ປະກອບດ້ວຍຕົວແທນຂອງຊົນຊັ້ນນາຍທຶນ ແລະ ເຈົ້າທີ່ດິນຜູ້ຮັ່ງມີ.

ເຫດການໃນປີ ຄ.ສ 1688 ເປັນຂະບວນການຕໍ່ສູ້ໜຶ່ງເພື່ອໂຄ່ນລົ້ມລາດຊະວົງ ສະຈວດ ທີ່ກຳລັງມີທ່າອ່ຽງເດີນຕາມລະບອບລາຊາທິປະໄຕສົມບູນສິດ ແລະ ຖືກປ່ຽນແທນເປັນລາດຊະວົງອິນແຮມທີ່ມີຄວາມສາມາດຮັບປະກັນໃຫ້ລັດທິທຶນນິຍົມຂະຫຍາຍຕົວເຊິ່ງບໍ່ແມ່ນຂະບວນການປະຕິວັດທີ່ຈະເລີນຮຸ່ງເຮືອງ ນີ້ແມ່ນຄວາມເພິ່ງພໍໃຈຂອງຊົນຊັ້ນນາຍທຶນທີ່ກຳລັງເຕີບໃຫຍ່ຂະຫຍາຍຕົວ ແລະ ເຈົ້າສັກດີນາໃນເມື່ອກ່ອນ. ບັນດາເຈົ້າທີ່ດິນດັ່ງກ່າວມີຕົ້ນກຳເນີດມາຈາກຕະກູນຂຸນນາງເກົ່າແຕ່ມີທ່າອ່ຽງກາຍເປັນພວກນາຍທຶນຫຼາຍກວ່າຂຸນນາງໃນລະບອບສັກດີນາ. ສະນັ້ນ, ຈຶ່ງເວົ້າໄດ້ວ່າບໍ່ສາມາດເອີ້ນເຫດການໃນປີ 1688 ວ່າເປັນການປະຕິວັດໂດຍອີງຕາມຄວາມເປັນຈິງ ແຕ່ມັນເປັນພຽງຂະບວນການຕໍ່ສູ້ເພື່ອໂຄ່ນລົ້ມລະບອບລາຊາທິປະໄຕສົມບູນສິດ ແລະ ສ້າງຕັ້ງລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນໃນອັງກິດ.

## V. ສະຫຼຸບ

1. ຂະບວນການປະຕິວັດນາຍທຶນອັງກິດແມ່ນເຫດການທີ່ສຳຄັນໃນປະຫວັດສາດໂລກ ດ້ວຍກຳລັງຂອງມະຫາຊົນ ທີ່ສາມາດລົບລ້າງລະບອບລາຊາທິປະໄຕສົມບູນສິດຂອງລະບອບສັກດີນາ ແລະ ສ້າງຕັ້ງລະບອບທຶນນິຍົມ. ເປີດກວ້າງໃຫ້ກຳລັງການຜະລິດມີການຂະຫຍາຍຕົວ. ໃນຂະບວນການຕໍ່ສູ້ໂຄ່ນລົ້ມກຳລັງຂອງພວກສັກດີນາ, ຊົນຊັ້ນນາຍທຶນສາມາດຍາດເອົາໄຊຊະນະ.
2. ຂະບວນການປະຕິວັດນາຍທຶນອັງກິດເກີດຂຶ້ນພາຍໃຕ້ການຮ່ວມມືເປັນພັນທະມິດລະຫວ່າງຊົນຊັ້ນນາຍທຶນ ກັບຂຸນນາງໃໝ່. ພິເສດແມ່ນເກີດມີສາຍພົວພັນທາງດ້ານເສດຖະກິດ. ສອງຊົນຊັ້ນດັ່ງກ່າວເຖິງວ່າຈະມີກົກເຄົ້າແຕກຕ່າງກັນກໍ່ຕາມແຕ່ພວກເຂົາລ້ວນແຕ່ມີສິດຜົນປະໂຫຍຮ່ວມກັນບົນເສັ້ນທາງໃນການດຳເນີນທຸລະກິດຕາມແບບທຶນນິຍົມສະນັ້ນຈຶ່ງມີສັດຕູຕົວດຽວກັນນັ້ນກໍ່ຄືລະບອບສັກດີນາ. ໂຄຣມແວນແມ່ນຜູ້ທີ່ມີບົດບາດຫຼາຍໃນໄລຍະຕົ້ນຂອງການປະຕິວັດ. ຄວາມຈິງແລ້ວເປັນຕົວແທນໃຫ້ແກ່ການຮ່ວມມືກັນເປັນພັນທະມິດ. ເຖິງແມ່ນວ່າຈຸດພິເສດນີ້ຈະບໍ່ໄດ້ຍົກໃຫ້ເຫັນບົດບາດອັນໃຫຍ່ຫຼວງຂອງກຳລັງມະຫາຊົນ (ປະຊາຊົນ) ທີ່ປະກອບດ້ວຍ: ຊາວນາ, ນາຍຊ່າງຫັດຖະກຳ, ປັນຍາຊົນໃນຕົວເມືອງ... ພວກເຂົາແມ່ນກຳລັງສຳຄັນຕົ້ນຕໍທີ່ເຮັດໃຫ້ການປະຕິວັດປະສົບຜົນສຳເລັດ. ຖ້າບໍ່ໄດ້ຮັບການສະໜັບສະໜູນຈາກບັນດາກຳລັງມະຫາຊົນດັ່ງກ່າວນັ້ນ, ສະພາກໍ່ບໍ່ສາມາດແກ້ໄຂບັນຫາຄວາມທຸກຍາກ ແລະ ບໍ່ສາມາດສ້າງພື້ນຖານຂອງລະບອບສາທາລະນະລັດ ແລະ ທັບມ້າງອຳນາດຂອງຊາກເລີທີ 1ໃຫ້ພັງທະລາຍລົງໄດ້. ການກຳເນີດສາຍພົວພັນແບບລັດທິທຶນນິຍົມຢູ່ປະເທດອັງກິດແມ່ນ

ໝາກຜົນອັນຍິ່ງໃຫ່ຍແຫ່ງການຕໍ່ສູ້ປະຕິວັດຂອງກຳລັງມະຫາຊົນ. ເຊິ່ງຢູ່ໃນໄລຍະນັ້ນ ກຳລັງປະຕິວັດຂອງມະຫາຊົນເວລາໃດພວກເຂົາກໍ່ແມ່ນຜູ້ທີ່ມີມະນະຈິດອິດທົນທີ່ສຸດ. ຜູ້ນຳການຂອງການປະຕິວັດທີ່ເປັນຕົວແທນໃຫ້ກຸ່ມມະຫາຊົນແມ່ນ ທ່ານ ຈອນ ລີນເບີກ, ກຸ່ມຂຸດຄົ້ນດິນ ແມ່ນ Uyn xtenlay ທີ່ປຽບດັ່ງຄັນທຸງແຫ່ງການຮ່ອມມືທີ່ເຂັ້ມແຂງຂອງກຳລັງມະຫາຊົນທີ່ມີບົດບາດສູງຂຶ້ນ.

ການປະຕິວັດນາຍທຶນຂອງອັງກິດເພື່ອຍົກໃຫ້ເຫັນຈຸດພິເສດທີສອງນັ້ນກໍ່ຄືທາດແທ້ຂອງການອະນຸລັກ. ບັນຫາທີ່ເກີດຂຶ້ນໃນການປະຕິວັດນາຍທຶນແມ່ນບັນຫາກ່ຽວກັບທີ່ດິນ ແລະ ບັນຫາການປົດປ່ອຍຊົນຊັ້ນຊາວນາໃຫ້ຫຼຸດພົ້ນອອກຈາກໂສ້ຮ່ວງແຫ່ງການກົດຂີ່ຂູດຮີດຂອງລະບອບສັກດີນາ. ບັນດານາຍທຶນອັງກິດພາຍຫຼັງທີ່ສາມາດຍາດອຳນາດມາໃນກຳມືແລ້ວ ຍັງຍຶດເອົາດິນໄຮ່ນາຮົ້ວສວນ. ລະບອບຍຶດຄອງກຳມະສິດດິນນາໃນລະບອບສັກດີນາໄດ້ປ່ຽນມາເປັນກຳມະສິດໃນການຄອບຄອງຂອງພວກນາຍທຶນ ໂດຍບໍ່ໄດ້ຕົກຢູ່ໃນກຳມືຂອງຊາວນາເລີຍ. ລັດຖະບານນາຍທຶນບໍ່ກ້າທີ່ຈະຮັກສາລະບອບສາທາລະນະລັດຈຳເປັນຕ້ອງໄດ້ສ້າງສາຍສຳພັນກັບພວກສັກດີນາ ແລະ ສ້າງຕັ້ງລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນ.

ຈຸດພິເສດທີ 3 ການປະຕິວັດນາຍທຶນອັງກິດເກີດຂຶ້ນພາຍໃຕ້ຮູບແບບຂອງສາສະໜາ, ຖ້າເບິ່ງຈາກພາຍນອກແມ່ນການຕໍ່ສູ້ລະຫວ່າງສາສະໜາຄຣິສນິກາຍພິວລິຕັນ(ນາຍທຶນ ແລະ ຂຸນນາງໃໝ່) ແລະ ນິກາຍແອັງກຣິຄັນ (ກະສັດ ແລະ ຂຸນນາງເກົ່າ) ຕໍ່ມາກໍ່ແມ່ນສົງຄາມລະຫວ່າງຜູ້ທີ່ນັບຖືນິກາຍ ພິວລິຕັນ ແລະການຮຸກຮານຍຶດເອົາໄອແລນ ແລະ ສະກັອດແລນ. ແຕ່ຄວາມຈິງແລ້ວບັນຫາຂໍ້ຂັດແຍ່ງທາງສາສະໜາແມ່ນບັນຫາຈຳແນກຊົນຊັ້ນ. ສ້າງເງື່ອນໄຂທາງປະຫວັດສາດຄືແນວນັ້ນຈິ່ງເຮັດໃຫ້ແນວຄິດແຫ່ງການປະຕິວັດເຊື່ອມຊຶມເຂົ້າມາສູ່ຈິດໃຈຂອງກຳລັງມະຫາຊົນພາຍໃຕ້ຮູບແບບຂອງສາສະໜາເພາະມັນເປັນອາຫານທາງດ້ານຈິດໃຈ (ທີ່ເພິ່ງທາງໃຈ) ທີ່ພິເສດ ແລະ ຄຸ້ນເຄີຍກັນດີ. ແຕ່ເບື້ອງຫຼັງຂອງສາສະໜາກໍ່ຍັງແມ່ນຂະບວນການຕໍ່ສູ້ຂອງຊົນຊັ້ນນາຍທຶນ ແລະ ພວກສັກດີນາ, ລະຫວ່າງດ້ານທີ່ຕັ້ງໜ້າ ແລະ ດ້ານທີ່ຫຼ້າຫຼັງ, ລະຫວ່າຝ່າຍປະຕິວັດ ແລະ ຝ່າຍຕໍ່ຕ້ານການປະຕິວັດ.

3. ທາດແທ້ຂອງການປະຕິວັນາຍທຶນອັງກິດໄດ້ຍົກໃຫ້ເຫັນບັນຫາກ່ຽວກັບສາຍພົວພັນລະຫວ່າງຊົນຊັ້ນນານທຶນ ແລະ ກຳລັງມະຫາຊົນໃນຂະບວນການປະຕິວັດ.

ໃນເງື່ອນໄຂທີ່ລະບອບສັກດີນານັບມືນັບຊຸດໂຊມຊົນຊັ້ນນາຍທຶນໄດ້ນຳພາກຳລັງມະຫາຊົນດຳເນີນການປະຕິວັດ ເພື່ອບຸກໂຈມຕີລະບອບເກົ່າ, ສ້າງຕັ້ງລະບອບການປົກຄອງໃໝ່, ເປີດໂອກາດໃຫ້ລັດທິທຶນນິຍົມຂະຫຍາຍຕົວ, ຍ້ອນແນວນັ້ນຊົນຊັ້ນນາຍທຶນຈິ່ງມີບົດບາດໃນການປະຕິວັດ. ເຖິງແມ່ນວ່າສິດອຳນາດຂອງພວກນາຍທຶນຍັງນ້ອຍ ເຮັດໃຫ້ຊົນຊັ້ນນາຍທຶນບໍ່ສາມາດນຳພາຂະບວນການປະຕິວັດໄດ້ຢ່າງລົງເລິກເຖິງທ່ອງ ແລະ ຊອກວິທີການຢຸດຕິການປະຕິວັດໄວ້ເຄິ່ງທາງ.

ໃນການຕໍ່ສູ້ຕ້ານກັບພວກຂຸນນາງສັກດີນາ, ໃນການປະຕິວັດເວລາໃດກໍ່ຕາມ, ຊົນຊັ້ນນາຍທຶນເປັນຕົວແທນໃຫ້ແກ່ຊົນຊັ້ນຜູ້ອອກແຮງງານໃນເວລານັ້ນ. ຂະບວນການຕໍ່ສູ້ອັນໃຫຍ່ຫຼວງຂອງງຊົນຊັ້ນນາຍທຶນເວລາໃດກໍ່ຄຽງຄູ່ກັບການຕໍ່ສູ້ເພື່ອເອກະລາດຂອງຊົນຊັ້ນຜູ້ອອກແຮງງານປະກອບສ່ວນໃນການຂະຫຍາຍຕົວຂອງຊົນຊັ້ນກຳມະຊີບໃນຍຸກສະໄໝໃໝ່. ຂະບວນການລຸກຂຶ້ນຕໍ່ສູ້ຂອງກຳລັງມວນຊົນ ໂດຍສະເພາະແມ່ນກຳລັງຂອງພວກຊຸດຄົ້ນດິນໄດ້ເກີດຂຶ້ນປຽບດັ່ງສຽງລະຄັງທີ່ບົ່ງບອກວ່າຂະບວນການຕໍ່ສູ້ ເຂັ້ມແຂງກວ່າກຳລັງຊາວຜູ້ອອກກາແຮງງານໃນການປົດປ່ອຍອອກຈາກແອກແຫ່ງການກົດຂີ່ຂູດຮີດໃນໄລຍະຕໍ່ມາ.

# ບົດທີ 2

# ການປະຕິວັດອຸດສະຫະກຳອັງກິດ ສະຕະວັດທີ 18

ພາຍຫຼັງການປະຕິວັດນາຍທຶນອັງກິດໃນສະຕະວັດທີ 17, ອັງກິດມີການປ່ຽນແປງຫຼາຍຢ່າງທາງດ້ານການເມືອງ ແລະ ເສດຖະກິດ ຕະຫຼອດສະຕະວັດທີ 18 ແລະ 30 ປີ ທຳອິດຂອງສະຕະວັດທີ 19 ຢູ່ອັງກິດໄດ້ເກີດມີຂະບວນການປະຕິວັດ ເຖິງແມ່ນວ່າຈະບໍ່ແຜ່ຂະຫຍາຍຄືກັນກັບການເຮັດສົງຄາມກາງເມືອງ ແຕ່ມັນກໍ່ເປັນຂີດໝາຍແຫ່ງການຂະຫຍຍຕົວທາງດ້ານກຳລັງການຜະລິດນັ້ນກໍ່ຄືການປະຕິວັດອຸດສະຫະກຳຕາມລັດທິທຶນນິຍົມທຳອິດໃນປະຫວັດສາດ.

## I ລະບອບການເມືອງອັງກິດຫຼັງການປະຕິວັດນາຍທຶນ.

ຂະບວນການປະຕິວັດນາຍທຶນອັງກິດໄດ້ນຳເອົາໄຊຊະນະມາສູ່ຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່, ນະໂຍບາຍໃນປີ 1688-1689 ຊຸກຍູ້ໃຫ້ອຳນາດການປົກຄອງຂອງບັນດາຊົນຊັ້ນໃໝ່ ແລະ ການສ້າງຕັ້ງເປັນປະເທດ ລາຊາທິປະໄຕໃຕ້ລັດຖະທຳມະນູນ. ກະສັດເປັນປະມຸກລັດແຕ່ບໍ່ມີສິດເດັດຂາດໃນການຕັດສິນວຽກງານຂອງຊາດໄດ້. ອົງການຈັດຕັ້ງທີ່ກຳອຳນາດແມ່ນ ສະພາ ແລະ ໃນນັ້ນສິດໃນການປົກຄອງແມ່ນຂຶ້ນກັບວ່າພັກທີ່ມີຈຳນວນສະມາຊິກໃນສະພາຫຼາຍກວ່າໝູ່.

ສະພາ (ຊົນຊັ້ນສູງ) ແມ່ນຕົກຢູ່ໃນກຳມືຂອງຊົນຊັ້ນຂຸນນາງໃໝ່ມີຈຳນວນພົນຫຼາຍກວ່າສະພາຜູ້ແທນລາດຊະດອນ (ສະພາຕ່ຳ) ທີ່ເລືອກຕັ້ງໂດຍປະຊາຊົນ. ການເລືອກຕັ້ງສະພາຜູ້ແທນລາດຊະດອນດຳເນີນໄປຕາມຂໍ້ກຳນົດທີ່ມີລັກສະນະຈຳກັດຄື: ຈຳນວນປະຊາກອນໃນອັງກິດ 7.000.000 ຄົນ ມີພຽງແຕ່ 25.000 ຄົນທີ່ມີສິດໃນການເລືອກຕັ້ງ. ສະມາຊິກສະພາຜູ້ແທນລາດສະດອນເກືອບເຄິ່ງໜຶ່ງທີ່ດຳລົງຕຳແໜ່ງຈາກການແຕ່ງຕັ້ງຂອງເຈົ້າທີ່ດິນໂດຍສະເພາະແມ່ນເຂດທີ່ມີພົນລະເມືອງທ້ອງຖິ່ນໜ້ອຍ. ເມື່ອຕອນດິນສາມາດນຳໄປຂາຍເຮັດໃຫ້ມີເຈົ້າທີ່ດິນໃໝ່ແທນເຈົ້າທີ່ດິນເກົ່າເຮັດໜ້າທີ່ໃນການເປັນຕົວແທນໃຫ້ແກ່ທ້ອງຖິ່ນນັ້ນ. ຕຳແໜ່ງຂອງສະມາຊິກສະພາຖືກຊື້ຂາຍໄດ້. ຜູ້ທີ່ຮັ່ງມີສາມາດຊື້ສິດເຂົ້າໃນການເປັນສະມາຊິກ ແລະ ບາງຄັ້ງກໍ່ຊື້ທັງບັດເລືອກຕັ້ງ. ເຊິ່ງຕ່າງຈາກຊາວຜູ້ອອກແຮງງານນັບທັງຊົນຊັ້ນກາງແມ່ນບໍ່ມີສິດທາງດ້ານການເມືອງເລີຍ.

ຕະຫຼອດໄລຍະແຕ່ປີ ຄ.ສ 1689-1760 ອຳນາດການປົກຄອງໃນອັງກິດແມ່ນຕົກຢູ່ໃນກຳມືຂອງພັກອວິກ Whig ເປັນພັກທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນຂຸນນາງໃໝ່, ຜູ້ຮັ່ງມີຈາກການຄ້າຂາຍຊັບສົມບັດ ດິນ

ດອນຕອນຫຍ້າຂອງສັກດີນາໃນໄລຍະການປະຕິວັດ ແລະ ມີການພົວພັນສະໜິດແໜ້ນນາຍທຶນໃຫຍ່, ເຈົ້າຂອງທະນາຄານ ແລະ ເຈົ້າຂອງອະນານິຄົມຢູ່ຕ່າງປະເທດ. ບາງຄັ້ງ ພັກ TORY ເປັນພັກຂອງຕົວແທນເຈົ້າທີ່ດິນ ຂຶ້ນກໍາອໍານາດປົກຄອງບໍ່ດົນປານໃດກໍ່ຖືກ ພັກ ອວິກ ກໍາອໍານາດແທນ. ສອງພັກການເມືອງ ພັກອວິກ ແລະ ພັກ TORY ຜັນປ່ຽນກັນຄຸ້ມຄອງວຽກງານຂອງປະເທດຊາດ, ຕໍ່ສູ້ກັນ ເພື່ອຍາດສິດໃນການເປັນຜູ້ນໍາໃນສະພາ. ເຖິງແມ່ນວ່າຈະເປັນຕົວແທນໃນການຮັກສາສິດຜົນປະໂຫຍດຂອງກຸ່ມຄົນທີ່ແຕກຕ່າງກັນທັງສອງພັກລ້ວນແຕ່ເປັນເອກະພາບກັນໃນການປົກປັກຮັກສາສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນ ແລະ ຂຸນນາງໃໝ່. ລະບອບສອງພັກຢູ່ອັງກິດໄດ້ເລີ່ມເກີດຂຶ້ນນັບແຕ່ນັ້ນມາ ແນ່ໃສ່ໃນການປົກປັກຮັກສາສິດອໍານາດໃນການປົກຄອງຂອງຊົນຊັ້ນນາຍທຶນ.

ອໍານາດຂອງສະພານັບມື້ນັບເຕີບໃຫຍ່ຂະຫຍາຍຕົວ ເຮັດໃຫ້ລາດຊະບັນລັງສັ່ນຄອນ. ສະຖານບັນໃຫ້ຄໍາປຶກສາແກ່ກະສັດໄດ້ປ່ຽນມາເປັນຄະນະມົນຕີ ຄຸ້ມຄອງບໍລິຫານວຽກງານພາຍໃນປະເທດ, ກະສັດບໍ່ສາມາດເຂົ້າຮ່ວມກອງປະຊຸມຄະນະມົນລັດຖະມົນຕີມີສິດໃນການຕັດສິນວຽກງານແມ່ນຂຶ້ນກັບນາຍົກ. ລະບອບຄະນະມົນຕີປະກອບດ້ວຍນາຍົກລັດຖະມົນຕີ ແລະ ຄະນະລັດຖະມົນຕີຈະບໍ່ຍອມຮັບການບັງຄັບຂອງເຈົ້າຊີວິດ, ຈະຍອມຮັບສະເພາະໜ້າທີ່ຂອງກະສັດທີ່ຮັບຜິດຊອບໃນສະພາເທົ່ານັ້ນ. ເມື່ອສະມາຊິກສ່ວນຫຼາຍໃນສະພາບໍ່ໄວ້ວາງໃຈຄະນະລັດຖະມົນຕີ ຈິ່ງເຮັດໃຫ້ນາຍົກລັດຖະມົນຕີຈໍາເປັນຕ້ອງລາອອກ. ນາຍົກລັດຖະມົນຕີ ແລະ ຄະນະລັດຖະມົນຕີແມ່ນຄົນຂອງພັກທີ່ມີຈໍານວນສະມາຊິກຫຼາຍໃນສະພາຕາມການເລືອກຕັ້ງຂອງພັກນັ້ນ ແລະ ໄດ້ຮັບການສະໜັບສະໜູນຈາກພັກນັ້ນ. ຍ້ອນແນວນັ້ນຢູ່ອັງກິດຈິ່ງເກີດມີລະບົບການປົກຄອງໃໝ່ທີ່ແຕກຕ່າງຈາກລະບົບການປົກຄອງແບບລະບອບລາຊາທິປະໄຕສົມບູນສິດນັ້ນກໍ່ຄືຮູບແບບການປົກຄອງປະເທດແບບລາຊາທິປະໄຕໃຕ້ລັດຖະທໍາມະນູນເຊິ່ງເປັນລະບົບການປົກຄອງທີ່ປະເທດອື່ນນໍາມາໃຊ້ໃນການປົກຄອງປະເທດຂອງຕົນໃນໄລຍະຕໍ່ມາ.

ຄວາມເປັນຈິງແລ້ວຮູບແບບການປົກຄອງປະເທດແບບນີ້ໃນໄລຍະທໍາອິດແມ່ນມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບການຂະຫຍາຍຕົວຂອງເສດຖະກິດທຶນນິຍົມ. ລະບອບລາຊາທິປະໄຕສົມບູນສິດຖືກລົບລ້າງລົງຢ່າງສິ້ນເຊີງ. ລັດຖະບານໃໝ່ມີຄວາມກັງວົນຕໍ່ກັບການຕອບສະໜອງຄວາມຕ້ອງການຂອງຊົນຊັ້ນນາຍທຶນໄດ້ປະກາດໃຊ້ກົດໝາຍທີ່ມີລັກສະນະກ້າວໜ້າເໝາະສົມກັບກໍາລັງແຮງໃນການຜະລິດແຕ່ກໍາລັງຂອງມະຫາຊົນແມ່ນຍັງສືບຕໍ່ດໍາເນີນການຂູດຮີດ ແລະ ຕອບໂຕ້ຕະຫຼອດເວລາ.

## II. ໄລຍະການສະສົມທຶນຮອນຢູ່ປະເທດອັງກິດ.

ການລົບລ້າງລະບອບລາຊາທິປະໄຕສົມບູນສິດທິລາດຂອງພວກສັກດີນາ, ຂະບວນການປະຕິວັດນາຍທຶນອັງກິດໄດ້ລົບລ້າງສິ່ງທີ່ຫຼ້າຫຼັງດ້ວຍຮູບການຜະລິດແບບໃໝ່. ປັດໄຈໃນການຂະຫຍາຍ ເສດຖະກິດທຶນນິຍົມແມ່ນມີຂໍ້ສະດວກຫຼາຍຢ່າງ ແລະ ສາມາດຂະຫຍາຍຕົວໃຫ້ແຂງແຮງ. ການກັບຄືນມາສູ່ລະບອບປະຖົມບູຮານໄດ້ເກີດຂຶ້ນຕະຫຼອດສະຕະວັດທີ 17 ແລະ ສະຕະວັດທີ 18 ຈຸດສຳຄັນຂອງການປ່ຽນແປງໃນລະບົບອຸດສະຫະກຳຢູ່ອັງກິດ.

### 1. ການປ່ຽນແປງໃນລະບອບຢຶດຖືດິນນາ.

ໜຶ່ງໃນເງື່ອນໄຂທີ່ສຳຄັນທີ່ສຸດໃນການກະກຽມການປະຕິວັດອຸດສະຫະກຳແມ່ນການປ່ຽນແປງລະບອບດິນນາ ຫຼື ເອີ້ນວ່າຂະບວນການປະຕິວັດກະສິກຳ.

ຕະຫຼອດສະຕະວັດທີ 16 ຫາສະຕະວັດທີ 17 ໄດ້ເກີດມີການຢຶດຄອງກຳມະສິດດິນນາລວມຂອງຊຸມຊົນທ້ອງຖິ່ນ ແລະ ຂັບໄລ່ຊາວນາອອກຈາກດິນນາຂອງພວກເຂົາ. ຮອດສະຕະວັດທີ 18 ໄດ້ແຜ່ລາມອອກເປັນວົງກວ້າງ. ສອງສະຕະວັດກ່ອນໜ້ານີ້ ລາດຊະວົງ ທິວດໍ ແລະ ລາດຊະວົງສະຈອດໄດ້ດຳເນີນນະໂຍບາຍຢຶດດິນນາໄວ້ໃນກຳມືຈົນມາຮອດເວລານີ້. ສະພາອັງກິດ ຊໍ້າພັດອະນຸຍາດໃຫ້ພວກເຈົ້າທີ່ດິນຢຶດເອົາດິນນາທີ່ເປັນຂອງສ່ວນລວມ ແລະ ດຳເນີນການຂັບໄລ່ຊາວນາອອກໄປບ່ອນອື່ນ.

ໃນໄລຍະ 60 ປີ ຕົ້ນສະຕະວັດທີ 18 ລັດຖະບານໄດ້ປະກາດກົດໝາຍອອກ 208 ສະບັບທີ່ອະນຸຍາດໃຫ້ພວກເຈົ້າທີ່ດິນຢຶດດິນໄດ້ 312.000 ຕອນ. 40 ປີຕໍ່ມາກົດໝາຍ 2.000 ສະບັບຂອງລັດຖະບານ ຟາມໄດ້ຖືກລ້ອມຮົ້ວຕື່ມອີກ 3.180.000 ຕອນເພີ່ມຂຶ້ນ 10 ເທົ່າຖ້າທຽບໃສ່ເມື່ອກ່ອນ.ຍ້ອນແນວນັ້ນກົດໝາຍກ່ຽວກັບການລ້ອມຮົ້ວເອົາດິນລວມແມ່ນຮູບແບບການຢຶດຄອງທີ່ໄດ້ຮັບການຮ່ວມມືຈາກສະພາ.

ໝາກຜົນຂອງການປ່ຽນແປງທາງດ້ານກະສິກຳໃນໄລຍະທຳອິດ ແມ່ນການຂະຫຍາຍຕົວຂອງລະບອບການເຮັດຟາມ. ເຈົ້າທີ່ດິນບໍ່ໄດ້ລົງມືໃນການປູກຝັງໂດຍກົງແຕ່ຈະມອບດິນໃຫ້ແກ່ເຈົ້າຂອງຟາມທຳການຜະລິດແທນເຊິ່ງແກ່ຍາວເປັນເວລາ 99 ປີ. ແຕ່ເຈົ້າຂອງຟາມຕ້ອງມອບຜົນຜະລິດສ່ວນໜຶ່ງ ຫຼື ມອບເງິນໃຫ້ເຈົ້າຂອງທີ່ດິນ. ສະນັ້ນ, ບັນດານາຍທຶນກະສິກຳ, ນັກທຸລະກິດຄ້າຂາຍດິນນາຕາມຮູບແບບລັດທິທຶນນິຍົມ, ບັງຄັບໃຫ້ກຳມະກອນກະສິກຳເປັນແຮງງານຮັບຈ້າງ, ມີການນຳໃຊ້ເຄື່ອງມືທີ່ທັນສະໄໝທີ່ສຸດ, ມີການປັບປຸງ

ດິນໃຫ້ມີຄຸນນະພາບ, ເພີ່ມທະວີຄວາມສາມາດໃນການຜະລິດພືດພັນທັນຍາຫານ. ເສດຖະກິດໃນການເຮັດຟາມມີຄວາມເໝາະສົມ ແລະ ສອດຄ່ອງກັບການຂະຫຍາຍຕົວລັດທິທຶນນິຍົມ, ສາມາດຕອບສະໜອງວັດຖຸດິບໃຫ້ແກ່ວຽກງານອຸດສະຫະກຳ ແລະ ຕອບສະໜອງສະບຽງອາຫານໄດ້ຕາມຄວາມຕ້ອງການໃຫ້ແກ່ບັນດາຕົວເມືອງຕ່າງໆ.

ໝາກຜົນທີ 2 ກໍ່ມີຄວາມສຳຄັນສຳລັບການປ່ຽນແປງທາງດ້ານກະສິກຳກໍ່ຄືການກຳເນີດມີກຳມະກອນເພື່ອບໍລິການໃຫ້ແກ່ຂະແໜງອຸດສະຫະກຳ. ຊາວນາຖືກຂັບໄລ່ອອກຈາກດິນນາ, ມີພຽງສອງຝາມືທີ່ຕ້ອງຂາຍແຮງງານ. ຊາວນາບາງກຸ່ມກໍ່ໄດ້ກາຍເປັນກຳມະກອນໃນໂຮງງານອຸດສະຫະກຳ, ແຕ່ຊາວນາຈຳນວນຫຼາຍພາກັນຫຼັ່ງໄຫຼເຂົ້າຕົວເມືອງເພື່ອເຮັດວຽກຕາມໂຮງຈັກໂຮງງານອຸດສະຫະກຳ ຫຼື ໂຮງງານຫັດຖະທຳ. ພວກເຂົາໄດ້ກາຍເປັນກຳລັງຕົ້ນຕໍໃນການພັດທະນາອຸດສະຫະກຳທຶນນິຍົມ ແລະ ນີ້ກໍ່ເປັນອີກສິ່ງໜຶ່ງທີ່ເປັນພື້ນຖານໃຫ້ແກ່ການສະສົມກ້ອນທຶນ.

ການປະຕິວັດກະສິກຳຍັງມີຜົນສະທ້ອນຕໍ່ກັບຕະຫຼາດຈຳໜ່າຍສິນຄ້າພາຍໃນປະເທດ. ສິນຄ້າກະສິກຳເພີ່ມຂຶ້ນຢ່າງໄວວາຍ້ອນມີການນຳໃຊ້ເຄື່ອງຈັກທີ່ທັນສະໄໝ ແລະ ມີການປັບປຸງເຕັກນິກໃນການຜະລິດ. ບັນດາກຳມະກອນກະສິກຳເຮັດການຜະລິດອອກມາບໍ່ສະເພາະແຕ່ນຳໃຊ້ໃນປະເທດເທົ່ານັ້ນແຕ່ພວກເຂົາຍັງມີການຈໍລະຈອນສິນຄ້າ ແລະ ທຳການຊື້ຂາຍວັດຖຸດິບທີ່ຈຳເປັນ. ບັນດາກຳມະກອນອຸດສະຫະກຳ ແລະ ຄົນພື້ນຖານໃນຕົວເມືອງເພີ່ມຂຶ້ນສາມາດຕອບສະໜອງຕໍ່ກັບວຽກງານການຄ້າຂາຍສະບຽງອາຫານ ແລະ ສ່ວນຟາມກະສິກຳກໍ່ເພີ່ມຂຶ້ນ. ສະນັ້ນ, ຕະຫຼາດຈຳໜ່າຍສິນຄ້າພາຍໃນປະເທດຈິ່ງກວ້າງອອກ, ປະກອບສ່ວນສຳຄັນເຂົ້າໃນການພັດທະນາອຸດສະຫະກຳ ແລະ ການຄ້າ.

ສະນັ້ນ, ສະຕະວັດທີ 16-17 ໂດຍສະເພາະແມ່ນສະຕະວັດທີ 18 ການປະຕິວັດກະສິກຳຢູ່ອັງກິດໄດ້ປະກອບສ່ວນສຳຄັນ ແລະ ເປັນພື້ນຖານຂອງການສະສົມທຶນຮອນໃຫ້ແກ່ລັດທິທຶນນິຍົມ. ທີ່ແຍກການຊາວນາອອກຈາກການຜະລິດ, ແລະ ສ້າງລະບົບກຳມະກອນຮັບຈ້າງໃນໂຮງງານອຸດສະຫະກຳ, ປ່ຽນລະບອບຍຶດຖືດິນນາມາເປັນລະບອບຍຶດຖືການເຮັດຟາມກະສິກຳແບບລັດທິທຶນນິຍົມ ແລະ ຂະຫຍາຍຕະຫຼາດພາຍໃນປະເທດ. ເຖິງແມ່ນວ່າການປະຕິວັດກະສິກຳຢູ່ອັງກິດຈະບໍ່ໄດ້ນຳຜົນປະໂຫຍດຫຍັງມາສູ່ຊາວ

ກະສິກອນ ແລະ ຊ້ຳບໍ່ໜຳຍັງເປັນການທຳລາຍຊົນຊັ້ນກະສິກອນອີກດ້ວຍ. ປີ ຄ.ສ 1750 ຊົນຊັ້ນກະສິກຳ ອິດສະຫຼະ ແມ່ນບໍ່ມີໃນສັງຄົມອັງກິດອີກ.

## 2. ການຂະຫຍາຍອະນານິຄົມ ແລະ ການຄ້າຂາຍຂ້າທາດຜິວດຳ

ໃນໄລຍະແຫ່ງການສະສົມທຶນຮອນຂອງພວກທຶນນິຍົມ ບໍ່ພຽງແຕ່ເປັນການຍຶດເອົາຊັບສິນຂອງຊາວນາ ແຕ່ຍັງມີການດຳເນີນການຮຸກຮານ ແລະ ກົດຂີ່ຂູດຮີດປະຊາຊົນຢູ່ຕາມອະນານິຄົມ, ດຳເນີນການຄ້າຂາຍຂ້າທາດຜິວດຳ.

ປະເທດອັງກິດເລີ່ມຕົ້ນຂະຫຍາຍອະນານິຄົມນັບແຕ່ສະຕະວັດທີ 16-17 ດ້ວຍການນຳກຳລັງບຸກຕີເຂົ້າອາເມຣິກາເໜືອ ແລະ ດຳເນີນການຮຸກຮານປະເທດອິນເດຍກໍ່ເກີດຂຶ້ນໃນໄລຍະນີ້ແກ່ຍາວມາຮອດສະຕະວັດທີ 18 ປະເທດອັງກິດເປັນປະເທດທຳອິດທີ່ສາມາດຄອບຄອງໜ້ານ້ຳທະເລຫຼັງຈາກທີ່ປາໄຊໃຫ້ພວກສະເປນ ແລະ ຝຣັ່ງ. ລະບົບອະນານິຄົມກໍ່ແຜ່ຂະຫຍາຍອອກກວ້າງ. ຢູ່ທະວີບເອີຣົບ, ປະເທດອັງກິດຢຶດຄອງໄອແລນ, ຊິບບຣັນຕາ ຄອບຄອງເສັ້ນທາງຈາກມະຫາສະໝຸດ ອັດລັງຕິກ ຫາເຂດທະ ເລເມດິແຕລະເນ. ຢູ່ທະວີບອາເມຣິກາອັງກິດໄດ້ຄອບຄອງອະນານິຄົມ 13 ແຫ່ງທີ່ຕັ້ງແຄມມະຫາສະໝຸດອັດລັງຕິກ ແກ່ຍາວໄປຮອດແມ່ນ້ຳ ມິດຊິດຊິບປີ, ການາດາ ແລະ ໝູ່ເກາະຈຳນວນໜຶ່ງໃນທະເລແຄຣິບຽນ. ຢູ່ພາກຕາເວັນຕົກຂອງທະວີບອາຟຣິກກາ ຢຶດຄອງເຂດທີ່ອຸດົມສົມບູນຂອງແມ່ນ້ຳເຊເນກັນ ແລະ ກຳເບຍ, ຕະຫຼອດຮອດອ່າວກີເນລ້ອນແຕ່ຕົກຢູ່ໃຕ້ການປົກຄອງຂອງອັງກິດ.

ຕົ້ນສະຕະວັດທີ 17 ອັງກິດໄດ້ທຳການຮຸກຮານເຂົ້າຕາມທະວີບ ແລະ ມະຫາສະໝຸດ. ຕະຫຼອດໄລຍະ 1 ສະຕະວັດ ພວກອັງກິດໄດ້ບຸກໂຈມຕີ, ຂັບໄລ່ຄົນພື້ນເມືອງ ແລະ ດຳເນີນການຂຸດຄົ້ນວັດຖຸດິບ. ຕໍ່ກັບລະບົບຫົວເມືອງຂຶ້ນທີ່ໃຫຍ່. ນອກຈາກຈະໃຊ້ເປັນບ່ອນຕັ້ງຖານທັບແລ້ວພວກເຂົາຍັງຊອກເສັ້ນທາງ, ຍັງຄອບຄອງເສັ້ນທາງການຄ້າ. ຊົນຊັ້ນນາຍທຶນອັງກິດຍັງໄດ້ສ້າງບາດແຜ່ອັນເຈັບແສບໃຫ້ແກ່ປະຊາຊົນໃນທ້ອງຖິ່ນ. ພໍ່ຄ້າຊາວອັງກິດໄດ້ນຳເອົາສິນຄ້າທີ່ມີຄຸນຄ່າຈາກອະນານິຄົມເຊັ່ນ: ເຄື່ອງເທດ, ງາຊ້າງ, ຊາ, ຢາສູບ, ຢາງພາລາ...ມາຂາຍໃນຕະຫຼາດເອີຣົບໃນລາຄາທີ່ແພງ. ຍ້ອນແນວນັ້ນຈຶ່ງເຮັດໃຫ້ພວກເຂົາມີລາຍຮັບຫຼາຍ,ມີຜົນກຳໄລຫຼາຍ, ສິນຄ້າທີ່ນຳກຳໄລມາສູ່ນາຍທຶນອັງກິດຫຼາຍແມ່ນການເຮັດການຄ້າຂາຍຂ້າທາດຜິວດຳ.

ຮອດສະຕະວັດທີ 18 ພາກເໜືອຂອງທະວີບອາເມຣິກາໄດ້ກາຍເປັນຕະຫຼາດບໍລິໂພກທີ່ດຶງດູດຜູ້ທີ່ຄ້າຂາຍຄົນຜິວດໍາ. ເວລານັ້ນ, ເສດຖະກິດການປູກຝັງ ແລະ ການຄ້າຂາຍອາວຸດມີການຂະຫຍາຍຕົວຢ່າງແຂງແຮງມີຄວາມຕ້ອງການກໍາລັງແຮງງານ ແລະ ຊັບພະຍາກອນມະນຸດ. ຊົນເຜົ່າພື້ນເມືອງ ອິນເດຍແດງຖືກຈັບໄປຂາຍຢູ່ພາກຕາເວັນຕົກ ແລະ ຖືກກົດຂີ່ຂູດຮີດແລະ ອອກແຮງງານຢ່າງໜັກໜ່ວງໃຫ້ແກ່ເຈົ້ານາຍໃໝ່. ຍ້ອນແນວນັ້ນພວກຈັກກະພັດຈິ່ງຊອກຫາແຮງງານຈາກບ່ອນອື່ນໆ ສຸດທ້າຍແມ່ນພວກເຂົາຊອກເຫັນແຮງງານອັນມີຄ່າຢູ່ທີ່ທະວີບອາຟຣິກາ. ປ໊ອກຕຸຍການເປັນປະເທດທໍາອິດທີ່ຊາວອັງກິດນໍາພວກຜິວດໍາມາຂາຍ ແລະ ແກ່ຍາວເວລານັບແຕ່ສະຕະວັດທີ 15 ຫາ ສະຕະວັດທີ 16 ປ໊ອກຕຸຍການໄດ້ກາຍເປັນສູນກາງໃນການຄ້າຂາຍມະນຸດໃນໂລກ.

ພາຍຫຼັງທີ່ສາມາດເອົາຊະນະຄູ່ແຂ່ງສະເປນ ແລະ ຝຣັ່ງ, ອັງກິດກໍ່ຍຶດຄອງເຂດອຸດສະຫະກໍາຝຣັ່ງ. ເຮືອບັນທຸກຂອງອັງກິດໄດ້ລໍາລຽງຊາວຜິວດໍາດ້ວຍການໃຫ້ຊາວຜິວດໍາຊ້ອນກັນຢູ່ເປັນ 3 ຊັ້ນແລ້ວນໍາໄປຂາຍຕາມປະເທດຕ່າງໆ. ຂ້າທາດປະມານ 15.000.000 ຄົນຖືກນໍາໄປຂາຍຢູ່ອາເມຣິກາເໜືອຖືວ່າອັງກິດເປັນປະເທດທີ່ຂາຍຂ້າທາດຫຼາຍທີ່ສຸດ, ຍ້ອນແນວນັ້ນ, ນາຍທຶນອັງກິດຈິ່ງໄດ້ຮັບກໍາໄລຫຼາຍໃນການຄ້າຂາຍສິນຄ້າທີ່ມີຄ່ານີ້, ອັນໄດ້ສ້າງບາດແຜອັນເຈັບແສບແກ່ປະຊາຊົນຢູ່ທະວີບອາຟຣິກາ.

ຄວາມຈິງຂອງການຮຸກຮານຢູ່ບັນດາປະເທດຫົວເມືອງຂຶ້ນ ໂດຍສະເພາະແມ່ນຢູ່ອິນເດຍການຄ້າຂາຍຂ້າທາດຄົນຜິວດໍາໄດ້ເຮັດໃຫ້ຊົນຊັ້ນນາຍທຶນມີທຶນຮອນສະສົມໄວ້ເພື່ອການພັດທະນາເສດຖະກິດທຶນນິຍົມ, ສ້າງເງື່ອນໄຂສໍາຄັນທີສອງຕໍ່ກັບການປະກົດຕົວຂອງລັດທິທຶນນິຍົມ.

## III. ການປະຕິວັດອຸດສະຫະກໍາໃນໄລຍະຕົ້ນ.

### 1. ການປ່ຽນແປງຈາກການຜະລິດສິນຄ້າດ້ວຍແຮງງານຂອງຄົນໄປສູ່ການຜະລິດໂດຍນໍາໃຊ້ເຄື່ອງຈັກ

ການຂະຫຍາຍຕົວຂອງລະບົບອະນານິຄົມກ້າວຂຶ້ນສູ່ລະດັບສູງຈົນບໍ່ເຄີຍມີມາກ່ອນໃນປະຫວັດສາດ ແລະ ການປະຕິວັດດົນນາຢູ່ອັງກິດໃນສະຕະວັດທີ 17-18 ໄດ້ເປີດກວ້າງຕະຫຼາດການຄ້າທັງພາຍໃນ ແລະ ຕ່າງປະເທດ, ຮຽກຮ້ອງຕ້ອງການສິນຄ້າຈໍານວນໜຶ່ງໃນປະລິມານທີ່ຫຼາຍເຊິ່ງການຜະລິດສິນຄ້າດ້ວຍຝີມືຂອງຄົນບໍ່ສາມາດຕອບສະໜອງໄດ້. ໃນເວລານັ້ນເງື່ອນໄຂສໍາຄັນທີ່ເຮັດໃຫ້ລັດທິທຶນນິຍົມຄ່ອຍໆປະກົດຕົວຂຶ້ນ: ນາຍທຶນໄດ້ທໍາການສະສົມທຶນຮອນດ້ວຍການກົດຂີ່ຂູດຮີດຊາວນາ ແລະ ປະຊາຊົນໃນເຂດຫົວເມືອງຂຶ້ນ.

ກຳລັງແຮງງານມີຫຼວງຫຼາຍຍ້ອນການຢຶດເອົາດິນນາ ແລະ ຂັບໄລ່ຊາວນາຫຼາຍກວ່າພັນຄົນຕ້ອງໄດ້ປະຖິ້ມບ້ານເຮືອນຂອງເຂົາເຈົ້າແລະ ໜີໄປຊອກວຽກເຮັດບ່ອນອື່ນ. ເລີ່ມຕົ້ນຈາກຄວາມຕ້ອງການພາຍນອກຂອງສັງຄົມ ແລະ ເລີ່ມຈາກເງື່ອນໄຂອຳນວຍຄວາມສະດວກ ແລະ ມີຄວາມພ້ອມທຸກຢ່າງເຮັດໃຫ້ອັງກິດກ້າວເຂົ້າສູ່ໄລຍະການປະຕິວັດອຸດສະຫະກຳ.

ຈຸດເລີ່ມຕົ້ນຂອງການປະຕິວັດອຸດສະຫະກຳແມ່ນການປະກົດຕົວຂອງບັນດາເຄື່ອງຈັກ ແລະ ທາດແທ້ຂອງການປະຕິວັດແມ່ນການປະຕິວັດທາງດ້ານເຕັກນິກ, ເປັນໄລຍະຂ້າມຜ່ານຈາກການຜະລິດໂດຍອາໄສແຮງງານຂອງຄົນໄປສູ່ການຜະລິດດ້ວຍເຄື່ອງຈັກ. ສະນັ້ນ, ຄວາມຈິງແລ້ວການພັດທະນາຂອງການຜະລິດດ້ວຍແຮງງານຄົນເປັນໄລຍະແຫ່ງການກະກຽມໃນການປະດິດເຄື່ອງຈັກໃນໂຮງງານທີ່ນຳໃຊ້ແຮງງານຂອງຄົນຢູ່ອັງກິດ, ແຮງງານຂອງຄົນໄດ້ຖືກຕັດແຍກອອກຈາກການຜະລິດຢ່າງສິ້ນເຊີງ. ການອອກແຮງງານແບບງ່າຍດາຍກ້າວເຂົ້າສູ່ຮູບແບບການນຳໃຊ້ເຄື່ອງຈັກທີ່ທັນສະໄໝແທນການອອກແຮງງານດ້ວຍກຳລັງແຮງຂອງມະນຸດ. ເຄື່ອງມືໃນການຜະລິດກໍ່ມີການປ່ຽນແປງ ແລະ ປັບປຸງໃຫ້ດີຂຶ້ນກວ່າເກົ່າ. ຈຸດພິເສດຂອງການປ່ຽນແປງຈາກການຜະລິດດ້ວຍແຮງງານຄົນໄປສູ່ການຜະລິດດ້ວຍເຄື່ອງຈັກແມ່ນການປະກົດຕົວຂອງກຳມະກອນ ແລະ ນັກເຕັກນິກທີ່ມີຄວາມສາມາດໃນການປະດິດເຄື່ອງຈັກໃໝ່ໆ ແລະ ຄົ້ນຄິດວິທີການນຳໃຊ້ເຄື່ອງຈັກເຂົ້າໃນການຜະລິດ. ໝາກຜົນກ່ຽວກັບຄະນິດສາດ, ຟີຊິກສາດ, ເຄມີສາດ, ວິຊາວ່າດ້ວຍຄວາມແຮງ ແລະ ການເຄື່ອນທີ່ dynamic ທີ່ຊ່ວຍໃຫ້ພວກເຂົາເຂົ້າໃຈເຖິງທາດແທ້ຂອງຍຸກແຫ່ງການພັດທະນາຂອງສິ່ງວັດຖຸທີ່ມະນຸດເຮົາກຳລັງຄົ້ນຄວ້າ ແລະ ຊອກຮູ້. ໃນສະຕະວັດທີ 18 ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກນິກ ບໍ່ພຽງແຕ່ເກີດຂຶ້ນຢູ່ປະເທດອັງກິດເທົ່ານັ້ນ ແຕ່ຍັງເກີດຂຶ້ນກັບຫຼາຍປະເທດໃນໂລກແຕ່ວ່ານຳໃຊ້ໄດ້ຮັບຜົນແມ່ນຢູ່ປະເທດອັງກິດຈົນກ້າວໄປເຖິງການປະຕິວັດອຸດສະຫະກຳ. ຍ້ອນແນວນັ້ນຈຶ່ງມີພຽງປະເທດອັງກິດເທົ່ານັ້ນທີ່ປະກົດມີບັນດາຂະແໜງເສດຖະກິດທີສຳຄັນ ແລະ ມີຄວາມຈຳເປັນໃນເວລານັ້ນ.



ການປະຕິວັດອຸດສະຫະກໍາໃນໄລຍະຕົ້ນເຫັນວ່າຈະມີການນໍາໃຊ້ເຄື່ອງຈັກ ແຕ່ກໍ່ຍັງອາໄສແຮງງານຂອງ
ມະນຸດໃນການບໍລິຫານ

## 2. ຄວາມກ້າວໜ້າທາງດ້ານເຕັກນິກໃນຂະແໜງອຸດສະຫະກໍາ

ອຸດສະຫະກໍາຕໍ່າແຜ່ນດ້ວຍຂົນສັດເປັນຂະແໜງອຸດສະຫະກໍາທີ່ມີຄວາມຈະເລີນ ແລະ ຂະຫຍາຍ ຕົວມາແຕ່ດົນນານໃນປະເທດອັງກິດ. ແຕ່ວ່າເຄື່ອງຈັກຍັງບໍ່ທັນນໍາໃຊ້ເຂົ້າໃນໃນຂະແໜງການນີ້ ແຕ່ຖືກນໍາໃຊ້ເຂົ້າທໍາອິດໃນໄລຍະທີ່ຂະແໜງອຸດສະຫະກໍາຕໍ່າແຜ່ນດ້ວຍຝ້າຍກໍາເນີດຂຶ້ນ. ເພາະວ່າການຕໍ່າແຜ່ນດ້ວຍຂົນສັດຍັງຮັກສາລະບອບການຟື້ນຟູອຸປະຖໍາ ແລະ ຍັງສາມາດຮັບມືກັບບັນດາຂໍ້ຈໍາກັດທາງດ້ານລະບຽບການທີ່ມີມາແຕ່ກ່ອນ. ແຕ່ຂະແໜງການຕໍ່າແຜ່ນແພດ້ວຍຝ້າຍເປັນຂະແໜງອຸດສະຫະກໍາທີ່ເກີດຂຶ້ນໃໝ່ ສ່ວນຫຼາຍແມ່ນແຈກຢາຍຢູ່ຕາມເຂດຊົນນະບົດ. ສະນັ້ນ, ຈິ່ງບໍ່ໄດ້ຮັບຜົນກະທົບຈາກຂໍ້ຈໍາກັດທາງດ້ານກົດລະບຽບທີ່ມີມາໃນເມື່ອກ່ອນ. ສະນັ້ນຂະແໜງການນີ້ຈິ່ງມີການຂະຫຍາຍຕົວຢ່າງແຂງແຮງ.

ໃນເວລານັ້ນໃນຂະແໜງອຸດສະຫະກໍາຕໍ່າແຜ່ນຝ້າຍກໍ່ຄືກັບຂະແໜງອຸດສະຫະກໍາອື່ນ, ແຮງງານຂອງຄົນມີບົດບາດສໍາຄັນ, ໜ້າວຽກຕົ້ນຕໍຂອງຂະແໜງການນີ້ແມ່ນການດຶງເສັ້ນດ້າຍ (ປັ່ນດ້າຍ) ແລະ ການຕໍ່າແຜ່ນ. ຜະລິດຕະພັນຂອງກໍາມະກອນປັ່ນດ້າຍແມ່ນເປົ້າໝາຍຂອງກໍາມະກອນໃນການຕໍ່າແຜ່ນ.



ການຕໍ່າແຜ່ນແພດ້ວຍເຄື່ອງຈັກທີ່ຍັງນໍາໃຊ້ແຮງງານຄົນເປັນຜູ້ຄວບຄຸມເຄື່ອງຈັກ

ຄວາມຕ້ອງການແຜ່ນແພເພີ່ມຂຶ້ນຮຽກຮ້ອງໃຫ້ເຕັກນິກໃນການຕໍ່າແຜ່ນຕ້ອງມີການປັບປຸງ, ໃນປີ ຄ.ສ 1733 ນັກເຕັກນິກ ຈອນໄກ ໄດ້ປະດິດ ກະສວຍຈັກ. ເມື່ອກ່ອນເວລາທີ່ຊ່າງຕໍ່າແຜ່ນແພຈະໄຊ້ແຮງງານຄົນດຶງກະສວຍສອດຜ່ານເສັ້ນດ້າຍແຕ່ລະເສັ້ນມາຮອດຕອນນີ້ພວກເຂົາພຽງແຕ່ນໍາໃຊ້ຕີນປຽບກໍ່ສາມາດດຶງເສັ້ນດ້າຍສອດໃສ່ດ້າຍແຕ່ລະເສັ້ນ, ສອດໄປມາຢ່າງໄວວາ, ກະສວຍຈະຊ່ວຍໃຫ້ຄວາສາມາດໃນການຕໍ່າແຜ່ນແພສູງຂຶ້ນເປັນສອງເທົ່າ, ຮຽກຮ້ອງໃຫ້ເພີ່ມປະລິມານການຜະລິດເສັ້ນຝ້າຍໃຫ້ຫຼາຍຂຶ້ນ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ມີການນໍາໃຊ້ເຄື່ອງຈັກປັ່ນດ້າຍແທນການໃຊ້ສອງຝາມືຂອງຄົນ.




ກະສວຍທີ່ປະດິດໂດຍ ຈອນໄກ ປີ ຄ.ສ 1733

ມາໃນປີ ຄ.ສ 1765 ຊ່າງຕໍ່າແຜ່ນຊື່ວ່າ ເຈມ ຮັກກຣີເວີ ໄດ້ປະດິດເຄື່ອງຈັກດຶງເສັ້ນດ້າຍຊື່ວ່າ ເຈນນີ. ເຄື່ອງຈັກເຈນນີ ກໍ່ຍັງໃຊ້ມືຄົນປັ່ນ ຫຼື ໝູນ ໃນເມື່ອກ່ອນມີພຽງແຕ່ໜຶ່ງເສົາ ມາຮອດນີ້ເພີ່ມຂຶ້ນເປັນ 16-18 ເສົາ ແຕ່ວ່າຍັງອາໄສແຮງງານຂອງກຳມະກອນເປັນຜູ້ຄວບຄຸມ ຍ້ອນແນວນັ້ນດ້າຍຈຶ່ງຜະລິດອອກມາໄດ້ໃນປະລິມານທີ່ຫຼາຍກວ່າເກົ່າ. ແຕ່ກ່ອນໜຶ່ງຄົນຕໍ່າແຜ່ນແພຕ້ອງອາໄສແຮງງານຂອງຄົນດຶງດ້າຍດ້ອຍມືອີກ 3 ຄົນ ມາໃນຕອນນີ້ເຫັນວ່າເສັ້ນດ້າຍມີຫຼາຍກວ່າກຳລັງຄວາມສາມາດຂອງຜູ້ຕໍ່າແຜ່ນແພອີກ.ສາມາດເວົ້າໄດ້ວ່າເຄື່ອງຈັກດຶງດ້າຍເຈນນີເປັນສິ່ງປະດິດທຳອິດທີ່ເຮັດເກີດການປ່ຽນແປງໃນການອອກແຮງງານຢູ່ອັງກິດ. ເພາະວ່າເປັນການເລີ່ມຕົ້ນໃນການແບ່ງງານລະຫວ່າງການດຶງດ້າຍ ກັບການຕໍ່າແຜ່ນໃນສັງຄົມອັງກິດ.



ຈັກດຶງດ້າຍ ເຈນນີ ທີ່ຜະລິດໃນປີ 1765 ໂດຍ ເຈມຮັກກຣີເວີ

ມາຮອດໃນປີ ຄ.ສ 1769 ເຄື່ອງຈັກປັ່ນດ້າຍທີ່ແລ່ນດ້ອຍພະລັງງານຂອງນໍ້າໄດ້ຮັບການປະດິດມີຊື່ວ່າ ອາກກາຍເຕີ, 2 ປີຕໍ່ມາ ອາກກາຍເຕີໄດ້ສ້າງໂຮງງານຕໍ່າແຜ່ນແຫ່ງທຳອິດຂອງອັງກິດຢູ່ເມືອງແມນເຊດເຕີ , ຈຸດພິເສດທີ່ໂດດເດັ່ນຂອງເຄື່ອງຈັກແມ່ນນຳໃຊ້ກຳລັງແຮງຂອງນໍ້າເພື່ອທົດແທນແຮງງານຂອງມະນຸດ ແລະ ມີລັກສະນະງ່າຍດາຍ. ຄວາມສາມາດຂອງເຄື່ອງຈັກປັ່ນດ້າຍເຈນນີ ແລະ ເຄື່ອງຈັກ ອາກກາຍເຕີ, ກຳມະກອນ Xanyen cramton ປັບປຸງເຄື່ອງຈັກໃຫ້ທັນສະໄໝກວ່າເກົ່າເຮັດໃຫ້ເສັ້ນດ້າຍທອງນ້ອຍ ທັງແໜ້ນກວ່າເກົ່າ. ຍ້ອນຄວາມຈະເລີນກ້າວໜ້າທີ່ໄດ້ກ່າວມາຂ້າງເທິງນັ້ນເຮັດໃຫ້ຂະແໜງການປັ້ນດ້າຍຂະຫຍາຍຕົວຢ່າງແຂງແຮງເຮັດໃຫ້ກຳລັງການຜະລິດເພີ່ມຂຶ້ນເປັນທະວີຄູນຕໍ່ມາເຮັດໃຫ້ເກີດມີສະຖານະການບໍ່ສົມດຸນກັນ: ຂະແໜງຕໍ່າແຜນບໍ່ສາມາດນຳໃຊ້ເສັ້ນດ້າຍໄດ້ໝົດ ມັນຮຽກຮ້ອງໃຫ້ມີການປັບປຸງຂະແໜງການຕໍ່າແຜ່ນ.

ມາໃນປີ ຄ.ສ 1785 ນັກວິສະວະກອນຊື່ວ່າ ເອັດໂມນ ອາກກາຍເຕີ ໄດ້ຜະລິດເຄື່ອງຈັກຕໍ່າແຜ່ນ ເຊິ່ງເຄື່ອງຈັກດັ່ງກ່າວມີກໍາລັງການຜະລິດສູງເຖິງ 39 ເທື່ອ ພ້ອມດຽວກັນນັ້ນຂະແໜງການ ຟອກສີ,ຍ້ອມສີ, ວາດລວດລາຍກໍ່ໄດ້ຮັບການປັບປຸງຍ້ອນການນໍາໃຊ້ບົດຮຽນ ແລະ ປະສົບການໃໝ່ທາງດ້ານເຄມີ ແລະ ໂຮງງານຕໍ່າແຜ່ນແພ.

ບັນດາເຄື່ອງຈັກທີ່ແລ່ນດ້ວຍພະລັງງານຂອງນໍ້າຮຽກຮ້ອງໃຫ້ມີຄວາມຈໍາເປັນຕ້ອງສ້າງໂຮງງານແຄມ ແມ່ນໍ້າ. ບັນດາເຄື່ອງຈັກການນໍາໃຊ້ຍັງຂຶ້ນກັບເງື່ອນໄຂທາງດ້ານທີ່ຕັ້ງ, ອາກາດ ເພາະວ່າລະດູໜາວຢູ່ອັງກິດນໍ້າ ຈະກາຍເປັນນໍ້າແຂງ ເຄື່ອງຈັກກໍ່ຈະບໍ່ສາມາດເຮັດວຽກໄດ້. ສະນັ້ນ, ຕ້ອງມີການສ້າງເຄື່ອງຈັກທີ່ເຮັດວຽກໄດ້ ໂດຍບໍ່ມີລັກສະນະຈໍາກັດແບບນີ້, ໝາຍຄວາມວ່າເປັນເຄື່ອງຈັກທີ່ບໍ່ຂຶ້ນກັບເງື່ອນໄຂທາງທໍາມະຊາດໃນ ເວລານໍາໃຊ້.

ປີ ຄ. ສ 1769 ນັກທົດລອງຈາກມະຫາວິທະຍາໄລອັງກິດຊື່ວ່າ ເຈມ ອວາດ ປະດິດເຄື່ອງຈັກທີ່ ແລ່ນດ້ວຍພະລັງງານອາຍນໍ້າ. ຮອດປີ ຄ.ສ 1784 ໄດ້ຖືກນໍາໃຊ້ເຂົ້າໃນໂຮງຈັກໂຮງງານ. ການນໍາໃຊ້ເຄື່ອງຈັກ ອາຍນໍ້າເຂົ້າໃນວຽກງານອຸດສະຫະກໍາພາໃຫ້ເກີດມີການປ່ຽນແປງຢ່າງໃຫຍ່ຫຼວງຄື: ປະລິມານການຜະລິດ ແລະ ກໍາລັງແຮງງານໃນການຜະລິດເພີ່ມຂຶ້ນຢ່າງເຫັນໄດ້ຊັດເຈນ. ພ້ອມດຽວກັນນັ້ນບັນດາໂຮງຈັກໂຮງງານ ໃຫຍ່ໄດ້ນໍາໃຊ້ກໍາມະກອນເປັນຈໍານວນຫຼາຍຫຼາຍຢູ່ທົ່ວປະເທດອັງກິດ. ບໍ່ພຽງແຕ່ນໍາໃຊ້ເຄື່ອງຈັກອາຍນໍ້າເຂົ້າ ໃນຂະແໜງອຸດສະຫະກໍາຕໍ່າແຜ່ນຝ້າຍເທົ່ານັ້ນແຕ່ເຄື່ອງຈັກອາຍນໍ້າຍັງຖືກນໍາໃຊ້ເຂົ້າຂະແໜງການຕໍ່າເສັ້ນ ແລັນ, ຕໍ່າແພນິລອນ, ແພໄໝ ແລະ ບັນດາຂະໜງອຸດສະຫະກໍາເບົາອື່ນໆອີກ. ຍ້ອນຄວາມກ້າວໜ້າດັ່ງກ່າວ ນັ້ນເຮັດໃຫ້ການນໍາໃຊ້ແຮງງານດ້ວຍເຄື່ອງຈັກຈິ່ງຖືກນໍາໃຊ້ເຂົ້າໃນບັນດາຂະແໜງການທີ່ສໍາຄັນຂອງອຸດ ສະຫະກໍາຫຼາຍກວ່າແຮງງານດ້ວຍຕີນມື ແລະ ເຫື່ອແຮງຂອງຄົນ.

ຄວາມກ້າວໜ້າທາງດ້ານເຕັກນິກໃນຂະແໜງອູດສະຫະກໍາເບົາເຮັດໃຫ້ເກີດມີບັນຫາທາງດ້ານ ເສດຖະກິດນັ້ນກໍ່ຄືຈໍາເປັນຕ້ອງມີການຜະລິດເຄື່ອງຈັກອອກມາໃຊ້ໃຫ້ຫຼາຍ ເພື່ອຢາກເຮັດແບບນັ້ນໄດ້ຕ້ອງມີ ການພັດທະນາບັນດາຂະແໜງການຫຼອໂລຫະ ແລະ ດັດແປງເຄື່ອງຈັກ. ປີ 1735 ອາບຣາແຮັມ ດາກບີ ໄດ້ ພັດທະນາວິທີການຫຼອມຖ່ານຫີນເພື່ອຫຼອມເຫຼັກນີ້ເປັນຄວາມກ້າວໜ້າທີ່ສໍາຄັນທີ່ສາມາດຕອບສະໜອງຖ່ານ ຫີນທີ່ເປັນເຊື້ອເພີງແທນການນໍາໃຊ້ຫີນຈາກການເຜົາໄມ້ເຊິ່ງນັບມື້ນັບມໜ້ອຍລົງ. ຮອດປີ ຄ. ສ 1756 ໄດ້

ຮັບການປັບປຸງໃຫ້ສົມບູນຂຶ້ນ, ມາໃນປີ ຄ.ສ 1784 ກໍອອກເຕີ ໄດ້ປະດິດເຕົາຫຼອມເຫຼັກ ໂດຍນໍາໃຊ້ວັດຖຸດິບແຮ່ທາດເຂົ້າໃນການຜະລິດເຫຼັກກ້າສິ່ງດັ່ງກ່າວນີ້ເຮັດໃຫ້ກໍາລັງຄວາມສາມາດໃນການຜະລິດໂລຫະເພີ່ມຂຶ້ນ ແລະ ການຂຸດຄົ້ນບໍ່ແຮ່ກໍ່ມີການພັດທະນາ. ມີການສ້າງເຕົາຫຼໍ່ເຫຼັກຂະໜາດໃຫຍ່ທີ່ສາມາດຜະລິດເຫຼັກໄດ້ຫຼາຍກວ່າເກົ່າເຖິງ 50 ເທົ່າຖ້າທຽບໃສ່ການໃຊ້ເຕົາຫຼໍ່ແບບເກົ່າ  ແລະ ການຫຼອມແຮ່ກໍ່ກາຍເປັນສິ່ງທີ່ງ່າຍດາຍໂດຍການນໍາໃຊ້ກະແສລົມພັດຄວາມຮ້ອນເພື່ອການເຜົາໄໝ້. ຍ້ອນແນວນັ້ນຈຶ່ງເຮັດໃຫ້ມີການຜະລິດເຄື່ອງມືທີ່ເຮັດດ້ວຍເຫຼັກອອກມາໃຊ້ແທນເຄື່ອງມືທີ່ເຮັດດ້ວຍໄມ້ໃນເມື່ອກ່ອນ. ມີການສ້າງຂົວດ້ວຍເຫຼັກຢູ່ເຂດ YOOK  ໃນປີ ຄ.ສ 1788 ແລະ ມີການນໍາໃຊ້ເຫຼັກເຂົ້າໃນການເຮັດເສົາເຮືອນ ແລະ ເຄື່ອງຈັກທີ່ເຮັດຈາກເຫຼັກ. ພ້ອມດຽວກັນນັ້ນ, ບໍ່ທອງ, ບໍ່ກົວ ແລະ ບໍ່ຊືນກໍ່ຖືກຂຸດຄົ້ນ. ການຂະຫຍາຍຕົວຂອງຂະແໜງອຸດສະຫະກໍາຫຼອມເຫຼັກ ແລະ ຂຸດຄົ້ນບໍ່ແຮ່ໄດ້ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການສ້າງຂະແໜງອຸດສະຫະກໍາໜັກ. ເຖິງແມ່ນວ່າຂະແໜງການປະດິດເຄື່ອງຈັກຍັງມີລັກສະນະອາໄສແຮງງານຂອງຄົນກໍ່ຕາມແຕ່ມັນກໍ່ເຮັດໃຫ້ຂະແໜງກົນຈັກກາຍເປັນພື້ນຖານໃນການສ້າງພື້ນຖານໂຄງລ່າງໃຫ້ແກ່ອຸດສະຫະກໍາໜັກຂອງປະເທດອັງກິດ.

## III. ໝາກຜົນຂອງການປະຕິວັດອຸດສະຫະກໍາ

### 1.   ການປ່ຽນແປງທາງດ້ານອຸດສະຫະກໍາ ແລະ ຕົວເມືອງຢູ່ອັງກິດ.

ຮອດທ້າຍສະຕະວັດທີ 18 ຂະບວນການປະຕິວັດອຸດສະຫະກໍາແມ່ນຍັງບໍ່ທັນໄດ້ສິ້ນສຸດລົງ, ແມ່ນຊ່ວງໄລຍະແຫ່ງການປ່ຽນແປງທາງດ້ານການຄົມມະນາຄົມຂົນສົ່ງ ແລະ ການປະດິດ-ປັບປຸງເຄື່ອງກົນຈັກໃຫ້ໄປສູ່ໃບໜ້າໃໝ່ ເມື່ອກ້າວເຂົ້າສູ່ຊຸມປີ 60 ຂອງສະຕະວັດທີ 19 ເຖິງແມ່ນວ່າການນໍາໃຊ້ໝາກຜົນຂອງການປະຕິວັດອຸດສະຫະກໍາຈະເປັນອັນໃໝ່ກໍ່ຕາມແຕ່ມັນໄດ້ປະກອບສ່ວນອັນຫຼວງຫຼາຍຕໍ່ກັບການພັດທະນາຂະແໜງອຸດສະຫະກໍາ ຈໍານວນຜົນປະລິດທີ່ນໍາໃຊ້ເຄື່ອງກົນຈັກເພີ່ມຂຶ້ນຢ່າງເຫັນໄດ້ຈະແຈ້ງ ໂດຍສະເພາະແມ່ນການນໍາເຂົ້າຝ້າຍເພື່ອນໍາໃຊ້ເຂົ້າໃນຂະແໜງອຸດສະຫະກໍາຕໍ່າແຜ່ນແພແມ່ນເພີ່ມຂຶ້ນເປັນຫຼາຍເທົ່າຕົວ.

ໃນຕົ້ນສະຕະວັດທີ 18 ອັງກິດໄດ້ນໍາເຂົ້າຝ້າຍເປັນຈໍານວນ 1 ລ້ານໂຕນ ແຕ່ມາຮອດປີ ຄ.ສ 1764 ໄດ້ເພີ່ມຂຶ້ນເປັນ 3,8 ລ້ານໂຕນ, ປີ ຄ.ສ 1789 ເພີ່ມຂຶ້ນເຖິງ 32,4 ລ້ານໂຕນ. ສ່ວນຂົນສັດສະເພາະຢູ່ເຂດ Lancaesia   ຜະລິດໄດ້ 75.000 ໂຕນ, ຮອດປີ ຄ.ສ 1817 ເພີ່ມຂຶ້ນເປັນ 490.000 ໂຕນ. ລະດັບການ

ຂະຫຍາຍຕົວຂອງຂະແໜງອຸດສະຫະກຳໜັກກໍ່ເພີ່ມຂຶ້ນຢ່າງໄວວາ. ກ່ຽວກັບການຫຼອມເຫຼັກໃນປີ 1720 ສາມາດຜະລິດໄດ້ພຽງແຕ່ 18.000 ໂຕນ, ຮອດປີ ຄ.ສ 1802 ເພີ່ມຂຶ້ນເປັນ 250.000 ໂຕນ. ຖ່ານຫີນໃນປີ 1750 ຜະລິດໄດ້ 4 ລ້ານໂຕນ, ຮອດປີ ຄ.ສ 1795 ເພີ່ມຂຶ້ນເປັນ 10 ລ້ານໂຕນ.

ການຂະຫຍາຍຕົວທາງດ້ານອຸດສະຫະກຳເຮັດໃຫ້ມີການປ່ຽນແປງບົດບາດທາງດ້ານເສດຖະກິດຂອງປະເທດອັງກິດ. ລອນດອນໄດ້ກາຍເປັນສູນກາງທາງດ້ານການຄ້າທີ່ມີພົນລະເມືອງອາໄສຢູ່ປະມານ 80 ພັນກວ່າຄົນເປັນຕົວເມືອງອຸດສະຫະກຳທຳອິດຂອງທະວີບເອີຣົບ ແລະ ເປັນຕະຫຼາດຈຳໜ່າຍສິນຄ້າຂອງໂລກ. ເຊິ່ງກ່ອນໜ້ານີ້ສູນກາງການຄ້າ ແລະ ອຸດສະຫະກຳທີ່ໃຫຍ່ ແລະ ມີປະຊາກອນໜາແໜ້ນແມ່ນຢູ່ເຂດຕາເວັນອອກສ່ຽງໃຕ້ ແຕ່ມາຮອດໄລຍະການປະຕິວັດອຸດສະຫະກຳເຫັນວ່າ ເຂດເສດຖະກິດທີ່ໃຫຍ່ ແລະ ສຳຄັນໄດ້ປ່ຽນມາເປັນເຂດຕາເວັນຕົກສ່ຽງເໜືອ. ໃນນັ້ນໂຮງຈັກໂຮງງານໄດ້ຮັບການສ້າງຕັ້ງຂຶ້ນຫຼາຍເຊັ່ນໂຮງງານຂຸດຄົ້ນຖ່ານຫີນ, ໂຮງງານຂຸດຄົ້ນເຫຼັກ... ແລ້ວເຂດດັ່ງກ່າວກໍ່ຄ່ອຍໆເກີດມີຕົວເມືອງໃໝ່ຂຶ້ນມາເຊັ່ນ: ແມນເຊດເຕີ, ເບີກມິນແຮັມ, ລີເວີພູ ແລະ ມີຫຼາຍນະຄອນໄດ້ກາຍເປັນສູນການທາງດ້ານອຸດສະຫະກຳໃໝ່ຂອງປະເທດອັງກິດ.

## 2. ການກຳເນີດຊົນຊັ້ນກຳມະຊີບ ແລະ ຂະບວນການຕໍ່ສູ້ທຳອິດຂອງຊົນຊັ້ນກຳມະຊີບ

ການປະຕິວັດອຸດສະຫະກຳບໍ່ພຽງແຕ່ເຮັດໃຫ້ມີການປ່ຽນແປງທາງດ້ານກຳລັງການຜະລິດເທົ່ານັ້ນແຕ່ມັນຍັງເຮັດໃຫ້ມີການປ່ຽນແປງຢ່າງເລິກເຊິ່ງໃນການພົວພັນສັງຄົມ. ພາຍໃນກຸ່ມນາຍທຶນກໍ່ຍັງຖືກຕັດແບ່ງອອກຍ້ອນຜົນສະທ້ອນຂອງການປະຕິວັດອຸດສະຫະກຳ. ໃນໄລຍະການອອກແຮງງານດ້ວຍກຳລັງຂອງຄົນຜູ້ທີ່ມີບົດບາດໃນຊົນຊັ້ນນາຍທຶນແມ່ນນັກທຸລະກິດພໍ່ຄ້າຊາວຂາຍທີ່ເປັນພັນທະມິດກັບຊົນຊັ້ນຂຸນນາງໃໝ່. ຕໍ່ກັບການພັດທະນາຮູບແບບການຜະລິດໂດຍການນຳໃຊ້ເຄື່ອງກົນຈັກຊົນຊັ້ນນາຍທຶນອຸດສະຫະກຳໄດ້ກາຍເປັນຜູ້ທີ່ມີບົດບາດ ແລະ ມີຂໍ້ຂັດແຍ່ງກັບພວກນາຍທຶນ ແລະ ຂຸນນາງໃໝ່ຮຽກຮ້ອງໃຫ້ມີການລົບລ້າງບໍລິສັດ, ລະບອບການເກັບພາສີ, ອິດສະຫຼະໃນການດຳເນີນທຸລະກິດ ແລະ ປະຕິຮູບລະບອບການເລືອກຕັ້ງ.

ການປ່ຽນແປງທາງດ້ານສັງຄົມທີ່ເປັນພື້ນຖານທີ່ສຸດແມ່ນການກຳເນີດຊົນຊັ້ນກຳມະຊີບອຸດສະຫະກຳ. ໃນໄລຍະການຜະລິດອຸດສະຫະກຳທີ່ອາໄສແຮງງານຂອງຄົນ, ກຳມະກອນໃນໂຮງງານອຸດສະຫະກຳ, ນາຍຊ່າງຫັດຖະກຳໃນຄອບຄົວ ແລະ ບັນດາກຸ່ມຄົນເຄິ່ງຊົນຊັ້ນກຳມະຊີບອື່ນຍັງບໍ່ທັນກາຍເປັນຊົນຊັ້ນໃນ

ສັງຄົມ ພວກເຂົາຍັງບໍ່ທັນປົດປ່ອຍຕົນເອງອອກຈາກຫັດຖະກຳ ແລະ ກະສິກຳ, ພວກເຂົາແຈກຢາຍກັນຢູ່ຕາມຊົນນະບົດ ແລະ ຕາມທ້ອງຖິ່ນຕ່າງໆທີ່ມີອະນາເຂດນ້ອຍ. ສິດອຳນາດຂອງບັນດາທ້ອງຖິ່ນຕ່າງໆຖືກຕັດແຍກອອກຈາກກັນ. ໃນໄລຍະສ້າງຕັ້ງພື້ນຖານອຸດສະຫະກຳແບບກົນຈັກໃນປະເທດທຶນນິຍົມທຳອິດແມ່ນປະເທດອັງກິດ, ຊົນຊັ້ນກຳມະຊີບອຸດສະຫະກຳໃໝ່ປະກົດຕົວຂຶ້ນ, ພວກເຂົາຈະເຕົ້າໂຮມກັນຢູ່ຕາມຕົວເມືອງ, ບັນດາໂຮງງານອຸດສະຫະກຳທີ່ບໍ່ກ່ຽວກັບກັບການຫັດຖະກຳ ແລະ ກະສິກຳ, ບັນດາສະມາຄົມການຜະລິດຫັດຖະກຳ. ການປະກົດຕົວຂອງຊົນຊັ້ນກຳມະຊີບປະຕິວັດທີ່ມີການຈັດຕັ້ງທີ່ສຸດໃນປະຫວັດສາດເຊິ່ງແກ່ຍາວເວລາດົນພໍສົມຄວນ. ຮອດທ້າຍສະຕະວັດທີ 18 ໄລຍະຂ້າມຜ່ານດັ່ງກ່າວພວມເກີດຂຶ້ນໃນປະເທດອັງກິດ.

ເມື່ອເຄື່ອງກົນຈັກໄດ້ຫຼຸດຜ່ອນການນຳໃຊ້ແຮງງານຂອງຄົນ, ແຮງງານແມ່ຍິງ ແລະ ເດັກນ້ອຍຖືກນຳໃຊ້ຢ່າງໜັກໜ່ວງ, ເງິນເດືອນຂອງພວກເຂົາພັດຕ່ຳ, ຖ້າທຽບໃສ່ເພດຊາຍ. ລັດທິທຶນນິຍົມຕໍ່ກັບການນຳໃຊ້ທໍ່ລະບາຍຄວັນຂຶ້ນທ້ອງຟ້າຂອງເຂົາເຈົ້າ ແລະ ບັນດາຕົວເມືອງທີ່ແອອັດບໍ່ສາມາດເຮັດໃຫ້ຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານດີຂຶ້ນ. ກຳມະການທີ່ມີອາຍຸແຕ່ 40 ປີຂຶ້ນໄປຈະບໍ່ໄດ້ຖືກຈ້າງ, ແຕ່ກໍ່ຍັງມີບາງບ່ອນທີ່ມີກຳມະກອນອາຍຸຮອດ 45 ປີ ແຕ່ບໍ່ເຖິງ 50 ປີ.

ສະນັ້ນ, ພວກເຂົາຈິ່ງພາກັນລຸກຂຶ້ນຕໍ່ສູ້ເພື່ອທວງສິດຜົນປະໂຫຍດ ແລະ ຄວາມເປັນມະນຸດ, ທຳອິດພວກເຂົາມີຄວາມກຽດຊັງບັນດາເຄື່ອງຈັກຈິ່ງໄດ້ດຳເນີນການທຳລາຍມ້າງເພເຄື່ອງຈັກ, ໂຮງຈັກໂຮງງານເພາະພວກເຂົາຄິດວ່າສິ່ງເຫຼົ່ານີ້ເປັນຕົ້ນເຫດໃຫ້ເຂົາເຈົ້າຫວ່າງງານ. ພວກເຂົາບໍ່ທັນເຂົ້າໃຈວ່າຕົ້ນເຫດຂອງບັນຫາ ແລະ ຄວາມທຸກຍາກທັງປວງບໍ່ແມ່ນມາຈາກເຄື່ອງຈັກແຕ່ແມ່ນຍ້ອນລັດທິທຶນນິຍົມມີການນຳໃຊ້ເຄື່ອງຈັກໃນການຜະລິດນັ້ນເອງ. ຂະບວນການທຳລາຍເຄື່ອງຈັກທຳອິດແມ່ນມີລັກສະນະກະແຈກກະຈາຍແລ້ວຈິ່ງຄ່ອຍໆເປັນຮູບຮ່າງທີ່ມີການຈັດຕັ້ງກວ່າເກົ່າ.

ກ້າວເຂົ້າສູ່ຊຸມປີ 70 ຂອງສະຕະວັດທີ 18 ກຳມະກອນຫຼາຍພັນຄົນທີ່ເຕົ້າໂຮມກັນຢູ່ສູນກາງແມນເຊດເຕີ, ບົກເຕີນ, ແບຣັກບໍ... ໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ ແຕ່ຍ້ອນຂະບວນການຕໍ່ສູ້ນັ້ນເກີດຂຶ້ນໃໝ່, ມີລັກສະນະກະແຈກກະຈາຍເກີດຂຶ້ນຕາມທຳມະຊາດບໍ່ມີການຈັດຕັ້ງທີ່ຊັດເຈນ. ຊົນຊັ້ນປົກຄອງໄດ້ຊອກທຸກວິທີການເພື່ອປາບປາມ. ປີ ຄ.ສ 1769 ສະພາໄດ້ອອກກົດໝາຍລົງໂທດພວກທີ່ທຳລາຍເຄື່ອງຈັກ ແລະ ໂຮງ

ຈັກໂຮງງານ ແຕ່ກົດໝາຍດັ່ງກ່າວນັ້ນກໍ່ບໍ່ສາມາດສະກັດກັ້ນການຈຳແນກຊົນຊັ້ນທີ່ນັບມື້ນັບເພີ່ມທະວີການຈຳແນກຢ່າງຊັດເຈນທີ່ເປັນປໍລະປັກກັນໃນສັງຄົມຄື: ຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະຊີບ. ຍ້ອນບົດບາດທາງດ້ານເສດຖະກິດ ແລະ ຄວາມຮູ້ທາງດ້ານການເມືອງບໍ່ໄດ້ຮັບການຕອບສະໜອງຊົນຊັ້ນກຳມະຊີບນັບມື້ນັບເຕີບໃຫຍ່ ແລະ ເຂັ້ມແຂງຂຶ້ນເລື້ອຍໆພວກເຂົາໄດ້ດຳເນີນການຕໍ່ສູ້ເພື່ອທວງເອົາສິດທິຂອງພວກເຂົາ.

# ບົດທີ 3

# ການຕໍ່ສູ້ເພື່ອປົດປ່ອຍຊາດຂອງບັນດາປະເທດຫົວເມືອງຂຶ້ນອັງກິດຢູ່ທະວີບອາເມຣິກາເໜືອ ແລະ ການກຳເນີດປະເທດສະຫະລັດອາເມຣິກາ.

ພາຍຫຼັງການປະຕິວັດນາຍທຶນອັງກິດປະມານ 100 ປີ, ການປ່ຽນແປງທາງດ້ານສັງຄົມ ແລະ ການເມືອງໄດ້ລະເບີດຂຶ້ນຢູ່ທະວີບອາເມຣິກາ. ນັ້ນກໍ່ຄືການປະຕິວັດທຶນນິຍົມຄັ້ງທຳອິດຢູ່ທະວີບອາເມຣິກາ ໂດຍໄດ້ຮັບຜົນສະທ້ອນໂດຍກົງຈາກການປະຕິວັດອັງກິດ, ແຕ່ມີລັກສະນະຕໍ່ສູ້ເພື່ອອິດສະຫຼະພາບຈາກຈັກກະພັດນາຍທຶນອັງກິດ. ຂະບວນການຕໍ່ສູ້ດັ່ງກ່າວນີ້ເປັນຂະບວນການຕໍ່ສູ້ປົດປ່ອຍປະຊາຊົນບັນດາເຜົ່າທີ່ມີຄວາມໝາຍຕໍ່ກັບປະຫວັດສາດໂລກໂດຍການປະກາດເອກະລາດທີ່ມີຊື່ສຽງໂດ່ງດັງ ແລະ ເປັນທິດສະດີໃຫ້ຊາດອື່ນເປັນບ່ອນອີງ.

## I ສະພາບການຂອງ 13 ອະນານິຄົມກ່ອນການປະຕິວັດ

### 1. ການຮຸກຮານຂອງຈັກກະພັດຢູ່ທະວີບອາເມຣິກາເໜືອ

ບັນດານັກປະຫວັດສາດ, ນັກເສດຖະສາດທຶນນິຍົມໄດ້ຢັ້ງຢືນວ່າປະຫວັດສາດທະວີບອາເມຣິກາແມ່ນເລີ່ມຕົ້ນຈາກຂະບວນການຄົ້ນພົບທາງດ້ານພູມສາດຂອງຊາວເອີຣົບໃນຕົ້ນສະຕະວັດທີ 16 ແຕ່ຄວາມຈິງແລ້ວວັດທະນະທຳຂອງອາເມຣິກາເລີ່ມມີມາຕັ້ງແຕ່ການຕັ້ງຖິ່ນຖານຂອງຊົນເຜົ່າພື້ນເມືອງໂດຍສະເພາະແມ່ນຊາວຜິວແດງ (ອິນເດຍແດງ) ທີ່ມີມາກ່ອນທີ່ຊາວເອີຣົບຈະເຂົ້າມາປະມານ 2500 ປີ ກ່ອນ ພວກເຂົາມາຕັ້ງຖິ່ນຖານຢູ່ທີ່ນີ້ ແຕ່ຍັງບໍ່ສາມາດຂຸດຄົ້ນຫຼັກຖານທາງບູຮານຄະດີທີ່ບົ່ງບອກວ່າມີຄົນມາຕັ້ງຖິ່ນຖານແຕ່ຍຸກຫີນເກົ່າ.

ບັນດາຊຸມນຸມຊົນຂອງເຜົ່າອິນເດຍແດງໄດ້ດຳລົງຊີວິດຢູ່ເຂດທີ່ອຸດົມສົມບູນທາງພາກເໜືອຂອງທະວີບອາເມຣິກາພວກເຂົາໄດ້ຜ່ານຜ່າໄລຍະແຫ່ງການຂະຫຍາຍຕົວທີ່ມີຄວາມກ້າວໜ້າແຕກຕ່າງກັນ. ທ່ານ Moocgan ໄດ້ໃຫ້ທັດສະນະວ່າ: ຊົນເຜົ່າ ອີໂຣກວາ, ຊົນເຜົ່າອານໂກກິນ... ທີ່ຢູ່ພາກຕາເວັນອອກຂອງແມ່ນ້ຳ ມິດຊິດຊິບປີ ຍັງນອນຢູ່ໃນການຈັດຕັ້ງສັງຄົມຕ່ຳ (ຄົນເຖື່ອນ- ຫຼ້າຫຼັງ) ເວົ້າລວມພວກເຂົາຍັງດຳລົງຊີວິດແບບຊຸມນຸມຊົນ, ດິນດອນຕອນຫຍ້າ ແລະ ຊັບສົມບັດທັງໝົດເປັນຂອງສ່ວນລວມ. ການເລືອກຕັ້ງແມ່ນມີຄວາມສະເໝີພາບໃນການຄັດເລືອກເອົາຜູ້ນຳທີ່ມີຄວາມຮູ້ຄວາມສາມາດ, ມີຄວາມສາມາດໃນການ

ເຕົ້າໂຮມຄວາມສາມາຄີໃນຊຸມນຸມຊົນ ແລະ ມີຄວາມສາມາດຕີສັດຕູຜູ້ຮຸກຮານ ເພື່ອປົກປ້ອງຊຸມນຸມຊົນ. ພວກເຂົາມີອາຊີບປູກຝັງ, ເກັບເດັດ, ລ່າສັດແບບເລື່ອນລອຍ, ຮູ້ຈັດດັດແປງທຳມະຊາດມາໃຊ້ໃຫ້ເກີດປະໂຫຍດ. ບົດຮຽນໃນການປູກພືດ, ຢາ, ສາລີ, ໝາກເລັ່ນ, ນັບທັງເຕັກນິກໃນການເຮັດເຮືອ, ພາຍເຮືອຕາມແມ່ນ້ຳລຳເຊຢູ່ອາເມຣິກາເໜືອເປັນປະໂຫຍດຊ່ວຍໃຫ້ການດຳລົງຊີວິດຂອງຊົນເຜົ່າພື້ນເມືອງ. ຂະບວນການລ່າຫົວເມືອງຂຶ້ນຂອງພວກຈັກກະພັດເອີຣົບເລີ່ມຕົ້ນໃນສະຕະວັດທີ 16 ພາຍຫຼັງຂະບວນການຄົ້ນພົບທາງດ້ານພູມສາດຂອງ ຄຣິສໂຕເຟີ ໂຄລຳບັດສ.

ຊາວສະເປນແມ່ນກຸ່ມຄົນທຳອິດທີ່ເດີນທາງມາສູ່ເຂດ ຟໍລິດາ ຮອດສະຕະວັດທີ 16 ພວກເຂົາໄດ້ເດີນທາງໄປເຖິງດິນແດນທະວີບອາເມຣິກາຜ່ານ ຄາຣລີນາຈີນຮອດແຄມແມ່ນ້ຳມິດຊິດຊິບປີ, ຈາກນັ້ນກໍ່ເດີນທາງເຂົ້າ ເທັກຊັດ ໃນປີ ຄ. 1635. ຕໍ່ມາປີ ຄ.ສ 1640 ຊາວສະເປນເດີນທາງໄປຮອດເຂດພູດອຍ  ເມຣິໂກ, ອາຣິໂຊນາ, ຄານຊັດ, ຄາຣິຟໍເນຍ.

ຕົ້ນສະຕະວັດທີ 16 ຊາວຝຣັ່ງໄດ້ດຳເນີນການລ່າຫົວເມືອງຂຶ້ນຢູ່ໃນຂົງເຂດນີ້, ພວກເຂົາໄດ້ຕັ້ງຖານທັບຢູ່ການາດາ,  ແລະ ໃນປີ ຄ.ສ 1540 ໄດ້ສ້າງຕັ້ງບໍລິສັດການຄ້າທຳອິດຂອງຝຣັ່ງຕາມແຄມແມ່ນ້ຳ ຮຸດຊອນ ຈາກນັ້ນພວກຝຣັ່ງກໍ່ເດີນທາງເຂົ້າດິນແດນທະເລສາບຊອກເຊີ (ບໍລິເວນສາຍພູໂອອອກໃນປັດຈຸບັນ ) ໄດ້ສ້າງຕັ້ງດິນແດນ ຫຼຸຍເຊຍນາ ຂອງຈັກກະພັດຝຣັ່ງໃນສະຕະວັດທີ 17.

ໃນເວລານັ້ນ ໂຮນລັງເປັນປະເທດຈັກກະພັດທີ່ເຂັ້ມແຂງໃນຕົ້ນສະຕະວັດທີ 17 ບໍລິສັດອິນເດຍ-ຕາເວັນອອກຂອງໂຮນລັງ ໄດ້ເດີນທາງມາອາເມຣິກາເໜືອ ແລະ ໄດ້ດຳເນີນການຂຸດຄົ້ນຊັບພະຍາກອນ. ໃນປີ 1614 ບໍລິເວນສາຍພູໂອອອກໃນປັດຈຸບັນ ຊາວໂຮນລັງໄດ້ສ້າງຕັ້ງ ພູ ອຳສະແຕນດຳ. ພວກເຂົາໄດ້ສ້າງຕັ້ງຖານທີ່ໝັ້ນຢູ່ບໍລິເວນແຄມແມ່ນ້ຳຮຸດຊອນ, ເດີລາອວາ,  ແລະ ດຳເນີນການຄ້າຂາຍຂົນສັດ, ຢາສູບ. ທະວີບອາເມຣິກາໄດ້ກາຍເປັນສະຖານທີ່ສຳລັບທຳການຄ້າຂາຍສິນຄ້າທີ່ສຳຄັນຂອງໂຮນລັງ.

ເຂດອາເມຣິກາເໜືອຖືວ່າເປັນເຂດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ. ສະນັ້ນ, ພວກຈັກກະພັດເອີຣົບຈິ່ງຊອກທຸກວິທີທາງໃນການເຂົ້າມາຍຶດຄອງຂົງເຂດນີ້. ສະວີເດັນກໍ່ດຳເນີນການຮຸກຮານເຂົ້າຂົງເຂດນີ້ ທ້າຍຊຸມປີ 30 ຂອງສະຕະວັດທີ 17 ພວກເຂົາໄດ້ສ້າງພື້ນຖານຂອງປະເທດສະວີເດັນໃໝ່

ຂຶ້ນຢູ່ລະຫວ່າງນໍ້າຕົກຂອງແມ່ນໍ້າ ເທຣນຕັນ ແລະ ແຫຼມ ຮອນໂລພັນ. ພວກເຂົາສ້າງທີ່ຢູ່ອາໄສໃກ້ກັບນະຄອນອຽນມິນຕັນໃນປັດຈຸບັນ. ແຕ່ກໍ່ຖືກຊາວໂຮນລັງຕີຂັບໄລ່ພວກສະວີເດັນອອກໄປໃນປີ 1655.

ເຖິງແມ່ນວ່າຂະບວນການລ່າຫົວເມືອງຂຶ້ນຂອງອັງກິດຈະມີຄວາມເຂັ້ມແຂງ ແລະ ໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍກວ່າປະເທດຕ່າງໆ. ຂະບວນການຕໍ່ສູ້ພາຍໃນປະເທດອັງກິດເກີດຂຶ້ນຢ່າງຮຸນແຮງກ່ອນການປະຕິວັດໃນປີ 1640 ເປັນສາເຫດໜຶ່ງເຮັດໃຫ້ເກີດມີກະແສແນວຄິດໃນການຍ້າຍຖິ່ນຖານອອກສູ່ປະເທດອື່ນເພື່ອຊອກດິນແດນແຄມແມ່ນໍ້າ. ພວກເຂົາຍ້າຍຖິ່ນຖານຍ້ອນຊີວິດການເປັນຢູ່ທາງດ້ານເສດຖະກິດລໍາບາກ. ຊາວນາ, ປະຊາຊົນຜູ້ທຸກຍາກໃນຕົວເມືອງທີ່ມີແນວຄິດຢາກຫຼົບໜີຈາກຄວາມແຕກຕ່າງກັນລະຫວ່າງຜູ້ທີ່ນັບຖື ນິກາຍພິວລິຕັນ ແລະ ແອັງກລີຄັນ, ບາງກຸ່ມກໍ່ຕ້ອງການມີຊີວິດການເປັນຢູ່ແບບໃໝ່ ແລະ ມີຄວາມຕ້ອງຊອກຫາດິນແດນໃໝ່ບໍ່ຕ້ອງການດໍາລົງຊີວິດຢູ່ໃນດິນແດນປະເທດອັງກິດອີກ.

ຂະບວນການລ່າຫົວເມືອງຂຶ້ນຂອງອັງກິດຂະຫຍາຍຕົວຢ່າງແຂງແຮງໃນຕົ້ນສະຕະວັດທີ 17 . ປີ ຄ.ສ 1607 ຊາວອັງກິດໄດ້ບຸກຍຶດດິນແດນເຂດ ເວີຈີເນຍ. ຂະບວນການລ່າຫົວເມືອງຂຶ້ນຂອງອັງກິດຢູ່ອາເມຣິກາເໜືອ ແຂງແຮງທີ່ສຸດໃນຊຸມປີ 20 ຂອງສະຕະວັດທີ 18 ເມື່ອນະໂຍບາຍໃນການຍຶດດິນນາຂອງຊົນຊັ້ນນາຍທຶນ ແລະ ຊຸນນາງໃໝ່ຢູ່ອັງກິດກ້າວເຂົ້າສູ່ລະດັບສູງ. ຮອດປີ 1752 ອັງກິດໄດ້ສ້າງຕັ້ງອະນານິຄົມອັງກິດໄດ້ 13 ແຫ່ງ. ປີ ຄ.ສ 1754 ໃນດິນແດນອະນານິຄົມຂອງອັງກິດຢູ່ອາເມຣິກາເໜືອມີປະຊາກອນເຖິງ 1,3 ລ້ານຄົນ, ພາສາອັງກິດໄດ້ກາຍເປັນພາສາທາງການທີ່ຖືກນໍາໃຊ້ຢ່າງຫຼວງຫຼາຍຢູ່ອາເມີຣິກາເໜືອ.




ແຜນທີ່ 13 ອະນານິຄົມອັງກິດຢູ່ອາເມຣິການເໜືອໃນປີ 1775 ເຊິ່ງເປັນພື້ນທີ ສີແດງ[3]

ສາເຫດຕົ້ນຕໍທີ່ເຮັດໃຫ້ຊາວອັງກິດໄດ້ຮັບໄຊຊະນະໃນການລ່າຫົວເມືອງຂຶ້ນຄວາມໄດ້ປຽບທາງດ້ານເສດຖະກິດສັງຄົມຂອງປະເທດອັງກິດໃນເວລານັ້ນ. ກ້າວເຂົ້າສູ່ສະຕະວັດທີ 17-18 ປະເທດອັງກິດນໍາໜ້າ

[3] 1 ນິວແຮັມເຊຍ, 2 ອ່າວເມັດເສັດຊູເສັດ,3 ໂຣດ ໄອແລັນ, 4 ຄອນເນັກຕິກັນ, 5 ນິວຢອກ, 6 ນິວເຈຊີ, 7 ເປັນຊີວາເນຍ, 8 ເດລາແວ, 9 ເຈສາພີກ, 10 ມາລີແລັນ,11 ເຂດປົກຄອງຕົນເອງເວີຈີເນຍ, 12 ຄາໂຣລີນາ ແລະ 13 ຈໍເຈຍ.

ປະເທດອື່ນໃນການພັດທະນາເສດຖະກິດຈາກເງື່ອນໄຂດັ່ງກ່າວມານັ້ນເຮັດໃຫ້ປະເທດອັງກິດມີເງື່ອນໄຂອໍານວຍຄວາມສະດວກໃນການຂະຫຍາຍອະນາເຂດຫຼືເມືອງຂຶ້ນຢູ່ອາເມຣິກາເໜືອ. ນາຍທຶນອຸດສະຫະກໍາອັງກິດໄດ້ລໍາລຽງສິນຄ້າຂອງອັງກິດເຂົ້າມາຈໍາໜ່າຍຢູ່ທະວີບອາເມຣິກາ ແລະ ນໍາເອົາວັດຖຸດິບທີ່ສໍາຄັນຈາກອາເມຣິກາກັບຄືນເມືອປ້ອນເຂົ້າໃນຂະແໜງອຸດສະຫະກໍາອາເມຣິກາເໜືອປະກອບມີໄມ້ເພື່ອຕອບສະໜອງເຂົ້າຂະແໜງອຸດສະຫະກໍາເຮັດເຮືອຂອງອັງກິດ. ສິ່ງດັ່ງກ່າວນີ້ໄດ້ຮັບປະກັນໃຫ້ກໍາລັງທະຫານຂອງອັງກິດມີຄວາມແຂງແກ່ນ ແລະ ມີບົດບາດເທິງມະຫາສະໝຸດ.

ອີກປັດໄຈໜຶ່ງທີ່ສໍາຄັນໃນການປະຕິວັດດິນນາຢູ່ອັງກິດເປັນວິທີການທີ່ໂຫດຫ້ຽມ ແລະ ໄຮ້ມະນຸດສະທໍາເຮັດໃຫ້ຊາວນາອັງກິດເສຍດິນດອນໃນການຜະລິດຈໍາເປັນຕ້ອງອົບພະຍົບໄປອາໄສຢູ່ທະວີບອາເມຣິກາ, ມີຊາວນາອັງກິດອົບພະຍົບໄປອາໄສຢູ່ທະວີບອາເມຣິກາເປັນຈໍານວນຫຼາຍພັນຄົນໃນສະຕະວັດທີ 18 ເພື່ອທໍາການຜະລິດກະສິກໍາ ແລະ ສ້າງເງື່ອນໄຂເພື່ອເຮັດໃຫ້ອຸດສະຫະກໍາຂະຫຍາຍຕົວຢູ່ອາເມຣິກາໃນໄລຍະຕໍ່ມາ.

ສະພາບທາງດ້ານການເມືອງອັງກິດໃນສະຕະວັດທີ 17 ກໍ່ເປັນປັດໄຈໜຶ່ງທີ່ເຮັດໃຫ້ຂະບວນການອົບພະຍົບຂອງຊາວອັງກິດເຂັ້ມແຂງກວ່າປະເທດອື່ນນັບທັງຜູ້ຄົນທີ່ນອນຢູ່ໃນຊົນຊັ້ນນາຍທຶນ ແລະ ຊົນຊັ້ນຂຸນນາງໃໝ່ໄດ້ປະຖິ້ມທຸກຢ່າງຢູ່ອັງກິດ ແລະ ຮີບຮ້ອນອົບພະຍົບໄປທະວີບອາເມຣິກາ. ບັນດາປັດໄຈທີ່ກ່າວມາຂ້າງເທິງນັ້ນເຮັດໃຫ້ອັງກິດມີພື້ນຖານທີ່ແໜ້ນແກ່ນກວ່າປະເທດອື່ນໃນອາເມຣິກາ ແລະ ມີທ່າອ່ຽງທີ່ຈະພັດທະນາເປັນສັງຄົມໜຶ່ງທີ່ສົມບູນແບບ. ບັນດາປັດໄຈດັ່ງກ່າວນັ້ນໄດ້ສ້າງເງື່ອນໄຂໃຫ້ແກ່ການປະຕິວັດນາຍທຶນ.

## 2. ການປະຕິວັດປົດປ່ອຍຊາດ ແລະ ປະຊາທິປະໄຕຢູ່ອາເມຣິກາ

### 1) ກະສິກໍາຢູ່ອາເມຣິກາເໜືອ ແລະ ທ່າອ່ຽງໃນການພັດທະນາລັດທິທຶນນິຍົມ

ກ້າວເຂົ້າສູ່ສະຕະວັດທີ 17-18 ອັງກິດເຫັນອາເມຣິກາເໜືອເປັນພຽງເຂດການຜະລິດກະສິກໍາທີ່ຂຶ້ນກັບອັງກິດ, ເປົ້າໝາຍໃນການກົດຂີ່ຂູດຮີດຂອງພວກອັງກິດແມ່ນຊາວອິນເດຍແດງ, ພວກຜິວດໍານັບທັງປະຊາຊົນອັງກິດທີ່ອົບພະຍົບເຂົ້າມາອາໄສຢູ່ອາເມຣິກາເໜືອ. ໜ້າທີ່ຕົ້ນຕໍຂອງອາເມຣິກາເໜືອແມ່ນການຕອບສະໜອງວັດຖຸດິບ ແລະ ສະບຽງອາຫານ.

ພາກໃຕ້ອາເມຣິກາເຊັ່ນ: ເວີຈິເນຍ, ເມຣີແລັນ, ຄາໂຣລິນາໄດ້ຫັນໄປປູກຢາສູບ, ປູກເຂົ້າ ແລະ ລ້ຽງສັດ. ບັນດາຜົນຜະລິດດັ່ງກ່າວສາມາດສົ່ງອອກນອກປະເທດ ແລະ ຮັບໃຊ້ພາຍໃນປະເທດ. ຢູ່ທີ່ນີ້ໄດ້ປະກົດມີບ່ອນທຳການປູກຝັງທີ່ກວ້າງໃຫຍ່ ແລະ ມີຟາມທີ່ມີເນື້ອທີ່ເຖິງ 26.000 ເຮັກຕາ. ຕົວເລກໃນການສົ່ງອອກຂອງສິນຄ້າເຊັ່ນ: ຢາສູບ, ເຂົ້າ, ນໍ້າຄາມຂອງເຂດທີ່ຢູ່ສູງມີຄວາມໝາຍສຳຄັນຕໍ່ກັບພື້ນຖານເສດຖະກິດ. ໃນປີ ຄ.ສ 1700 ເວີຈິເນຍ ໄດ້ສົ່ງອອກຢາສູບ ໃນແຕ່ລະປີປະມານ 4,6 ລ້ານກິໂລກຼາມ, ປີ 1775 ຊາກລາກຕັນ ໄດ້ສົ່ງເຂົ້າອອກນອກ 125.000 ກະສອບໃນແຕ່ລະປີ, ປີ 117 ຄາໂລລິນາໃຕ້ໄດ້ສົ່ງນໍ້າຄາມອອກນອກປະເທດໄດ້ເຖິງ 1.150.662 phun[4]. ພາກເໜືອຂອງອັງກິດໃໝ່ (ນິວອິງແລັນ) ເງື່ອນໄຂສະພາບອາກາດ ແລະ ດິນປູກຝັງບໍ່ອຳນວຍຄວາມສະດວກຄືກັບພາກໃຕ້, ພວກເຂົາປູກສາລີ, ເຂົ້າສາລີດຳ. ສ່ວນຢູ່ພາກກາງພວກເຂົາປູກເຂົ້າບາເລ. ການປູກຝັງຂອງພວກອັງກິດແມ່ນອີງໃສ່ການກົດຂີ່ຂູດຮີດແຮງງານຂອງຂ້າທາດ ແລະ ປະຊາຊົນຜູ້ທຸກຍາກ ໂດຍການໃຫ້ພວກເຂົາເປັນກຳມະກອນຮັບຈ້າງ.

ພວກຂຸນນາງນາຍທຶນອັງກິດຮຸກຮານດິນແດນອາເມຣິກາເໜືອກໍ່ເພື່ອຮັກສາອຳນາດການປົກຄອງແບບສັກດີນາຢູ່ດິນແດນໃໝ່ເພື່ອເປັນເຈົ້າສັກດີນາໃຫຍ່. ເຈົ້າຊີວິດອັງກິດໄດ້ຕັດແບ່ງດິນແດນໃໝ່ໃຫ້ບັນດາຂຸນນາງ ເຊິ່ງບາງບ່ອນມີເນື້ອທີ່ຫຼາຍພັນກິໂລຕາແມັດ.

ຕົວຢ່າງ: ໃນປີ 1681 ເຈົ້າຊີວິດຊາກເລີ 11 ໄດ້ມອບດິນແດນສ່ວນໃຫຍ່ຂອງບໍລິເວນເພນຊີວາເນຍໃນປັດຈຸບັນໃຫ້ແກ່ ວິນລຽມ ແອມ ມີເນື້ອທີ່ກວ້າງເຖິງ 6.000 ກິໂລຕາແມັດ. ບັນດາເຈົ້າປົກຄອງລັດປົກກະຕິແລ້ວຈະແມ່ນພວກຂຸນນາງທີ່ມີດິນຄອບຄອງຫຼາຍພັນເຮັກຕາເຊັ່ນ: ເຈົ້າປົກຄອງລັດເວີຈິເນຍ.

ການຍຶດເອົາດິນນາລວມໄວ້ໃນກຳມືຂອງພວກຂຸນນາງ ແລະ ການກົດຂີ່ຂູດຮີດໃນລະບອບສັກດີນາ, ລວມທັງການກົດຂີ່ຂູດຮີດພວກທາດດິນນາ ແລະ ພວກຂ້າທາດເຮັດໃຫ້ເກີດຂໍ້ຂັດແຍ່ງກັນໃນເຂດຊົນນະບົດຢູ່ອາເມຣິກາເໜືອຢ່າງຮຸນແຮງ.

ທຳອິດຊາວນາຜູ້ທຸກຍາກໄດ້ອົບພະຍົບເຂົ້າມາຕັ້ງຖິ່ນຖານຢູ່ອາເມຣິກາເໜືອ, ເຖິງແມ່ນວ່າຈະມີກົດໝາຍຄຸ້ມຄອງຢ່າງຮັດກຸມກໍ່ຕາມແຕ່ພວກເຂົາໄດ້ອົບພະຍົບເຂົ້າມາຕັ້ງຖິ່ນຖານຢູ່ດິນແດນຂອງເຈົ້າທີ່ດິນນາຍທຶນໄດ້ລຸກຂຶ້ນຕໍ່ສູ້ຕ້ານການກົດຂີ່ຂູດຮີດ, ຕ້ານກັບການປ່ອຍເງິນກູ້ຢືມທີ່ເອົາດອກເບ້ຍສູງ.

---

[4] Phun ເປັນຫົວໜ່ວຍໃນການວັດແທກນໍ້າໜັກ 1 Phun ເທົ່າກັບ 410 ກຼາມ

ຕົວຢ່າງ: ໃນປີ ຄ.ສ 1676 ຢູ່ລັດເວີຈິເນຍໄດ້ມີຂະບວນການລຸກຂຶ້ນຕໍ່ສູ້ປະກາດເອກະລາດຂອງ ເບເກີນ, ປີ1689-1691 ມີຂະບວນການປະກາດເອກະລາດຂອງ Letxle ຢູ່ພູ ໄອໂອອກ, ຢູ່ພູ ອີງເລີນ ມີການປະກາດເອກະລາດຂອງຊາວນາໃນປີ 1689, ໃນປີ ຄ.ສ 1765 ຢູ່ ເພັນຊີວາເນຍ ກໍ່ຍັງມີຂະບວນການລຸກຂຶ້ນຕໍ່ສູ້ຢ່າງຮຸນແຮງ ແລະ ມີອະນາເຂດກວ້າງຂວາງ.

ບັນດາດິນປູກຝັງທີ່ຢູ່ທິດຕາເວັນຕົກຂອງແມ່ນຍັງມີຫຼາຍ, ພວກຊາວນາໃນຟາມ ແລະ ຊາວນາຜູ້ທຸຍາກໄດ້ພາກັນອົບພະຍົບມາຕັ້ງຖິ່ນຖານຢູ່ພາກຕາເວັນຕົກເພື່ອທໍາການບຸກເບີດດິນໃໝ່. ໄດ້ກາຍເປັນຂະບວນການປະຕິວັດຂອງກຸ່ມຄົນສະກວດເຕີ Squatter[5]. ພວກຂຸນນາງທີ່ດິນໄດ້ຊອກວິທີທາງໃນການມ້າງເພທໍາລາຍບັນດາພື້ນຖານຂອງການດໍາລົງຊີວິດຂອງພວກ Squatter. ປີ ຄ.ສ 1763 ກະສັດອັງກິດໄດ້ອອກດີນາ (ຄໍາສັ່ງ) ອັນຮີບດ່ວນຫ້າມຍຶດຄອງເອົາດິນແດນຢູ່ຕາມສາຍພູ ອາເລເກີນີດ ແລະ ບໍລິເວນແມ່ນໍ້າມິດຊິດຊິບປີ. ໃນປີ ຄ.ສ 1774 ໄດ້ອອກຄໍາສັ່ງຫ້າມບໍ່ໃຫ້ປະຊາຊົນຢູ່ 13 ອະນານິຄົມອັງກິດບໍ່ໃຫ້ອົບພະຍົບໄປທາງພາກຕາເວັນຕົກ. ຂໍ້ຂັດແຍ່ງດັ່ງກ່າວນັບມື້ນັບຮຸນແຮງຂຶ້ນເລື້ອຍໆ. ຂໍ້ຂັດແຍ່ງລະຫວ່າງລະບອບ ຟາກເມີ ເລີ່ມປະກົດຂຶ້ນ ແລະ ຂະຫຍາຍຕົວຕາມຄວາມຕ້ອງການທາງດ້ານເສດຖະກິດຢູ່ອາເມຣິກາເໜືອ, ຕໍ່ກັບລະບອບສັກດີນາພວກຂຸນນາງທີ່ດິນໄດ້ພະຍາຍາມສ້າງເງື່ອນໄຂເຮັດໃຫ້ລັດທິປະຊາທິປະໄຕປະຕິວັດເກີດຂຶ້ນຢູ່ອາເມຣິກາ. ໃນສະພາບການເປັນຄືແນວນັ້ນ ກອງປະຊຸມທ້ອງຖິ່ນຄັ້ງທີ 1 ໄດ້ໄຂຂຶ້ນໃນເດືອນ ກັນຍາ ປີ ຄ.ສ 1774 ທີ່ ຟີລາແດນຟີ.

ລະບອບການດໍາເນີນການປູກຝັງເຮັດໃຫ້ເສດຖະກິດກະສິກໍາຢູ່ອາເມຣິກາມີລັກສະເພາະທີ່ເປັນເອກະລັກເຮັດໃຫ້ປະຫວັດສາດມວນມະນຸດໄດ້ບັນທຶກວ່າ ປະເທດອາເມຣິກາເກີດຂຶ້ນເລີ່ມຈາກລະບອບຂ້າທາດບໍ່ແມ່ນເກີດຂຶ້ນມາຢ່າງເສລີ. ລະບອບຂ້າທາດໄດ້ເຮັດໃຫ້ເສດຖະກິດຂອງອາເມຣິກາມີລັກສະນະສະເພາະຄືມັນໄດ້ສ້າງຮັ່ງຄູນມີໃຫ້ແກ່ຊົນຊັ້ນນາຍທຶນອາເມຣິກາ.

ຖ້າເວົ້າເຖິງລະບອບຂ້າທາດທໍາອິດແມ່ນຕ້ອງເວົ້າເຖິງຂ້າທາດຜິວດໍາ. ການກົດຂີ່ຂູດຮີດຂ້າທາດຜິວດໍາມີລັກສະນະພິເສດຂະຫຍາຍຕົວຢູ່ເຂດເສດຖະກິດທາງພາກໃຕ້. ພາກໃຕ້ມີບົດບາດສໍາຄັນໃນການປູກຝ້າຍນັບທັງການຜະລິດເຮືອບັນທຸກ ແລະ ອຸດສະຫະກໍາຕໍ່າແຜ່ນ.

---

[5] ກຸ່ມຄົນສະກວດເຕີ Squatter ແມ່ນກຸ່ມຄົນທີ່ຍຶດຄອງດິນຫວ່າງເປົ່າ

ກຸ່ມຂ້າທາດທຳອິດທີ່ຖືກຈັກກະພັດໂຮນລັງນຳເຂົ້າມາໃນປີ ຄ.ສ 1619 . ຕໍ່ມາບໍ່ດົນປານໃດການຄ້າຂາຍຂ້າທາດໄດ້ນຳຜົນກຳໄລອັນມະຫາສານບາງຄັ້ງໄດ້ຮັບກຳໄລເຖິງ 100% ໝາຍຄວາມວ່າໄດ້ລາຄາໃນການຂາຍເປັນ 2 ເທົ່າຕົວກັບລາຄາທີ່ຊື້ມາ. ພວກຂ້າທາດຜິວດຳຖືກດູໝິ່ນປຽບປາມວ່າເປັນຄົນຊັ້ນຕ່ຳ, ພວກເຂົາຕ້ອງອອກແຮງງານຢ່າງໜັກ ແຕ່ໄດ້ຮັບສ່ວນແບ່ງໜ້ອຍທີ່ສຸດ, ພວກເຂົາຖືກຂ້າ ແລະ ຖືກທຸບຕີຢ່າງແສນສາຫັດ ແລະ ຖືກນຳໄປຂາຍເປັນສິນຄ້າ. ຈຳນວນຂ້າທາດໃນ 13 ລັດອະນານິຄົມອັງກິດໃນປີ 1770 ມີເຖິງ 420.000 ຄົນ ມີບາງລັດຄື ຄາໂລລິນາໃຕ້ ມີຂ້າທາດກວມ 60% ຂອງປະຊາຊົນທັງໝົດ, ເວີຈິເນຍກວມ 40% ຂອງພົນລະເມືອງທັງໝົດ.

ລະບອບການເປັນຂ້າທາດແມ່ນບໍ່ນັບເອົາພວກຊາວຜິວຂາວ, ພວກເຂົາເປັນນັກໂທດ, ລູກທີ່ຖືກພໍ່ແມ່ນຳມາໃຊ້ໜີ້ . ຜູ້ທີ່ມີຄວາມສົງໄສໃນການເມືອງ ຫຼື ຜູ້ໜຸ່ມນ້ອຍຈະຖືກຈັບໄປຂາຍໄປເຂດອະນານິຄົມ. ອຳນາດຂອງພວກເຂົາແມ່ນຂຶ້ນກັບພວກເຈົ້າທາດເປັນໄລຍະເວລາ 21 ປີ ຫຼື ແຕ່ 4-7 ປີ.

ການຂູດຮີດຕອນດົນຢູ່ອາເມຣິກາໄດ້ເປັນການດູດເລືອດ, ດູດເນື້ອຂອງຂອງພວກຂ້າທາດ. ພວກຂ້າທາດຖືກຂ້າຕາຍເກືອບເປັນລ້ານເພື່ອສ້າງຮັ່ງຄູນມີແກ່ພວກເຈົ້າທາດ. ລະບອບຂ້າທາດໄດ້ຍົກເວັ້ນການອອກແຮງງານຮັບຈ້າງ, ການພົວພັນການຜະລິດແບບໃໝ່ບົນພື້ນຖານເສດຖະກິດທຶນນິຍົມ. ໝາກຜົນຂອງການອອກແຮງງານລ້ວນແຕ່ຕອບສະໜອງຕະຫຼາດຈຳໜ່າຍສິນຄ້າຂອງພວກນາຍທຶນ. ຄວາມຈິງແລ້ວລະບອບຂ້າທາດຢູ່ອາເມຣິກາລ້ວນແຕ່ຕອບສະໜອງຈຸດປະສົງທາງດ້ານທຸລະກິດ. ນີ້ແມ່ນຈຸດພິເສດຂອງລະບອບຂ້າທາດຢູ່ອາເມຣິກາ. ນາຍທຶນ, ເຈົ້າຂອງນິຄົມກະເສດ ແລະ ພວກເຈົ້າທາດໄດ້ກາຍເປັນສ່ວນໜຶ່ງ. ຄວາມໂຫດຮ້າຍຂອງພວກເຂົາທີ່ມີຕໍ່ປະຊາຊົນຍິ່ງເພີ່ມທະວີຄູນຂຶ້ນ. ພວກຂ້າທາດກະສິກຳໄດ້ກາຍເປັນຈຸດພິເສດສຳຄັນໃນລະບົບການຜະລິດກະສິກຳຂອງອາເມຣິກາໃນໄລຍະແຫ່ງການສະສົມທຶນຮອນຂອງພວກນາຍທຶນ.



ການຂົນສົ່ງຂ້າທາດຜິວດຳມາຂາຍຢູ່ທະວີບອາເມຣິກາຂອງອັງກິດ

**2) ການຂະຫຍາຍຕົວທາງດ້ານເສດຖະກິດການຄ້າ ແລະ ອຸດສະຫະກຳ**

ບັນດາຂະແໜງອຸດສະຫະກຳຂອງອາເມຣິກາເໜືອມີການຂະຫຍາຍຕົວແນໃສ່ເພື່ອຕອບສະໜອງຄວາມຕ້ອງການທີ່ນັບມື້ນັບເພີ່ມຂຶ້ນຂອງຕະຫຼາດພາຍໃນອະນານິຄົມ ແລະ ລັດຖະບານລາຊະອານາຈັກ. ຂະແໜງການຜະລິດເຮືອໄດ້ຮັບການຂະຫຍາຍຕົວ, ພິເສດແມ່ນການຜະລິດມີຄວາມສະດວກສະບາຍຂຶ້ນ, ຢູ່ທີ່ນີ້ມີໄມ້ລາຄາແພງ, ນອກຈາກຈະໄດ້ຮັບການຂຸດຄົ້ນສົ່ງເມືອໃຫ້ລັດຖະບານແຫ່ງລາຊະອານາຈັກແລ້ວຂະແໜງການຂົນສົ່ງສິນຄ້າ ແລະ ການຄົມມະນາຄົມຂົນສົ່ງທາງນ້ຳກໍ່ໄດ້ຮັບການຂະຫຍາຍຕົວ.

ນັບແຕ່ຕົ້ນສະຕະວັດທີ 17 (ປີ ຄ.ສ 1624) ຢູ່ບໍລິເວນພູ ອິງເລີນ ໄດ້ຜະລິດເຮືອບັນທຸກສິນຄ້າຈຳນວນ 2 ລຳເພື່ອລຳລຽງສິນຄ້າຕາມແມ່ນ້ຳລຳເຊ.ໃນປີ ຄ.ສ 1631 ໄດ້ສຳເລັດການສ້າງເຮືອເພື່ອເດີນທະເລລຳທຳອິດຂຶ້ນ. ການກາງສະຕະວັດທີ 17 ໄດ້ປະດິດເຮືອທີ່ສາມາດບັນທຸກນ້ຳໜັກໄດ້ 300 ໂຕນ. ຈຳນວນເຮືອບັນທຸກຂອງອັງກິດກວມ 30% ຂອງເຮືອບັນທຸກທັງໝົດທີ່ຢູ່ອາເມຣິກາເໜືອ.

ສ່ວນຂະແໜງອຸດສະຫະກຳໜັກເຊັ່ນ: ອຸດສະຫະກຳຂຸດຄົ້ນບໍ່ແຮ່ ແລະ ອຸດສະຫະກຳຫຼອມເຫຼັກກໍ່ເພີ່ມຂຶ້ນ. ກາງສະຕະວັດທີ 18 ໄດ້ປະກອບໂຮງງານຫຼອມໂລຫະເຖິງ 4 ແຫ່ງ ທີ່ມີ 5 ເຕົາຫຼອມ. ບັນດາຫົວເມືອງຢູ່ທາງພາກກາງ ແລະ ພາກເໜືອ ຂອງອາເມຣິກາ ສາມາດຜະລິດແຜ່ນເຫຼັກຕະປູ ແລະ ສະໝໍເຮືອ. ຄຽງ

ຄູ່ກັນນັ້ນຂະແໜງອຸດສະຫະກຳປຸງແຕ່ງໂລຫະພັດຖືກອັງກິດຈຳກັດຍ້ອນຢ້ານວ່າຈະເປັນຄູ່ແຂ່ງກັບລັດຖະບານແຫ່ງລາຊະອານາຈັກ..

ຂະແໜງອຸດສະຫະກຳຕໍ່າແພທີ່ເຮັດດ້ວຍຝ້າຍ ແລະ ດ້ວຍແລນ, ອຸດສະຫະກຳໜັງສັດ, ຜະລິດເກີບກໍ່ໄດ້ຮັບການຂະຫຍາຍຕົວ. ໂດຍສະເພາະແມ່ນອຸດສະຫະກຳການເຮັດວາຍໄດ້ຮັບການເປີດກວ້າງບໍ່ພຽງແຕ່ຕອບສະໜອງພາຍໃນອະນານິຄົມເທົ່ານັ້ນແຕ່ຍັງກາຍເປັນສິນຄ້າທີ່ນຳໄປແລກປ່ຽນຊື້ຂາຍທີ່ນຳເອົາຜົນກຳໄລຫຼາຍພໍສົມຄວນ. ພວກເຂົາໄດ້ນຳເອົາວາຍໄປແລກກັບຂ້າທາດຜິວດຳຢູ່ທະວີບອາຟຣິກກາ.

ຂະແໜງອຸດສະຫະກຳຢູ່ ອະນານິຄົມ ອັງກິດ ທັງ 13 ແຫ່ງ ຄຽງຄູ່ກັບອຸດສະຫະກຳ, ການຜະລິດກະສິກຳເພື່ອເປັນສິນຄ້າໄດ້ຮັບການຂະຫຍາຍຕົວ. ໂດຍສະເພາະແມ່ນດ້ານການຄ້າເຂດພູ ອີງເລີນ ການຄ້າຂາຍໜັງສັດ, ການປະໂມງ, ຂຸດຄົ້ນໄມ້, ຄ້າຂາຍຢາສູບ, ເຂົ້າສາລີ, ນ້ຳຖານ ຍ້ອມຜ້າ ລ້ວນແຕ່ມີບົດບາດສຳຄັນກາຍເປັນສິນຄ້າສົ່ງອອກທີ່ນັບມື້ນັບມີຄວາມຕ້ອງການຫຼາຍ.

ໃນຊຸມປີ ຄ.ສ 1700-1710 ມູນຄ່າການສົ່ງອອກສິນຄ້າຂອງອະນານິຄົມທັງ 13 ແຫ່ງໄປໃຫ້ອັງກິດມີມູນຄ່າ 265.783 ປອນ . ຊຸມປີ 50 ຕໍ່ມາມູນຄ່າໃນການສົ່ງອອກສິນຄ້າຂອງອະນານິຄົມຢູ່ອາເມຣິກາເໜືອສູງເຖິງ 1.044.591 ປອນ.

ບັນດາອະນານິຄົມຍັງດຳເນີນການຄ້າຂາຍໂດຍກົງກັບບັນດາປະເທດສະເປນ, ຝຣັ່ງ, ໂຮນລັງ ແລະ ອິນເດຍຕາເວັນຕົກ.

ແຕ່ວ່າການຄ້າ ແລະ ການອຸດສະຫະກຳຂອງອະນານິຄົມບໍ່ສາມາດຢຸດຕິຂໍ້ຂັດແຍ່ງກັບລັດຖະບານແຫ່ງລາຊະອານາຈັກອັງກິດ. ການແຂ່ງຂັນດັ່ງກ່າວກ້າວໄປເຖິງການແຊກແຊງຂອງລັດຖະບານລາຊະອານາຈັກ ແນໃສ່ເພື່ອຈຳກັດການຂະຫຍາຍຕົວທາງດ້ານການຄ້າ ແລະ ອຸດສະຫະກຳຢູ່ອະນານິຄົມ. ເປົ້າໝາຍຂອງບັນດາອະນານິຄົມອັງກິດແມ່ນຕ້ອງການຫຼຸດພົ້ນອອກຈາກຂໍ້ຜູກມັດທີ່ບໍ່ມີເຫດຜົນທາງດ້ານເສດຖະກິດທີ່ນັບມື້ນັບຊັດເຈນຂຶ້ນ. ລັດຖະບານອັງກິດໄດ້ຊອກຫາທຸກວິທີທາງເພື່ອສະກັດກັ້ນການຂະຫຍາຍຕົວທາງດ້ານການຄ້າ ແລະ ອຸດສະຫະກຳຢູ່ອາເມຣິກາເໜືອ, ລັດຖະບານອັງກິດພຽງແຕ່ຕ້ອງການໃຫ້ບັນດາອະນານິຄົມຂອງຕົນເປັນພຽງຕະຫຼາດຈຳໜ່າຍສິນຄ້າເພື່ອຮອງຮັບສິນຄ້າຈາກອັງກິດ ແລະ ເປັນແຫຼ່ງວັດຖຸດິບຂອງ

ອັງກິດເທົ່ານັ້ນ. ສະນັ້ນ, ອັງກິດຈຶ່ງຮ່າງກົດໝາຍອອກມາເພື່ອແນໃສ່ຈຳກັດການຂະຫຍາຍຕົວຂອງການຄ້າ ແລະ ອຸດສະຫະກຳຢູ່ອະນານິຄົມ.

ປີ ຄ.ສ 1750 ກົດໝາຍກ່ຽວກັບເຫຼັກເຊັ່ນ, ຫ້າມບໍ່ໃຫ້ສ້າງຕັ້ງໂຮງງານຜະລິດເຫຼັກກ້າ, ໂຮງງານຕີເຫຼັກຂະໜາດໃຫຍ່, ໂຮງງານຫຼອມເຫຼັກ. ລັດຖະບານອັງກິດຫ້າມບໍ່ໃຫ້ອາເມຣິກາເໜືອດຳເນີນການຄ້າຂາຍກັບປະເທດອື່ນນັບທັງຫ້າມບໍ່ໃຫ້ດຳເນີນການຄ້າຂາຍລະຫວ່າງອະນານິຄົມດ້ວຍກັນ. ນະໂຍບາຍໃນການເກັບພາສີຂອງອັງກິດເຮັດໃຫ້ເກີດຄວາມຫຍຸ້ງຍາກຢ່າງໃຫຍ່ຫຼວງຕໍ່ກັບການຜະລິດອຸດສະຫະກຳ ແລະ ການຄ້າຢູ່ອາເມຣິກາເໜືອ. ຂະບວນການຕໍ່ສູ້ຕ້ານກັບລັດຖະບານລາຊະອານາຈັກເພື່ອຂະຫຍາຍເສດຖະກິດຢູ່ອະນານິຄົມ. ຊົນຊັ້ນເຈົ້າທີ່ດິນນາຍທຶນ, ນາຍທຶນການຄ້າ ແລະ ອຸດສະຫະກຳບໍ່ພໍໃຈກັບສິ່ງຕ້ານທານທັງຫຼາຍຍ້ອນການແຂ່ງຂັນຂອງພວກນາຍທຶນລັດຖະບານແຫ່ງລາດຊະອານາຈັກເປັນຜູ້ສ້າງຂຶ້ນ. ຂໍ້ຂັດແຍ່ງລະຫວ່າງອະນານິຄົມ ແລະ ລັດຖະບານລາດຊະອານາຈັກນັບມື້ນັບຮຸນແຮງຂຶ້ນເລື່ອຍໆ, ລະຫວ່າງຂໍ້ຮຽກຮ້ອງໃນການພັດທະນາອະນານິຄົມຂອງອາເມຣິການເໜືອ ແລະ ຂໍ້ຈຳກັດທີ່ໄຮ້ເຫດຜົນຂອງລັດຖະບານອັງກິດເປັນເປັນຕົ້ນເຫດແຫ່ງການນຳໄປສູ່ການເຮັດສົງຄາມ.

**3) ນະໂຍບາຍໃນການປົກຄອງຂອງອັງກິດ ແລະ ການປະກົດຕົວຂອງນາຍທຶນຊົນເຜົ່າຢູ່ອາເມຣິກາເໜືອ**

ດ້ານການຈັດຕັ້ງທາງດ້ານການເມືອງຈັກກະພັດອັງກິດໄດ້ຕັດແບ່ງອະນານິຄົມອອກເປັນ 2 ພາກສ່ວນ, ບັນດາລັດທີ່ໄດ້ຮັບອະພິສິດພິເສດຈາກກະສັດເຊັ່ນ: ລັດເມລີແລັນ, ໂຣໄທແລັນ, ຄອນເນັກຕິກັນ, ເພນຊີວານີ, ເດີລາອົວ ແມ່ນດຳເນີນການປົກຄອງຕົນເອງ. ສ່ວນລັດອື່ນເຈົ້າຊີວິດ ແລະ ລັດຖະບານເປັນຄົນເລືອກຜູ້ປົກຄອງລັດເພື່ອມາປົກຄອງໂດຍກົງ.

13 ລັດທີ່ເປັນອະນານິຄົມລ້ວນແຕ່ມີກົດໝາຍເພາະຂອງໃຜລາວແຕ່ຕ້ອງສອດຄ່ອງກັບກົດໝາຍຂອງອັງກິດ. ຕົວແທນຂອງເຈົ້າຊີວິດມີສິດໃນການບັນຊາກຳລັງທະຫານບົກ ແລະ ທະຫານເຮືອ, ຄັດເລືອກພະນັກງານຄຸ້ມຄອງ. ການເລືອກຕັ້ງມີລັກສະນະຈຳກັດໃນຊົນຊັ້ນຂຸນນາງຮັ່ງມີກວມນັບແຕ່ 2-9% ຂອງພົນລະເມືອງພວກຂ້າທາດ, ປະຊາຊົນອິນເດຍແດງ ແມ່ນບໍ່ມີສິດເປັນພົນລະເມືອງ. ສິດອິດສະຫຼະພາບ, ປະຊາທິປະໄຕຂອງປະຊາຊົນ, ກຳມະກອນ ນັບທັງພວກ ຟາກເມີ ລ້ວນແຕ່ມີລັກສະນະຈຳກັດ.

ປະຊາຊົນອາເມຣິກາເໜືອແມ່ນຊາວອົບພະຍົບທີ່ມັກດໍາລົງຊີວິດແບບອິດສະຫຼະດໍາລົງຊີວິດໃນຕອນດິນເສດເຫຼືອຈາກການຄອບຄອບຂອງກຸ່ມຄົນອື່ນ, ພວກເຂົາບໍ່ຄຸ້ນເຄີຍກັບການເຄົາລົບນັບຖືກະສັດ, ພວກເຂົາບໍ່ມີສິດໃນການເລືອກຕັ້ງຜູ້ແທນສະພາອັງກິດ. ສະນັ້ນ, ພວກເຂົາຈຶ່ງເວົ້າວ່າພວກເຂົາບໍ່ມີໜ້າທີ່ທີ່ຈະຈ່າຍພາສີ. ໃນເວລານັ້ນຫຼັງຈາກປີ ຄ.ສ 1763 ລັດຖະບານອັງກິດໄດ້ວາງນະໂຍບາຍທາງດ້ານການເງິນຕື່ມອີກ , ໂດຍເນັ້ນໃສ່ການເກັບພາສີ. ພວກປົກຄອງລັດ, ເຈົ້າທີ່ດິນ, ຈັກກະພັດຜູ້ກົດຂີ່ຂູດຮີດແມ່ນກໍາລັງຕໍ່ຕ້ານປະຊາທິປະໄຕ ແລະ ອິດສະຫຼະພາບ. ອີກພາກສ່ວນໜຶ່ງແມ່ນເຈົ້າຂອງນິຄົມກະເສດປູກຝັງ, ບັນດານັກທຸລະກິດ, ນັກຮຽນຮູ້ປັນຍາຊົນມີສິດເປັນເຈົ້າຕົນເອງມີທ່າອ່ຽງປະຊາທິປະໄຕ. ສໍາລັບປະຊາຊົນໃນອະນານິຄົມຍັງມີພາກສ່ວນໃໝ່ອີກໃນສະຕະວັດທີ 18 ຄື: ນອກຈາກອັງກິດແລ້ວຍັງມີພວກເຢຍລະມັນ, ໂຮນລັງ, ສະວິດ, ໄອແລນ. ຍ້ອນມີກົກເຄົ້າທີ່ແຕກຕ່າງກັນເຮັດໃຫ້ພວກເຂົາບໍ່ຄຸ້ນເຄີຍກັບລະບົບການປົກຄອງຂອງອັງກິດ, ພວກເຂົາໄດ້ເຕົ້າໂຮມກັນ ແລະ ສ້າງຕັ້ງເປັນສະມາຄົມໃໝ່ແລ້ວຄ່ອຍໆນໍາໃຊ້ພາສາກາງໃນການສື່ສານນັ້ນກໍ່ຄືພາສາອັງກິດນັບທັງຜູ້ທີ່ມີເຊື້ອສາຍອັງກິດທີ່ດໍາລົງຊີວິດຢູ່ອາເມຣິກາເໜືອກໍ່ຕ້ອງການມີຊີວິດໃໝ່ຄັດຄ້ານກັບລັດຖະບານອັງກິດເພື່ອຫຼຸດພົ້ນອອກຈາກອໍານາດຂອງລັດຖະບານລາຊະອະນາຈັກ.

ປັດໄຈສໍາຄັນໃນການຕັດສິນເຮັດໃຫ້ມີຊົນເຜົ່າຢູ່ອາເມຣິກາເໜືອແມ່ນພື້ນຖານໃນການພັດທະນາຮອບດ້ານ, ເສດຖະກິດຄ່ອຍໆກ້າວໄປເຖິງການມີຄວາມສາມາດໃນການຄວບຄຸມດ້ວຍຕົນເອງ, ຕົວເມືອງຂອງບັນດາຊົນເຜົ່າຕ່າງໆຄ່ອຍໆປະກົດຕົວຂຶ້ນມາ. ການພົວພັນແລກປ່ຽນການຄ້າໃນອະນານິຄົມໄດ້ຮຽກຮ້ອງໃຫ້ມີຄວາມເປັນເອກະພາບເປັນອັນໜຶ່ງອັນດຽວກັນທາງດ້ານລາຄາສິນຄ້າ, ກົດລະບຽບ ແລະ ການເສຍພາສີ. ການຂະຫຍາຍຕົວທາງດ້ານການຄົມມະນາຄົມ, ໄປສະນີ ເຮັດໃຫ້ອະນານິຄົມທັງ 13 ລັດ ມີການພົວພັນກັນຢ່າງສະໜິດແໜ້ນ. ການຮັກສາສິດຜົນປະໂຫຍດ ແລະ ການຂະຫຍາຍດິນແດນເຮັດໃຫ້ມີການປ່ຽນແປງທາງດ້ານສັງຄົມ, ການເມືອງລ້ວນແຕ່ມີຜົນກະທົບຕໍ່ກັນ. ປະຊາຊົນໃນອະນານິຄົມເລີ່ມເກີດມີແນວຄິດຢາກມີດິນດອນເປັນຂອງຕົນເອງ. ຂະບວນການຕໍ່ສູ້ຂອງ ເບເກີນ ຢູ່ລັດ ເວີຈິເນຍ ໃນປີ ຄ.ສ 1676 ທີ່ໄດ້ຮັບການສະໜັບສະໜູນຈາກ ຄາໂລລີນາເໜືອ. ຂະບວນການຕໍ່ສູ້ ຢູ່ຄາໂລລີນາເໜືອ ໄດ້ຮັບການຮ່ວມມືຈາກປະຊາຊົນຢູ່ເຂດພູ ອີງເລີນ.

ການຂະຫຍາຍຕົວທາງດ້ານເສດຖະກິດ, ສັງຄົມໄດ້ຊຸກຍູ້ໃຫ້ວັດທະນະທໍາຢູ່ອາເມຣິກາເໜືອຂະຫຍາຍຕົວ. ບັນດາໂຮງຮຽນ, ໜັງສືພິມ, ວັນນະກໍາ, ປັດຊະຍາລ້ວນແຕ່ມີການຂະຫຍາຍຕົວ. ສ້າງພື້ນຖານ

ວັດທະນະທຳໃໝ່ທີ່ແຍກຕົວອອກຈາກວັດທະນະທຳຂອງລາຊະອານາຈັກອັງກິດ. ວັດທະນະທຳດ້ານຈິດໃຈຂອງອາເມຣິກາໄດ້ປະສົມກົມກຽວກັນລະຫວ່າງຄົນອັງກິດ, ຝຣັ່ງ, ເຢຍລະມັນ ແລະ ໂຮນລັງຢູ່ດິນແດນໃໝ່ (ອາເມຣິກາ).

ໂດຍຜ່ານໄລຍະເວລາຍາວນານໃນການອົບພະຍົບ, ປະຊາຊົນອາເມຣິກາເໜືອມີກົກເຄົ້າມາຈາກຫຼາຍເຊື້ອຊາດແຕກຕ່າງກັນໄດ້ກາຍເປັນຊຸມຊົນສັງຄົມໜຶ່ງທີ່ມີຄວາມໝັ້ນຄົງເກີດຂຶ້ນຕາມໄລຍະເວລາທາງປະຫວັດສາດ. ໂດຍອີງໃສ່ພື້ນຖານຂອງຊຸມຊົນໃໝ່ກ່ຽວກັບພາສາ, ອະນາເຂດດິນແດນ, ການເຄື່ອນໄຫວທາງດ້ານເສດຖະກິດ ແລະ ໂຄງປະກອບທາງດ້ານຈິດໃຈທີ່ສະແດງອອກໃນວັດທະນະທຳຂອງຊຸມຊົນ. ສະນັ້ນ, ຈຶ່ງເຮັດໃຫ້ມີຊົນເຜົ່າໜຶ່ງເກີດຂຶ້ນຢູ່ອາເມຣິກາທີ່ມີຄວາມໝັ້ນຄົງແໜ້ນແກ່ນ. ຂະບວນການຕໍ່ສູ້ຍາດໄຊຊະນະມາໃຫ້ແກ່ການພົວພັນສັງຄົມໃໝ່ນັ້ນກໍ່ຄືສິ່ງທີ່ບໍ່ສາມາດຕັດແຍກ ແລະ ຫຼຸດພົ້ນອອກມາໄດ້. ໃນຂະບວນການຕໍ່ສູ້ດັ່ງກ່າວນີ້ກຳລັງຂອງປະຊາຊົນ, ນາຍຊ່າງຫັດຖະກຳໄດ້ກາຍເປັນກຳລັງຕົ້ນຕໍ. ສ່ວນຊົນຊັ້ນນາຍທຶນປະຊາທິປະໄຕແມ່ນເປັນຜູ້ນຳພາຂະບວນການຕໍ່ສູ້.

**4) ຂໍ້ຂັດແຍ່ງທີ່ນຳໄປສູ່ການເຮັດສົງຄາມ.**

ການເຕີບໃຫຍ່ຂະຫຍາຍຕົວທາງງດ້ານເສດຖະກິດ ແລະ ຄວາມສາມາດໃນການພັດທະນາໃນທຸກດ້ານເຮັດໃຫ້ອາເມຣິກາເໜືອເຮັດໃຫ້ຂໍ້ຂັດແຍ່ງນັບມື້ນັບຮຸນແຮງຂຶ້ນລະຫວ່າງອະນານິຄົມ ກັບ ລັດຖະບານລາຊະອານາຈັກ. ລະບອບຂ້າທາດຜິວດຳ, ຜິວຂາວ ແລະ ການກົດຂີ່ຂູດຮີດແຮງງານໄດ້ກາຍເປັນຮາກເງົ້າແຫ່ງການຂະຫຍາຍຕົວທາງດ້ານສັງຄົມ. ປະຊາຊົນດຳເນີນການຕໍ່ສູ້ເພື່ອປົດປ່ອຍຕົນເອງ, ຮຽກຮ້ອງອິດສະຫຼະພາບ ໃນການພັດທະນາເສດຖະກິດ ແລະ ວັດທະນະທຳ. ແຕ່ວ່າອັງກິດບໍ່ຕ້ອງການສູນເສຍສິດຜົນປະໂຫຍດທີ່ເຄີຍມີມາກ່ອນຈຶ່ງມີຄວາມຕ້ອງການໃຫ້ອາເມຣິກາເໜືອເປັນຫົວເມືອງຂຶ້ນຂອງຕົນ. ຊົນຊັ້ນນາຍທຶນ, ເຈົ້າຂອງນິຄົມກະເສດ ແລະ ນາຍທຶນນ້ອຍຢູ່ອາເມຣິກາເໜືອໄດ້ກາຍເປັນກຳລັງສຳຄັນໃນການນຳພາຂະບວນການຕໍ່ສູ້ເພື່ອຍາດເອົາເອກະລາດ.

ມາຮອດເດືອນພຶດສະພາ ປີ ຄ.ສ 1756 ສົງຄາມຍາດດິນແດນຢູ່ອາເມຣິກາເໜືອລະຫວ່າງອັງກິດ-ຝຣັ່ງໄດ້ລະເບີດຂຶ້ນ ປະຫວັດສາດເອີ້ນສົງຄາມນີ້ວ່າ: ສົງຄາມ 7 ປີ (ຄ.ສ 1757-1763) ໃນສົງຄາມຄັ້ງນີ້ອັງກິດເປັນເຈົ້າການໃນບັ້ນຮົບທາງທະເລມີກຳລັງພົນທີ່ເໜືອກວ່າຈຶ່ງສາມາດຕີຊະນະໃນສົງຄາມ. ມາໃນປີ

ຄ.ສ 1763 ຈັກກະພັດຝຣັ່ງປະລາໄຊໃນສົງຄາມຈໍາເປັນຕ້ອງໄດ້ເຊັນສັນຍາປາລີ (ວັນທີ 10 ທັນວາ 1763) ຕາມສັນຍານັ້ນ ການາດາ ໄດ້ກາຍເປັນປະເທດໜຶ່ງທີ່ອໍານາດຂຶ້ນກັບອັງກິດ, ຍ້ອນໃຫ້ການສະໜັບສະໜູນແກ່ຝຣັ່ງສະນັ້ນ ສະເປນຈຶ່ງເສຍດິນແດນທັງໝົດໃນເຂດ ຟໍລິດາ.



ສະໜາມຮົບໃນສົງຄາມ 7 ປີ 1757-1763 ລະຫວ່າງອັງກິດ-ຝຣັ່ງ

ພາຍຫຼັງຊະນະສົງຄາມຢູ່ອາເມຣິກາເໜືອອັງກິດໄດ້ເພີ່ມທະວີດໍາເນີນການປົກຄອງແບບຜະເດັດການ. ຊຸມ ປີ 50 ຂອງສະຕະວັດທີ 17 (ຄ.ສ 1651) ກົດໝາຍໃນການຄຸ້ມຄອງສິນຄ້າເຮັດໃຫ້ອັງກິດມີອິດສະຫຼະໃນການຂົນສົ່ງສິນຄ້າຈາກດິນແດນອາເມຣິກາເໜືອໄປຫາປະເທດອັງກິດ ແລະ ໄດ້ຮັບສິດທິໃນການນໍາເອົາສິນຄ້າຈາກອັງກິດເຂົ້າມາທໍາການຄ້າຂາຍຢູ່ອາເມຣິກາເໜືອເຮັດໃຫ້ຂໍ້ຂັດແຍ່ງຍິ່ງເພີ່ມຂຶ້ນລະຫວ່າງອັງກິດ ແລະ ນາຍທຶນອາເມຣິກາ. ກົດໝາຍວ່າດວຍດິນນາໃນປີ 1763 ເປັນການເກືອດຫ້າມປະຊາຊົນອົບພະຍົບໄປຕັ້ງຖິ່ນຖານຢູ່ທາງພາກຕາເວັນຕົກ ແລະ ບໍລິເວນລ້ອງແມ່ນໍ້າ ມິດຊິດຊິບປີ. ຂະບວນການຕໍ່ສູ້ຕ້ານກັບກົດໝາຍໄດ້ເກີດຂຶ້ນ, ພວກທີ່ຄ້າຂາຍຂົນສັດ-ໜັງສັດ, ເຈົ້າທີ່ດິນ, ປະຊາຊົນທີ່ເດີນຕາມແນວຄິດປາດຖະໜາທີ່ຢາກຈະມີຕອນດິນຢູ່ພາຍໃຕ້ກົດໝາຍຂອງອັງກິດແມ່ນມີຄວາມຫຍຸ້ງຍາກ ແລະ ເກີດຄວາມບໍ່ພໍໃຈ.

ມາໃນປີ ຄ.ສ 1764 ດຳລັດວ່າດ້ວຍການເກັບພາສີນຳເຂົ້າສິນຄ້າໄດ້ຮັບການປະກາດໃຊ້, ການລັກລອບຄ້າຂາຍ, ການເສຍພາສີຄ່າທາງໃນການນຳເຂົ້າສິນຄ້າ. ຫ້າມບໍ່ໃຫ້ອະນານິຄົມຜະລິດເງິນອອກມາໃຊ້ ເຮັດໃຫ້ລະຫວ່າງອັງກິດກັບຫົວເມືອງຂຶ້ນນັບມື້ນັບຮຸນແຮງຂຶ້ນເລື້ອຍໆ.

ປະຊາຊົນອາເມຣິກາເໜືອຍິ່ງພົບຄວາມທຸກຍາກລຳບາກຂຶ້ນຕື່ມອີກເມື່ອລັດຖະບານອັງກິດໄດ້ເກັບພາສີສະແຕມ (ສະແຕມທີ່ໃຊ້ໃນລະບົບໄປສະນີ)ໃນການນຳເອົາສິນຄ້າເຂົ້າມາຂາຍ. ການເສຍພາສີສະແຕມແມ່ນຄອບຄຸມທຸກການເຄື່ອນໄຫວໃນການເຮັດທຸລະກິດນັບທັງການພາສີຜະລິດຕະພັນທາງດ້ານວັດທະນະທຳ. ຈັກກະພັດອັງກິດຕ້ອງການບັງຄັບໃຫ້ປະຊາຊົນອາເມຣິກາຕ້ອງປະກອບສ່ວນເສຍເງິນພາສີເຖິງ 100.000 ປອນເ ພື່ອຮັກສາກອງທັບທີ່ມີຈຳນວນພົນ 10.000 ຄົນ. ການເກັບພາສີສະແຕມເຮັດໃຫ້ມີຂະບວນການລຸກຂຶ້ນປະທ້ວງອັນໃຫຍ່ຫຼວງເປັນການຈຸດສະນວນສົງຄາມໃຫ້ລະເບີດຂຶ້ນທຳອິດຢູ່ ບອສຕັນ. ພະນັກງານທີ່ຮັບຜິດຊອບໃນຂະແໜງການນີ້ຖືກປະຊາຊົນບຸກໂຈມຕີ, ລັດຕີ, ບັນດາຫ້ອງການທີ່ເຮັດໜ້າທີ່ໃນການເກັບພາສີສະແຕມຖືກມ້າງເພທຳລາຍຢູ່ ບອສຕັນ ເຊິ່ງມະຫານະຄອນຂອງລັດ ເມດເຊັດຊູເສັດ ໄດ້ກາຍເປັນສັນຍາລັກແຫ່ງການດຳເນີນສົງຄາມ, ສົງຄາມໄດ້ຂະຫຍາຍໄປທົ່ວປະເທດ.



( 279 )

Anno quinto

Georgii III. Regis.

CAP. XII.

An Act for granting and applying certain Stamp Duties, and other Duties, in the British Colonies and Plantations in America, towards further defraying the Expences of defending, protecting, and securing the same; and for amending such Parts of the several Acts of Parliament relating to the Trade and Revenues of the said Colonies and Plantations, as direct the Manner of determining and recovering the Penalties and Forfeitures therein mentioned.

WHEREAS by an Act made in the last Session of Parliament, several Duties were granted, continued, and appropriated, towards defraying the Expences of defending, protecting, and securing, the British Colonies and Plantations in America: And whereas it is just and necessary, that Provision be made for raising a further Revenue within Your Majesty's Dominions in America, towards defraying the said Expences: We, Your Majesty's most dutiful and loyal Subjects, the Commons of Great Britain in Parliament assembled, have

ການປະກາດກ່ຽວກັບການເກັບພາສີສະແຕມໃນໜ້າໜັງສືພິມ ໃນປີ 1763

ໂດຍປະຕິບັດຕາມຄຳແນະນຳຂອງລັດ ເມດເຊັດຊູເສັດ ກອງປະຊຸມປຶກສາຫາລືກ່ຽວກັບການເກັບພາສີສະແຕມຢູ່ອະນານິຄົມໄດ້ເປີດຂຶ້ນຢູ່ພູ ໂອອອກ ໃນວັນທີ 7 ຕຸລາ ຄ.ສ 1765. ກອງປະຊຸມປະກອບມີຕົວແທນຈາກ 9 ລັດໄດ້ເຂົ້າຮ່ວມຕົກລົງກັນວ່າຈະບໍ່ຍອມເສຍພາສີສະແຕມຕາມທີ່ລາຊະອານາຈັກອັງກິດກຳນົດ. ນີ້ແມ່ນຂະບວນການເຄື່ອນໄຫວເພື່ອຮຽກຮ້ອງສິດທິດ້ານເສດຖະກິດ. ຂະບວນການຕໍ່ສູ້ເຮັດໃຫ້ລັດຖະບານອັງກິດຕ້ອງລົບລ້າງພາສີສະແຕມແຕ່ ປ່ຽນມາເປັນການເກັບພາສີໃນຮູບແບບອື່ນ. ແຕ່ປະຊາຊົນຫົວເມືອງຂຶ້ນຕໍ່ຕ້ານຄືນ ເຮັດໃຫ້ລັດຖະບານອັງກິດຮັກສາໄວ້ແຕ່ພາສີຊາເທົ່ານັ້ນ.

ຂະບວນການຕໍ່ສູ້ຂອງປະຊາຊົນພາຍໃຕ້ຄຳຂວັນທີ່ວ່າ: ເພື່ອເສລີພາບ, ຊີວິດການເປັນຢູ່ ແລະ ຄວາມເປັນເອກະພາບ ຫຼື ຄວາມຕາຍ ໄດ້ບັນທຶກໃນຄັນທຸງແຫ່ງການຕໍ່ສູ້. ສະມາຄົມເຄື່ອນໄຫວແບບປິດລັບໄດ້ເກີດຂຶ້ນເພື່ອຮ່ວມພະລັງກັນ ແລະ ມີຄວາມເປັນເອກະພາບທາງດ້ານແນວຄິດ. ອົງການຈັດຕັ້ງທີ່ມີລັກສະນະກ້າວໜ້າແມ່ນ ກຸ່ມລູກອິດສະຫຼະ Sons of Liberty ໜ້າທີ່ຕົ້ນຕໍຂອງສະມາຄົມແມ່ນເຄື່ອນໄຫວຕໍ່ສູ້ຕ້ານກັບການກົດຂີ່ຂູດຮີດຂອງກະສັດ ແລະ ສະພາອັງກິດ, ມັນໄດ້ສະແດງໃຫ້ເຫັນຄວາມເປັນເອກະພາບກັນຂອງກຳລັງມະຫາຊົນໃນຂະບວນການຕໍ່ສູ້. ຍ້ອນແນວນັ້ນຈຶ່ງມີຜູ້ເຂົ້າຮ່ວມຂະບວນການຢ່າງກວ້າງຂວາງ. ຊົນຊັ້ນຂຸນນາງ ແລະ ນາຍຂຸນນາງນ້ອຍ, ປະຊາຊົນ, ນາຍຊ່າງຫັດຖະກຳລ້ວນແຕ່ເຂົ້າມາເຄື່ອນໄຫວໃນກຸ່ມລູກອິດສະຫຼະ ຕົວແທນໃຫ້ແກ່ແນວຄິດອິດສະຫຼະນີ້ແມ່ນ ໂທມາດ ເຈບເຟີສັນ (ຄ.ສ 1743-1826).

ໃນກຸ່ມລູກອິດສະຫຼະ ໄດ້ນຳເອົາແນວຄິດຂອງເຣແກນ ແລະ ຈອນມິນຕັນ ກ່ຽວກັບແນວຄິດທີ່ວ່າເອົາບັນດາປະເທດທຶນນິຍົມເປັນເປົ້າໝາຍໃນການເຮັດສົງຄາມ. ຜົນງານຂອງ ເຣແກນແມ່ນ ບົດລາຍງານການເມືອງຂອງພົນລະເມືອງທີ່ຖືກຕີພິມໃນປີ ຄ.ສ 1690 ໄດ້ຕອບສະໜອງຕໍ່ຂະບວນການຕໍ່ສູ້ເພື່ອຍາດເອກະລາດຢູ່ອາເມຣິກາເໜືອທີ່ເປັນເນື້ອໃນທິດສະດີກ່ຽວກັບປະເທດທຶນນິຍົມ ນັ້ນຖືວ່າເປັນແນວຄິດການປະຕິວັດນາຍທຶນອັງກິດຢູ່ອາເມຣິກາທີ່ໄດ້ຮັບການນຳໃຊ້ໃນການເຄື່ອນໄຫວປະຕິວັດ. ມັນໄດ້ຍົກໃຫ້ເຫັນໜ້າທີ່ຂອງປະເທດແມ່ນປົກປ້ອງໝາກຜົນຂອງການປະຕິວັດ, ຮັກອິດສະຫຼະພາບ ແລະ ຊັບສິນບັດຂອງປະຊາຊົນ. ອຳນາດທາງການເມືອງແມ່ນເປັນຂອງປະຊາຊົນ ແລະ ປະຊາຊົນໄວ້ວາງໃຈມອບສິດດັ່ງກ່າວໃຫ້ແກ່ລັດຖະບານ. ລັດຖະບານເປັນພຽງຕົວແທນໃຫ້ແກ່ປະຊາຊົນ, ຍ້ອນແນວນັ້ນຈຶ່ງມີການບັງຄັບສວຍໃຊ້ໜ້າທີ່ຍ້ອນຄວາມໄວ້ວາງໃຈຂອງປະຊາຊົນ. ແຕ່ຖ້າຫາກລັດຖະບານລະເມີດສິດທິຂອງພົນລະເມືອງ, ພົນລະເມືອງກໍ່ມີສິດ ແລະ ມີໜ້າທີ່ໂຄ່ນລົ້ມລັດຖະບານເຊັ່ນດຽວກັນ.

ບັນດາຊົນຊັ້ນກາງ ແລະ ເຈົ້າທີ່ດິນທີ່ມີສິດຜົນປະໂຫຍທາງດ້ານເສດຖະກິດຂັດແຍ່ງກັບລັດຖະບານລາດຊະອານາຈັກ, ໄດ້ເກີດມີແນວຄິດຕໍ່ຕ້ານລັດຖະບານອັງກິດຕົວແທນຂອງຊົນນັ້ນນີ້ແມ່ນ ຈອດ ວໍຊິງຕັນ (ປີ ຄ.ສ 1732-1799). ທ່ານເປັນເຈົ້າຂອງນິຄົມການຜະລິດກະສິກຳ, ເປັນເຈົ້າທາດຜູ້ຮັ່ງມີ ຢູ່ລັດ ເວີຈິເນຍ.



ຈອດ ວໍຊິງຕັນ (ປີຄ.ສ 1732-1799)

ນັບແຕ່ປີ ຄ.ສ 1767 ບັນດາພາສີຊາ, ພາສີເຫຼົ້າ, ພາສີໝາກໄມ້ ແລະ ອື່ນໆ ນັບມື້ນັບສູງຂຶ້ນເລື້ອຍໆ. ການກວດກາເຮືອບັນທຸກສິນຄ້າສຸດທີ່ເຄັ່ງຄັດ ແລະ ເພີ່ມທະວີກຳລັງທະຫານຄຸ້ມຄອງອະນານິຄົມດ້ວຍວິທີການໃຊ້ຄວາມຮຸນແຮງເພື່ອກ້າວເຂົ້າສູ່ການປະຕິວັດແບບຜະເດັດການຂຸນເສີກຢູ່ອະນານິຄົມ.

ເຫດການກ່ຽວກັບຊາຢູ່ ບອສຕັນ ໄດ້ລະເບີດຂຶ້ນເປັນການຈຸດສະນວນສົງຄາມຍາດເອກະລາດໂດຍກົງຢູ່ອາເມຣິກາເໜືອ ແຕ່ຄວາມຈິງແລ້ວແມ່ນຂະບວນການປະຕິວັດນາຍທຶນປະຊາທິປະໄຕ, ເປັນຂະບວນການປະຕິວັດໜຶ່ງທີ່ມີລັກສະນະການຕໍ່ສູ້ເພື່ອອິດສະຫຼະພາບ.

## II. ສົງຄາມຍາດເອກະລາດຂອງບັນດາຫົວເມືອງຂຶ້ນຢູ່ອາເມຣິກາເໜືອ ແລະ ການກຳເນີດປະເທດອາເມຣິກາ.

### 1. ໄລຍະທີ 1 ຂອງສົງຄາມ

#### ກ. ເຫດການກ່ຽວກັບຊາຢູ່ເມືອງ ບອສຕັນ ແລະ ກອງປະຊຸມໃຫຍ່ອະນານິຄົມຄັ້ງທີ 1 ໃນປີ ຄ.ສ 1774

ເຫດການກ່ຽວກັບຊາທີ່ເມືອງ ບອສຕັນ ເກີດຂຶ້ນໃນເດືອນທັນວາ ປີຄ.ສ 1773 ເປັນສັນຍາລັກແຫ່ງການປ່ຽນແປງໃໝ່ຂອງສະພາບການໃນອະນານິຄົມ. ຊາອັງກິດທີ່ນຳເຂົ້າອາເມຣິກາມີລາຄາຕົກຕໍ່າ, ຖືກອາເມຣິກາຂວໍ້າບາດຍ້ອນມີແນວຄິດຕ້ອງການປົກປ້ອງສິດ, ອິດສະຫຼະພາບ, ເອກະລາດ. ພໍ່ຄ້າອາເມຣິກາເໜືອບໍ່ພຽງແຕ່ຈົມທຶນທຸກກັບລະບອບການເກັບພາສີທີ່ໜັກໜ່ວງຂອງອັງກິດ ແຕ່ພວກເຂົາຍັງບໍ່ມີສິດອິດສະຫຼະພາບໃນການຂົນສົ່ງ ແລະ ດຳເນີນທຸລະກິດ. ສະນັ້ນ, ພວກເຂົາຈິ່ງອາໄສຂະບວນການລຸກຮື້ຂຶ້ນຂອງປະຊາຊົນເພື່ອຕໍ່ສູ້ກັບລັດຖະບານອັງກິດ.

ເດືອນທັນວາ ຄ.ສ 1773 ໃນຂະນະທີ່ເຮືອບັນທຸກຊາຈຳນວນ 3 ລຳຂອງອັງກິດພວມທຽບທ່າເພື່ອຂົນຖ່າຍຊາ ແຕ່ກໍ່ຖືກປະຊາຊົນບຸກໂຈມຕີ. ໃນຕອນກາງຄືນຂອງວັນທີ 16 ທັນວາ ປີ 1773 ມີກຸ່ມຄົນທີ່ຢູ່ໃນຊຸດທະຫານລາຍຟາງໄດ້ປອມຕົວເປັນຊາວອິນເດຍແດງໃຕ້ການນຳພາຂອງ ໄຊມອນ ອາດາມ ໄດ້ບຸກຂຶ້ນເຮືອບັນທຸກຊາ ແລະ ປຸ້ນເອົາຊາຈຳນວນ 343 ກະສອບຖິ້ມລົງທະເລຕີມູນຄ່າເປັນຈຳນວນເງິນ100.000 ປອນ ປະຊາຊົນອາເມຣິກາເໜືອຖືເຫດການດັ່ງກ່າວນີ້ວ່າເປັນອີກໜຶ່ງໄຊຊະນະໜຶ່ງ. ສ່ວນອັງກິດແມ່ນມີຄວາມຄຽດແຄ້ນທີ່ສຸດຈິ່ງໄດ້ອອກກົດໝາຍເຫຼັກເພື່ອລົງໂທດອາເມຣິກາເໜືອ ແລະ ຮຽກຮ້ອງໃຫ້ປະຊາຊົນບອສຕັນ ຕ້ອງຊົດໃຊ້ຄ່າເສຍຫາຍທັງໝົດ. ລະດູໃບໄມ້ຫຼົ່ນຂອງປີ ຄ.ສ 1774 ທ່າເຮືອ ບອສຕັນ ຖືກບັງຄັບໃຫ້ປິດຕົວລົງ. ການຄ້າຂາຍຢຸດສະງັດ, ໂຮງຈັກໂຮງງານບໍ່ໄດ້ທຳການຜະລິດ. ກຳມະກອນຫຼາຍພັນຄົນຫວ່າງງານ. ພວກຈັກກະພັດອັງກິດໄດ້ມອບສິດເຄື່ອນໄຫວອຍ່າງເສລີພາບໃຫ້ແກ່ເຈົ້າປົກຄອງລັດ ມັດຊາຊູເສັດ. ເອົາເມືອງ ບອດຕັນ ເປັນມະຫານະຄອນຂອງລັດ ມັດຊາຊູເສັດ ແນໃສ່ເພື່ອນາບຂູ່ພວກກໍ່ການຮ້າຍທີ່ກ້າວຂຶ້ນສູ່ຈຸດສຸດຍອດເພື່ອກະກຽມກຳລັງ ແລະ ຄວາມພ້ອມຮັບມືກັບສະພາບການທີ່ອາດຈະເກີດຂຶ້ນ.

ສົງຄາມຄັ້ງນີ້ເບິ່ງຄືວ່າຈະເປັນການຍາກທີ່ຈະເອົາຊະນະໄດ້, ອັງກິດໄດ້ສົ່ງນາຍພົນ ເກເຊີ ມາເປັນເຈົ້າປົກຄອງລັດ ມັດຊາຊູເສັດ ເຊິ່ງເປັນຜູ້ບັນຊາການທະຫານສູງສຸດຂອງອັງກິດຢູ່ອາເມຣິກາເໜືອ. ສະຖານະ

ການຂອງການປະຕິວັດເລີ່ມສຸກງອມນັບທັງບັນດາກຸ່ມຄົນທີ່ວາງຕົວເປັນກາງຢ່າງ ຈອດ ວໍຊິງຕັນ ກໍ່ຍັງມີທ່າອ່ຽງໄປຫາການປະຕິວັດ.

ບັນດາຜູ້ນໍາຂອງການປະຕິວັດຢູ່ບັນດາລັດຕ່າງໆເຫັນວ່າມີຄວາມຈໍາເປັນຕ້ອງເປີດກອງປະຊຸມເພື່ອສະແດງເຈດຈໍານົງລວມຂອງການປະຕິວັດ. ສະນັ້ນ, ກອງປະຊຸມອະນານິຄົມທະວີບຄັ້ງທີ 1 ໄດ້ເປີດຂຶ້ນທ່າມກາງສະພາບການຄວາມຫຍຸ້ງຍາກດັ່ງທີ່ກ່າວມານັ້ນ. ກອງປະຊຸມດໍາເນີນແຕ່ວັນທີ 5 ກັນຍາ ຫາວັນທີ 26 ຕຸລາ 1774 ເຊິ່ງປະກອບມີ ຜູ້ແທນ 56 ທ່ານ ຈາກ 12 ລັດ ຍົກເວັ້ນ ລັດ ຈໍເຈຍ. ບັນດາຜູ້ແທນລ້ວນແຕ່ຂຶ້ນກັບຝ່າຍຊົນນາງນາຍທຶນ, ເຈົ້າທີ່ດິນ ແລະ ເຈົ້າຂອງຟາມຜູ້ຮັ່ງມີ. ໃນກອງປະຊຸມໄດ້ເກີດມີການຕໍ່ສູ້ກັນລະຫວ່າງ 2 ຝ່າຍ ຄື: ຝ່າຍທີ່ອ່ຽງໄປຕາມການປະຕິວັດ ແລະ ຝ່າຍກ້າວໜ້າ. ຝ່າຍກ້າວໜ້ານໍາໜ້າໝູ່ແມ່ນ ຜູ້ແທນລັດ ມັດຊາຊູເສັດ ແລະ ຝ່າຍອ່ຽງໄປຕາມການປະຕິວັດນໍາໜ້າແມ່ນຜູ້ແທນລັດ ເພນຊີວາເນຍ. ກອງປະຊຸມໄດ້ມີຄໍາຖະແຫຼງການກ່ຽວກັບສິດ ແລະ ຄໍາຮ້ອງທຸກ (Declaration of Rights and Grievances). ສະຖະນະການຮຽກຮ້ອງສິດທິໃນການເສຍພາສີທີ່ຂຶ້ນກັບອະນານິຄົມເປັນຜູ້ກໍານົດເອງ, ຮຽກຮ້ອງໃຫ້ລຶບລ້າງກົດໝາຍ ແລະ ຂໍ້ຫ້າມທີ່ບໍ່ມີເຫດຜົນຂອງເຈົ້າຊີວິດ ແລະ ລາຊະອານາຈັກອັງກິດກໍານົດອອກມາເພື່ອປະຕິບັດກັບບັນດາຫົວເມືອງຂຶ້ນ. ເພື່ອສະແດງເຖິງຄວາມຕັດສິນໃຈບັນດາຜູ້ແທນລັດຕ່າງໆໄດ້ເອກະພາບກັນທໍາການຂໍ້ວາບາດສິນຄ້າອັງກິດຢູ່ບັນດາລັດຕ່າງໆທີ່ເປັນຫົວເມືອງຂຶ້ນ.

ກອງປະຊຸມອະນານິຄົມຄັ້ງທີ 1 ເປັນສັນຍາລັກແຫ່ງຄວາມເປັນເອກະລາດ ແລະ ຄວາມເປັນເອກະພາບຂອງບັນດາຫົວເມືອງຂຶ້ນອັງກິດຢູ່ອາເມຣິກາເໜືອໃນການເຮັດສົງຄາມນີ້ແມ່ນຈຸດປະສົງລວມຂອງການເຮັດສົງຄາມ. ສະພາອັງກິດບໍ່ຕອບສະໜອງຄວາມຕ້ອງການໃດໆທີ່ກອງປະຊຸມໄດ້ຮຽກຮ້ອງ. ພວກເຂົາໄດ້ເວົ້າວ່າ ສິດໃນການອອກກົດໝາຍໃນຫົວເມືອງຂຶ້ນແມ່ນສິດ ແລະ ໜ້າທີ່ຂອງລັດຖະບານລາຊະອານາຈັກເທົ່ານັ້ນ. ລັດຖະບານອັງກິດໄດ້ດໍາເນີນການສືບຕໍ່ສ້າງກົດໝາຍໃໝ່ຂຶ້ນມາຄື: ຫ້າມບໍ່ໃຫ້ບັນດາຫົວເມືອງຂຶ້ນທໍາການຄ້າຂາຍໂດຍກົງກັບຕ່າງປະເທດ, ຫ້າມຊາວປະມົງຫາປາຕາມແຄມທະເລ ແລະ ກົດໝາຍອື່ນໆ ອີກ. ສະພາບເປັນຄືແນວນັ້ນເຮັດໃຫ້ເກີດຂໍ້ຂັດແຍ່ງເພີ່ມຂຶ້ນຕື່ມອີກ, ການເຮັດສົງຄາມຫຍັບເຂົ້າມາໃກ້ອີກ.

ທ້າຍ ປີ ຄ.ສ 1774 ຫາ ຕົ້ນປີ ຄ.ສ 1775 ທັງສອງຝ່າຍລ້ວນແຕ່ກະກຽມຄວາມພ້ອມໃນການເຮັດສົງຄາມ. ປະຊາຊົນຢູ່ລັດຕ່າງໆໃນອາເມຣິກາເໜືອຫ້າງຫາກະກຽມປະກອບອາວຸດສົງຄາມ, ຊອກຫາກໍາລັງ

ພົນ ແລະ ສ້າງຖານທັບອາວຸດ. ວັນທີ 19 ເມສາ ປີ ຄ.ສ 1775 ກອງທັບອັງກິດໄດ້ບຸກເຂົ້າຖານທັບອາວຸດຂອງປະຊາຊົນຢູ່ ໂກນໂກອອກ ສາມາດດັບສູນກຳລັງປະຊາຊົນໄດ້ 200 ຄົນ, ຂະບວນການຮຸກຮານດັ່ງກ່າວເຮັດໃຫ້ປະຊາຊົນຢູ່ພູ ອິງເລິນ, ບອສຕັນ, ລຸກຂຶ້ນຕໍ່ສູ້ຕ້ານກັບກອງທັບອັງກິດ.

**ຂ. ກອງປະຊຸມອະນານິຄົມຄັ້ງທີ 2 ປີ ຄ.ສ 1775.**

ໃນຂະນະທີ່ສົງຄາມກຳລັງລະເບີດຂຶ້ນນັ້ນການຈຳແນກຄວາມແຕກຕ່າງໃນກຸ່ມຄົນພື້ນເມືອງໄດ້ເກີດຂຶ້ນຢ່າງຮຸນແຮງ. ສ່ວນຫຼາຍແມ່ນພາກສ່ວນຊາວນາ, ປະຊາຊົນຜູ້ອອກແຮງງານ ພາຍໃຕ້ການຊີ້ນຳຂອງພວກຊົນຊັ້ນກາງການປະຕິວັດໄດ້ກ້າວຂຶ້ນໄປອີກລະດັບໜຶ່ງເພື່ອຕ້ານກັບກຳລັງຂອງອັງກິດ, ຊົນຊັ້ນກາງທີ່ທຳການຄ້າຂາຍ ແລະ ຜະລິດອຸດສະຫະກຳພາກເໜືອຕ້ອງການອິດສະຫຼະໃນການເປີດກວ້າງຕະຫຼາດຈຳໜ່າຍສິນຄ້າທັງພາຍໃນ ແລະ ຕ່າງປະເທດ. ຂະຫຍາຍເສດຖະກິດໄດ້ລວບລວມເປັນພວກຝ່າຍຊ້າຍຂອງພັກ ວິກ ດຳເນີນການຕໍ່ສູ້ເພື່ອຍາດເອົາຄວາມເປັນໃຫຍ່, ຕັດສາຍສຳພັນກັບລັດຖະບານລາຊະອານາຈັກ. ສ່ວນຝ່າຍຂວາຂອງພັກວິກປະກອບມີ ຂຸນນາງດຳເນີນທຸລະກິດກ່ຽວກັບທີ່ດິນ, ພວກເຈົ້າທາດຢູ່ທາງພາກໃຕ້ລ້ວນແຕ່ຕ້ອງການເປີດກວ້າງດ້ານຕາເວັນຕົກຂອງສາຍພູ ອາເລກາລີດ ແລະ ຕັດສາຍສຳພັນກັບລັດຖະບານອັງກິດເພື່ອບໍ່ຕ້ອງຈ່າຍເງິນທີ່ເປັນໜີ້ກ້ອນມະຫາສານໃຫ້ແກ່ພໍ່ຄ້າຊາວອັງກິດ. ພວກເຂົານຳໃຊ້ປະຊາຊົນເຂົ້າໃນການຕໍ່ສູ້ຍ້ອນວ່າກຳລັງພວກເຂົາບໍ່ເຂັ້ມແຂງ ແຕ່ວ່າພວກເຂົາກໍ່ບໍ່ຕ້ອງການໃຫ້ກອງທັບເຄື່ອນໄຫວຕາມຄວາມຕ້ອງການປະຊາທິປະໄຕຢ່າງແທ້ຈິງ.

ຕໍ່ໜ້າກັບກຳລັງປະຕິວັດແມ່ນຝ່າຍຈັກກະພັດ ໂຕຣີ ທີ່ປະກອບດ້ວຍຜູ້ປົກຄອງລັດຕ່າງໆ, ຜູ້ພິພາກສາ, ພະນັກງານລັດຖະບານອະນານິຄົມ, ເຈົ້າທີ່ດິນ, ຂຸນນາງອຸດສະຫະກຳ-ການຄ້າທີ່ມີສາຍພົວພັນກັບບັນດາບໍລິສັດຂອງລັດຖະບານລາດຊະອານາຈັກ, ພວກນາຍທຶນໃຫຍ່ທີ່ເປັນເຈົ້າຂອງບໍລິສັດການຄ້າຍັງມີຄວາມຕ້ອງການພົວພັນການຄ້າກັບບໍລິສັດຂອງອັງກິດ ແລະ ນັກບວດຂອງສາສະໜາຄິຣສນິການແອັງກລີຄັນ. ເວົ້າລວມກໍ່ແມ່ນພາກສ່ວນທີ່ມີສາຍພົວພັນທາງດ້ານສິດຜົນປະໂຫຍດຮ່ວມກັບລັດຖະບານຣາຊະອານາຈັກອັງກິດ.

ກອງປະຊຸມບັນດາອະນານິຄົມຄັ້ງທີ 2 ເປີດຂຶ້ນໃນວັນທີ 10 ພຶດສະພາ ປີ ຄ.ສ 1775 ແນໃສ່ເພື່ອແກ້ໄຂບັນໃນການເຮັດສົງຄາມ. ກອງປະຊຸມໄດ້ຕົກລົງສ້າງຕັ້ງກອງທັບທະວີບຂຶ້ນ, ແຕ່ງຕັ້ງ ຈອດ ວໍຊິງຕັນ

ແຫ່ງລັດເວີຈີເນຍເປັນຜູ້ບັນຊາການທະຫານສູງສຸດ. ກອງປະຊຸມໄດ້ຮຽກຮ້ອງໃຫ້ປະຊາຊົນສະໝັກໃຈປະກອບສ່ວນເຂົ້າໃນການສ້າງຕັ້ງກອງທັບ.

ລັດຖະບານອັງກິດຕັດສິນໃຈສະກັດກັ້ນບັນດາຫົວເມືອງຂຶ້ນ, ຂະຫຍາຍກຳລັງກອງທັບເພີ່ມ, ພວກເຂົາປະກາດວ່າຈະນຳໃຊ້ການບັງຄັບ ເພື່ອສະກັດກັ້ນບັນດາຫົວເມືອງຂຶ້ນຜ່ານງົບປະມານໃນການເຮັດສົງຄາມ. ຈຳນວນກອງທັບເພີ່ມຂຶ້ນເຖິງ 50.000 ຖືກສົ່ງໄປເຮັດສົງຄາມຢູ່ອາເມຣິກາເໜືອ, ທະຫານອັງກິດບໍ່ມີຜູ້ສະໝັກໃຈໄປເຮັດການເສິກສົງຄາມຢູ່ອາເມຣິກາເໜືອ. ເຈົ້າຊີວິດອັງກິດຈຶ່ງໄດ້ບັງຄັບໃຫ້ທະຫານ ແຮດເຊີ Hesse ເປັນຜູ້ເກັບພາສີ. ປະຊາຊົນອາເມຣິກາເໜືອສຸດທີ່ກຽດຊັງທະຫານ ແຮດເຊີ ແລະ ມີຂໍ້ຂັດແຍ່ງໃໝ່ກັບທະຫານ ແຮດເຊີ ທີ່ນັບມື້ນັບຮຸນແຮງ. ເປັນປັດໄຈທີ່ເຮັດໃຫ້ປະຊາຊົນອາເມຣິກາມີຄວາມກຽດຊັງຕໍ່ກະສັດອັງກິດ. ຊາວອາເມຣິກາເໜືອຮັບຮູ້ເອກະລາດຂອງຕົນ. ກອງປະຊຸມອະນານິຄົມຄັ້ງທີ 2 ກ້າວໄປເຖິງການກຳນົດຄວາມເປັນເອກະລາດ, ອິດສະຫຼະພາບຂອງອາເມຣິກາເໜືອ.

**ຄ. ຖະແຫຼງການປະກາດເອກະລາດຂອງສະຫະລັດອາເມຣິກາໃນປີ ຄ.ສ 1776**

ທ່າອ່ຽງເອກະລາດໄດ້ຖືກບັນດາຜູ້ແທນເຊັ່ນ: ຈອນອາດາມ John Adams, ອາ.ເອັຈ໌ ລີ R.H Lee ໄດ້ສະເໜີ ແລະ ຂໍອະນຸມັດໃນທີ່ປະຊຸມ. ຄະນະກຳມະການໜຶ່ງທີ່ມີ 5 ຄົນ ນຳພາໂດຍ ໂທມັດ ເຈຟເຟີສັນ ຖືກແຕ່ງຕັ້ງໃຫ້ເປັນຜູ້ຮ່າງຄຳຖະແຫຼງການເອກະລາດ ແລະ ປະກາດຖະແຫຼງການເອກະລາດຢ່າງເປັນທາງການທີ່ກອງປະຊຸມໃນຄັ້ງວັນທີ 4 ກໍລະກົດ ປີ ຄ.ສ 1776.



ຈອນນ ອາດາມສ

ເນື້ອໃນພື້ນຖານຂອງຖະແຫຼງການແມ່ນປະກາດສິດເສລີພາບ, ປະຊາທິປະໄຕ ນາຍທຶນ ແລະ ຮັບຮູ້ເອກະລາດຂອງບັນດາລັດຕ່າງໆຢູ່ອາເມຣິກາເໜືອ. ຄຳຖະແຫຼງການໃຫ້ຍົກໃຫ້ເຫັນຈະແຈ້ງກ່ຽວກັບ: ທຸກຄົນທີ່ເກີດມາລ້ວນແຕ່ມີສິດສະເໝີພາບ, ເຊິ່ງເປັນສິດທີ່ບໍ່ສາມາດລົບລ້າງໄດ້. ໃນບັນດາສິດທີ່ໄດ້ຮັບນັ້ນປະກອບໄປດ້ວຍສິດໃນການດຳລົງຊີວິດ, ສິດອິດສະຫຼະພາບບໍ່ຂຶ້ນກັບໃຜ, ສິດທີທີ່ຈະໄດ້ຮັບຄວາມສຸກ. ຖະແຫຼງການໄດ້ຢັ້ງຢືນວ່າມີພຽງແຕ່ປະຊາຊົນເທົ່ານັ້ນທີ່ມີສິດໃນການສ້າງຕັ້ງອຳນາດການປົກຄອງ ແລະ ລົບລ້າງອຳນາດການປົກຄອງໃນເວລາທີ່ເຫັນວ່າຂັດກັບສິດຜົນປະໂຫຍດ. ຖະແຫຼງການໄດ້ກ່າວປະນາມກະສັດ ແລະ ໄດ້ປະກາດເອກະລາດຂອງບັນດາປະເທດໃນອາເມຣິກາເໜືອ, ສິດໃນການເຂົ້າຮ່ວມເປັນພັນທະມິດ, ສິດໃນການຄ້າຂາຍ, ສິດໃນການເຮັດສັນຍາ...ຖະແຫຼງການເປັນເປັນເອກະສານການເມືອງທີ່ມີລັກສະນະປະຊາ ທິປະໄຕທີ່ມີອິດສະຫຼະພາບ ທີ່ສະແດງເຖິງລັກສະນະກ້າວໜ້າຂອງຍຸກສະໄໝ. ໄດ້ຍົກໃຫ້ເຫັນຫຼັກການເຄົາລົບອຳນາດອະທິປະໄຕຂອງປະຊາຊົນໃນຂະນະທີ່ ຊົນຊັ້ນນາຍທຶນມີໜ້າທີ່ຮັບຜິດຊອບໃນການພັດທະນາສັງຄົມ.



ບັນຍາກາດໃນການອ່ານຖະແຫຼງການປະກາດເອກະລາດ ແລະ ສ້າງຕັ້ງລັດຖະສະພາໃນປີ 1776 ຢູ່ອາເມຣິການເໜືອ

ເຖິງວ່າຖະແຫຼງການດັ່ງກ່າວຍັງບໍ່ສາມາດຫຼຸດຜ່ອນຄວາມຫຍຸ້ງຍາກ ແລະ ຂໍ້ຈຳກັດເພາະວ່າຖະແຫຼງການບໍ່ໄດ້ມີຂໍ້ກຳນົດໃນການຍົກເລີກລະບອບຂ້າທາດ, ບໍ່ມີຂໍ້ຫ້າມໃນການດຳເນີນການຄ້າຂາຍຂ້າທາດ, ຍ້ອນບັນດາເຈົ້າທາດຂອງລັດ ຄາໂລລິນາໃຕ້, ຈໍເຈຍ, ພໍ່ຄ້າທີ່ດຳເນີນການຄ້າຂາຍຂ້າທາດຢູ່ພາກເໜືອຕໍ່ຕ້ານ ແລະ ປະທ້ວງ. ເຖິງແມ່ນວ່າຖະແຫຼງການເອກະລາດ ຂອງສະຫະລັດ ເກີດຂຶ້ນມາໄດ້ສະແດງໃຫ້ເຫັນເຖິງບາດກ້າວແຫ່ງຄວາມກ້າວໜ້າອັນໃຫຍ່ຫຼວງ, ເປັນການບັນທຶກຄວາມຕ້ອງການປະຊາທິປະໄຕຂອງປະຊາຊົນ.

ວັນທີ 7 ຕຸລາ ຄ.ສ 1776 ກອງປະຊຸມໄດ້ຜ່ານບັນດາກົດລະບຽບຂອງສະຫະລັດ, ນີ້ຍັງບໍ່ທັນແມ່ນລັດຖະທຳມະນູນ ແຕ່ມັນໄດ້ຍົກໃຫ້ເຫັນຄວາມເປັນເອກະລາດຂອງບັນດາລັດພາຍໃຕ້ລັດຖະບານລວມສູນ. ນັ້ນແມ່ນລັກສະນະລວມຂອງການສ້າງຕັ້ງສາຍພົວພັນໃນຂົງເຂດພາກພື້ນ ແລະ ຂັ້ນສູນກາງ ໃນ 13 ຫົວເມືອງຂຶ້ນເກົ່າຂອງອັງກິດ. ບັນຫາທີ່ເກີດຂຶ້ນໃນໄລຍະນີ້ແມ່ນສົງຄາມ ແລະ ໄຊຊະນະຂອງສົງຄາມ.

### ງ. ໄຊຊະນະທຳອິດຂອງການປະຕິວັດ

ຂະບວນການຕໍ່ສູ້ຂອງປະຊາຊົນອາເມຣິກາພົບກັບຄວາມສູນເສຍຢ່າງມະຫານສານ, ເພາະວັດຖຸອຸປະກອນຫຼ້າສະໄໝ, ຂາດກຳລັງທະຫານເພື່ອຮົບທາງນ້ຳ. ຜູ້ນຳພາຍັງບໍ່ທັນມີການປະດິດສ້າງດີເທົ່າທີ່ຄວນ, ເຖິງແນວໃດກໍ່ຕາມສຳລັບຄົນອາເມຣິກາແລ້ວຖືກວ່າປະຕິວັດນີ້ເປັນສົງຄາມໂດຍໄດ້ຮັບການຊ່ວຍເຫຼືອຈາກປະຊາຊົນທົ່ວອາເມຣິກາ. ໂດຍການລະດົມປະຊາຊົນທຸກຊົນຊັ້ນ, ມີຂ້າທາດຜິວດຳເປັນ 1.000 ຄົນ ເຂົ້າຮ່ວມສົງຄາມ ແລະ ຕໍ່ສູ້ຢ່າງພິລະອາດຫານ. ຂະບວນການຕໍ່ສູ້ຂອງປະຊາຊົນບັນດາລັດເຂດພູ ໂອອອກ ມີຄົນຜິວດຳຫຼາຍພັນຄົນພີຊົບທະຫານຝ່າຍປະຕິວັດໄດ້ນຳໃຊ້ຍຸດທະວິທີໃນການຕໍ່ສູ້ແບບກອງໂຈນຍ້ອນວ່າຕອນນັ້ນກຳລັງປະຕິວັດມີຈຳນວນພົນໜ້ອຍ, ອາວຸດບໍ່ທັນສະໄໝສະນັ້ນຂະບວນການຕໍ່ສູ້ຈຶ່ງແກ່ຍາວຮອດລະດູໜາວ ປີ ຄ.ສ 1776 ກອງກຳລັງຂອງຜູ້ກໍ່ຄວາມບໍ່ສະຫງົບໄດ້ຕົກໃນກຳມືຂອງ ຈອດ ວໍຊິງຕັນ ເຊິ່ງຈຳນວນຄົນທີ່ຍັງເຫຼືອບໍ່ຮອດ 3.000 ຄົນ.

ວັນທີ 10 ພຶດສະພາ ປີ ຄ.ສ 1776 ກອງທັບປະຕິວັດໜຶ່ງໄດ້ບຸກຢຶດ ຕີ ຄອນເດໂຣກາ ທີ່ເປັນຄັງອາວຸດທີ່ມີທັງລະເບີດ. ວັນທີ 17 ມິຖຸນາ ປີ ຄ.ສ 1775 ກອງທັບອັງກິດຕີເອົາຊະນະກຳລັງປະຕິວັດທີ່ ເບີນເກີ, ຮົນທີ່ຢູ່ໃກ້ກັບ ບອສຕັນ ແຕ່ວ່າທະຫານອັງກິດໄດ້ສູນເຈຍງົບປະມານອັນມະຫາສານໃນການເຮັດສົງຄາມ. ໃນ

ເວລາດຽວກັນຄື ປີ 1775 ກອງກໍາລັງປະຕິວັດຂອງ ຈອດ ວໍຊິງຕັນ ຖືກທະຫານອັງກິດຕີເອົາຊະນະຢູ່ທີ ລອງອາຍແລັນ ແລະ ແມນແຮັດຕັນ ຈຶ່ງຖອຍກັບຄືນມາພູເຊີຊີ.

ລະດູໃບໄມ້ຫຼົ່ນຂອງປີ ຄ.ສ 1777 ຈອດ ວໍຊິຕັນ ປາໄຊໃນສົງຄາມຢູ່ ແຊກມານທາວ ກໍາລັງທະຫານອັງກິດໄດ້ບຸກໂຈມຕີຢ່າງຮຸນແຮງແນໃສ່ເພື່ອກວດລ້າງກໍາລັງການປະຕິວັດຂອງ ຈອດ ວໍຊິງຕັນ ແຕ່ກໍ່ຖືກກໍາລັງຝ່າຍປະຕິວັດຕີຕ້ານຄືນໃນວັນທີ 17 ຕຸລາ ປີ ຄ.ສ 1777 ເຮັດໃຫ້ກໍາລັງທະຫານອັງກິດປາໄຊລົງໃນ ຊາລາໂຕກາ ນາຍພົນທະຫານຂອງອັງກິດຊື່ວ່າ ແບກຄອນ ປະກາດຍອມຈໍານົນ.

ໄຊຊະນະທີ່ ຊາລາໂຕກາ ມີຄວາມໝາຍສໍາຄັນຕໍ່ກັບປະຫວັດສາດແຫ່ງການຕໍ່ສູ້ຍາດເອົາເອກະລາດຢູ່ອາເມຣິກາເໜືອ. ຕໍ່ກັບກໍາລັງປະຕິວັດແມ່ນການປະກາດໃຫ້ຮູ້ເຖິງສັນຍະນຸພາບທີ່ແຂງແຮງ ແລະ ໄຊຊະນະອັນຍິ່ງໃຫຍ່. ຕໍ່ກັບພາຍນອກ ຝຣັ່ງໄດ້ສວຍໃຊ້ໂອກາດດັ່ງກ່າວບຸກຕີອັງກິດເພື່ອແກ້ແຄ້ນທີ່ອັງກິດຍາດເອົາດິນແດນ ການາດາ. ບັນດາເຮືອບັນທຸກອາວຸດພ້ອມລູກກະສູນໄດ້ອອກເດີນທາງໄປສູ່ອາເມຣິກາເໜືອ. ວັນທີ 6 ກຸມພາ ປີ ຄ.ສ 1778 ສົນທິສັນຍາເປັນພັນທະມິດກັນລະຫວ່າງ ອາເມຣິກາ-ຝຣັ່ງ ໄດ້ຮັບການລົງນາມ ແລະ ປະກາດວ່າຈະຍອມເຊັນສັນຍາສະຫງົບເສິກຖ້າວ່າອັງກິດຍອມຮັບຮູ້ເອກະລາດຂອງຫົວເມືອງຂຶ້ນ 13 ແຫ່ງ.

ມີຫຼາຍປະເທດຢູ່ເອີຣົບເຂົ້າຮ່ວມເປັນພັນທະມິດໃນການຕໍ່ສູ້ຕ້ານກັບອັງກິດ, ສະເປນ ແລະ ໂຮນລັງໄດ້ຈັບມືຮ່ວມກັບອາເມຣິກາໃນປີ ຄ.ສ 1779 ແລະ ປີ ຄ.ສ 1781.

ປະເທດອັງກິດຕ້ອງຢູ່ຢ່າງໂດດດ່ຽວ ແລະ ບໍ່ມີຄວາມສາມາດທີ່ຈະເປັນເຈົ້າການທາງທະເລອີກໂດຍສວຍໂອກາດດັ່ງກ່າວນັ້ນຝຣັ່ງໄດ້ນໍາກອງທັບເຮືອ ແລະ ກອງທັບອາສາສະໝັກປົດປ່ອຍ ພາຍໃຕ້ການບັນຊາການຂອງນາຍພົນ ໂຣຊໍາບົວ ໄດ້ເດີນທາງມາເຮັດສົງຄາມຕ້ານອັງກິດຮ່ວມກັບປະຊາຊົນອາເມຣິກາ

**.2. ໄລຍະທີ 2 ຂອງສົງຄາມ ແລະ ໄຊຊະນະຂອງການປະຕິວັດ.**

ໃນໄລຍະທໍາອິດຫຼັງນັ້ນຮົບ ຊາຣາໂຕກາ ສະພາບການທະຫານແມ່ນບໍ່ມີຫຍັງປ່ຽນແປງເທົ່າໃດ ກອງທັບອັງກິດຍັງເຂັ້ມແຂງ ແລະ ມີອາວຸດຄົບຊຸດ ເພື່ອປົກປ້ອງທະເລ ແລະ ແຜ່ນດິນໃຫຍ່.

ເດືອນ ທັນວາ ປີ ຄ.ສ 1778 ລັດຈໍເຈຍ ຖືກທະຫານອັງກິດຢຶດຄອງ, ເດືອນພຶດສະພາປີ ຄ.ສ 1779 ກອງທັບອັງກິດຕີເອົາຊະນະກຳລັງປະຕິວັດ ສາມາດຢຶດ ຄາໂລລິນາໃຕ້. ລະດູຮ້ອນຂອງປີ ຄ.ສ 1780 ເປັນໄລຍະທີ່ພົບກັບສິ່ງທ້າທາຍສຸດທ້າຍ ແລະ ທໍລະມານທີ່ສຸດຂອງກຳລັງປະຕິວັດ. ວັນທີ 12 ພຶດສະພາ 1780 ທະຫານອັງກິດໄດ້ຢຶດຄອງທ່າເຮືອ ຊາເຣສເຕີນ ເບື້ອງຄາໂຣລິນາໃຕ້ ພາກສ່ວນໜຶ່ງຂອງກຳລັງປະຕິວັດທີ່ມີຈຳນວນພົນເກືອບ 6.000 ຄົນຖືກຈັບເປັນສະເລີຍເສິກ. ວັນທີ 16 ສິງຫາ ປີ ຄ.ສ 1780 ນາຍພົນອັງກິດຊື່ວ່າ ໂກອໍກວາລິດ ໄດ້ບຸກໂຈມຕີທຳລາຍທະຫານຝ່າຍປະຕິວັດກອງໜຶ່ງຢູ່ ຄອມແດນ Camden.

ແຕ່ກອງກຳລັງຝ່າຍປະຕິວັດໄດ້ຕໍ່ສູ້ຄືນຢ່າງພິລະອາດຫານ, ຈອດ ວໍຊິງຕັນຕັດສິນໃຈນຳໃຊ້ກຳລັງຂອງກອງທັບເຮືອທັງໝົດ, ກອງພົນທະຫານລາຍ, ກອງກຳລັງປືນໃຫຍ່ ຕໍ່ສູ້ຕ້ານກັບການບຸກໂຈມຕີ ຢອກທາວ. ທະຫານຂອງ ໂກອໍກວາລິດ ມາປະຈຳການຢູ່ຕາມແຄມແມ່ນ້ຳໂຢອອກຖືກກອງທັບເຮືອຝຣັ່ງສະກັດລັດທາງ, ຖືກກຳລັງທະຫານປະຕິວັດຂອງຈອດ ວໍຊິງຕັນ ແລະ ໂຣຊໍາໂບ ປິດລ້ອມເຮັດໃຫ້ກຳລັງຂອງທະຫານອັງກິດບໍ່ສາມາດຕ້ານທານໄດ້ແຕ່ກໍ່ນຳພາທະຫານຈຳນວນ 8.000 ຄົນຕໍ່ສູ້ຈົນຮອດວັນທີ 19 ຕຸລ ປີ ຄ.ສ 1781.

ໄຊຊະນະຢູ່ ຢັອກທາວ ໄດ້ເປັນການທຳລາຍມ້າງເພຄວາມຫວັງອັນສຸດທ້າຍຂອງຈັກກະພັດອັງກິດພ້ອມດຽວກັນນັ້ນກໍ່ເປັນການສ້າງກຳລັງໃຈໃຫ້ແກ່ຂະບວນການປະຕິວັດ ແລະ ປະຊາຊົນຢູ່ອາເມຣິກາເໜືອເປັນການປະຕິວັດທີ່ແຂງແຮງ. ຂະບວນການຕໍ່ສູ້ຕ້ານກັບສົງຄາມຂອງມະຫາຊົນຢູ່ລາດຊະອານາຈັດອັງກິດຂະຫຍາຍຕົວຢ່າງແຂງແຮງ.

ສົງຄາມໄດ້ແກ່ຍາວເວລາອອກໄປຕື່ມອີກ, ແຕ່ເບິ່ງລວມແລ້ວຜົນຕາມມາຂອງສົງຄາມມີລັກສະນະຊັດເຈນ. ນາຍົກລັດຖະມົນຕີຄົນໃໝ່ຂອງອັງກິດກຳລັງຮັບໜ້າທີ່ມີຊື່ວ່າ: ຣັອກກິນແຮັມ ໄດ້ດຳເນີນການຕໍ່ລອງກັບອາເມຣິກາເໜືອຕົວແທນຂອງອາເມຣິກາເໜືອແມ່ນ ເບັນຈາມິນ ແຟລງກິນ, ຈອນ ອາດາມ ແລະ ຈອນຊາຍ. ກອງປະຊຸມໄດ້ໄຂຂຶ້ນແບບປິດລັບ ເພາະວ່າອາເມຣິກາເໜືອບໍ່ຕ້ອງການເປີດເຜີຍຄວາມສຳພັນຂອງອາເມຣິກາກັບອັງກິດ. ຕາມການຕົກລົງຂອງຝຣັ່ງກັບອາເມຣິກາໃນເມື່ອກ່ອນແມ່ນບໍ່ອະນຸຍາດໃຫ້ຝ່າຍໃດເຊັນສັນຍາກັບສັດຕູໂດຍບໍ່ໄດ້ຮັບການເຫັນດີຈາກພັນທະມິດ ເຊິ່ງຄວາມຈິງແລ້ວອາເມຣິກາເໜືອກໍ່ມີ

ຄວາມສິ່ງໄສຝຣັ່ງໃນກໍລະນີທີ່ຝຣັ່ງດໍາເນີນການຂະຫຍາຍອະນາເຂດເຂົ້າດິນແດນບໍລິເວນແຄມແມ່ນ້ຳ ມິດຊິດຊິບປີ ແລະ ສະໜອງຜົນປະໂຫຍດໃຫ້ແກ່ສະເປນເຊິ່ງມັນສົ່ງຜົນສະທ້ອນຕໍ່ກັບອາເມຣິກາເໜືອ.

ສົນຍາ ແວກຊາຍ ໄດ້ຮັບການລົງນາມໃນວັນທີ 3 ກັນຍາ ປີ ຄ.ສ 1783 ຕາມການຕົກລົງໃນສົນຍາແມ່ນອັງກິດຕ້ອງຍອມຮັບຮູ້ເອກະລາດຂອງບັນດາຫົວເມືອງຂຶ້ນຢູ່ອາເມຣິກາເໜືອມອບອໍານາດໃຫ້ແກ່ສະຫະລັດອາເມຣິການັບທັງດິນແດນພາກໃຕ້ແມ່ນ້ຳ ມິດຊິດຊິບປີ ທີ່ກວ້າງໃຫຍ່, ອັງກິດໄດ້ມອບດິນແດນ ຟໍລິດາ ໃຫ້ແກ່ສະເປນ.

ສົນຍາ ແວັກຊາຍເ ປັນສັນຍາລັກແຫ່ງໄຊຊະນະຂອງການຕໍ່ສູ້ຍາດເອກະລາດ ແລະ ອິດສະຫຼະພາບຂອງປະຊາຊົນອາເມຣິກາເໜືອ. ເປັນການປະກາດໄຊຊະນະຂອງການປະຕິວັດ ເປັນການເປີດເສັ້ນທາງໃຫ້ຮູບແບບການຜະລິດແບບທຶນນິຍົມຂະຫຍາຍຕົວ. ປະເທດໃໝ່ຢູ່ອາເມຣິກາເໜືອໄດ້ຖືກໍາເນີດຂຶ້ນນັ້ນກໍ່ຄືປະເທດສະຫະລັດອາເມຣິກາ (United States America) ພວກເຮົາມັກຈະເອີ້ນວ່າ ອາເມຣິກາ ຫຼືສະຫະລັດ.

## III. ປະເທດອາເມຣິກາຫຼັງການປະກາດເອກະລາດ

### 1. ຜົນຂອງສົງຄາມ

ສົງຄາມໄດ້ຖິ້ມປະໝາກຜົນຂອງສົງຄາມອັນໃຫຍ່ຫຼວງ, ປະເທດສາທາລະນະລັດທີ່ຫາກໍ່ພວມເກີດຂຶ້ນໃໝ່ຕ້ອງປະເຊີນໜ້າກັບສິ່ງທ້າທາຍອັນໃຫຍ່ຫຼວງທາງດ້ານເສດຖະກິດ, ການເມືອງ ແລະ ສັງຄົມ. ສິດອໍານາດທັງໝົດແມ່ນຕົກຢູ່ໃນກໍາມືຂອງພວກນາຍທຶນ, ພໍ່ຄ້າ, ເຈົ້າທາດ, ເຈົ້າຂອງນິຄົມກະເສດ. ສ່ວນປະຊາຊົນເປັນຜູ້ທີ່ເສຍສະຫຼະໃນການເຮັດສົງຄາມພ້ອມດຽວກັນນັ້ນພວກເຂົາກໍ່ແມ່ນຜູ້ທີ່ຮັບພາລະອັນໜັກໜ່ວງພາຍຫຼັງສົງຄາມສິ້ນສຸດລົງ. ຈໍານວນໜີ້ສິນຂອງສະຫະລັດອາເມຣິກາເພີ່ມຂຶ້ນສູງເຖິງ 56 ລ້ານ ໂດລາ ແລະ ໜີ້ສິນຂອງບັນດາລັດສູງເຖິງ 18 ລ້ານ ໂດລາ, ພື້ນຖານເສດຖະກິດຫຼັງສົງຄາມ. ເສດຖະກິດຫຼັງສົງຄາມບໍ່ໝັ້ນຄົງ, ເກີດມີບັນຫາເງິນເຟີ້ໃນທ້ອງຕະຫຼາດ, ພາສີເພີ່ມຂຶ້ນ, ປະຊາຊົນນັບພັນຄົນຫວ່າງງານ, ຊີວິດການເປັນຢູ່ບໍ່ໄດ້ຮັບປະກັນ.

ໃນຊຸມປີ 80 ຂອງສະຕະວັດທີ 18 ຂະບວນການລຸກຮື້ຂຶ້ນປະທ້ວງນັບມື້ນັບເພີ່ມຂຶ້ນຫຼາຍ, ທະຫານໄດ້ລຸກຂຶ້ນຕໍ່ສູ້ຕ້ານກັບຜູ້ບັງຄັບບັນຊາ ແລະ ລັດຖະບານ. ພວກເຂົາຮຽກຮ້ອງໃຫ້ພວກນາຍທະຫານ

ຕ້ອງເຄົາລົບ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານສິດຜົນປະໂຫຍດຂອງທະຫານທີ່ຢູ່ພາຍໃຕ້ການບັນຊາ. ຂະບວນການລຸກຂຶ້ນຕໍ່ສູ້ຂອງເຈົ້າຂອງຟາມກໍ່ເພີ່ມທະວີຂຶ້ນ, ການລົ້ມລະລາຍທາງການເງິນຍ້ອນສະກຸນເງິນອ່ອນຕົວລົງ, ບໍ່ມີວິທີການໃນການດຳເນີນທຸລະກິດ ແລະ ຮັບປະກັນການເສຍພາສີ.

ປີ ຄ.ສ 1786 ຄົນ ຟາກເມີ ທີ່ທຸກຍາກຜູ້ໜຶ່ງໄດ້ທີ່ເຄີຍຮັບໃຊ້ໃນກອງທັບ ມີຊື່ວ່າ ດານຽນ ເຊເຊີ (ປີ ຄ.ສ 1747-1825) ໄດ້ເຕົ້າໂຮມເອົາບຸກຄົນທີ່ຕ້ອງການລຸກຂຶ້ນຕໍ່ຕ້ານອຳນາດການປົກຄອງຢູ່ລັດ ມາຊາຊູເສັດ ໄດ້ຈຳນວນ 2.000 ຄົນ ພວກເຂົາໄດ້ບຸກໂຈມຕີເຂົ້າໂຮງງານ ຢູ່ທີ່ ສະເປີຣິງຟີນ ແຕ່ບໍ່ປະສົບຜົນສຳເລັດ. ປະຊາຊົນຢູ່ພູ ອິງເລີນ  ແລະ ພູ ຣໍາອວາຍ ລຸກຂຶ້ນ ຕໍ່ສູ້. ສົງຄາມໄດ້ແກ່ຍາວເວລານັບແຕ່ລະດູຮ້ອນຂອງປີ ຄ.ສ 1786 ຫາ ລະດູໃບໄມ້ຫຼົ່ນຂອງປີ ຄ.ສ 1787 ຮຽກຮ້ອງໃຫ້ມີການແບ່ງປັນດິນນາໃຫ້ເທົ່າໆກັນ, ລຶບລ້າງໜີ້ສິນ, ຮຽກຮ້ອງຄວາມຍຸດຕິທຳ, ບົນຫຼັກການທີ່ວ່າ: ໄຊຊະນະຕ້ອງໄດ້ອາໄສກຳລັງແຮງຂອງໝົດທຸກຄົນຈຶ່ງຈະໄດ້ມາເຊິ່ງສິດທັງໝົດໃນການເປັນເຈົ້າຂອງທີ່ດິນ.

ຂະບວນການລຸກຮື້ນຂຶ້ນຕໍ່ສູ້ໄດ້ແຜ່ລາມອອກສູ່ວົງກວ້າງໃນລັດຕ່າງໆ ທະຫານຫຼາຍພັນຄົນລຸກຂຶ້ນຮຽກນຮ້ອງເພື່ອທວງເອົາສິດປະຊາທິປະໄຕແຕ່ລັດຖະບານນາຍທຶນໄດ້ໃຊ້ກຳລັງທະຫານດຳເນີນການປາບປາມ. ເດນຽນ ເຊເຊີ ພ້ອມກັບນາຍທະຫາຍ 13 ທ່ານ ຖືກຈັບ ແລະ ຖືກເນລະເທດອອກຈາກປະເທດ.

ຂະບວນການຕໍ່ສູ້ເພື່ອຍາດເອົາດິນແດງໄດ້ສະແດງໃຫ້ເຫັນເນື້ອໃນຢ່າງຊັດເຈນໃນການດຳເນີນການປະຕິວັດ. ຂະບວນການປະຕິວັດໄດ້ປະກາດລົບລ້າງຮູບແບບການຢຶດຄອງກຳມະສິດແບບສັກດີນາ ແລະ ອຳນາດອະພິສິດຂອງພວກຂຸນນາງເກົ່າ. ລົບລ້າງລະບອບການສືບທອດອຳນາດທາງສາຍເລືອດຈາກພໍ່ສູ່ລູກ. ຮອດປີ ຄ.ສ 1791 ໄດ້ລົບລ້າງອຳນາດສູງສຸດຂອງລະບອບສັກດີນາ.

ແຕ່ກໍ່ມີບັນຫາເກີດຂຶ້ນມາອີກນັ້ນກໍ່ຄືບັນຫາການຂະຫຍາຍດິນແດນຢູ່ທາງພາກຕາເວັນຕົກເພື່ອດຳເນີນການສ້າງຟາມຂອງເຈົ້າຂອງຟາມ, ລົບລ້າງກົດໝາຍຫ້າມບໍ່ໃຫ້ອົບພະຍົບໄປພາກຕາເວັນຕົກຂອງເຈົ້າຊີວິດ ຕະຫຼອດໄລຍະ 6 ປີແຫ່ງການດຳເນີນສົງຄາມໄດ້ມີປະຊາຊົນເກືອບ 25.000 ຄົນເຂົ້າໄປທຳມາຫາກິນຢູ່ດິນແດນເບື້ອງສາຍພູ ອາຣີການິດ. ປະຊາຊົນອິດສະຫຼະອາເມຣິກາເໜືອໃຊ້ວິທີການອົບພະຍົບເພື່ອທຳລາຍລະບອບສັກດີນາ ແລະ ເປີດເສັ້ນທາງໃຫ້ລັດທິທຶນນິຍົມ. ແຕ່ບັນດາປະເທດນາຍທຶນໄດ້ສືບຕໍ່ຄຸ້ມຄອງດິນດອນຕອນຫຍ້າຢູ່ພາກຕາເວັນຕົກຂອງສາຍພູ ອາຣີການິດ.

ປີ ຄ.ສ 1785 ລັດຖະບານໄດ້ຕັດສິນໃຈຂາຍດິນດອນຕອນຫຍ້າ, ຕາມກົດໝາຍໃນປີ 1787 ພວກເຂົາຈະໂອນຕອນດິນແຕ່ລະຕອນທີ່ມີຂະໜາດ 640 ເອເຄີ ໂດຍຕີມູນຄ່າເທົ່າກັບ 1.000 ໂດລາ. ສະນັ້ນຈຶ່ງມີພຽງແຕ່ເຈົ້າຂອງນິຄົມກະເສດໃໝ່ເທົ່ານັ້ນຈຶ່ງຈະສາມາດຊື້ດິນໄດ້. ຮອດປີ ຄ.ສ 1800 ລັດຖະບານຈຶ່ງໄດ້ບັງຄັບໃຫ້ອອກກົດໝາຍອະນຸຍາດໃຫ້ມີການຂາຍດິນດອນຢູ່ໃນເນື້ອທີ່ທີ່ມີຂະໜາດ 160 ກວ່າ ເອເຄີ ຫາ 320 ເອເຄີ ແລະ ສາມາດຈ່າຍເປັນເງິນຜ່ອນແຕ່ຕ້ອງມອບ ¼ ຂອງລາຄາດິນທັງໝົດໃຫ້ກ່ອນ ພວກ ຟາກເມີນ້ອຍຈຶ່ງຈະສາມາດຊື້ຕອນດິນນັ້ນໄດ້.

ຍ້ອນແນວນັ້ນຂະບວນການປະຕິວັດປີ ຄ.ສ 1775-1783 ເປັນການຢັ້ງຢືນໃຫ້ເຫັນເສັ້ນທາງການຂະຫຍາຍຕົວຂອງເສດຖະກິດກະສິກໍາຕາມລະບອບ ຟາກເມີ. ຂະບວນການຕໍ່ສູ້ປົດປ່ອຍປະຊາຊົນ ແລະ ຂະບວນການປະຕິວັດດິນນາໃຫ້ເປັນເອກະພາບ. ສິ່ງດັ່ງກ່າວນີ້ໄດ້ຢັ້ງຢືນເຖິງຄວາມຕ້ອງການປະຕິວັດດິນນາແມ່ນປັດໄຈສໍາຄັນໃນການດໍາເນີນການປະຕິວັດ.

ນະໂຍບາຍທາງດ້ານເສດຖະກິດທີ່ສໍາຄັນອັນດັບ 2 ຂອງປະເທດອາເມຣິກາແມ່ນການຜະລິດເງິນຕາອອກມາໃຊ້. ການຜະລິດເງິນມີຄວາມໝາຍສໍາຄັນທີ່ສະແດງໃຫ້ເຫັນເຖິງຄວາມເປັນເອກະລາດທາງດ້ານການເມືອງ ພ້ອມດຽວກັນນັ້ນຍັງສາມາດແກ້ໄຂບັນຫາຂາດແຄນທາງດ້ານການເງິນ. ຈໍານວນເງິນທີ່ຜະລິດອອກມາຮັບໃຊ້ໃນບັນດາລັດຕ່າງໆສູງເຖິງ 209 ລ້ານໂດລາ. ເຖິງແມ່ນວ່າສະກຸນເງິນຈະອ່ອນຕົວແຕ່ມັນກໍ່ເປັນການຄືນລົມຫາຍໃຈໃຫ້ແກ່ການປະຕິວັດ, ປະກອບສ່ວນໃນການສະໜັບສະໜູນໃນການເປີດກວ້າງທາງດ້ານການເງິນ.

ດ້ານການຄ້າຕ່າງປະເທດ: ໃນປີ ຄ.ສ 1778 ອາເມຣິກາໄດ້ເຊັນສັນຍາເປັນພັນທະມິດກັບຝຣັ່ງ, ເປີດກວ້າງການຄ້າຂາຍກັບປະເທດສະວິດເຊີແລັນ.

ຈຸດພິເສດຂອງນະໂຍບາຍທາງດ້ານເສດຖະກິດຫຼັງການປະຕິວັດໃນປີ ຄ.ສ 1775-1783 ແມ່ນການຊຸກຍູ້ອຸດສະຫະກໍາຂະຫຍາຍຕົວ. ນີ້ເປັນພື້ນຖານສໍາຄັນໃຫ້ແກ່ການທໍາລາຍລັດທິຈັກກະພັດນິຍົມ, ປົກປ້ອງໝາກຜົນຂອງການປະຕິວັດ. ຄວາມເປັນເອກະລາດທາງດ້ານການເມືອງ ແລະ ດ້ານເສດຖະກິດແມ່ນຂຶ້ນກັບລະດັບການຂະຫຍາຍຕົວທາງດ້ານອຸດສະຫະກໍາ.

ລັດຖະບານໄດ້ເອົາໃຈໃສ່ຊຸກຍູ້ບັນດາຂະແໜງອຸດສະຫະກຳເພື່ອແກ້ໄຂຄວາມຕ້ອງການທາງດ້ານກະຜະລິດ ແລະ ການຊົມໃຊ້. ຂະແໜງການຜະລິດເຫຼັກ-ເຫຼັກກ້າ, ອາວຸດສົງຄາມ, ຂະແໜງຕຳແຜ່ນແມ່ນໄດ້ຮັບການຊຸກຍູ້ເອົາໃຈໃສ່. ການຜະລິດເຈ້ຍ ແລະ ແກ້ວ-ແຫວ່ນ ແລະ ຂະແໜງການອື່ນລ້ວນແຕ່ໄດ້ຮັບການປັບປຸງ. ຂະແໜງການຜະລິດເສັ້ນດ້າຍ, ຜະລິດຜ້າຖຸມ, ຕ່ຳແຜ່ນຂະຫຍາຍຕົວຢ່າງແຂງແຮງ. ປີ ຄ.ສ 1778 ກອງປະຊຸມທະວີບໄດ້ສ້າງໂຮງງານຫຼອມເງິນຢູ່ ສະປິງຟີນ ອຸດສະຫະກຳປັ່ນດ້າຍກໍ່ໄດ້ຮັບການປັບປຸງ ແລະ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ ຄອນເນັກຕິກັດ, ມັດຊາຊູເສັດ ແລະ ບ່ອນອື່ນໆ. ເຖິງແມ່ນວ່າຜະລິດຕະພັນດ້ານອຸດສະຫະກຳອາເມຣິກາໃນຊຸມປີ 80 ຂອງສະຕະວັດທີ 19 ຈະມີມູນຄ່າພຽງ 5 ລ້ານໂດລາ. ການແຂ່ງຂັນທາງດ້ານອຸດສະຫະກຳຂອງອັງກິດໄດ້ກາຍເປັນສິ່ງທ້າທາຍອັນໃຫຍ່ຫຼວງບົນເສັ້ນທາງແຫ່ງການພັດທະນາທາງດ້ານອຸດສະຫະກຳຂອງອາເມຣິກາ.

ການປະຕິວັດອາເມຣິກາ ໄດ້ພາໃຫ້ເກີດມີນະໂຍບາຍທີ່ກ້າວໜ້າກ່ຽວກັບເສດຖະກິດ ແລະ ສັງຄົມຍ້ອນຜົນປະໂຫຍດທາງດ້ານເສດຖະກິດຂອງຊົນຊັ້ນນາຍທຶນເຈົ້າທາດ, ລະບອບຂ້າທາດແມ່ນບໍ່ໄດ້ຖືກທຳລາຍ. ລະບອບຂ້າທາດຢູ່ພາກໃຕ້ຍັງຄົງຕົວຢູ່.

## 2. ລັດຖະທຳມະນູນ ແລະ ທາດແທ້ຂອງຊົນຊັ້ນນາຍທຶນ.

ໃນຂະບວນການຕໍ່ສູ້ຕ້ານຈັກກະພັດອັງກິດຂອງ 13 ລັດອະນານິຄົມພາໃຫ້ເກີດມີຂໍ້ກຳນົດກົດລະບຽບທີ່ຈຳເປັນ ແລະ ໄດ້ຮັບສັດຕະຍາບັນໃນປີ ຄ.ສ 1781. ບັນດາລັດຍັງຮັກສາສິດອຳນາດໄວ້ໄດ້ ໂດຍສະເພາະສິດໃນການເສຍພາສີ ແລະ ສິດໃນການຄ້າຂາຍ. ສິດໃນການຄຸ້ມຄອງ ແລະ ທວງຄວາມຍຸດຕິທຳຂອງບັນດາລັດຕ່າງໆຍັງບໍ່ທັນໄດ້ຮັບປະກັນ ການບໍລິຫານ ແລະ ຄຸ້ມຄອງເສດຖະກິດຍັງບໍ່ທັນເປັນເອກະພາບ.

ພາຍຫຼັງໄດ້ຮັບໄຊຊະນະ, ການສ້າງຕັ້ງອຳນາດການປົກຄອງຂັ້ນສູນກາງເພື່ອຄຸ້ມຄອງສັງຄົມໄດ້ຊຸກຍູ້ໃຫ້ມີກອງປະຊຸມສະຫະພັນທະລັດໄຂຂຶ້ນໃນເດືອນພຶດສະພາ ປີຄ. ສ 1878, ໃຊ້ເວລາໃນການປຶກສາຫາລືເຖິງ 4 ເດືອນ. ກອງປະຊຸມໄດ້ຮ່າງລັດຖະທຳມະນູນທີ່ມີບົດບາດສຳຄັນໃນປະຫວັດສາດຂອງອາເມຣິກາ.

ພາຍໃຕ້ອະທິປະໄຕຂອງ ຈອດ ວໍຊິງຕັນ ບັນດາຜູ້ແທນກອງປະຊຸມໄດ້ຕົກລົງກັນວ່າປ່ຽນປະເທດອາເມຣິກາຈາກສະຫະພັນທະລັດທີ່ມີຫຼາຍປະເທດມາເປັນປະເທດສະຫະລັດທີ່ມີຫຼາຍລັດ.

ຫຼັກການໃນການຈັດຕັ້ງອຳນາດການປົກຄອງແມ່ນການແບ່ງອອກເປັນ 3 ອຳນາຄື: ອຳນາດໃນການຮ່າງກົດໝາຍ, ອຳນາດໃນການບໍລິຫານ ແລະ ອຳນາດຕຸລາການຕັດສິນຄະດີ.

ປະນານທິບໍດີດຳລົງຕຳແໜ່ງ 4 ປີ ຕໍ່ 1 ສະໄໝ ແມ່ນຜູ້ທີ່ກຳອຳນາດສູງສຸດໃນການບໍລິຫານປະເທດໄດ້ຮັບຕຳແໜ່ງໂດຍການເລືອກຕັ້ງ, ມີ 2 ຊັ້ນຄື: ເຂດເລືອກຕັ້ງ (ທີ່ເອີ້ນວ່າເຂດເລືອກຕັ້ງ) ປະກອບດ້ວຍບຸກຄົນຖືກໄດ້ຮັບເລືອກຕັ້ງໃຫ້ເປັນຕົວແທນເຂົ້າໄປເລືອກເອົາປະທານາທິບໍດີ. ຈຳນວນພົນແມ່ນຂຶ້ນກັບຈຳນວນສະມາຊິກສະພາຜູ້ອາວຸດໂສ ແລະ ສະມາຊິກສະພາຜູ້ແທນລາດສະດອນ. ປະທານາທິບໍດີແມ່ນຜູ້ທີ່ມີສິດອຳນາດຫຼາຍ, ມີສິດບັນຊາການທະຫານ, ປະນານາທິບໍດີຍັງມີສິດໃນກການແກ້ໄຂບັນຫາທີ່ກ່ຽວກັບສິດໃນການສ້າງຕັ້ງກົດໝາຍ, ລວບລວມເອົາສິດອຳນາດທັງໝົດເຂົ້າມາໄວ້ໃນກຳມືໂຄງຮ່າງການຈັດຕັ້ງທາງການເມືອງປະກອບດ້ວຍຄະນະລັດຖະມົນຕີ, ສານຕັດສິນຂອງສະຫະລັດລ້ວນແຕ່ຢູ່ພາຍໃຕ້ການຊີ້ນຳຂອງປະນານາທິບໍດີເປັນຜູ້ຕັດສິນ.

ອຳນາດໃນການຮ່າງກົດໝາຍແມ່ນຂຶ້ນກັບສະພາປະກອບມີ 2 ສະພາ ຄື: ສະພາແຫ່ງຊາດ (ສະພາຊັ້ນສູງ) ແລະ ສະພາປະຊາຊົນ (ສະພາຊົນຊັ້ນຕໍ່າ). ສະພາປະຊາຊົນແມ່ນຂຶ້ນກັບປະຊາຊົນເປັນຜູ້ລເລືອກຕັ້ງ, ຈຳນວນຜູ້ແທນແມ່ນຂຶ້ນກັບຈຳນວນພົນລະເມືອງຢູ່ໃນແຕ່ລະເຂດ. ສ່ວນສະພາແຫ່ງຊາດແມ່ນຜູ້ແທນປະຊາຊົນເປັນຜູ້ແຕ່ງຕັ້ງລັດໜຶ່ງປະກອບມີ 2 ຄົນທີ່ບໍ່ກ່ຽວວ່າຈະມີພົນລະເມືອງໜ້ອຍຫຼືຫຼາຍ ໂດຍແຕ່ງຕັ້ງ 2 ປີ ຕໍ່1 ຄັ້ງ. ສະມາຊິກສະພາແຫ່ງຊາດຕ້ອງປ່ຽນ 1 ໃນ 3. ສ່ວນສະພາປະຊາຊົນ 2 ປີ ເລືອກຕັ້ງ 1 ຄັ້ງ. ສະມາຊິກປະຊາຊົນຖືກຈຳກັດສິດທີ່ມີຕໍ່ກັບປະທານາທິບໍດີ. ລັດຖະສະພາຈຳກັດສິດອຳນາດຂອງປະທານາທິບໍດີດ້ວຍຄະແນນສຽງສ່ວນຫຼາຍກວມ 2/3 ຂອງຈຳນວນສະມາຊິກທັງສອງສະພາໃນການຕັດສິນໃຈ.

ສານປະຊາຊົນສູງສຸດປະກອບດ້ວຍສະມາຊິກທີ່ເປັນທະນາຍທີ່ໄດ້ຈາກການເລືອກຕັ້ງຂອງປະທານາທິບໍດີ ແລະ ໄດ້ຮັບການເຫັນດີຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນ, ສານມີສິດອະທິບາຍກ່ຽວກັບກົດໝາຍ, ລັດຖະທຳມະນູນ ແລະ ກໍ່ຍັງມີສິດໃນການປະກາດຄວາມບໍ່ສັກສິດຂອງບັນດາເອກະສານການເມືອງຂ້າງເທິງນັ້ນ.

ສິດໃນການລົງຄະແນນສຽງເລືອກຕັ້ງສ່ອງແສງທາດແທ້ຂອງຊົນຊັ້ນ ແລະ ການຈຳແນກເຊື້ອຊາດ. ຂ້າທາດຊາວຜິວດຳ ແລະ ຂ້າທາດຊາວຜິວແດງແມ່ນຖືກຕັດສິດທາງດ້ານການເມືອງ. ສ່ວນຊາວຜິວຂາວຕ້ອງແມ່ນຜູ້ທີ່ຮັ່ງມີຈິ່ງຈະສາມາດລົງຄະແນນສຽງເລືອກຕັ້ງໄດ້ການລົງຄະແນນສຽງດ້ວຍເງື່ອນໄຂພາສີຊັບສິນບາງປະການ, ເພດຍິງແມ່ນບໍ່ມີສິດເລືອກຕັ້ງ, ຍ້ອນມີຂໍ້ຈຳກັດຄືແນວນັ້ນເຮັດໃຫ້ຜູ້ມີສິດເລືອກຕັ້ງກວມພຽງແຕ່ 4,8% ຂອງຈຳນວນພົນລະເມືອງທັງໝົດ.

ລັດຖະທຳມະນູນໄດ້ໃຫ້ສັດຕະຍາບັນໃນເດືອນກໍລະກົດ ປີຄ.ສ 1788 ແລະ ມີຜົນນຳໃຊ້ນັບແຕ່ວັນທີ 4 ມີນາ 1789. ທີ່ບັນຍັດເພີ່ມເຕີມກ່ຽວກັບອິດສະຫຼະພາບ ປະຊາທິປະໄຕ 12 ຂໍ້ ຂອງຊົນຊັ້ນກຳມະກອນ.ຈອດ ວໍຊິງຕັນ ຖືກເລືອກຕັ້ງເປັນປະທານາທິບໍດີຄົນທຳອິດຂອງສະຫະລັດອາເມຣິກາ

## IV. ສະພາບການ ແລະ ຄວາມໝາຍຂອງຂະບວນການປະຕິວັດ

ການປະຕິວັດນາຍທຶນອາເມຣິກາດຳເນີນໄປຕາມຮູບແບບການເຮັດສົງຄາມຍາດເອກະລາດໃຫ້ແກ່ປະຊາຊົນອາເມຣິກາເໜືອ. ເປັນສົງຄາມທີ່ຍິ່ງໃຫຍ່ ແລະ ມີຄວາມໝາຍ, ເປັນສົງຄາມເພື່ອປົດປ່ອຍຊາດ ແລະ ເພື່ອການປະຕິວັດຊາດ.[6]

ໜ້າທີ່ຂອງຂະບວນການປະຕິວັດແມ່ນການເລີ່ມຕົ້ນຈາກຄວາມຄວາມຕ້ອງການຂະຫຍາຍເສດຖະກິດປະຊາທິປະໄຕຕາມແບບທຶນນິຍົມ. ຄວາມຕ້ອງການອັນໃຫຍ່ຫຼວງກ່ຽວກັບດິນນາ, ກ່ຽວກັບການຄ້າ ແລະ ການອຸດສະຫະກຳໄດ້ເຮັດໃຫ້ຂະບວນການປະຕິວັດເກີດຂຶ້ນ. ໜ້າທີ່ໃນການຕໍ່ສູ້ຕ້ານກັບແອກປົກຄອງຂອງຈັກກະພັດອັງກິດ, ຕ້ານກັບສັກດີນາ ແລະ ສ້າງຕັ້ງການພົວພັນແບບໃໝ່ ແລະ ລະບົບການປົກຄອງໃໝ່. ແຕ່ຖ້າຕ້ອງການສຳເລັດໜ້າທີ່ໃນການຕໍ່ສູ້ທຳອິດຕ້ອງດຳເນີນການຕໍ່ສູ້ລົບລ້າງການປົກຄອງແບບບໍ່ມີເຫດຜົນຂອງປະເທດອັງກິດ, ສ້າງຕັ້ງປະເທດໜຶ່ງທີ່ມີເອກະລາດຂອງປະຊາຊົນບັນດາເຜົ່າຢູ່ອາເມຣິກາເໜືອ.

ກອງກຳລັງທີ່ເຂົ້າຮ່ວມໃນການປະຕິວັດມີບົດບາດຕັດສິນຊີ້ຂາດໄຊຊະນະຂອງຂະບວນການປະຕິວັດ ໂດຍສະເພາະແມ່ນກຳລັງຂອງປະຊາຊົນ ແລະ ຊາວຜູ້ອອກແຮງງານ. ພວກຂ້າທາດ, ກຳມະກອນ, ພວກ ຟາກເຊີ ຜູ້ທຸກຍາກ, ຊາວນາທີ່ບໍ່ມີດິນນາໄດ້ເຂົ້າຮ່ວມຂະບວນການປະຕິວັດຢ່າງສຸດໃຈ, ພວກເຂົ້າໄດ້

[6] ອາລາດີເມຍ ເລນິນ ວາລະສານຄວາມຈິງ, 1971 ໜ້າທີ 70

ປະກອບສ່ວນວັດຖຸເງິນຄຳ, ກຳລັງແຮງງານແຮງງານເພື່ອໃຫ້ໄດ້ມາເຊິ່ງໄຊຊະນະແຫ່ງການປະຕິວັດ, ແມ່ນກຸ່ມຄົນທີ່ຮັບໃຊ້ໃນກອງກຳລັງປະຕິວັດທີ່ບັນຈຸໃນກຳລັງປືນໃຫຍ່, ກອງທັບເຮືອ, ທະຫານລາບ. ກອງລຳລຽງ, ກອງໂຈນ ຫຼື ກອງຫຼອນຕີ ພວກເຂົາດຳເນີນການຕໍ່ສູ້ ແລະ ອອກແຮງງານຢ່າງຈິງຈັງ. ຄວາມຈິງແລ້ວຂໍ້ຂັດແຍ່ງລະຫວ່າງຫົວເມືອງຂຶ້ນ ແລະ ລາຊະອານາຈັກອັງກິດໄດ້ເຮັດໃຫ້ໜ້າທີ່ໃນການປົດປ່ອຍອິດສະຫຼະພາບຖືເປັນໜ້າທີ່ທຳອິດຂອງການປະຕິວັດເຊິ່ງມັນໄດ້ກາຍເປັນຄຳຂວັນໃນຄັນທຸງແຫ່ງການປະຕິວັດເພື່ອເຕົ້າໂຮມເອົາທຸກຊັ້ນຄົນໃນສັງຄົມອາເມຣິກາເໜືອໄດ້ສາມັກຄີກັນຕໍ່ສູ້ເພື່ອເອກະລາດ ແລະ ອິດສະຫຼະພາບຈຶ່ງເຮັດໃຫ້ຂະບວນການປະຕິວັດເປັນຂະບວນການຕໍ່ສູ້ຂອງມະຫາຊົນ.

ແຕ່ວ່າໃນໄລຍະປະຫວັດສາດຂອງຂະບວນການປະຕິວັດນາຍທຶນອາເມຣິກາເປັນຂະບວນການຕໍ່ສູ້ເພື່ອປະຕິວັດສັງຄົມທີ່ມີຊົນຊັ້ນນາຍທຶນເປັນຜູ້ນຳພາ. ທີ່ມີລັກສະນະເປັນຕົວແທນໃຫ້ແກ່ການພົວພັນສັງຄົມແບບໃໝ່ທີ່ມີຄວາມກ້າວໜ້າ, ມີໄຊຊະນະຍ້ອນເງື່ອນໄຂທາງສັງຄົມເປັນສິ່ງຕັດສິນ. ຊົນຊັ້ນນາຍທຶນອາເມຣິກາ, ຊົນຊັ້ນເຈົ້າຂອງນິຄົມກະເສດໄດ້ກາຍເປັນຜູ້ນຳພາຂະບວນການປະຕິວັດ. ນະໂຍບາຍທາງດ້ານເສດຖະກິດສັງຄົມໄດ້ສ່ອງແສງໃຫ້ເຫັນລັກສະນະໃນການປ້ອງກັນສິດຜົນປະໂຫຍດຢ່າງຈະແຈ້ງຂອງຊົນຊັ້ນນາຍທຶນ ແລະ ເຈົ້າທາດ. ດິນນາຍັງຕົກຢູ່ໃນກຳມືຂອງນາຍທຶນໃຫຍ່ ແລະ ເຈົ້າຂອງນິຄົມກະເສດ. ລະບອບຂ້າທາດບໍ່ໄດ້ຮັບການລົບລ້າງສິດໃນການເລືອກຕັ້ງ, ຮັບສະໝັກເລືອຕັ້ງ ແລະ ສິດອິດສະຫຼະພາບມີລັກສະນະຈຳກັດທີ່ສຸດ.

ຂະບວນການປະຕິວັດນາຍທຶນອາເມຣິກາມີຄວາມໝາຍປະຫວັດສາດອັນໃຫຍ່ຫຼວງໃນປະຫວັດສາດ, ແມ່ນການປະຕິວັດນາຍທຶນທຳອິດທີ່ຍົກໃຫ້ເຫັນຄວາມຕ້ອງການປົດປ່ອຍປະຊາຊົນບັນດາເຜົ່າ. ການຕໍ່ສູ້ ແລະ ການຍາດເອົາໄຊຊະນະໃນການຕໍ່ສູ້ຕ້ານກັບລະບອບການປົກຄອງຫົວເມືອງຂອງຈັກກະພັດອັງກິດເຊິ່ງໄລຍະນັ້ນກຳລັຂະຫຍາຍຕົວເຊິ່ງມີຄວາມໝາຍປະຫວັດສາດອັນໃຫຍ່ຫຼວງ.

ຖະແຫຼງການປະກາດເອກະລາດຂອງການປະຕິວັດຂອງອາເມຣິກາໄດ້ກາຍເປັນຄັນທຸງອິດສະຫຼະບົນຫຼັກການທີ່ແນ່ນອນ, ມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບການປະຕິວັດ ແລະ ການປົດປ່ອຍປະຊາຊົນ. ຈຸດປະສົງຂອງສົງຄາມແມ່ນການສ້າງຄວາມພາກພູມໃຈ ແລະ ຄວາມດີໃຈຂອງປະຊາຊົນໃນຫຼາຍປະເທດ. ນັກຮົບປະຊາທິປະໄຕ ຂອງອັງກິດ, ຝຣັ່ງ ແລະ ໂຮນລັງ ໄດ້ສະໝັກໃຈເຂົ້າຮ່ວມຂະບວນການຕໍ່ສູ້ເພື່ອ

ເອກະລາດ ແລະ ອິດສະຫຼະພາບ ຂອງອາເມຣິກາ. ແຊັງຊີໂມງ ແມ່ນຄົນໜຶ່ງທີ່ເປັນຕົວແທນ. ຂະບວນການປະຕິວັດນີ້ມີຜົນກະທົບອັນໃຫຍ່ຫຼວງຕໍ່ກັບຂະບວນການຕໍ່ສູ້ຂອງປະຊາຊົນຢູ່ທະວີບອາເມຣິກາ ແລະ ເອີຣົບ.

ຕໍ່ກັບປະຊາຊົນອາເມຣິກາຂະບວນການປະຕິວັດນາຍທຶນອາເມຣິກາມີຄວາມໝາຍຄືເປັນການກຳເນີດປະເທດ, ມັນໄດ້ນຳເອົາສິ່ງທີ່ກ້າວໜ້າມາສູ່ປະຊາຊົນບັນດາເຜົ່າ. ຕໍ່ກັບນະໂຍບາຍໃນການສະສົມດິນນາຂອງພວກເຈົ້າທີ່ດິນສັກດີນາໄດ້ຮັບຜົນກະທົບ, ມີການລົບລ້າງກົດໝາຍຫ້າມບໍ່ໃຫ້ອົບພະຍົບ ແລະ ຢຶດຄອງດິນແດນຂອງເຈົ້າຊີວິດ. ຂະບວນການປະຕິວັດນາຍທຶນໄດ້ເປັນການເປີດເສັ້ນທາງໃຫ້ແກ່ການຂະຫຍາຍຕົວຂອງນາຍທຶນກະສິກຳສະເພາະຂອງຕົນ ລະບອບ ຟາກເມີ ໄດ້ເຮັດໃຫ້ເສດຖະກິດກະສິກຳອາເມຣິກາ ມີຄວາມໝັ້ນຄົງ ສິບປີຕໍ່ມາສາມາດຍາດເອົາບົດບາດໃນລະດັບຕົ້ນໆໃນການພັດທະນາກະສິກຳໃນໂລກ.

ພ້ອມດຽວກັນນັ້ນການປະຕິວັດນາຍທຶນໄດ້ສ້າງເງື່ອນໄຂໃນການຂະຫຍາຍຕົວຢ່າງກວ້າງຂວາງໃຫ້ແກ່ການຄ້າ ແລະ ອຸດສະຫະກຳ ນາຍທຶນ ອາເມຣິກາ. ປະເທດທຶນນິຍົມນ້ອຍໄດ້ເກີດຂຶ້ນເພື່ອສືບທອດໝາກຜົນຂອງການປະຕິວັດເຕັກນິກໃໝ່ໃນພື້ນຖານແຫ່ງກຳລັງການພັດທະນາການຜະລິດໃຫ້ຂະຫຍາຍຕົວທີ່ສຸດໃນໄລຍະຕໍ່ມາ.

# ບົດທີ 4

# ຂະບວນການປະຕິວັດນາຍທຶນຝຣັ່ງຫຼັງສະຕະວັດທີ 18

## I. ລະບອບລາຊາທິປະໄຕສົມບູນສິດ ບວກບົງ

ກ່ອນການປະຕິວັດຝຣັ່ງເປັນປະເທດໜຶ່ງທີ່ປົກຄອງແບບລາຊາທິປະໄຕສົມບູນສິດແບບສັກດີນາ, ເຈົ້າຊີວິດກຳອຳນາດທັງໝົດຢູ່ໃນກຳມືໂດຍບໍ່ຍອມໃສ່ໃຈກັບການກອດກາໃດໆເລີຍ.ເຈົ້າຊີວິດມີສິດຕັດສິນບັນຫາພາຍໃນ ແລະ ພາຍນອກ, ແຕ່ງຕັ້ງ ແລະ ປົດຕຳແໜ່ງລັດຖະມົນຕີ ແລະ ພະນັກງານຂອງລັດ, ຮ່າງ ແລະ ລົບລ້າງກົດໝາຍ, ລົງໂທດ ແລະ ອະໄພຍະໂທດ... ເຈົ້າຊີວິດ ຫຼຸຍທີ 16 ທີ່ນອນໃນລາດຊະວົງ ບວກບົງ ຂຶ້ນຄອງລາດໃນປີ 1774 ປົກກະຕິແລ້ວຈະຖືເອົາຄວາມຕ້ອງການຂອງຕົນເປັນກົດໝາຍ ແລະ ອຳນາດຂອງກະສັດແມ່ນເທບພະເຈົ້າເປັນຄົນປະທານມາໃຫ້ເພື່ອປົກຄອງປະເທດຊາດ.



ເຈົ້າຊີວິດ ຫຼຸບ ທີ 16 ຂອງຝຣັ່ງ

ເຄື່ອງມືໃນການປົກຄອງປະເທດສັກດີນາປະກອບມີກຳລັງທະຫານ, ຕຳຫຼວດ ແລະ ໂບດຕົວແທນໃຫ້ແກ່ລະບອບຜະເດັດການ ແມ່ນຄຸກ ບັດສຕິນຢູ່ທີ່ປາຣີ. ຄຸກ ບັດສຕິນແມ່ນຄຸກທີ່ເກົ່າແກ່ ແລະ ມີຄວາມ

ສູງ 23 ແມັດ, ຝາມີຄວາມຍາວແຕ່ 1,6 ແມັດ ຫາ 1,8 ແມັດ, ມີຫ້ອງໃຕ້ດິນໃຊ້ເພື່ອຄຸມຂັງຄົນ ໃນນັ້ນຈະມີສັດຮ້າຍເຊັ່ນ: ງູ ແລະ ຂີ້ເຂັບ.



ຄຸກບັດສຕິນຢູ່ປາຣີ

ໂບດປົກຄອງ ແລະ ຄອບງໍາຈິດໃຈທີ່ມີອິດທິພົນຫຼາຍຕໍ່ກັບປະຊາຊົນ, ພວກເຂົາມີຄວາມເຊື່ອທີ່ວ່າກະສັດແມ່ນພະຜູ້ເປັນເຈົ້າ ເພື່ອສັ່ງສອນໃຫ້ເຂົາເຈົ້າຈົ່ງຮັກພັກດີຕໍ່ລະບອບຜະເດັດການຂອງເຈົ້າຊີວິດ.

ອົງການຈັດຕັ້ງການປົກຄອງແມ່ນຕົກຢູ່ໃນກໍາມືຂອງເຈົ້າຊີວິດ, ເຈົ້າຊີວິດດໍາອະນາດການປົກຄອງຂັ້ນສູນກາງປະກອບມີບັນດາກະຊວງການຕ່າງໆ ແລະ ບັນດາຫ້ອງການ ຫຼື ສະມາຄົມສໍາລັບຊ່ວຍວຽກກະສັດ. ເຈົ້າຊີວິດແຕ່ງຕັ້ງຜູ້ທີ່ໄວ້ເນື້ອເຊື່ອໃຈໄປປົກຄອງຢູ່ຂັ້ນທ້ອງຖິ່ນ. ບັນດາຜູ້ປົກຄອງເມືອງຕ່າງໆມີອໍານາດອັນໃຫຍ່ຫຼວງເພາະວ່າກຸ່ມຄົນເຫຼົ່ານີ້ເປັນຕົວແທນໃຫ້ແກ່ກະສັດໃນການແກ້ໄຂບັນຫາທຸກວຽກງານ, ພວກເຂົາໃຊ້ອໍານາດຕາມອໍາເພີໃຈຮຸນແຮງຂຶ້ນເລື້ອຍໆ, ກົດຂີ່ຂູດຮີດປະຊາຊົນໂດຍບໍ່ມີການກໍານົດຂໍ້ຫ້າມໃດໆ. ເບິ່ງລວມແລ້ວບັນດາຕໍາແໜ່ງໃນລະບົບການປົກຄອງລ້ວນແຕ່ມີການຊື້ຂາຍ. ພຽງແຕ່ເສຍເງິນຈໍານວນໜຶ່ງກໍ່ສາມາດມີຕໍາແໜ່ງໃຫ້ລະບົບການປົກຄອງ, ໂດຍການກົດຂີ່ຂູດຮີດເອົາເງິນຂອງປະຊາຊົນ. ການຄັດເລືອກດ້ວຍວິທີການດັ່ງກ່າວນັ້ນເຮັດໃຫ້ລັດຖະບານກາຍເປັນພາລະອັນໜັກໜ່ວງສໍາລັບປະຊາຊົນຍ້ອນລະບົບລາດຊະການແບບສໍ້ລາດບັງຫຼວງ ແລະ ຄວາມບໍ່ຍຸດຕິທໍາ. ຍິ່ງໄປກວ່ານັ້ນລະບອບຜະເດັດການ

ໄດ້ຮັກສາກົດໝາຍ, ບັນດາກົດລະບຽບ ແລະ ປະເພນີນິຍົມສັກດິນາທີ່ບັນຈຸເຂົ້າໃນໂຄງຮ່າງການຈັດຕັ້ງການປົກຄອງ ສະນັ້ນ, ເປັນການຍາກຫຼາຍທີ່ປະເທດຝຣັ່ງຖືກຕັດແບ່ງອອກເປັນແຂວງນ້ອຍໆ, ແຕ່ລະແຂວງກໍ່ຖືກຕັດແບ່ງເປັນຫົວໜ່ວຍການປົກຄອງທີ່ມີອໍານາດນ້ອຍລົງໄປອີກ. ການຕັດແບ່ງດິນແດນຄືແບບນັ້ນແມ່ນບໍ່ໄດ້ອີງໃສ່ຈຸດພິເສດ ຫຼື ຄວາມຕ້ອງການທາງດ້ານເສດຖະກິດແຕ່ອີງໃສ່ເຫດຜົນທາງປະຫວັດສາດ. ສ່ວນຫຼາຍບັນດາແຂວງຕ່າງໆຈະແມ່ນບັນດາອະນາເຂດຂອງສັກດິນາໃນເມື່ອກ່ອນທີ່ຄ່ອຍໆລວມຕົວກັນເປັນເອກະພາບໃນລາຊະອານາຈັດຝຣັ່ງ. ສະນັ້ນ, ບັນດາແຂວງຕ່າງໆຈິ່ງຮັກສາລັກສະນະພິເສດນີ້ໄວ້. ເປັນຕົ້ນແມ່ນກົດລະບຽບ, ການເກັບພາສີ, ການກໍານົດລາຄາສິນຄ້າ ແລະ ລະບົບການວັດແທກທີ່ແຕກຕ່າງກັນອອກໄປ, ສິ່ງນັ້ນພາໃຫ້ເກີດບັນຫາໃນການຈັດຕັ້ງການປົກຄອງ ແລະ ການພັດທະນາເສດຖະກິດການຄ້າ ແລະ ການອຸດສະຫະກໍາ.

ນັບຕັ້ງແຕ່ຂຶ້ນຄອງລາດຊະບັນລັງ ເຈົ້າຊີວິດ ຫຼຸຍທີ 16 (ປີ ຄ.ສ 1754-1793) ແມ່ນສືບຕໍ່ເພີ່ມທີວິການປະຕິຮູບຕາມລະພັງໃຈ ແລະ ຫຼິ້ນກິນຟຸມເຟືອຍຄືກັບເຈົ້າຊີວິດອົງກ່ອນໆ.

ເຈົ້າຊີວິດດໍາລົງຊີວິດຢູ່ໃນພະລາດຊະວັງແວກຊາຍຮ່ວມກັບຂ້າທາດສະບໍລິວານເປັນຈໍານວນເກືອບ 2.000 ຄົນສັບປ່ຽນກັນໄປຮັບໃຊ້ໃຫ້ແກ່ລາດຊະວົງ ແລະ ດໍາລົງຊີວິດຢູ່ບົນຄວາມໂຊກດີ. ຄວາມຈິງແລ້ວເຈົ້າຊີວິດເປັນບຸກຄົນໜຶ່ງທີ່ຮັ່ງມີອຸດົມສົມບູນ, ມີຄວາມກຽດຄ້ານ, ເປັນຄົນບໍ່ກ້າຫານ, ເວລາທັງໝົດທີ່ມີແມ່ນໃຊ້ເຂົ້າໃນການລ່າສັດ. ເປັນບຸກຄົນທີ່ມີອິດທິພົນອັນໃຫຍ່ຫຼວງຕໍ່ການການປົກຄອງຂອງເຈົ້າຍິງ ແມຣີແອັງຕົວແນັດ ພະລາຊິນີແຫ່ງປະເທດ ໂອຕຣິດ, ເປັນເຈົ້າຍິງທີ່ມີຄວາມງົດງາມ ແລະ ມີນິໄສເຈົ້າກີ້ເຈົ້າການ.

ການໃຊ້ຊີວິດຂອງເຈົ້າຊີວິດ ແລະ ບັນດາລາດຊະວົງມີຄວາມຫຼູຫຼາ ແລະ ສິ້ນເປືອງຫຼາຍ ແຕ່ລະປີຕ້ອງໄດ້ນໍາໃຊ້ເງິນຈໍານວນ 1/12 ຂອງຈໍານວນເງິນທັງໝົດໃນປະເທດເຊິ່ງເປັນພາລະອັນໜັກໜ່ວງຂອງປະຊາຊົນ. ມີຄົນເວົ້າວ່າ: ລາດຊະວົງແມ່ນຫຼຸມຝັງສົບຂອງປະເທດຊາດ



ພະລາດຊະວັງແວກຊາຍຂອງຝຣັ່ງ

## 1. ສະພາບການທາງດ້ານກະສິດກຳ ແລະ ການພົວພັນດິນນາໃນລະບອບສັກດີນາ.

ຮອດ ສະຕະວັດທີ 18 ໃນເວລານັ້ນອັງກິດເປັນປະເທດທີ່ມີຄວາມເຂັ້ມແຂງໃນການປະຕິວັດອຸດສະຫະກຳຕາມແບບລັດທະທຶນນິຍົມ ແຕ່ຝຣັ່ງຍັງເປັນປະເທດກະສິກຳທີ່ຫຼ້າຫຼັງ. ພົນລະເມືອງ 22 ລ້ານຄົນ (ກວມ 90% ຂອງພົນລະເມືອງທັງໝົດ) ຢຶດຖືອາຊີບກະສິກຳໃນການດຳລົງຊີວິດ, ເຄື່ອງມື ແລະ ວິທີການປູກຝັງຍັງຫຼ້າຫຼັງ, ບໍ່ທັນສະໄໝ 1/3 ຂອງດິນຖືກຖິ້ມປະໃຫ້ຫວ່າງເປົ່າ, ບໍ່ທຳການຜະລິດ, ຜົນຜະລິດແຕ່ລະປີຍັງຕ່ຳ. ດ້ານກະສິກຳຂະຫຍາຍຕົວຊ້າແມ່ນເກີດມາຈາກຜົນສະທ້ອນຂອງການປົກຄອງໃນລະບອບສັກດີນາ. ລະບອບການປົກຄອງແບບນີ້ໄດ້ຝັງແໜ້ນເຂົ້າໃນເຂດຊົນນະບົດ ທີ່ນັບມື້ນັບກາຍເປັນສິ່ງທີ່ຫຼ້າສະໄໝ, ບໍ່ທັນກັບຍຸກ.

ສາຍພົວພັນດິນນາແບບສັກດີນາໄດ້ມີບົດບາດກັບການປົກຄອງຢູ່ຕາມເຂດຊົນນະບົດ, ດິນຕອນຕອນຫຍ້າໃນທົ່ວປະເທດເປັນກຳມະສິດຂອງເຈົ້າຊີວິດ. ກະສັດໄດ້ເອົາດິນດອນຕອນຫຍ້າແຈກຢາຍໃຫ້

ບັນດາຂ້າທາດບໍລິວານຜູ້ໄວ້ເນື້ອເຊື່ອໃຈ. ຕາມແນວທາງຂອງລະບອບສັກດີນາ, ຕອນດິນຈະຕົກຢູ່ໃຕ້ກຳມື ຂອງພວກຂຸນນາງ. ຂຸນນາງທຸກຄົນຈະເປັນເຈົ້າຂອງຕອນດິນທີ່ກວ້າງໃຫຍ່, ບາງບ່ອນກວມເອົາທັງໝົດໃນ ຂົງເຂດນັ້ນ. ພວກ ລອດ Lord ກໍ່ມີສິດຄອບຄອງດິນນາທີ່ກວ້າງຂວາງເຊັ່ນກັນ.

ບັນດາຕອນດິນດັ່ງກ່າວນັ້ນຖືກນຳໃຊ້ 2 ຮູບແບບຄື: ໂບດຈະແບ່ງເອົາຕອນໜຶ່ງທີ່ມີຂະໜາດເນື້ອທີ່ ບໍ່ໃຫຍ່ປານໃດເພື່ອມາສ້າງບ່ອນຢູ່ອາໄສ, ໃນນັ້ນຍັງຖືກຕັດແບ່ງດິນອອກເປັນຕອນນ້ອຍໆເພື່ອແຈກຢາຍ ໃຫ້ຂຸນນາງແລ້ວແຈກຢາຍໃຫ້ຊາວນາທຳການຜະລິດແຕ່ຕ້ອງເສຍພາສີດ້ວຍຜົນຜະລິດ ຫຼື ອາຈະເປັນວັດຖຸ ເງິນຄຳກໍ່ໄດ້. ມີການເຊັນສັນຍາທຳການຜະລິດໂດຍກຳນົດໄລຍະເວລາອະນຸຍາດໃຫ້ຊາວນາລົງນາມທຳການ ຜະລິດແມ່ນນັບແຕ່ໄລຍະ 1 ເດືອນ ຫາ 3 ປີ , ບາງຄັ້ງກໍ່ຮອດ 5 ປີ. ໝາຍຄວາວ່າ 3 ປີ ຕ້ອງໄດ້ປູກ 3 ຄັ້ງ ແລະ ເສຍພາສີ 3 ຄັ້ງ, ບາງຄັ້ງກໍ່ດົນກວ່ານີ້ອີກ. ເມື່ອໝົດເວລາຕາມສັນຍາຕ້ອງໄດ້ສົ່ງດິນໃຫ້ພວກ ລອດ Lord ຄືນ. ນອກຈາກດິນສຳລັບການສ້າງທີ່ຢູ່ອາໄສແລ້ວຍັງມີຕອນດິນທີ່ນຳໃຊ້ເຂົ້າໃນການປູກຝັງຢູ່ຕາມ ນິຄົມກະເສດນີ້ເປັນຮູບແບບພື້ນຖານຂອງລະບົບການນຳໃຊ້ດິນນາຢູ່ປະເທດຝຣັ່ງໃນຊ່ວງສະຕະວັດທີ 17 ຫາສະຕະວັດທີ 18. ດິນເກືອບເຄິ່ງໜຶ່ງ (ມີຂະໜາດໃຫຍ່ນ້ອຍແຕກຕ່າງກັນໄປຕາມແຕ່ລະແຂວງ ນັບແຕ່ 30%-60%) ຖືກແຈກຢາຍໃຫ້ຊາວນາໃນຟາມ. ຕາມຮູບແບບການຜະລິດແບບນີ້, ແມ່ນຊາວນາອອກແຮງ ງານໃນຕອນດິນນັ້ນແຕ່ບໍ່ມີສິດເປັນເຈົ້າຂອງທີ່ດິນ, ຕ້ອງໄດ້ເສຍພາສີນ້ຳມັນໃຫ້ແກ່ໂບດເຊິ່ງຕ່າງຈາກພວກ ທີ່ດຳເນີນການເຊົ່າດິນ. ບັນດາຊາວນາທີ່ຢູ່ໃນຟາມແມ່ນຈະບໍ່ໄດ້ສົ່ງດິນໃຫ້ພວກ ລອດ Lord ຄືນພຽງແຕ່ ພວກເຂົາຕ້ອງເສຍພາສີເປັນປົກກະຕິກໍ່ສາມາດນຳໃຊ້ຕອນດິນດັ່ງກ່າວເຂົ້າໃນການປູກຝັງ-ລ້ຽງສັດຕະຫຼອດ ໄປຈົນຮອດລຸ້ນລູກຫຼານໝາຍຄວາມວ່າເວລາຕາຍໄປລູກຫຼານຕ້ອງເສຍພາສີສືບຕໍ່ເຮັດການຜະລິດໃນຕອນ ດິນດັ່ງກ່າວ.

ດ້ານກົດໝາຍ: ປະຊາຊົນແມ່ນມີອິດສະຫຼະພາບໃນຕົນເອງ, ບາງຂົງເຂດຢູ່ພາກຕາເວັນອອກ ແລະ ພາກເໜືອຂອງຝຣັ່ງຍັງມີຊາວນາທຳການຜະລິດໃນຟາມໜ້ອຍໜຶ່ງເທົ່ານັ້ນ ແຕ່ວ່າສ່ວນຫຼາຍຈະແມ່ນ ຊາວນາອິດສະຫຼະ, ພວກເຂົາມີສິດອິດສະຫຼະໃນການຍົກຍ້າຍບ້ານເຮືອນ, ມີສິດເຊັນສັນຍາຊັບສິນ ແລະ ມີສິດໃນການຖ່າຍທອດ ແລະ ສືບທອດມໍລະດົກ.

ເຖິງຢ່າງໃດກໍ່ຕາມໄລຍະຕໍ່ມາບັນດາກົດໝາຍດັ່ງກ່າວແມ່ນຍັງຂຶ້ນກັບສະພາບຄວາມເປັນຈິງ. ບັນດາ ຊາວນາທີ່ອອກແຮງງານໃນຟາມແມ່ນຖືກຜູກຂາດກັບດິນນາ ແລະ ສິດອຳນາດຂອງພວກ ລອດ Lord ,

ພິເສດແມ່ນພວກເຂົາຍັງຕ້ອງອອກແຮງງານຮັບໃຊ້ໃຫ້ກັບຄອບຄົວພວກ ລອດ Lord ພວກເຂົາຕ້ອງເສຍພາສີທີ່ດິນ (ຄິດເປັນ 1/3 ຫຼື ½ ຂອງຜົນຜະລິດທີ່ເກັບກ່ຽວໄດ້) ນອກຈາກນີ້ພວກເຂົາຍັງຕ້ອງເສຍພາສີອື່ນອີກ. ຊາວນາທີ່ອອກແຮງງານໃນຟາມແມ່ນຜູ້ທີ່ບໍ່ມີສິດເປັນເຈົ້າຂອງດິນນາ. ນອກຈາກຈະເສຍພາສີນໍ້າມັນ 1/6 ແລ້ວ (ບາງຄັ້ງກໍ່1/4 ຫຼື ½ ຂອງຜົນຜະລິດເຂົ້າທີ່ເກັບກ່ຽວໄດ້ທັງໝົດ) ແລະ ຍັງຕ້ອງເຊື່ອຟັງຕາມຄໍາສັ່ງຂອງພວກ ລອດ Lord.

ການກົດຂີ່ຂູດຮີດຜູ້ດໍາເນີການຜະລິດນ້ອຍ, ຊາວນາທີ່ມີສັນຍາເຊົ່າ ແລະ ຊາວນາໃນຟາມແມ່ນແຫຼ່ງທໍາມາຫາກິນຕົ້ນຕໍຂອງພວກຂຸນນາງ, ນັກບວດ ແລະ ອານາຈັກ.  ຮອດສະຕະວັດທີ 17 ລະບົບການຜະລິດແບບສັກດີນາໄດ້ຂະຫຍາຍຕົວສູງສຸດ ແລະເປັນໄລຍະສຸດທ້າຍຂອງລະບອບສັກດີນາ ເພາະວ່າໄດ້ເຈົ້າທີ່ດິນມາມີບົດບາດໃນການຄຸ້ມຄອງການເສຍພາສີທີ່ດິນໃນສະໄໝສັກດີນາ ໝາຍຄວາມວ່າຊາວນາຕ້ອງໄດ້ປ່ຽນຮູບແບບການເສຍພາສີໂດຍການຄິດໄລ່ເປັນຈໍານວນເງິນ, ບໍ່ສະເພາະແຕ່ພາສີນໍ້າມັນ ແລະພາສີທີ່ດິນເທົ່ານັ້ນທີ່ເກັບເປັນເງິນ ນັບທັງພາສີອະນາໄມ, ພາສີ 1/10 ທີ່ຕ້ອງມອບໃຫ້ໂບດ, ພັນທະໃນລະບອບສັກດີນາກໍ່ລ້ວນແຕ່ຄິດໄລ່ເປັນເງິນທັງສິ້ນ. ເຖິງແມ່ນວ່າຮູບແບບການພົວພັນແບບເງິນຕາໃນເຂດຊົນນະບົດຈະບໍ່ສາມາດລົບລ້າງການຜະລິດກະສິກໍາແບບທໍາມະຊາດ ເພາະວ່າປະຊາຊົນຜະລິດອອກມາເພື່ອຊົມໃຊ້ໃນຄົວເຮືອນ ຍັງບໍ່ທັນນໍາມາຄ້າຂາຍໃນທ້ອງຕະຫຼາດ. ພວກເຂົາມີແຕ່ເອົາຜົນຜະລິດໄປແລກເອົາເງິນເພື່ອໄປເສຍພາສີໃຫ້ພວກສັກດີນາເທົ່ານັ້ນ ສະນັ້ນຈຶ່ງເຮັດໃຫ້ສິນຄ້າອຸດສະຫະກໍາທີ່ຝຣັ່ງຜະລິດອອກມາຈຶ່ງບໍ່ສາມາດຂາຍໄດ້ຫຼາຍທ້ອງຕະຫຼາດເຂດຊົນນະບົດ.

ເຊິ່ງຕ່າງຈາກປະເທດອັງກິດໃນສະຕະວັດທີ16-17 ລັດທິທຶນນິຍົມໄດ້ແຊກແຊງເຂົ້າທາງດ້ານກະສິກໍາ. ເຈົ້າທີ່ດິນໄດ້ປ່ຽນມາເປັນນັກທຸລະກິດຕາມຮູບແບບລັດທິທຶນນິຍົມເຮັດໃຫ້ເກີດມີຊົນຊັ້ນຂຸນນາງໃໝ່ເກີດຂຶ້ນ. ສ່ວນຢູ່ຝຣັ່ງກ່ອນການປະຕິວັດທຶນນິຍົມຢູ່ເຂດຊົນນະບົດແມ່ນມີໜ້ອຍທີ່ສຸດ. ໃນຫຼາຍຂົງເຂດໂດຍສະເພາະແມ່ນພາກຕາເວັນອອກສ່ຽງເໜືອເຈົ້າທີ່ດິນໃຫຍ່ບາງຄົນໄດ້ສ້າງຟາມຂະໜາດ ໃຫຍ່ຕາມວິທີການກົດຂີ່ຂູດຮີດແບບລັດທິທຶນນິຍົມ ແຕ່ວ່າບໍ່ປະສົບຜົນສໍາເລັດ. ພວກເຂົາໄດ້ທໍາການຂັບໄລ່ຊາວນາອອກຈາກດິນນາ ແລະ ລວບລວມຕອນດິນນ້ອຍໃຫ້ກາຍເປັນຕອນດິນຂະໜາດໃຫຍ່ເພື່ອດໍາເນີນທຸລະກິດແບບທຶນນິຍົມ. ໃນຫຼາຍແຂວງຕອນດິນໄດ້ຕົກຢູ່ໃນກໍາມືຂອງພວກນາຍທຶນ. ສ່ວນໃນສັງຄົມຊາວນາ

ເກີດມີປະກົດການແບ່ງແຍກຊັ້ນຄົນໃນສັງຄົມ. ຊາວນາຜູ້ຮັ່ງມີເລີ່ມປະກົດຕົວຂຶ້ນ, ແຕ່ປະກົດການດັ່ງກ່າວມີໜ້ອຍ, ບໍ່ທັນມີບົດບາດທາງດ້ານເສດຖະກິດສັງຄົມຂອງຝຣັ່ງ.

ຍ້ອນແນວນັ້ນມາຮອດທ້າຍສະຕະວັດທີ 18 ຂະແໜງກະສິກຳຂອງຝຣັ່ງຍັງຢຶດຖືຕາມຮູບແບບສັກດີນາທີ່ຫຼ້າສະໄໝ. ພວກ ລອດ Lord ຍັງຄົງຮັກສາຮູບແບບການກົດຂີ່ຂູດຮີດຕາມແບບສັກດີນາໄວ້ຢູ່.

ໃນຊຸມປີ 70-80 ຂອງສະຕະວັດທີ 18 ສິນຄ້າກະສິກຳຕົກຕໍ່າເຮັດໃຫ້ພວກເຈົ້າທີ່ດິນຫຼຸບທຶນຢ່າງໜັກໜ່ວງ ໂດຍອາໄສຊ່ອງຫວ່າງດັ່ງກ່າວນັ້ນພວກເຂົາໄດ້ປະຕິບັດນະໂຍບາຍຄື: ເພີ່ມທະວີການເກັບພາສີ, ຟື້ນຟູຄືນບາງກົດໝາຍໝາຍສັກດີນາທີ່ຖືກປະຖິ້ມມາຕັ້ງແຕ່ດົນນານເພື່ອກອບໂກຍເອົາຊັບສິນບັດຂອງພວກຊາວນາ. ພວກ ລອດ Lord ເລີ່ມຢຶດຄອງດິນດອນຕອນຫຍ້າທີ່ເປັນຂອງສ່ວນລວມມາເປັນຂອງຕົນເອງ. ການບຸກຢຶດເກືອຂຶ້ນເລື່ອຍໆ ສາມາດຢຶດດິນລວມມເປັນດິນຂອງຕົນເອງໄດ້ 1/3, ມີບາງຄັ້ງກໍ່ກວມເອົາ ½, 2/3 ແລະ ກວມເອົາທັງໝົດຂອງດິນສ່ວນລວມ. ຜົນທີ່ຕາມມາກໍ່ຄືກ່ອນການປະຕິວັດເສດຖະກິດກະສິດກຳນັບມື້ນັບອ່ອນເພຍ, ຊາວນາປະສົບກັບຄວາມລົ້ມເຫຼວຕ້ອງໜີໄປທົ່ວທິບເພື່ອຊອກຢູ່ຫາກິນ, ໄພອຶດຫິວເກີດຂຶ້ນລຽນຕິດ. ຍ້ອນແນວນັ້ນການປົດປ່ອຍອອກຈາກແອກປົກຄອງຂອງພວກສັກດີນາຈິ່ງເປັນຄວາມຕ້ອງການຂອງຊົນຊັ້ນຊາວນາຝຣັ່ງໃນເວລານັ້ນ ແລະ ການແກ້ໄຂບັນຫາກ່ຽວກັບທີ່ດິນຈິ່ງກາຍເປັນບັນຫາພື້ນຖານສຳຄັນຂອງການປະຕິວັດ.

**2. ການຂະຫຍາຍຕົວທາງດານການຄ້າ ແລະ ອຸດສະຫະກຳທຶນນິຍົມ ແລະ ອຸປະສັກທີ່ກີດຂວາງ.**

ທ້າຍສະຕະວັດທີ 18 ອຸດສະຫະກຳ ແລະ ການຄ້າຂອງຝຣັ່ງມີການຂະຫຍາຍຕົວ ເຖິງແມ່ນວ່າຈະຍັງດ້ອຍກວ່າອັງກິດກໍ່ຕາມ. ປະລິມານການຜະລິດອຸດສະຫະກຳມີບົດບາດສຳຄັນຕໍ່ກັບຂະແໜງເສດຖະກິດຂອງປະເທດ.

ປີ ຄ.ສ 1789 ການຄ້າຕ່າງປະເທດຂອງຝຣັ່ງມີລາຍຮັບຈາກກະສິກຳເຖິງ 1.826 ລ້ານ ຟຣັງ ແລະລາຍຮັບຈາກອຸດສະຫະກຳ 525 ລ້ານ ຟຣັງ.

ການຂະຫຍາຍຕົວທາງດ້ານອຸດສະຫະກຳການຄ້າເຮັດໃຫ້ບັນດາຕົວເມືອງໃນຍຸກກາງມີການປ່ຽນແປງໃບໜ້າໃໝ່. ນະຄອນຫຼວງ ປາຣີ ມີພົນລະເມືອງ 50. 000 ຄົນ ໃນນັ້ນມີນາຍຊ່າງຮັບຈ້າງ 6.000

ຄົນ ໄດ້ກາຍເປັນສູນກາງທາງດ້ານອຸດສະຫະກຳການຄ້າເປັນຕົວເມືອງທີ່ມີເຊື່ອສຽງຂອງໂລກໃນການຜະລິດເຄື່ອງສຳອາງ.

ຕາມຊາຍແດນນັບແຕ່ພາກເໜືອລົງໄປຫາພາກໃຕ້ມີສູນກາງການຄ້າຫຼາຍແຫ່ງເຊັ່ນ: ເມືອງຣູອັງ ແລະ ແຣັບເວີ ເປັນສູນລວມອຸດສະຫະກຳຕໍ່າແຜ່ນ ແລະ ຜະລິດເສັ້ນດ້າຍ. ທ່າເຮືອທີ່ສຳຄັນປະກອບມີ ນັງເຕີ ແລະ ໂບອອກໂດ ທີ່ແນມເຫັນຮອດມະຫາສະໝຸດອັດລັງຕິກບ່ອນຄ້າຂາຍເຄື່ອງເທດທີ່ເຕັມໄປດ້ວຍບັນດາໝູ່ເກາະເບື້ອງຕາເວັນອອກ: ມີຕົວເມືອງ ແມັກໄຊ ເປັນປະຕູອອກສູ່ທະເລ ມີດີແຕລະເນ. ແຄມແມ່ນ້ຳ ໂຣນ ມີຕົວເມືອງ ລີອົງ ທີ່ຜະລິດແຜ່ນແພດ້ວຍໄໝ ແລະ ນີລອນ ທີ່ມີຊື່ສຽງທີ່ສຸດຂອງເອີຣົບ. ຊາຍແດນເບື້ອງຕາເວັນອອກຕິດກັບເຢຍລະມັນມີສູນກາງການຄ້າຢູ່ທີ່ ອັນດອລ ແລະ ໂຣແຣນ ທີ່ສາມາດຕອບສະໜອງວັດຖຸດິບໃຫ້ແກ່ບັນດາໂຮງງານຫຼອມໂລຫະຂະໜາດໃຫຍ່.

ໃນເວລານັ້ນລະບອບສັກດີນາໄດ້ນຳໃຊ້ຂໍ້ບັງຄັບຢ່າງເຂັ້ມງວດຄື: ເພີ່ມທະວີການເກັບພາສີ, ດຳເນີນການກວດກາຢ່າງເຄັ່ງຄັດ, ດຳເນີນການຜະລິດແບບບັງຄັບ, ປະລິມານຜົນຜະລິດ ແລະ ຈຳນວນກຳມະກອນແມ່ນມີຈຳກັດ. ຮູບແບບການຈັດຕັ້ງການຜະລິດອຸດສະຫະກຳທີ່ເຫັນຫຼາຍແມ່ນກຸ່ມຜະລິດງານຝີມື, ເຈົ້າຂອງກຸ່ມຫັດຖະກຳແມ່ນນັກທຸລະກິດຄ້າຂາຍ ແລະ ອຸດສະຫະກຳ. ເຈົ້າຂອງວັດຖຸດິບໄດ້ມອບວຽກໃຫ້ນາຍຊ່າງຫັດຖະກຳໃນຄອບຄົວຫຼັງຈາກນັ້ນຈິ່ງຊື້ສິນຄ້າ. ຮູບແບບການຜະລິດຂອງກຸ່ມຫັດຖະກຳແມ່ນແຜ່ກະຈາຍໄປທົ່ວປະເທດ. ຂະແໜງການຜະລິດແຜ່ນແພ ແລະ ເສັ້ນດ້າຍຂະຫຍາຍຕົວສູງສຸດໃນເວລານັ້ນ. ສະເພາະແຕ່ເຂດ ຣູອັງ ມີແຮງງານປັ່ນດ້າຍເຖິງ 19.000 ຄົນທີ່ເຮັດວຽກໃນຄອບຄົວ. ກຸ່ມຫັດຖະກຳໄດ້ລວມຕົວກັນແຕ່ຍັງມີໜ້ອຍແຕ່ມີຄວາມໝາຍສຳຄັນທາງດ້ານເສດຖະກິດ. ນອກຈາກກຸ່ມການຜະລິດຫັດຖະກຳຂອງລັດຖະບານແລ້ວ, ຫຼາຍບໍລິສັດເກີດຂຶ້ນເພື່ອເຕົ້າໂຮມກຳມະກອນ ແລະ ເລີ່ມຕົ້ນນຳໃຊ້ເຄື່ອງຈັກ.

ຈຳນວນກຸ່ມການຜະລິດມີກຳມະກອນຈຳນວນແຕ່ 50-100, ຂ້ອນຂ້າງມີຫຼາຍບໍລິດສັດຖ່ານຫີນຂອງອັງກິດຈ້າງກຳມະກອນເຖິງ 4.000 ຄົນ. ກຸ່ມຫັດຖະກຳຕໍ່າແຜ່ນ ຢູ່ວັງໂຣບບີ ຈ້າງກຳມະກອນ ຫຼາຍກວ່າ 1.700 ຄົນ ຫຼາຍກວ່າໝູ່ແມ່ນຜູ້ຍິງ. ເຄື່ອງຈັກຕໍ່າແຜ່ນ ເຈນນີ, ເຄື່ອປັ່ນດ້າຍໄດ້ປະກົດຕົວຂຶ້ນໃນໂຮງງານ ເຖິງວ່າຈະຍັງບໍ່ທັນຫຼາຍກໍ່ຕາມ. ເຄື່ອງຈັກອາຍນ້ຳ, ເຕົາຫຼອມເຫຼັກເລີ່ມຕົ້ນຖືກນຳໃຊ້ເຂົ້າໃນບັນດາຂະແໜງການຂຸດຄົ້ນບໍ່ແຮ່ ແລະ ຂແໜງຫຼອມໂລຫະ.

ສະພາບການທາງດ້ານການຄ້າກໍ່ມີການຂະຫຍາຍຕົວຢ່າງໄວວາ, ປະເທດຝຣັ່ງດຳເນີນການຄ້າຂາຍກັບບັນດາປະເທດຢູ່ທະວີບເອີຣົບ, ທະວີບອາເມຣິກາ ແລະ ໂລກຕາເວັນອອກ (ເຂດອາຊີ). ການຄ້າຂາຍກັບບັນດາປະເທດຫົວເມືອງຂຶ້ນມີບົດບາດສຳຄັນ ໂດຍສະເພາະແມ່ນການຄ້າຂາຍກັບໝູ່ເກາະ ອັງຕີ, ມາກຕີນິກ, ແຊັງ ໂດມິນໂກ. ຝຣັ່ງໄດ້ສິ່ງເຂົ້າສາລີ, ແລັນ, ສັດລ້ຽງ, ວາຍ ແລະ ສິນຄ້າທີ່ມີຄຸນຄ່າລາຄາແພງ ແລະ ນຳເຂົ້າຈຳພວກນ້ຳຕານ, ຢາສູບ, ກາເຟ... ຂ້າທາດຜິວດຳແມ່ນສິນຄ້າທີ່ນຳຜົນກຳໄລອັນມະຫາສານ. ການຄ້າພາຍໃນມີບາດກ້າວຂະຫຍາຍຕົວ ແຕ່ກໍ່ຍັງພົບຄວາມຫຍຸ້ງຍາກຫຼາຍ.

ເບິ່ງລວມແລ້ວໃນທ້າຍສະຕະວັດທີ 18 ຂະແໜງອຸດສະຫະກຳການຄ້າມີການຂະຫຍາຍຕົວຢ່າງແຂງແຮງ, ໜໍ່ແໜງລັດທິທຶນນິຍົມນັບມື້ນັບມີຄວາມຊັດເຈນຂຶ້ນ. ແຕ່ລະບອບສັກດີນາໄດ້ທຳການກີດຂວາງການຂະຫຍາຍຕົວນັ້ນ. ຍ້ອນການກະສິກຳຖືກກົດຂີ່ຂູດຮີດສຸດຂີດຈົນບໍ່ສາມາດຊື້ສິນຄ້າອຸປະໂພກໄດ້, ສະນັ້ນ, ຕະຫຼາດພາຍໃນຈຶ່ງມີລັກສະນະຮັດແຄບ. ລະບອບແຫ່ງການແອບອ້າງໃສ່ບັນດາຂໍ້ກຳນົດທີ່ເຄັ່ງຄັດຂອງລັດຖະບານ, ລັກສະນະສະເພາະ ແລະ ຈຸດພິເສດຂອງບັນດາແຂວງຕ່າງໆຕໍ່ກັບຄວາມແຕກຕ່າງທາງດ້ານຫົວໜ່ວຍການວັດແທກໃນການເກັບພາສີ. ບັນດາຂໍ້ຕົກລົງໄດ້ຮັບການລົງນາມເພື່ອສິດຜົນປະໂຫຍດຂອງຊົນຊັ້ນປົກຄອງ ( ຂໍ້ຕົກລົງ 1786 ວ່າດ້ວຍການຫຼຸດອັດຕາການເກັບພາສີສິນຄ້າທີ່ນຳເຂົ້າຈາກປະເທດອັງກິດ) ແລະ ອື່ນໆ. ເປັນແຮງສະໜັບສະໜູນອັນໃຫຍ່ຫຼວງໃຫ້ແກ່ການຂະຫຍາຍຕົວຂອງລັດທິທຶນນິຍົມ. ສະນັ້ນຈຶ່ງເປັນການຕັດເຊືອກມັດຂອງລະບອບສັກດີນາທີ່ຜູກມັດກ່ຽວກັບວຽກງານການຄ້າຂາຍ ແລະ ອຸດສະຫະກຳໃຫ້ຂາດລົງ ແລະ ໄດ້ກາຍປັດໄຈພາວະວິໄສ ແລະ ມີຄວາມຈຳເປັນໃນປະຫວັດສາດ.

### 3. ລະບອບຊັ້ນວັນນະຂອງສັງຄົມສັກດີນາຢູ່ຝຣັ່ງ.

ລະບອບລາຊາທິປະໄຕສົມບູນສິດປົກປ້ອງຢ່າງແໜ້ນແກ່ນໃຫ້ແກ່ການແບ່ງແຍກຊົນຊັ້ນໃນສັງຄົມສັກດີນາ. ໃນສັງຄົມຖືກຕັດແບ່ງອອກເປັນ 3 ຊົນຊັ້ນ: ນັກບວດແມ່ນຊົນຊັ້ນທຳອິດ, ຂຸນນາງສັກດີນາແມ່ນຊົນຊັ້ນທີສອງ ແລະ ຊົນຊັ້ນທີ 3 ປະກອບດ້ວຍກຸ່ມຄົນຕ່າງໆເຊັ່ນ: ນາຍທຶນ, ຊາວນາ, ປັນຍາຊົນໃນຕົວເມືອງ, ກຳມະກອນ... ການແບ່ງຊົນຊັ້ນທັງ 3 ຊົນຊັ້ນນັ້ນສະແດງອອກຄື: ນັກບວດຮັບໃຊ້ໃຫ້ແກ່ພວກກະສັດເໝືອນດັ່ງຄຳອະທິຖານ, ຊົນຊັ້ນຂຸນນາງສັກດີນາຄືກັບໃບມີດ, ຊົນຊັ້ນທີ່ 3 ປຽບສະເໝືອນກັບຊັບສິນບັດຂອງຊົນຊັ້ນປົກຄອງ. ທັງໝົດສອງຊົນຊັ້ນແມ່ນບໍ່ໄດ້ປະກອບສ່ວນ ຫຼື ຮັບຜິດຊອບວຽກງານໃດຕໍ່

ກັບປະເທດຊາດ. ພວກເຂົາໄດ້ສ້າງເປັນຊົນຊັ້ນສູງທີ່ດຳລົງຊີວິດດ້ວຍການອາໄສການເກັບພາສີ ແລະ ການກົດຂີ່ຂູດຮີດຊາວຜູ້ອອກແຮງງານ. ສ່ວນຊົນຊັ້ນທີ 3 ຕ້ອງປະກອບສ່ວນທາງດ້ານຊັບສົມບັດ, ຕ້ອງຍອມເສຍພາສີທຸກຢ່າງ ແລະ ມີຄວາມຮັບຜິດຊອບຕໍ່ປະເທດຊາດ ນັ້ນກໍ່ຄືຊົນຊັ້ນທີ່ບໍ່ມີສິດອຳນາດຫຍັງເລີຍເປັນຊົນຊັ້ນຕໍ່າທີ່ສຸດຈຶ່ງຖືກກົດຂີ່ຂູດຮີດ.

ສອງຊົນຊັ້ນທີ່ມີສິດອຳນາດປະກອບມີ ນັກບວດ ແລະ ຂຸນນາງມີການພົວພັນກັນຢ່າງສະໜິດແໜ້ນທາງດ້ານສາຍເລືອດ, ພວກເຂົາມີຈຳນວນພົນໜ້ອຍໃນສັງຄົມ ປະມານ 1% ຂອງພົນລະເມືອງທັງໝົດແຕ່ມີບົດບາດໃນການປົກຄອງປະເທດຝຣັ່ງໃນສະໄໝສັກດີນາ. ຊົນຊັ້ນນີ້ກຳອຳນາດທັງໝົດຂອງປະເທດເຊັ່ນ: ຕຳແໜ່ງຂັ້ນສູງຂອງປະເທດ ແລະ ຂອງໂບດ, ຕຳແໜງທາງການທະຫານ, ເວລາໃດກໍ່ຢູ່ຝ່າຍກະສັດ, ພູມໃຈໃນເຊື້ອສາຍກະສັດ. ດຳລົງຊີວິດບົນໝາກຜົນແຫ່ງການອອກແຮງງານຂອງຄົນອື່ນ, ມີຄວາມກຽດຄ້ານມັກງ່າຍ, ເຮັດຫຍັງໂດຍບໍ່ມີການຄິດຕຶກຕອງ. ພວກຂຸນນາງ ແລະ ນັກບວດຂັ້ນສູງຄົງຕົວມາແຕ່ດົນນານ ແລະ ໄດ້ກາຍເປັນພວກກາຝາກຂອງສັງຄົມ.

ກ່ອນການປະຕິວັດປະມານ 10 ປີ ໃນຕຳແໜ່ງຂຸນນາງມີຈຳນວນໜ້ອຍໜຶ່ງກາຍມາເປັນນາຍທຶນຫັນປ່ຽນມາດຳເນີນທຸລະກິດການຄ້າ ແລະ ອຸດສະຫະກຳ, ພວກເຂົາລົງທຶນໃສ່ກັບບໍລິສັດຢູ່ເຂດຫົວເມືອງຂຶ້ນ ແລະ ໄດ້ຮັບຜົນກຳໄລຢ່າງຈົບງາມ. ມີຂຸນນາງຈຳນວນໜຶ່ງທີ່ມີຊາດກຳເນີດມາຈາກນາຍທຶນໃຫຍ່ ໄດ້ທຳການຊື້ໜ້າທີ່ຕຳແໜ່ງສັກດີນາທີ່ມີບົດບາດທາງດ້ານກົດໝາຍເອີ້ນວ່າ: ຂຸນນາງ ເສື້ອຍາວ (ເພາະນິຍົມນຸ່ງຊຸດສານຕັດສິນ). ພື້ນຖານເສດຖະກິດ ແລະ ມີກົກເຄົ້າຄືແນວນັ້ນຈຶ່ງເຮັດໃຫ້ແນວຄິດທາງດ້ານການເມືອງປ່ຽນແປງ. ພວກເຂົາບໍ່ພໍໃຈຕໍ່ກັບລະບອບສັກດີນາແບບຜະເດັດການ, ຮຽກຮ້ອງໃຫ້ມີການປະຕິຮູບສັງຄົມໃຫ້ໄປຕາມລັດທິທຶນນິຍົມ, ມີອິດສະຫຼະພາບ. ແຕ່ພວກນາຍທຶນເຊັ່ນ: ລາເຟແຢດ, ລາເລີເຊີເຟີໂການ ຍັງມີໜ້ອຍ ແລະ ໃນການປະຕິວັດພວກເຂົາຄ່ອຍໆຊາບຊຶມເຂົ້າກັບຊົນຊັ້ນນາຍທຶນ.

ຊົນຊັ້ນທີ 3 ກວມ 99% ຂອງພົນລະເມືອງທັງໝົດ ແຕ່ຖືກຍາດເອົາສິດທັງໝົດທາງດ້ານການເມືອງ, ບໍ່ມີສິດເຂົ້າຮ່ວມໃນໂຄງຮ່າງການຈັດຕັ້ງຂອງລັດຖະບານຕ້ອງຮັບໃຊ້ໃຫ້ແກ່ຊົນຊັ້ນທີ່ມີອຳນາດ.

ຄຽງຄູ່ກັບການຂະຫຍາຍຕົວຂອງຂະແໜງອຸດສະຫະກຳ ແລະ ການຄ້າຮອດທ້າຍ ສະຕະວັດທີ 18 ຊົນຊັ້ນນາຍທຶນໄດ້ກາຍເປັນຊົນຊັ້ນທີ່ມີບົດບາດທາງດ້ານເສດຖະກິດ, ພວກເຂົາສາມາດລວບລວມທຶນຮອນ

ເຂົ້າມາໄວ້ໃນກຳມືບັນດາຂະແໜງທຸລະກິດການຄ້າ ແລະ ການອຸດສະຫະກຳ, ການຄ້າພາຍໃນ ແລະ ການຄ້າພາຍນອກ ແລະ ການດຳເນີນທຸລະກິດຄ້າຂາຍດິນກາຍເປັນອາຊີບທີ່ໝັ້ນຄົງ. ພວກຂຸນນາງຂາດເຂີນເງິນຄຳທີ່ຈະໃຊ້ເຂົ້າໃນການກິນຢູ່ ແລະ ທ່ຽວຫຼິ້ນຈຳເປັນຕ້ອງໄດ້ຢືມເງິນຈາກບັນດານາຍທຶນ. ບັນດາສະມາຊິກໃນລາດຊະວົງໄດ້ກາຍເປັນລູກໜີ້ຂອງພວກນາຍທຶນ. ຊົນຊັ້ນນາຍທຶນເປັນທັງຄົນຮັ່ງມີ ເປັນທັງຜູ້ທີ່ມີການຮຽນຮູ້. ພວກເຂົາຮຽນຮູ້ທີ່ຈະດຳເນີນທຸລະກິດເພື່ອຮັບໃຊ້ເຂົ້າໃນດ້ານທຸລະກິດ, ຕໍ່ສູ້ກັບໂບດ ແລະ ຮຽກຮ້ອງໃຫ້ມີສິດທິທາງການເມືອງ. ພວກເຂົາຕ້ອງການທີ່ຈະບັນຈຸເຂົ້າໃນໂຄງຮ່າງການຈັດຕັ້ງທ່າງດ້ານການເມືອງ, ຕ້ອງການລົບລ້າງກົດໝາຍທີ່ຫຼ້າຫຼັງຂອງລະບອບລາຊາທິປະໄຕສົມບູນສິດ, ຕ້ອງການເປີດເສັ້ນທາງໃຫ້ອຸດສະຫະກຳ ແລະ ການຄ້າຂະຫຍາຍຕົວ. ສິ່ງດັ່ງກ່າວນັ້ນມັນສອດຄ່ອງກັບເຈດຕະນາລົມ ແລະ ສິດຜົນປະໂຫຍດຂອງກຳລັງມະຫາຊົນສ່ວນຫຼາຍ. ສະນັ້ນ, ພວກເຂົາຈຶ່ງກາຍມາເປັນຕົວແທນໃນການປົກປັກຮັກສາສິດຜົນປະໂຫຍດຂອງຊົນຊັ້ນທີ 3. ເພາະວ່າຕຳແໜ່ງທາງດ້ານເສດຖະກິດແມ່ນເປັນຕົວແທນໃຫ້ແກ່ຮູບແບບການຜະລິດແບບລັດທິທຶນນິຍົມ. ພວກນາຍທຶນໄດ້ກາຍມາເປັນຜູ້ນຳພາຂະບວນການປະຕິວັດນາຍທຶນ.

ຊົນຊັ້ນນາຍທຶນປະກອບມີຫຼາຍຊັ້ນຄົນແຕກຕ່າງກັນອອກໄປ. ນາຍທຶນໃຫຍ່ແມ່ນຜູ້ທີ່ມີຊັບສົມບັດຈຳນວນຫຼວງຫຼາຍອັນໄດ້ແກ່ພວກເສດຖີ, ເຈົ້າໜີ້ທີ່ປ່ອຍເງິນກູ້ຢືມທີ່ມີດອກເບ້ຍສູງ, ພວກເຂົາໄດ້ຫາຜົນກຳໄລຈາກການທີ່ເອົາເງິນໃຫ້ພວກກະສັດ ແລະ ຂຸນນາງທຳການກູ້ຢືມ. ດັ່ງນັ້ນ, ພວກນາຍທຶນໃຫຍ່ຈຶ່ງມີສາຍພົວພັນກັນຢ່າງສະໜິດແໜ້ນກັບລະບອບລາຊາທິປະໄຕສົມບູນສິດ ເຖິງແມ່ນວ່າຍັງບໍ່ທັນສາມາດກຳອານາດທາງການເມືອງໄດ້ກໍ່ຕາມ. ເປົ້າໝາຍຂອງເຂົາແມ່ນຕ້ອງການປະຕິຮູບ, ເປີດກວ້າງສິດຕ່າງໆໃຫ້ແກ່ພວກເຂົາໄດ້ເຂົ້າຮ່ວມຂະບວນການທາງການເມືອງ. ກອມຈຳນວນພົນຫຼາຍກວ່າໝູ່ແມ່ນພວກນາຍທຶນອຸດສະຫະກຳ-ການຄ້າທີ່ນັບມື້ນັບພົບກັບການກົດຂີ່ຂູດຮີດຂອງລັດຖະບານໂດຍສະເພາະແມ່ນການດຳເນີນທຸລະກິດສະນັ້ນ, ຈຶ່ງຕ້ອງການທຳການປະຕິວັດ ແຕ່ພວກພໍ່ຄ້ານ້ອຍ, ເຈົ້າຂອງທຸລະກິດຂະໜາດນ້ອຍ, ນາຍທຶນນ້ອຍເວົ້າລວມແມ່ນບໍ່ພໍໃຈຕໍ່ກັບລະບອບນີ້ຈຶ່ງລວມຕົວກັນເປັນອີກໜຶ່ງກ້ອນກຳລັງຂອງການປະຕິວັດທີ່ກ້າວໜ້າ.

ຊາວນາແມ່ນຊົນຊັ້ນທີ່ມີຈຳນວນພົນຫຼາຍທີ່ສຸດ ແຕ່ທຸກຍາກທີ່ສຸດໃນຊົນຊັ້ນທີ 3 ກໍ່ຄືໃນສັງຄົມ. ພວກເຂົາຕ້ອງທົນກັບການກົດຂີ່ຂູດຮີດຂອງ 3 ຊົນຊັ້ນຂອງລະບອບສັກດີນານັ້ນກໍ່ຄື: ພວກ ລອດ Lord, ລັດຖະບານ ແລະ ນັກບວດ.

ເຖິງວ່າລະບອບທາດດິນນາຈະມີການປະກາດລົບລ້າງລົງໃນປີ ຄ.ສ 1779 ແຕ່ພວກເຂົາກໍ່ຍັງຜູກຕິດກັບຕອນດິນຂອງເຈົ້າທີ່ດິນ. ສະນັ້ນ, ພວກເຂົາຈິ່ງຍັງບໍ່ທັນໄດ້ຮັບອິດສະຫຼະພາບຄືເກົ່າ. ພວກເຂົາຕ້ອງເປັນແຮງງານຮັບຈ້າງຂອງພວກ ລອດ Lord , ຊາວນາຕ້ອງເສຍພາສີຢ່າງໜັກ, ນອກຈາກນັ້ນພວກເຂົາຕ້ອງປະຕິບັດຕາມກົດໝາຍຂອງພວກລອດ Lord ຢ່າງເຄັ່ງຄັດ, ມີການຕິດປ້າຍລາຄາຕອນດິນໃສ່ເພາະວ່າໂດຍປົກກະຕິແລ້ວສິດດັ່ງກ່າວນີ້ຈະຂາຍໃຫ້ໃຜກໍ່ໄດ້ທີ່ມີເງິນຊື້. ຍ້ອນແນວນັ້ນມີບາງຄັ້ງພວກເຂົາກໍ່ຖືກລົງໂທດແຕ່ຊາວນາກໍ່ບໍ່ມີສິດຮຽກຮ້ອງໃຫ້ໃຜຊ່ວຍໄດ້. ເພາະພວກເຂົາເປັນຜູ້ຖືກຕັດສິນ ຫຼື ຖືກຕັດສິນຈາກຜູ້ພິພາກສາ ແລະພວກ ລອດ Lord. ຂຸນນາງມີສິດເປັນເຈົ້າຂອງໂຮງສີເຂົ້າ, ສິດນຳໃຊ້ຈັກປັ່ນນ້ຳອ້ອຍ, ເຕົາອົບເຂົ້າຈີ່, ເຄື່ອງປັ່ນຂະໜາດນ້ອຍ... ສະນັ້ນ, ເມື່ອຊາວນາຕ້ອງການສີເຂົ້າ, ເຮັດນ້ຳເຜີ້ງ, ປີ້ງເຂົ້າໜົມ, ເຮັດວາຍ... ພວກເຂົາຕ້ອງໄດ້ເສຍພາສີອີກຕ່າງຫາກໃຫ້ພວກ ລອດ Lord. ພວກເຂົາຕ້ອງເສຍພາສີຂ້າມຂົວ, ພາສີນຳໃຊ້ທາງ, ພາສີຫາປາ ແລະ ພາສີຂ້າງົວຄວາຍ. ພວກເຂົາຈະຖືກປັບໄໝຖ້າຫາກວ່າກົບ-ຂຽດຢູ່ໃນໜອງເຂົາເຈົ້າຮ້ອງໃນເວລາກາງຄືນເພາະມັນເຮັດໃຫ້ພວກ ລອດ Lord ບໍ່ສາມາດຫຼັບນອນໄດ້ຕໍ່ກັບການເກັບພາສີແບບບໍ່ມີເຫດຜົນນີ້ໄດ້ຄົງຕົວເປັນເວລາດົນນານສົມຄວນ ເຖິງແມ່ນວ່າໂຮງສີຈະເພ, ຂົວຈະເພບໍ່ສາມາດໃຊ້ງານໄດ້ຊາວນາກໍ່ຍັງຕ້ອງເສຍພາສີໃນສ່ວນນີ້. ພວກ ລອດ Lord ມີສິດໃນການລ່າສັດຕາມທົ່ງເຂົ້າສາລີຂອງຊາວນາ ໃນເວລາເກີດຄວາມເສຍຫາຍພວກເຂົາກໍ່ບໍ່ໄດ້ທົດແທນຫຍັງຄືນໃຫ້ກັບຊາວນາເລີຍ ຄຳຕັດສິນລົງໂທດຂອງພວກ ລອດ Lord ໄດ້ສ້າງເປັນນິຕິກຳຂຶ້ນຕ້ອງນຳໃຊ້ເຈ້ຍ 600 ໜ້າຈິ່ງຈະບັນທຶກໝົດ.

ນອກຈາກຈະເສຍພາສີໃຫ້ ພວກ ລອດ Lord ແລ້ວຊາວນາຍັງຕ້ອງເສຍພາສີອື່ນໆອີກໃຫ້ແກ່ລັດຖະບານເຊັ່ນ: ພາສີຫົວຄົນ, ພາສີລາຍໄດ້, ພາສີຊັບສົມບັດ, ໃນນັ້ນພາສີເກືອ, ພາສີວາຍເປັນພາສີທີ່ໜັກທີ່ສຸດ.ລັດຖະບານຈະບໍ່ດຳເນີນການເກັບພາສີກັບປະຊາຊົນໂດຍກົງ ແຕ່ຈະເກັບຜ່ານຜູ້ຮັບເໝົາ ຫຼື ນາຍໜ້າໝາຍຄວາມວ່າ ພາຍຫຼັງນາຍໜ້າມອບເງິນໃຫ້ລັດຖະບານແລ້ວ ພວກເຂົາກໍ່ຈະລົງໄປເກັບພາສີຕາມໝູ່ບ້ານຕ່າງໆນຳຊາວນາເຊິ່ງວິທີການເກັບພາສີແບບນີ້ບໍ່ຕ່າງຫຍັງກັບການປຸ້ນສະດົມເອົາຊັບສົມບັດຂອງຊາວນາ.

ຊາວນາຍັງຕ້ອງມອບເງິນຈຳນວນ 1/10 ໃຫ້ແກ່ໂບດ (ເທົ່າກັບ 1/10 ຂອງຜົນຜະລິດທີ່ເກັບກ່ຽວໄດ້) ແລະ ຄ່າໃຊ້ຈ່າຍຕ່າງໆເຊັ່ນ: ເງິນບູລະນະປະຕິສັງຂອນ, ເງິນເຮັດບຸນປະເພນີ ເງິນເຫຼົ່ານີ້ແມ່ນເງິນໃນການປະກອບພິທີກຳເຊິ່ງບໍ່ສາມາດຂາດໄດ້ໃນການດຳລົງຊີວິດມັນເປັນທີ່ເພິ່ງທາງຈິດໃຈຂອງພວກເຂົາ.

ນອກຈາກການເສຍພາສີດ້ວຍເງິນ, ເປັນຜົນຜະລິດແລ້ວ ຊາວນາຍັງຕ້ອງໄດ້ໄປອອກແຮງງານຮັບໃຊ້ໃຫ້ແກ່ ພວກລອດ Lord ແລະ ລັດຖະບານອີກເຊັ່ນ: ເຮັດທາງ, ສ້າງຂົວ, ລຳລຽງຂົນສົ່ງ, ເສຍເງິນໃຫ້ທະຫານ... ເປັນຜົນເຮັດໃຫ້ຫຼາຍຄອບຄົວທຸກຍາກບໍ່ກຸ້ມກິນ, ພົບຄວາມຫຍຸ້ງຍາກ ສຸດທ້າຍກໍ່ເຖິງຂັ້ນລົ້ມລະລາຍຕ້ອງໄດ້ປະຖິ້ມດິນດອນຕອນຫຍ້າ ແລະ ບ້ານເກີດເມືອງນອນໄປຊອກຢູ່ຫາກິນທົ່ວທຸກຫົນແຫ່ງ. ຍ້ອນແນວນັ້ນ ພວກເຂົາຈິ່ງມີຄວາມກຽດຊັງລະບອບສັກດີນາ, ມີຫຼາຍຄັ້ງພວກເຂົາພາກັນລຸກຂຶ້ນຕໍ່ສູ້ຈົນກາຍເປັນກຳລັງຕົ້ນຕໍສຳຄັນ ແລະ ມີຈຳນວນພົນຫຼາຍໃນການປະຕິວັດນາຍທຶນ.

ຊົນຊັ້ນຕ່ຳກວ່າໝູ່ໃນຊົນຊັ້ນທີ 3 ແມ່ນ ສາມັນຊົນໃນຕົວເມືອງປະກອບມີ : ກຳມະກອນ, ນາຍຊ່າງຫັດຖະກຳ, ກຸ່ມຄົນທີ່ທຳການຄ້າຂາຍສິ່ງເສດເຫຼືອ, ນັກຮ້ອງຂ້າງຖະໜົນ, ພວກຫວ່າງງານ ແລະ ພວກທີ່ດຳລົງຊີວິດດ້ວຍການເຮັດວຽກຊົ່ວຄາວ (ຫາເຊົ້າກິນຄ່ຳແບບເລື່ອນລອຍບໍ່ຄົງທີ່). ພວກເຂົາອາໄສຢູ່ຕາມແຄມຖະໜົນຫົນທາງ, ຖືກດູຖູກປຽບປາມຍ້ອນຄວາມທຸກຍາກ ແລະ ບໍ່ມີສິດຫຍັງທາງດ້ານການເມືອງ.

ພວກເຂົາເຄີຍລຸກຂຶ້ນຕໍ່ສູ້ຕ້ານລະບອບສັກດີນາຫຼາຍຄັ້ງເພື່ອໃຫ້ໄດ້ມາເຊິ່ງຊີວິດທີ່ດີກວ່າ ແຕ່ສຸດທ້າຍກໍ່ຖືກປາບປາມ. ໃນເວລານີ້ກຳມະກອນຍັງບໍ່ທັນກາຍເປັນຊົນຊັ້ນໃນສັງຄົມ, ຄວາມຮູ້ດ້ານສິດ ຜົນປະໂຫຍດຂອງຊົນຊັ້ນຍັງອ່ອນນ້ອຍ. ສະນັ້ນພວກເຂົາຈິ່ງໄປຕາມທິດຊີ້ນຳຂອງພວກນາຍທຶນ. ພວກເຂົາແມ່ນກຳລັງຕົ້ນຕໍທີ່ສຳຄັນທີ່ສຸດທີ່ຕັດສິນຊະຕາກຳຂອງການຕໍ່ສູ້ຕ້ານກັບລະບອບສັກດີນາ.

ຍ້ອນບົດບາດໜ້າທີ່ທາງດ້ານເສດຖະກິດ ແລະ ການເມືອງເປັນສິ່ງກຳນົດສັງຄົມຝຣັ່ງທ້າຍສະຕະວັດທີ 18 ຖືກແບ່ງອອກເປັນ 2 ລະບົບທີ່ແຕກຕ່າງກັນຢ່າງຊັດເຈນ: ຝ່າຍທີ່ນິຍົມສັກດີນາປະກອບດ້ວຍ ກະສັດ, ນັດບວດ ແລະ ຂຸນນາງເກົ່າ ແລະ ຝ່າຍຕໍ່ຕ້ານສັກດີນາປະກອບມີ ບັນດາກຸ່ມຄົນທີ່ນອນໃນຊົນຊັ້ນທີ 3 ພາຍໃຕ້ການນຳພາຂອງພວກນາຍທຶນທີ່ລຸກຂຶ້ນເປັນຕົວແທນໃຫ້ແກ່ກຸ່ມຄົນທັງໝົດໃນສັງຄົມນອກຈາກນັ້ນຍັງມີຂໍ້ຂັດແຍ່ງລະຫວ່າງຊົນຊັ້ນຂູດຮີດ, ລະຫວ່າງພວກຮັ່ງມີ ແຕ່ກຽດຄ້ານ ແລະ ລະຫວ່າງຜູ້ທຸກຍາກດ້ວຍກັນ. ສະພາບການເປັນຄືແນວນັ້ນເຮັດໃຫ້ຜູ້ແທນຂອງຊົນຊັ້ນນາຍທຶນຮຽກຮ້ອງວ່ານີ້ບໍ່ແມ່ນຕົວແທນຂອງຊົນຊັ້ນໃດໜຶ່ງສະເພາະ ແຕ່ພວກເຂົາເປັນຕົວແທນຂອງມະນຸດທັງໝົດທີ່ມີຄວາມທຸກຍາກລຳບາກ.[7]

---

[7] ອັງແກນ: ລັດທິສັງຄົມນິຍົມຂະຫຍາຍຕົວຈາກແນວຄິດໄປສູ່ວິທະຍາສາດ
ມາກ-ອັງແກນ, ການຮຽບຮຽງເອກະສານເຫຼັ້ມ ທີ2 ໜ້າ 183-184 ໂຮງພິມຄວາມຈິງ, ປີ 1962

## 5.ການຖ່າຍທອດແນວຄິດທີ່ເປັນແສງສະຫວ່າງຢູ່ປະເທດຝຣັ່ງ

ນັບຕັ້ງແຕ່ກາງສະຕະວັດທີ 17 ໂດຍສະເພາະແມ່ນໃນຫຼາຍປີຂອງສະຕະວັດທີ 18 ບັນດານັກປັດຊະຍາ, ນັກປະຫວັດສາດ ແລະ ນັກປະພັນທີ່ມີຄວາມຄິດກ້າວໜ້າໄດ້ໂຈມຕີສະຖາບັນພະມະຫາກະສັດດ້ວຍທິດສະດີໃໝ່ທີ່ມີລັກສະນະກ້າວໜ້າ ແລະ ປະຕິວັດ. ປະຫວັດສາດເອີ້ນຊ່ວງເວລານີ້ວ່າ: ໄລຍະແຫ່ງແສງສະຫວ່າງ, ສະຕະວັດແຫ່ງການກະກຽມໃຫ້ແກ່ການປະຕິວັດນາຍທຶນລະເບີດຂຶ້ນ. ແນວຄິດແຫ່ງການຖ່າຍທອດແສງສະຫວ່າງແມ່ນມີຫຼາຍກະແສແນວຄິດທີ່ມີຕົວແທນດັ່ງລຸ່ມນີ້:

ຈັງ ເມເຣຍ (1664-1779) ເປັນຊາວຊົນນະບົດທີ່ມີຄວາມຮູ້ ແລະ ມີຄວາມເຂົ້າໃຈກ່ຽວກັບການດຳລົງຊີວິດທີ່ທຸກຍາກລຳບາກ, ຂາດເຂີນ ຂອງປະຊາຊົນເຂດຊົນນະບົດ, ເຂົ້າໃຈຄວາມຮູ້ສຶກ ແລະ ຄວາມປາດຖະໜາຂອງປະຊາຊົນ, ຊື່ສຽງຂອງທ່ານຖືກຄົນອື່ນຮັບຮູ້ຈາກປຶ້ມທີ່ມີຊື່ວ່າ: ພີໄນກຳ ທີ່ ໂວນແຕ ໄດ້ພິມອອກມາພາຍຫຼັງທີ່ທ່ານເສຍຊີວິດ. ໃນເອກະສານດັ່ງກ່າວນັ້ນທ່ານໄດ້ກ່າວປະນາມ ການພົວພັນສັງຄົມໃນລະບອບສັກດີນາຝຣັ່ງ ແລະ ການຈຳແນກຊົນຊັ້ນໃນສັງຄົມ.

ບໍ່ພຽງແຕ່ຕໍ່ສູ້ກັບລັດຖະບານສັກດີນາຜະເດັດການ ແລະ ສາສະໜາເທົ່ານັ້ນແຕ່ທ່ານຍັງຕໍ່ສູ້ກັບລະບອບການຍຶດຄອງກຳມະສິດສ່ວນຕົວອີກດ້ວຍ. ທ່ານເວົ້າວ່າ: ນີ້ແມ່ນສາເຫດທັງໝົດທີ່ພາໃຫ້ສັງຄົມບໍ່ມີຄວາມສະເໝີພາບ. ທ່ານໄດ້ວາດພາບກ່ຽວກັບສັງຄົມໃນຈິນຕະນາການໄດ້ຮັບການສ້າງຕັ້ງຂຶ້ນບົນພື້ນຖານຂອງລະບອບສັງຄົມທີ່ຍຶດຖືກຳມະສິດລວມໝູ່, ທຸກຄົນລ້ວນແຕ່ມີໜ້າທີ່ໃນການອອກແຮງງານ, ແນວຄິດຂອງທ່ານແມ່ນແນວຄິດສັງຄົມນິຍົມເຊິ່ງໃນເວລານັ້ນເປັນແນວຄິດແບບໄຝ່ຝັນ, ດັ້ງເດີມ ແລະ ມີລັກສະນະຍຶດຖືກະສິກຳເປັນຫຼັກ, ແຕ່ຕ້ອງອີງໃສ່ມາດຕະການທາງການສຶກສາຂອງກອງທັບເພື່ອດຳເນີນການປະຕິຮູບສັງຄົມ.

ປຶ້ມ ພີໄນກຳ ຂອງ ເມເຣຍ ແມ່ນໜຶ່ງໃນຜະລິດຕະພັນທາງຄວາມຄິດທີ່ໄດ້ຮັບຄວາມສົນໃຈຫຼາຍທີ່ສຸດໃນເວລານັ້ນ, ນ້ຳໃຈທີ່ກ້າຫານ, ນ້ຳໃຈແຫ່ງການຕໍ່ສູ້ຂອງປະຊາຊົນຝຣັ່ງ ໂດຍສະເພາະແມ່ນຊົນຊັ້ນທີ່ຕ່ຳທີ່ສຸດໃນສັງຄົມ. ປະຊາຊົນຜູ້ທຸກຍາກຕາມຊົນນະບົດ ແລະ ປະຊາຊົນຕາມຕົວເມືອງຕ້ອງການລຸກຂຶ້ນຕໍ່ສູ້ຕ້ານກັບການກົດຂີ່ຂູດຮີດ. ຍ້ອນແນວນັ້ນທ່ານຈຶ່ງມີອິດທິພົນອັນໃຫຍ່ຫຼວງຕໍ່ກັບການຖ່າຍທອດຄວາມຄິດການ

ປະຕິວັດ, ສາທາລະນະລັດຢູ່ຝຣັ່ງສິ່ງຜົນສະທ້ອນຕໍ່ກັບບັນດານັກຈິດຕະວິທະຍາແຫ່ງແສງສະວ່າງຂອງສະຕະວັດທີ 18.

ຊາກ ຫຼຸຍ ມົງແຕກກິເອີ (1689-175) ກຳເນີດໃນຄອບຄົວຊຸນນາງເຄີຍເປັນປະທານໃນກອງປະຊຸມ (ໃນເວລານັ້ນແມ່ນຫ້ອງການຍຸດຕິທຳ) ຢູ່ ບອກໂດ. ສະນັ້ນ, ທ່ານຈຶ່ງມີຄວາມຮູ້ ແລະ ມີຄວາມເຂົ້າໃຈກ່ຽວກັບລະບົບການປົກຄອງ ແລະ ທາດແທ້ຂອງລະບອບຜະເດັດການແຕ່ສູນກາງຈົນເຖິງຂັ້ນທ້ອງຖິ່ນຢູ່ຝຣັ່ງ, ໜຶ່ງໃນຜົນງານທີ່ໂດດເດັ່ນຂອງທ່ານແມ່ນຜົນງານທີ່ມີຊື່ວ່າ: ຈົດໝາຍບາຕູ (ປີ ຄ.ສ 1721), ສັງເກດການເຕີບໃຫຍ່ຂະຫຍາຍຕົວ ແລະ ການພັງທະລາຍຂອງ ລາມາ (ປີ ຄ.ສ 1734) ພິເສດແມ່ນປຶ້ມ ຈິດວິນຍານຂອງກົດໝາຍ (ປີ ຄ.ສ 1748) ທ່ານໄດ້ຕໍ່ສູ້ກັບລະບອບສັກດີນາ ແລະ ລັດຖະບານລາຊາທິປະໄຕແບບຜະເດັດການຫົວຮຸນແຮງ. ຄົ້ນຄວ້າກ່ຽວກັບລະບອບການເມືອງ, ທ່ານໄດ້ເວົ້າວ່າລະບົບການປົກຄອງຢູ່ອັງກິດເໝາະສົມກັບອຳນາດການປົກຄອງຂອງທ່ານ. ທ່ານໄດ້ຈຳແນກ 3 ຮູບແບບປະເທດຄື: ແບບຜະເດັດການ, ລາຊາທິປະໄຕໃຕ້ລັດຖະທຳມະນູນ ແລະ ແບບສາທາລະນະລັດ. ທ່ານໄດ້ກ່າວປະນາມລະບອບຜະເດັດການວ່າເປັນລະບອບທີ່ໂຫດຫ້ຽມອຳມະຫິດ ແລະ ຢັ້ງຢືນວ່າລະບອບສາທາລະນະລັດເປັນລະບອບທີ່ດີທີ່ສຸດ ແຕ່ໃນຕົວຈິງບໍ່ສາມາປະຕິບັດໄດ້. ຕາມແນວຄິດຂອງທ່ານເຫັນວ່າລະບອບການເມືອງທີ່ດີທີ່ສຸດແມ່ນລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນຄືກັນກັບປະເທດອັງກິດ.

ການຕໍ່ສູ້ຕ້ານກັບສະຖາບັນກະສັດທີ່ຕ້ອງການລວບລວມອຳນາດທັງໝົດເຂົ້າຢູ່ໃນກຳມືຂອງກະສັດ, ມົງແຕກກິເອີ ໄດ້ດຳເນີນການຈຳແນກ 3 ອຳນາດທີ່ມີລັກສະນະແຕກຕ່າງກັນຄື: ອຳນາດສະພາແຫ່ງຊາດ, ອຳນາດບໍລິຫານ ແລະ ອຳນາດຕຸລາການລ້ວນແຕ່ຕັດແຍກອອກຈາກກັນ ແຕ່ສາມາດກອດກາກັນໄດ້. ກະສັດມີສິດໃນການບໍລິຫານ, ສະພາມີສິດໃນການຮ່າງກົດໝາຍ ສ່ວນສານມີສິດໃນການປະຕິບັດກົດໝາຍ (ຕັດສິນຄະດີ) ທີ່ເປັນເອກະລາດບໍ່ຂຶ້ນກັບກະສັດ ແລະ ສະມາຊິກສະພາ. ຄວາມຈິງແລ້ວ ກົນໄກການບໍລິຫານຂ້າງເທິງລ້ວນແຕ່ຕົກຢູ່ໃນກຳມືຂອງພວກນາຍທຶນ.

ແນວຄິດຂອງ ມົງແຕກກິເອີແມ່ນບໍ່ຕ້ອງດຳເນີນການປະຕິວັດເພື່ອລົບລ້າງລະບອບການປົກຄອງເກົ່າພຽງແຕ່ທຳການປະຕິຮູບ, ສ້າງຕັ້ງລັດຖະບານໃຫ້ເໝາະສົມ ແລະ ສອດຄ່ອງກັບຄວາມຕ້ອງການຂອງພວກນາຍທຶນເທົ່ານັ້ນແຕ່ວ່າໃນໄລຍະການປົກຄອງແບບຜະເດັດການກຳລັງປົກຄອງພາຍໃຕ້ຮູບການທີ່ໂຫດຮ້າຍທີ່

ສຸດຢູ່ຝຣັ່ງນັ້ນແນວຄິດຂອງທ່ານກ່ຽວກັບການຕໍ່ສູ້ຕ້ານກັບລະບອບຜະເດັດການ, ເປີດໂປງທາດແທ້ຂອງສາສະໜາ, ປົກປ້ອງແນວຄິດອິດສະຫຼະພາບ ແລະ ກ່າວປະນາມການຕໍ່ສູ້ເພື່ອຣຸກຮານກັນ... ມີຄວາມໝາຍກ້າວໜ້າຢ່າງໃຫຍ່ຫຼວງ ແລະ ສິ່ງຜົນສະທ້ອນຢ່າງແຂງແຮງຕໍ່ກັບຂະບວນການຕໍ່ສູ້ເພື່ອການປະຕິວັດໃນໄລຍະຕໍ່ມາ. ໂວນແຕ່ (ປີ ຄ.ສ 1694-1778) ມີຊື່ແທ້ວ່າ ຟຣັງຊົວ ມາຣີ ອາຣູເອ  ກຳເນີດໃນຄອບຄົວຮັ່ງມີ, ແມ່ນບຸກຄົນທີ່ເປັນຕົວແທນຮອບດ້ານໃຫ້ແກ່ການຖ່າຍທອດປັດສະຍາຝຣັ່ງໃນສະຕະວັດທີ 18 ເປັນຜູ້ອັດສະລິຍະ ແລະ ມີຄວາມຮູ້ຄວາມສາມາດຮອບດ້ານ. ໂວນແຕ ປະສົບຜົນສຳເລັດ ແລະ ມີຊື່ສຽງໃນຜົນງານການປະພັນທ່ານເປັນນັກປັດຊະຍາ, ນັກປະພັນ, ນັກຂຽນບົດລະຄອນ, ນັກປະຫວັດສາດ, ນັກຟີຊິກ, ນັກຂ່າວ ແລະ ເປັນນັກເຄື່ອນໄຫວທາງການເມືອງ



ໂວນແຕ່ (ປີ ຄ.ສ 1694-1778)

ໃນບົດປະພັນຂອງທ່ານໂດຍສະເພາະແມ່ນບົດປະພັນເລື່ອງ ຈົດໝາຍປັດຊະຍາ ທ່ານໄດ້ກ່າວປະນາມຄວາມປ່າເຖື່ອນ, ຄວາມໂຫດຮ້າຍ ແລະ ຫຼໍາຫຼັງຂອງລະບອບສັກດີນາຜະເດັດການຢູ່ຝຣັ່ງ ແລະ

ຂອງບັນດານັກບວດ ດ້ອຍສຳນວນທີ່ມ່ວນ ແລະ ອອນຊອນ. ທ່ານຍັງໄດ້ທຳການວິຈານຢ່າງບໍ່ມີຄວາມເມດຕາກາລຸນາທາດແທ້ຂອງສັງຄົມທີ່ເນົ່າເໜັນ. ທ່ານເປັນສັດຕູຕົວສຳຄັນຂອງລະບອບຜະເດັດການສັກດີນາ, ຕໍ່ກັບນັກບວດສາສະໜາຖືກຈັບເຂົ້າຄຸກບັດສຕິນ.

ເຖິງວ່າຈະມີຄຳກ່າວທີ່ວ່າ ນັກປະພັນ ໂວນແຕ ບໍ່ແມ່ນນັກປັດຊະຍາຝ່າຍວັດຖຸນິຍົມເພາະວ່າທ່ານໄດ້ເວົ້າວ່າ ສາສະໜາເປັນສິ່ງທີ່ຕິດພັນ ແລະ ຈຳເປັນຕໍ່ກັບປະຊາຊົນ. ແນວຄິດກ່ຽວກັບການເມືອງຂອງທ່ານມີລັກສະນະຈຳກັດ. ເຖິງແມ່ນວ່າຈະເປັນເປັນການຕໍ່ຕ້ານລະບອບຜະເດັດການຫົວຮຸນແຮງ, ຕໍ່ສູ້ກັບຄວາມບໍ່ຍຸດຕິທຳ. ທ່ານກໍ່ພຽງແຕ່ດຳເນີນການປະຕິຮູບສັງຄົມແຕ່ຂັ້ນເທິງຈົນເຖິງຂັ້ນລຸ່ມ. ທ່ານມີການພົວພັນສະໜິດແໜ້ນກັບກະສັດ ພໍເຟີດີລິດ 2, ພະລາຊິນີແຫ່ງຣັດເຊຍ ແຄດເທີລີນ 2, ກະສັດສະວີດຊີແລນ, ເດັນໝາກ , ໂປແລນ ແລະ ກະສັດປະເທດອື່ນໆອີກ.

ເຖິງວ່າຈະມີແນວຄິດທີ່ກົງກັນຂ້າມກັນຍ້ອນຊົນຊັ້ນມີລັກສະນະຈຳກັດ,  ໂວນແຕ ຍັງມີບົດບາດສຳຄັນໃນການຖ່າຍທອດປັດຊະຍາແຫ່ງແສງສະຫວ່າງ. ມີຄວາມເຊື່ອໝັ້ນຕໍ່ກັບໄຊຊະນະຂອງມວນມະນຸດໃນການຕໍ່ສູ້ຕ້ານກັບກຳລັງຂອງສັກດີນາ. ທ່ານມີອິດທິພົນຕໍ່ກັບແນວຄິດຂອງນັກປະຕິວັດ. ບັນດາຜົນງານຂອງທ່ານປະກອບສ່ວນເຂົ້າໃນການຊຸກຍູ້ແນວຄວາມຄິດຂອງມວນມະນຸດ. ສະນັ້ນ, ຊື່ສຽງຂອງທ່ານຈິ່ງຕິດພັນກັບຍຸກສະໄໝ . ໃນສະຕະວັດທ 18 ຢູ່ທະວີບເອີຣົບຍັງຖືກເອີ້ນວ່າ ສະຕະວັດແຫ່ງໂວນແຕ.

ການຈັດພິມສາລານຸກົມໃນປີ ຄ.ສ 1751-1776 ເປັນບາດກ້າວອັນກ້າວໜ້າທີ່ໃຫຍ່ຫຼວງທາງດ້ານແນວຄິດຖ້າທຽບໃສ່ກັບສະໄໝຂອງ ມົງແຕກກິເອີ ແລະ ໂວນແຕ.  ປະມານເຄິ່ງສະຕະວັດທີ 18 ຕໍ່ມາ ລະບອບສັກດີນາກ້າວເຂົ້າໄລຍະວິກິດການຢ່າງຮຸນແຮງ, ຂໍ້ຂັດແຍ່ງນັບມື້ນັບເພີ່ມຂຶ້ນກະແສແນວຄິດບໍ່ພໍໃຈຕໍ່ກັບລັດຖະບານຍິ່ງສູງຂຶ້ນ. ບົນພື້ນຖານຄືແນວນັ້ນເຮັດໃຫ້ການຖ່າຍທອດກະແສແນວຄິດຍິ່ງນັບມື້ນັບຂະຫຍາຍຕົວກ້າວຂຶ້ນສູ່ລະດັບສູງ. ໃນ 50 ປີຂອງຕົ້ນສະຕະວັດທີ 18  ແຫ່ງການໂຈມຕີລະບອບສັກດີນາລ້ວນແຕ່ເປັນການຕໍ່ສູ້ສະເພາະຂອງໃຜລາວກະແຈກກະຈາຍ ມາເຖິງເວລານີ້ໄດ້ມີການລວມຕົວກັບເປັນປຶກແຜ່ນ, ບັນດານັກປັດຊະຍາ ແລະ ນັດວິທະຍາສາດໄດ້ເຕົ້າລວມກັນຢູ່ພາຍໃຕ້ຄັນທຸງແຫ່ງການປະຕິວັດຂອງຊົນຊັ້ນນາຍທືນ, ເປັນຕົວແທນໃຫ້ແກ່ແນວຄິດທີ່ກ້າວໜ້າທີ່ສຸດໃນເວລານັ້ນພວກເຂົາບຸກໂຈມຕີເຂົ້າກຳແພງຂອງລະບອບສັກດີນາ ແລະ ໂບດ. ເຖິງແມ່ນວ່າພາຍໃນຈະມີແນວຄວາມຄິດແຕກຕ່າງກັນແຕ່ວ່ານັກປັດຊະ

ຍາວັດຖຸນິຍົມ ເດີນີ ດິເດີໂຣດ (1713-1784). ນັກວິຊາການທີ່ມີຊື່ສຽງຫຼາຍທ່ານເຊັ່ນ: ໂວນແຕ, ມົງແຕກກິເອີ, ດາລຳແບ, ຣຸດໂຊ, ໂຮນບາກ, ແຮນເວຕວິດ... ລ້ວນແຕ່ເຂົ້າຮ່ວມການຮຽບຮຽງປື້ມບັນນານຸກົມ ຫຼື ເອີ້ນວ່າພົດຈະນານຸກົມ Dictionary ກ່ຽວກັບວິທະຍາສາດ, ສິລະປະ ແລະ ຫັດຖະກຳ.



ເດີນີ ດິເດີໂຣດ (1713-1784) ນັກປະພັນ ແລະ ນັກປັດຊະຍາຝຣັ່ງ

ໃນນັ້ນນັກປະພັນຍັງຂຽນເຖິງບັນຫາສຳຄັນກ່ຽວກັບການເມືອງ, ສິນລະທຳ, ສິລະປະກຳ, ປັດຊະຍາ, ເຕັກນິກ ແລະ ກະສິກຳ. ບັນຫາລ້ວນແຕ່ຖືກ ອະທິບາຍ ແລະ ວິຈານຕາມແນວຄິດວັດຖຸນິຍົມ.



ເຈນ ແຈັກ ຣຸດໂຊ Jean-Jacques Rousseau

ຍ້ອນແນວນັ້ນ, ພວກກຸ່ມເຕັກນິກໄດ້ປະກອບສ່ວນໃນການປະກາດແນວຄິດວັດຖຸນິຍົມ ເຮັດໃຫ້ແນວຄວາມຄິດນັ້ນຍາດໄດ້ໄຊຊະນະ ແລະ ໄດ້ກາຍເປັນທິດທາງທີ່ດີຂຶ້ນໃນປັດຊະຍາຝຣັ່ງໃນເວລານັ້ນ. ມີນັກປະພັນຈຳນວນໜຶ່ງນອກຈາກຈະມີຜົນງານການຮຽບຮຽງປຶ້ມບັນນານຸກົມແລ້ວພວກເຂົາຍັງມີຜົນງານອື່ນໆ. ພວກເຂົາລ້ວນແຕ່ເປັນເອກະພາບກັນກ່ຽວກັບບັນຫາພື້ນຖານຂອງປັດຊະຍາທີ່ຢືດໝັ້ນຕາມປັດຊະຍາວັດຖຸນິຍົມ ທີ່ໂຈມຕີຢ່າງຮຸນແຮງຕ້ານກັບນັກບວດ ແລະ ລັດຖະບານສັກດີນາ. ແຕ່ໃນເວລານັ້ນລັດທິວັດຖຸນິຍົມເປັນວັດຖຸນິຍົມກົນຈັກຍ້ອນລະດັບຄວາມຮູ້ທາງວິທະຍາສາດທຳມະຊາດມີລັກສະນະຈຳກັດ.

ແນວຄິດຂອງພວກນາຍທຶນກ່ຽວກັບມຸມມອງທາງດ້ານເສດຖະກິດໄດ້ສະແດງອອກຢ່າງຈະແຈ້ງໃນທິດສະດີຂອງ Physiocrates  ນຳໂດຍ ຟຣັງຊົວ ແກັກໄນ ຜູ້ທີ່ມີຜົນງານທີ່ມີຄຸນຄ່າຊື່ວ່າ ຕາຕະລາງເສດຖະກິດໃນນັ້ນທ່ານໄດ້ ພະຍາຍາມເອົາໃຈໃສ່ ໃນການອະທິບາຍໄລຍະການຂະຫຍາຍຕົວຂອງລັດທິທຶນນິຍົມ. ເຖິງແມ່ນວ່າຈະຍັງບໍ່ສາມາດສ້າງເປັນທິດສະດີທີ່ມີລັກສະນະວິທະຍາສາດກ່ຽວກັບການຂະຫຍາຍຕົວ. ພວກເຂົາເວົ້າວ່າ: ກະສິກຳແມ່ນຜະລິດຕະພັນດຽວເທົ່ານັ້ນທີ່ທຳມະຊາດມອບໃຫ້ມະນຸດ ຕາມແນວຄິດຂອງພວກເຂົາເວົ້າວ່າຜະລິດຕະພັນບໍລິສຸດແມ່ນຜະລິດຕະພັນເຫຼືອຈາກການຫັກງົບປະມານໃນການຜະລິດ, ຜະລິດຕະພັນທີ່ເຮັດໃຫ້ມີມູນຄ່າສ່ວນເກີນ (ກຳໄລ). ພຽງແຕ່ເກີດຂຶ້ນໃນບົນພື້ນຖານການອອກແຮງງານຮັບຈ້າງໃນການກະສິກຳ ແລະ ການປູກຝັງ, ຍັງມີຂະແໜງການອື່ນອີກ. ພຽງແຕ່ປ່ຽນຮູບແບບຂອງຜະລິດຕະພັນຕາມການຕອບສະໜອງຂອງກະສິກຳ. ສະນັ້ນ, ຝ່າຍນິຍົມກະສິກຳຈິ່ງຮຽກຮ້ອງໃຫ້ທຸກການເກັບພາສີແມ່ນຂຶ້ນກັບຜູ້ທີ່ມີດິນດອນເປັນຄົນປະກອບສ່ວນໃຫ້ ສ່ວນພວກທຳການຜະລິດອຸດສະຫະກຳແມ່ນບໍ່ໄດ້ເສຍພາສີ. ພວກເຂົາດຳມີການຍຶດຄອງກຳມະສິດໂດຍບໍ່ຈຳກັດ ແລະ ຮຽກຮ້ອງໃຫ້ມີອິດສະຫຼະພາບໃນການຄ້າຂາຍ, ຕໍ່ຕ້ານກັບນະໂຍບາຍໃນການຮັກສາລະບົບການເກັບພາສີ, ຕໍ່ຕ້ານບັນດາຂໍ້ກຳນົດທີ່ຈຳກັດກ່ຽວກັບການອ້າງອີງເອກະສານ, ຕໍ່ຕ້ານການແຊກແຊງຂອງລັດຖະບານ. ຍ້ອນແນວນັ້ນຝ່າຍນິຍົມກະສິກຳຈິ່ງສະແດງໃຫ້ເຫັນຢ່າງຈະແຈ້ງກ່ຽວກັບແນວຄິດ ແລະ ຄວາມປາດຖະໜາຂອງຊົນຊັ້ນນາຍທຶນຝຣັ່ງ ໃນສະຕະວັດທີ 18. ກາກມາກໄດ້ຂຽນ ທິດສະດີຂອງຝ່າຍນິຍົມກະສິກຳວ່າແມ່ນແນວຄິດທຳອິດທີ່ມີລະບົບ ແລະ ກ່ຽວຂ້ອງກັບການຜະລິດແບບລັດທິທຶນນິຍົມ.[8]

[8] ກາກມາກ: ນາຍທຶນ, ເຫຼັ້ມ 2 ຕອນທີ 2 ໂຮງພິມຄວາມຈິງ ໜ້າ 17, 1961

ໃນການຖ່າຍທອດປັດຊະຍາແຫ່ງສະຫວ່າງຄຽງຄູ່ກັບນັກຈິດຕະວິທະຍານາຍທຶນຍັງມີບັນດານັກວັດຖຸນິຍົມທີ່ເປັນຕົວແທນໃຫ້ແກ່ສິດຜົນປະໂຫຍດຂອງກຳລັງຂອງມະຫາຊົນ, ໝາກຜົນແນວຄິດຂອງທ່ານເມເຣຍ ແມ່ນນັກປະຊາທິປະໄຕ 2 ທ່ານຄື: ມາບລີ (1709-1785) ແລະ ໂມແຣນລີ. ພວກເຂົາໄດ້ເບິ່ງເຫັນກົກເຄົ້າຂອງຄວາມທຸກຍາກທັງໝົດແມ່ນມາຈາກລະບອບຢຶດຄອງກຳມະສິດ ແລະ ຍົກໃຫ້ເຫັນວ່າຖ້າມະນຸດຢາກມີຄວາມສຸກຕ້ອງທຳການຕໍ່ສູ້ກັບລະບອບດັ່ງກ່າວນັ້ນ. ປະເທດຊາດໄດ້ຮັບການສ້າງຕັ້ງຂຶ້ນບົນພື້ນ ຖານການເປັນເຈົ້າຂອງສັງຄົມ ແລະ ກະຈາຍອຳນາດ. ມາບລີ ໄດ້ເວົ້າວ່າ: ພຽງແຕ່ມີກຳລັງຂອງມວນຊົນເປັນຜູ້ກຳອຳນາດຈຶ່ງຈະໄດ້ມາເຊິ່ງອຳນາດທີ່ແທ້ຈິງ ແລະ ອຳນາດສູງສຸດຕ້ອງເຕົ້າໂຮມໃນກຳມືຂອງພວກທີ່ເປັນຕົວແທນປະຊາຊົນ. ບໍ່ພຽງແຕ່ທຳການຕໍ່ສູ້ກັບລະບອບສັກດີນາ ແຕ່ທ່ານຍັງທຳການຕໍ່ສູ້ກັບທິດສະດີທາງດ້ານເສດຖະກິດຂອງພວກທຶນນິຍົມ, ຕໍ່ສູ້ຕ້ານກັບທິດສະດີຂອງຝ່າຍນິຍົມກະສິກຳ. ໂມແຣນລີ ເວົ້າວ່າ ສັງຄົມແບບຄອມມູນິດຕ້ອງຖືກສ້າງຂຶ້ນບົນພື້ນຖານຂອງບັນດາກົດເກນທາງທຳມະຊາດຕ້ອງຄິດສະເໜີວ່າການອອກແຮງງານແມ່ນໜ້າທີ່ຂອງໝົດທຸກຄົນໃນສັງຄົມ ແລະ ຕ້ອງມີການແບ່ງປັນຜົນຜະລິດໃຫ້ແກ່ທຸກຄົນທີ່ອອກແຮງງານຢ່າງເທົ່າທຽມກັນ.

ມາຍລີ ແລະ ໂມແຣນລີ ລ້ວນແຕ່ບໍ່ໄດ້ດຳເນີນການປະຕິວັດ ພຽງແຕ່ຕ້ອງການປະຕິຮູບລະບອບການເມືອງ ແລະ ສັງຄົມ ເພື່ອລົບລ້າງຄວາມບໍ່ສະເໝີພາບທາງດ້ານສັງຄົມ. ສະນັ້ນ, ພວກທ່ານຈຶ່ງມີບົດບາດສຳຄັນໃນການຖ່າຍທອດແນວຄວາມຄິດໃນເວລານັ້ນ ຍ້ອນມີແນວຄິດປະຊາທິປະໄຕມີລັກສະນະກ້າວໜ້າ.

ຕົວແທນໃຫ້ແກ່ແນວຄິດປະຕິວັດປະຊາທິປະໄຕທີ່ມີຄວາມຮູ້ຮອບດ້ານໃນໄລຍະແຫ່ງແສງສະຫວ່າງແມ່ນທ່ານ ເຈນ ແຈັກ ຣຸດໂຊ Jean-Jacques Rousseau (1712-1778). ທີ່ກຳເນີດໃນຄອບຄົວນາຍຊ່າງສ້ອມແປງໂມງ ຢູ່ເຈນນີວາ. ຣຸດໂຊຕ້ອງພົບກັບຄວາມທຸກຍາກລຳບາກຕັ້ງແຕ່ໄວເດັກ, ຕ້ອງພະເນຈອນໄປທົ່ວທຸກແຫ່ງ, ປະກອບອາຊີບຫຼາຍແຫ່ງເພື່ອລ້ຽງຊີບ ຍ້ອນແນວນັ້ນທ່ານຈຶ່ງເຂົ້າໃຈຄວາມທຸກຍາກຂອງມະຫາຊົນ ແລະ ມີຄວາມເບື່ອໜ່າຍຂອງລະບອບຜະດັດການສັກດີນາ.

ຊື່ສຽງຂອງທ່ານເປັນທີ່ຮູ້ຈັກກັນດີໃນຜົນງານທີ່ວ່າ: ວິທະຍານິພົນກ່ຽວກັບວິທະຍາສາດສິລະປະ, ວິທະຍານິພົນກ່ຽວກັບກົກເຄົ້າ, ພື້ນຖານທີ່ພາເກີດມີຄວາມບໍ່ສະເໝີພາບ, ສັນຍາທາງສັງຄົມ ແລະ ເລື່ອງ ອີເມເຣີ. ຄຸນຄ່າ. ຜົນສະທ້ອນຂອງຜົນງານການປະພັນດັ່ງກ່າວນັ້ນບໍ່ສະເພາະແຕ່ເປັນບົດປະພັນທີ່ມ່ວນ, ເປັນ

ສິລະປະໜຶ່ງທີ່ມີຄວາມອ່ອນຊ້ອຍ ແລະ ຊໍານິຊໍານານ ແຕ່ແນວຄິດຂອງຄົນກ່ຽວກັບສັງຄົມ ແລະ ການເມືອງຂອງທ່ານ ຣຸດໂຊ ໄດ້ກ່າວເຖິງສິດຜົນປະໂຫຍດ ແລະ ຄວາມປາດຖະໜາຂອງກໍາລັງມະຫາຊົນສ່ວນຫຼາຍ, ໂດຍສະເພາະແມ່ນພວກຊາວນາ ແລະ ຊຸມນາງນ້ອຍ.

ໃນການກ່າວປະນາມລະບອບຜະເດັດການສັກດີນາ ຣຸດໂຊ ໄດ້ທໍາການວິຈານລະບອບຍຶດຄອງກໍາມະສິດສ່ວນຕົວ ແລະ ການພົວພັນສັງຄົມທີ່ລະບອບຜະເດັດການສັກດີນາສ້າງຂຶ້ນ. ທ່ານໄດ້ຍົກໃຫ້ເຫັນຄວາມບໍ່ສະເໝີພາບແມ່ນໝາກຜົນຂອງລະບອບຍຶດຖືກໍາມະສິດສ່ວນຕົວ ແລະ ທ່ານໄດ້ຮຽກຮ້ອງວ່າທຸກຄົນຕ້ອງມີສິດສະເໝີພາບ. ທ່ານໄດ້ຍົກໃຫ້ເຫັນວ່າອໍານາດການປົກຄອງໃນເວລານັ້ນແມ່ນຮັບໃຊ້ໃຫ້ແກ່ພວກທີ່ຮັ່ງມີ ແລະ ຕໍ່ຕ້ານກັບພວກທຸກຍາກດ້ວຍວິທີການທີ່ໂຫດຮ້າຍປ່າເຖື່ອນທີ່ສຸດ. ແຕ່ປານນັ້ນ ຣຸດໂຊ ກໍ່ຍັງບໍ່ຕ້ອງການທໍາລາຍລ້າງລະບອບຍຶດຖືກໍາມະສິດສ່ວນຕົວ ເພາະທ່ານຄິດວ່າວຽກດັ່ງກ່າວນັ້ນບໍ່ສາມາດປະຕິບັດໄດ້ (ບໍ່ສາມາດທໍາລາຍລະບອບຍຶດຄອງກໍາມມະສິດໄດ້). ທ່ານພຽງແຕ່ດໍາເນີນການຄວບຄຸມລະບອບກໍາມະສິດສ່ວນຕົວ, ປ່ຽນຈາກລະບອບການຍຶດຄອງກໍາມະສິດສ່ວນລວມມາເປັນລະບອບຍຶດຄອງກໍາມະສິດສ່ວນຕົວ. ຈາກເຫດຜົນດັ່ງກ່າວມານັ້ນຖ້າບໍ່ສາມາດທັບມ້າງກົກເຄົ້າແຫ່ງຄວາມບໍ່ດີ, ໃນສັງຄົມກໍ່ບໍ່ສາມາດຫຼຸດຜ່ອນສະຖານນະການແຫ່ງຄວາມບໍ່ສເໝີພາບໃນສັງຄົມ. ທ່ານໄດ້ດໍາເນີນການປະຕິຮູບຈໍານວນໜຶ່ງຂຶ້ນ: ດໍາເນີນການເກັບພາສີອາກອນຊັບສິນ, ຈໍາກັດສິດໃນການສືບທອດມໍລະດົກ... ຈຸດເດັ່ນຂອງແນວຄິດທາງດ້ານການເມືອງຂອງທ່ານແມ່ນລະບອບການປົກຄອງ. ໃນຂະນະທີ່ ມົງແຕກກີເອີ ມີຄວາມໄວ້ເນື້ອເຊື່ອໃຈຕໍ່ກັບລະບອບລາຊາທິປະໄຕໃຕ້ລັດຖະທໍາມະນູນ, ໂວນແຕ ແລະ ດີເດີໂຣ ຄອຍຖ້າກໍາລັງພັນທະມິດຢູ່ນັ້ນ ຣຸດໂຊ ໄດ້ດໍາເນີນການສ້າງຕັ້ງປະເທດສາທາລະນະລັດຂຶ້ນທີ່ປົກປ້ອງສິດອໍານາດທັງໝົດຂອງປະຊາຊົນ, ຮັບປະກັນສິດອິດສະຫຼະພາບ, ມີຄວາມສະເໝີພາບ ແລະ ມີສິດໃນການຄອບຄອງຊັບສິມບັດຂອງຕົນເອງ. ແນວຄິດການເມືອງຂອງ ຣຸດໂຊ ໄດ້ມີຜົນສະທ້ອນເຮັດໃຫ້ຂະບວນການປະຕິວັດຢູ່ຝຣັ່ງມີຄວາມກ້າວໜ້າໂດຍສະເພາະແມ່ນໃນສະໄໝຂອງພວກຊາໂກແບັງ.

ບັນດານັກຈິດຕະວິທະຍາຝຣັ່ງເຖິງວ່າຈະມີແນວຄິດແຕກຕ່າງກັນ, ເພື່ອຜົນປະໂຫຍດທີ່ແຕກຕ່າງກັນແຕ່ວ່າໃນໄລຍະວິກິດການຂອງລະບອບສັກດີນາພວກເຂົາລ້ວນແຕ່ມີເປົ້າໝາຍເພື່ອສິດຜົນປະໂຫຍດຂອງມະຫາຊົນ ແລະ ຮຽກຮ້ອງໃຫ້ມີການໃຫ້ມີການປ່ຽນແປງລະບອບການປົກຄອງໃໝ່. ຂະບວນການຕໍ່ສູ້ດັ່ງກ່າວໄດ້ແຜ່ລາມໄປທົ່ວທຸກຂົງເຂດຂອງປັດຊະຍາ, ວັດທະນະທໍາ, ວິທະຍາສາດ, ສິລະປະ...ແນ່ໃສ່ເພື່ອ

ເປັນການເປີດທ້ອງຟ້າອັນໃໝ່ທີ່ສົດໃສ ແລະ ຂະບວນການປະຕິວັດນັ້ນສາມາດປົດປ່ອຍປະເທດຝຣັ່ງ ແລະ ສິ່ງຜົນສະທ້ອນໄປທົ່ວທະວີບເອີຣົບ ແລະ ບັນດານັກປັດຊະຍາວັດຖຸນິຍົມຝຣັ່ງຍັງເຮັດໃຫ້ສະຕະວັດທີ 18 ເປັນສະຕະວັດແຫ່ງປະເທດຝຣັ່ງ.[9]

**6. ລະບອບສັກດິນາເກີດວິກິດການອັນຮ້າຍແຮງ.**

ທ້າຍ ສະຕະວັດທີ 18 ລະບອບສັກດິນາສົມບູນສິດທິລາດຝຣັ່ງກ້າວເຂົ້າສູ່ສະພາບວິກິດການຢ່າງຮ້າຍແຮງ. ປີ ຄ.ສ 1787-1789 ວິກິດການທາງດ້ານອຸດສະຫະກຳ ແລະ ການຄ້າໄດ້ເກີດຂຶ້ນ ເຮັດໃຫ້ການຜະລິດຢຸດສະງັດ. ທຸກທຸລະກິດ ແລະ ໂຮງຈັກໂຮງງານຕ້ອງປິດຕົວລົງ, ການກໍ່ສ້າງສິ່ງຕ່າງໆຕ້ອງຢຸດຕິລົງ, ໄພຫວ່າງງານໄດ້ແຜ່ລາມໄປທົ່ວທຸກບ່ອນ... ພ້ອມດຽວກັນນັ້ນສະພາບດິນຟ້າອາດກາດກໍ່ມີການປ່ຽນແປງເກີດມີພາຍຸໝາກເຫັບ, ອາກາດໜາວຜິດປົກກະຕິໃນລະດູໜາວໃນປີ 1788-1789 ເຮັດໃຫ້ຂົງທີ່ທຳການປູກໝາກອາຫງຸ່ນໄດ້ຮັບຄວາມເສຍຫາຍຢ່າງໜັກ, ເກີດມີໄພອຶດຫິວ, ໃນເວລາດຽວກັນນັ້ນຊົນຊັ້ນຂຸນນາງພັດບໍ່ຢຸດໃນການກົດຂີ່ຂູດຮີດ, ປັບປຸງລະບົບພາສີເກົ່າ, ເພີ່ມທະວີການເກັບພາສີແບບໃໝ່ຂຶ້ນເລື້ອຍໆເຮັດໃຫ້ປະຊາຊົນທຸກຍາກລຳບາກ. ວິກິດການທາງດ້ານການເງິນກໍ່ເກີດຂຶ້ນໃນໄລຍະນີ້ກາຍເປັນບັນຫາທີ່ໜັກໜ່ວງໃນປະເທດ. ຍ້ອນການນຳໃຊ້ລະບົບກອງທຶນ ແລະ ການຫຼິ້ນກິນຟຸມເຟືອຍ, ການສ້າງຫໍປະສາດລາດຊະວັງທີ່ໃຫຍ່ໂຕ, ໜີ້ສິນຂອງພວດລາດຊະວົງ ເຮັດໃຫ້ລັດຖະບານຕ້ອງໄດ້ຢືມເງິນ ແລະ ເປັນໜີ້ຈຳນວນ 4 ຕື້ຟຣັງ (ສະກຸນເງິນຝຣັ່ງ) ແລະ ບໍ່ສາມາດໃຊ້ໜີ້ຕໍ່ໄປໄດ້ອີກ. ໃນເວລານັ້ນເຈົ້າໜີ້ກໍ່ບໍ່ສາມາດປ່ອຍເງິນໃຫ້ຢືມຕໍ່ໄປໄດ້ອີກ, ສ່ວນເງິນພາສີອາກອນກໍ່ຖືກນຳໃຊ້ຈົນໝົດກ້ຽງ ເຮັດໃຫ້ຝຣັ່ງກ້າວເຂົ້າສູ່ຄວາມວຸ້ນວາຍ ເຮັດໃຫ້ເຈົ້າຊີວິດຕ້ອງເປີດກອງປະຊຸມຂຶ້ນໃນປີ 1787 ປະກອບມີພວກຂຸນນາງ ແລະ ນັກບວດເພື່ອຕົກລົງກັນເລື່ອງການເກັບພາສີເພື່ອຫາງົບປະມານຮັບໃຊ້ຊົນຊັ້ນຕົນເອງແຕ່ບໍ່ໄດ້ຮັບການເຫັນດີ ເຈົ້າຊີວິດຈຳເປັນຕ້ອງຍົກເລີກກອງປະຊຸມລົງ ແລະ ໄດ້ມີຄຳສັ່ງຮຽກປະຊຸມ 3 ຊົນຊັ້ນປະກອບມີຕົວແທນຈາກ 3 ຊົນຊັ້ນ. ກອງປະຊຸມ3 ຊົນຊັ້ນໄດ້ຮັບການສ້າງຕັ້ງຂຶ້ນແຕ່ປີ 1614 ທີ່ຖືກຫຼົງລືມໄປເປັນເວລາດົນນານສົມຄວນມາຮອດຕອນນີ້ໄດ້ຖືກກ່າວເຖິງ ເພື່ອແກ້ໄຂບັນຫາຄວາມຫຍຸ້ງຍາກຂອງປະເທດຊາດ.

[9] ອັງແກນ, ລັດທິສັງຄົມນິຍົມຂະຫຍາຍຕົວແຕ່ແນວຄິດເຖິງວິທະຍາສາດ, ກາກມາດ-ອັງແກນ, ເຫຼັ້ມ2 ໂຮງພິມ ຄວາມເປັນຈິງ, 1962, ໜ້າ 151.

ໃນເວລານັ້ນສັດຕູຂອງລະບອບສັກດີນາ ແລະ ປະຊາຊົນໄດ້ລຸກຂຶ້ນຕໍ່ສູ້ທົ່ວທຸກຫົນແຫ່ງ. ພ້ອມດຽວກັນນັ້ນກຳມະກອນຢູ່ ປາຣີ ກໍ່ລຸກຂຶ້ນຕໍ່ສູ້ເພື່ອຍາດເອົາສິດຜົນປະໂຫຍດເປັນຂີດໝາຍ ແຫ່ງການຂ້າຕະກຳພວກຂຸນນາງ. ສະເພາະແຕ່ລະດູໃບໄມ້ຫຼົ່ນຂອງປີ 1789 ມີຂະບວນການຕໍ່ສູ້ຂອງຊາວນາ ແລະ ມວນຊົນໃນຕົວເມືອງເກີດຂຶ້ນເຖິງ 800 ຄັ້ງ ສະມາຄົມການເງິນ ຕ້ອງຍອມຮັບແລ້ວວ່າບໍ່ມີສະໜາມຮົບໃດທີ່ຍາດເອົາໄຊຊະນະມາໄດ້, ນັບທັງກຳລັງທະຫານກໍ່ບໍ່ສາມາດເຊື່ອຖືໄດ້ອີກ. ລັດຖະບານໄດ້ແຕ່ງຕັ້ງກຳລັງທະຫານໄປປາບປາມແຕ່ວ່າສາມາດປາບປາມໄດ້ໃນຂົງເຂດນີ້ແຕ່ກໍ່ມີຂະບວນການຕໍ່ສູ້ໃນຂົງເຂດໃໝ່ເກີດຂຶ້ນລຽນຕິດທົ່ວດິນແດນປະເທດຝຣັ່ງໃນເວລານັ້ນຄວາມເບື່ອໜ່າຍລະບອບສັກດີນາເຮັດໃຫ້ຂະບວນການປະຕິວັດສຸກງອມຂຶ້ນເລື້ອຍໆ.

## II. ຄວາມຜັນແປຂອງການປະຕວັດນາຍທຶນຝຣັ່ງ (1789-1794)

ລະດູຮ້ອນຂອງປີ 1789 ປະເທດຝຣັ່ງພວມປະເຊີນໜ້າກັບການປະຕິວັດນາຍທຶນ. ກຳລັງຂອງມະຫາຊົນພາຍໃຕ້ການນຳພາຂອງຊົນຊັ້ນນາຍທຶນໄດ້ພາກັນລຸກຂຶ້ນຕໍ່ສູ້ຕ້ານກັບລະບອບສັກດີນາສົມບູນສິດ ແລະ ສ້າງຕັ້ງລະບອບໃໝ່ຄືລະບອບນາຍທຶນ ສາມາດແບ່ງໄລຍະນີ້ອອກເປັນ 3 ໄລຍະຄື:

1. ໄລຍະການປະຕິວັດລະເບີດຂຶ້ນ ແລະ ການປົກຄອງນາຍທຶນພາຍໃຕ້ລັດຖະທຳມະນູນ ( 14 ກໍລະກົດ 1789- 10 ສິງຫາ 1792).
2. ໄລຍະການປົກຄອງຝ່າຍສາທາລະນະລັດນາຍທຶນ ຊີຣົງແດັງ (10 ສິງຫາ 1792-31 ພຶດສະພາ 1793 ).
3. ໄລຍະຜະເດັດການປະຊາທິປະໄຕ ຊາໂກແບັງ (ເດືອນ ມິຖຸນາ 1793- ເດືອນກໍລະກົດ 1794).

1. **ໄລຍະການປະຕິວັດລະເບີດຂຶ້ນ ແລະ ການປົກຄອງນາຍທຶນພາຍໃຕ້ລັດຖະທຳມະນູນ ( 14 ກໍລະກົດ 1789- 10 ສິງຫາ 1792).**

1) **ຈຸດສຸດຍອດຂອງການປະຕິວັດ ແລະ ການພັງທະລາຍຂອງລະບອບສັກດີນາສົມບູນສິດ**

❖ **ກອງປະຊຸມ 3 ຊົນຊັ້ນ ແລະ ລັດຖະສະພາພາຍໃນລັດຖະທຳມະນູນ**

ວັນທີ 5 ພຶດສະພາ 1789 ກອງປະຊຸມ 3 ຊົນຊັ້ນໄດ້ໄຂຂຶ້ນທີ່ພະລາດຊະວັງແວກຊາຍພາຍໃຕ້ການຄວບຄຸມຂອງເຈົ້າຊີວິດມີຕົວແທນຈາກຂຸນນາງ 270 ຄົນ, ຕົວແທນນັກບວດ 300 ຄົນ ແລະ ຕົວແທນໃຫ້ແກ່ຊົນຊັ້ນທີ 3 ຈຳນວນ 600 ຄົນ ແຕ່ໃດມາຕົວແທນຂອງຊົນຊັ້ນທີ 3 ຈະຖືກດູໝິ່ນ.

ຂະບວນການຕໍ່ສູ້ໄດ້ເກີດຂຶ້ນດ້ວຍຮູບການລົງຄະແນນສຽງ ແລະ ກວດກາຈຳນວນຜູ້ແທນຂອງຕົນ. ໃນວັນທີ 6 ພຶກສະພາ ຜູ້ແທນ 2 ຊົນຊັ້ນທີ່ມີສິດໃນສະພາໄດ້ເຕົ້າລວມກັນເພື່ອກວດກາຈຳນວນຜູ້ແທນຂອງຕົນ ແລະ ຍັງດຳເນີນການລົງຄະແນນສຽງຕາມຊົນຊັ້ນນັ້ນກໍ່ຄື: ທຸກຊົນຊັ້ນມີສິດປ່ອນບັດພຽງ 2 ບັດເທົ່ານັ້ນເຊິ່ງໄດ້ລະບຸລົງໃນມະຕິຂອງກອງປະຊຸມ. ຍ້ອນແນວນັ້ນເຖິງວ່າຈຳນວນຜູ້ແທນຂອງຊົນຊັ້ນທີ 3 ຈະມີຫຼາຍກໍ່ຕາມແຕ່ກໍ່ຍັງມີຄະແນນສຽງດ້ອຍກວ່ານັ້ນກໍ່ຄື 1ຕໍ່2. ສະນັ້ນ, ພວກເຂົາຈິ່ງທຳການຕໍ່ຕ້ານການລົງຄະແນນສຽງແບບລວມໝູ່ຕາມຊົນຊັ້ນ ແລະ ປ່ຽນແທນມາເປັນການລົງຄະແນນສຽງເປັນບຸກຄົນ.

ໃນເວລານັ້ນກຳລັງມວນຊົນທີ່ຕິດຕາມກອງປະຊຸມຢູ່ດ້ານນອກພະລາດຊະວັງບໍ່ພໍໃຈຕໍ່ກັບການກະທຳຂອງເຈົ້າຊີວິດ ແລະ ທັງ 2 ຊົນຊັ້ນ. ວັນທີ 10 ມິຖຸນາ ຜູ້ແທນຊົນຊັ້ນທີ 3 ນັກບວດ ຊີອວຽດ ປະກາດວ່າ 2 ຊົນຊັ້ນປົກຄອງບໍ່ຍອມມາເຕົ້າລວມ ແລະ ຊົນຊັ້ນທີ່3 ໄດ້ທຳການກວດກາຈຳນວນຕົວແທນຂອງຊົນຊັ້ນທັງໝົດ.

ວັນທີ 17 ມິຖຸນາ ພາຍຫຼັງທີ່ມີການກວດກາຈຳນວນຜູ້ແທນສຳເລັດແລ້ວ ບັນດາຜູ້ແທນຂອງຊົນຊັ້ນປີ 3 ໄດ້ປະກາດສ້າງຕັ້ງສະມາຄົມບັນດາເຜົ່າຂຶ້ນ ນີ້ແມ່ນການມະຕິຕົກລົງຄັ້ງທຳອິດທີ່ບໍ່ຕ້ອງການເຈົ້າຊີວິດ ແລະ ນິຕິບັດຢັດທີ່ຊົນຊັ້ນທີ 3 ມີສິດໃນກຳມື. ເຈົ້າຊີວິດບໍ່ເຫັນດີຢ່າງຍິ່ງຈິ່ງທຳການປິດປະຕູພະລາດຊະວັງບໍ່ອະນຸຍາດໃຫ້ຜູ້ແທນເຂົ້າຮ່ວມກອງປະຊຸມໃນວັນທີ 20 ມິຖຸນາ. ຕໍ່ກັບສະພາບການເປັນຄືແນວນັ້ນປະຊາຊົນ ແລະ ບັນດາຜູ້ແທນຍິ່ງເຕົ້າລວມກັນຢູສະໜາມກິລາໃນຮົ່ມ. ຢູ່ທີ່ນັ້ນພວກເຂົາໄດ້ຜ່ານມະຕິສຳຄັນ, ສັນຍາວ່າ

ຈະບໍ່ຢຸດຕິການປະຊຸມແລະ ຈະເຕົ້າລວມກັນຢູ່ສະຖານທີ່ໃດກໍ່ໄດ້ຈົນກວ່າລັດຖະທຳມະນູນໄດ້ຮັບການສ້າງຂຶ້ນ.

ຮອດວັນທີ 23 ມິຖຸນາ ບັນດາຜູ້ແທນຊົນຊັ້ນທີ 3 ໄດ້ຮັບອະນຸຍາດໃຫ້ເຕົ້າລວມຢູ່ພະລາດຊະວັງແວກຊາຍອີກຄັ້ງ. ແຕ່ພາຍຫຼັງການກ່າວສູນທອນລະພົດ, ກະສັດໄດ້ທຳການແຍກສະມາຊິກສະພາເພື່ອເຮັດວຽກຂອງແຕ່ລະຊົນຊັ້ນ. ບໍ່ອະນຸຍາດໃຫ້ສະມາຊິກຄົນໃດໃນຊົນຊັ້ນທີ 3 ຍ້າຍບ່ອນນັ່ງເປັນອັນຂາດ. ປະຊາຊົນຢູ່ນອກຫ້ອງປະຊຸມໄດ້ລວມຕົວກັບຜູ້ແທນ ເຖິງແມ່ນວ່າຈະມີຄຳສັ່ງອັນເຄັ່ງຄັດກໍ່ຕາມ, ກຳລັງທະຫານ ແລະ ຕຳຫຼວດທີ່ທຳໜ້າທີ່ຮັກສາຄວາມປອດໄພໃນການປະຊຸມກໍ່ຮ່ວມມືກັບຝ່າຍປະຕິວັດ.

ວັນທີ 9 ກໍລະກົດ ສະມາຄົມບັນດາເຜົ່າໄດ້ປະກາດຕົນເປັນລັດຖະສະພາພາຍໃຕ້ລັດຖະທຳມະນູນ ເພື່ອກຳນົດພາລະບົດບາດຂອງຕົນໃນການນຳໃຊ້ກົດໝາຍຂອງປະເທດຊາດ. ເຈົ້າຊີວິດຍັງຄົງຮັກສານະໂຍບາຍອັນຊົ່ວຮ້າຍຂອງຕົນໄວ້ໂດຍການຕົກລົງຍຸບເລີກສະມາຄົມລັດຖະມົນຕີການເງິນ ຜ່ານຄຳເວົ້າທີ່ວ່າ ຖ້າຕ້ອງການເຜົາຜານປາຣີພວກເຮົາກໍ່ຈະທຳການຈູດເຜົາປາຣີ ທະຫານຖືກລະດົມໃຫ້ກັບມານະຄອນຫຼວງປາຣີ ແລະກຽມພ້ອມທີ່ຈະລັ່ນປືນໃສ່ມວນຊົນ (ກຳລັງປະຕິວັດ).

❖ **ຂະບວນການປະຕິວັດໃນວັນທີ 14 ກໍລະກົດ 1789**

ວັນທີ 12 ກໍລະກົດ ເດີ ເບຣີເຕີຍ ໄດ້ຮັບແຕ່ງຕັ້ງເປັນລັດຖະມົນຕີກະຊວງການເງິນ ແລະ ການທີ່ກະສັດເຕົ້າໂຮມກຳລັງທະຫານໄດ້ສ້າງຄວາມບໍ່ພໍໃຈຕໍ່ກັບຊາວນະຄອນປາຣີ. ກຳລັງຊາວຜູ້ອອກແຮງງານ ແລະ ພວກນາຍທຶນປະຕິວັດໄດ້ຈັບກຳລັງອາວຸດທີ່ມີລັກສະນະປະຖົມປະຖານເຊັ່ນ,: ປືນ, ມີດ, ກ່ຽວ... ພວກທະຫານໄດ້ຫັນມາຮ່ວມມືກັບປະຊາຊົນ ຍົກເວັ້ນພວກທະຫານຮັບຈ້າງຕ່າງປະເທດ.

ຜູ້ມີສິດເລືອກຕັ້ງຢູ່ປາຣີ ໄດ້ຕັດສິນໃຈສ້າງຕັ້ງອົງການກຳອຳນາດນະຄອນໃໝ່ເອີ້ນວ່າ ຄະນະກຳມະການ ແລະ ຈັດຕັ້ງກຳລັງທະຫານເພື່ອປ້ອງກັນອານາຈັກ. ວັນທີ 14 ກໍລະກົດກຳລັງຝ່າຍປະຕິວັດສາມາດບຸກຍຶດເອົາບັນດາສຳນັກງານຫ້ອງການທີ່ສຳຄັນທັງໝົດໃນນະຄອນ. ຖານທັບອັນສຸດທ້າຍທີ່ຈະຕ້ອງບຸກຕີແມ່ນຄຸກ ບັດສຕິນ ທີ່ມີຄູນ້ຳເລິກ, ມີຂົວແຂວນ ແລະ ປືນໃຫຍ່. ຄະນະກຳມະການຂອງກະສັດບໍ່ເຄີຍຄິດວ່າພວກມວນຊົນຈະບຸກເຂົ້າຄຸກບັດສຕິນໄດ້. ແຕ່ວ່າກຳລັງປະຕິວັດປະກອບດ້ວຍນາຍຊ່າງບໍ່ວ່າຈະເປັນຊ່າງໄມ້, ຊ່າງເຮັດເກີບ, ຊ່າງຍ້ອມຜ້າ, ພໍ່ຄ້າຊາວຂາຍຂະໜາດນ້ອຍ, ຊາວນາເຂດຊົນນະບົດ ໄດ້ທຳການປິດ

ລ້ອມຄຸກແລະ ດຳເນີນການຕໍ່ສູ້ລຽນຕິດ. ພາຍຫຼັງບຸກຕີເປັນເວລາ 4 ຊົ່ວໂມງກຳລັງປະຕິວັດກໍ່ບຸກໂຈມຕີເຮັດໃຫ້ປ້ອມຄຸກບັດສຕິນພັງະລາຍລົງ.



ກຳລັງຝ່າຍປະຕິວັດທຳການປິດລ້ອມຄຸກ ບັດສຕິນ ໃນວັນທີ 14 ກໍລະກົດ 1789 ທີ່ເປັນເຮືອນຮັງອັນສຸດທ້າຍຂອງເຈົ້າຊີວິດຝຣັ່ງ

ການບຸກຍຶດຄຸກ ບັດສຕິນ ເປັນສັນຍາລັກແຫ່ງໄຊຊະນະຂອງການປະຕິວັດ, ປະສາດທີ່ແຂ່ງແກ່ນ, ໃຫຍ່ໂຕຫຼູຫຼາຕັ້ງສະຫງ່າຂຶ້ນເປັນເວລາ 100 ປີ ທີ່ເປັນສັນຍາລັກແຫ່ງລະບອບຜະເດັດການສັກດີນາທີ່ເຄັ່ງຄັດໄດ້ຕົກຢູ່ໃນກຳມືກຳລັງປະຕິວັດຂອງປະຊາຊົນ.

ຍ້ອນແນວນັ້ນ ວັນທີ 14 ກໍລະກົດ 1789 ໄດ້ຖືກຈາກລຶກຕະຫຼອດໄປໃນປະຫວັດສາດຂອງປະເທດຝຣັ່ງ, ໄດ້ກາຍມາເປັນວັນຊາດຂອງຝຣັ່ງ, ອັນໄດ້ເຮັດໃຫ້ອຳນາດການປົກຄອງຂອງລະບອບສັກດີນາພາຍໃນປະເທດມີຄວາມສັ່ນຄອນ ແລະ ເປັນດັ່ງສຽງລະຄັງທີ່ດັ່ງໄປທົ່ວທະວີບເອີຣົບ ແລະ ທະວີບອາເມຣິກາ.

- ຈຸດສຸດຍອດຂອງການປະຕິວັດໃນປະເທດ

ໄຊຊະນະຂອງການປະຕິວັດທີ່ປາຣີ ໄດ້ເປັນກຳລັງແຮງສະໜັບສະໜູນໃຫ້ແກ່ກຳລັງການປະຕິວັດປົດປ່ອຍຂອງຊາວນາໃນທົ່ວປະເທດ. ໃນເດືອນກໍລະກົດ ແລະ ເດືອນສິງຫາຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງຊາວນາໄດ້ລະເບີດຂຶ້ນໃນທົ່ວທຸກຂົງເຂດຂະບວນການຕໍ່ສູ້ມີຫຼາຍຮູບແບບເຊັ່ນ: ບໍ່ຍອມເສຍພາສີ, ຈູດຜົາທຳລາຍເຮືອນຊານເຈົ້າທີ່ດິນ, ທຳລາຍສິດທິຂອງສັກດີນາ, ກຳຈັດຄວາມຊົ່ວຮ້າຍຂອງພວກສັກດີນາ. ຂະບວນການລຸກຮື້ຂຶ້ນຍຶດອຳນາດໄດ້ແຜ່ລາມອອກເປັນວົງກວ້າງຂວາງຢູ່ບັນດາແຂວງ ອານຢາດ, ຟຣັງເຊີ, ກົງແຕ (ເບື້ອງຕາເວັນອອກ), ລີອົງ, ນໍມັງດີ... ຊາວນາຜູ້ທຸກຍາກໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການປະຕິວັດຕາມເຂດຊົນນະບົດ.

ພ້ອມດຽວກັນນັ້ນຢູ່ຕາມຕົວເມືອງກໍ່ດຳເນີນການລົບລ້າງອຳນາດການປົກຄອງເກົ່າປະຫວັດສາດເອີ້ນເຫດການນີ້ວ່າ: ການປະຕິວັດໃນຕົວເມືອງ ຈາກເຫດການທີ່ເມືອງປາຣີເຮັດໃຫ້ປະຊາຊົນຢູ່ຕາມທ້ອງຖິ່ນຕ່າງໆມີຄວາມກະຕືລືລົ້ນພາກັນລຸກຂຶ້ນຕໍ່ສູ້ທຳລາຍເຮືອນຊານບ້ານຊ່ອງຂອງພວກຂຸນນາງ, ບຸກໂຈມຕີເຂົ້າອາຄານສະຖານທີ່ເຮັດວຽກເພື່ອທຳລາຍເຮືອນຮັງຂອງລະບອບສັກດີນາ ແລະ ມອບອຳນາດໃຫ້ແກ່ພວກນາຍທຶນຮັ່ງມີທັງຫຼາຍ ບັນດາກອງທັບປົກປັກຮັກສານະຄອນ ປາຣີ ແລະ ແຂວງຕ່າງໆໄດ້ຮັບການສ້າງຕັ້ງຂຶ້ນ.

ເຫດການຍຶດຄຸກບັດສຕີນ, ຂະບວນການປະຕິວັດຂອງຊາວນາໃນຊົນນະບົດ ແລະ ຂະບວນການປະຕິວັດຕົວເມືອງໃນຕົວເມືອງຕ່າງໆໄດ້ເປັນກຳລັງສະໜັບສະໜູນອັນເຂັ້ມແຂງໃນການບຸກໂຈມຕີລະບອບສັກດີນາ, ສາມາດຍາດເອົາໄຊຊະນະມາສູ່ການປະຕິວັດ. ອຳນາດການປົກຄອງໃໝ່ຂອງພວກນາຍທຶນໄດ້ຮັບການສ້າງຕັ້ງຂຶ້ນເພື່ອປ່ຽນແທນລະບອບຜະເດັດການສັກດີນາທີ່ມີມາແຕ່ກ່ອນເກົ່າ.

**2) ລັດຖະບານພາຍໃຕ້ລັດຖະທຳມະນູນ ແລະ ການເຄື່ອນໄຫວຕ່າງໆຂອງລັດຖະບານພາຍໃຕ້ລັດຖະທຳມະນູນ.**

ພາຍຫຼັງທີ່ທັບມ້າງລະບອບຜະເຍບດັດ, ອຳນາດການປົກຄອງກໍ່ຕົກຢູ່ໃນກຳມືຂອງຝ່າຍລັດຖະທຳມະນູນເຊິ່ງກຸ່ມຄົນເຫຼົ່ານີ້ເປັນຕົວແທນໃຫ້ແກ່ສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນ ແລະ ຂຸນນາງນາຍທຶນເຊິ່ງປະກອບດ້ວຍ: ເຈົ້າຂອງທະນາຄານ, ເຈົ້າຂອງເຮືອສິນຄ້າ, ນາຍທຶນອຸດສະຫະກຳ ແລະ ພໍ່ຄ້າໃຫຍ່, ພວກເຂົາໄດ້ດຳລົງຕຳແໜ່ງສຳຄັນໃນສະພາລັດຖະທຳມະນູນ, ຕາມສຳນັກງານອຳນາດການປົກຄອງຢູ່ນະຄອນປາຣີ

ແລະ ຢູ່ຂັ້ນແຂວງ. ກຳລັງປົກປັກຮັກສາປະເທດຊາດແມ່ນຕົກຢູ່ໃນກຳມືຂອງຂຸນນາງ ລາຟີແຢດ ເປັນຂຸນນາງນາຍທຶນອິດສະຫຼະທີ່ເຄີຍເຂົ້າຮ່ວມການເຮັດສົງຄາມທີ່ອາເມຣິກາເໜືອ ແລະ ດຳເນີນການປະຕິວັດນາຍທຶນ ແລະ ຜູ້ທີ່ມີອຳນາດສູງສຸດໃນສະພາແມ່ນ ຂຸນນາງນາຍທຶນທີ່ມີຊື່ວ່າ ມີຣາໂບ ທີ່ເປັນນັກການເມືອງຕໍ່ຕ້ານກັບລະບອບປະຊາທິປະໄຕ.

❖ ຖະແຫຼງການສິດທິມະນຸດ ແລະ ສິດທິຂອງການເປັນພົນລະເມືອງ (ເດືອນສິງຫາ 1789)

ນັບແຕ່ຕອນຕົ້ນຂອງການປະຕິວັດ ແລະ ຍ້ອນໄດ້ຮັບຜົນສະທ້ອນຈາກຂະບວນການຕໍ່ສູ້ຂອງປະຊາຊົນ, ຝ່າຍລັດຖະທຳມະນູນເປັນເປັນກຸ່ມຄົນຈຳນວນຫຼາຍໃນສະພາໄດ້ຮ່ວມມືກັນຮ່າງຖະແຫຼງການສິດທິມະນຸດ ແລະ ສິດທິຂອງການເປັນພົນລະເມືອງ.

ມາວັນທີ 26 ສິງຫາ 1789 ສະພາລັດຖະທຳມະນູນໄດ້ຜ່ານຖະແຫຼງການທີ່ປະກອບມີເນື້ອໃນ 12 ຂໍ້ ຖະແຫຼງການໄດ້ກຳນົດອິດສະຫຼະພາບ ຄວາມສະເໝີພາບຂອງມະນຸດ, ຢັ້ງຢືນວ່າເຈົ້າຂອງສິດແມ່ນເປັນຂອງປະຊາຊົນ, ກຳນົດສິດໃນການເປັນເຈົ້າຂອງຊັບສົມບັດ, ພ້ອມກັນນັ້ນຍັງກຳນົດສິດໃນການເປັນເຈົ້າຂອງກຳມະສິດໃຫ້ແກ່ປະຊາຊົນ. ນັ້ນມັນໄດ້ສະແດງໃຫ້ເຫັນລັກສະນະກ້າວໜ້າ ແລະ ລັກສະນະປະຕິວັດນັ້ນແມ່ນເອກະສານທາງການເມືອງທີ່ສະແດງໃຫ້ເຫັນແນວຄິດຂອງນັກປັດຊະຍາຝຣັ່ງໃນສະຕະວັດທີ 18 ໂດຍພາຍໃຕ້ຄຳຂວັນທີ່ວ່າ: ອິດສະຫຼະພາບ, ຄວາມສະເໝີພາບ, ຄວາມມີເມດຕາ. ເປັນປະຫວັດສາດຄັ້ງທຳອິດຂອງຝຣັ່ງ ແລະ ທະວີບເອີຣົບທີ່ອຳນາດສູງສຸດແມ່ນຂຶ້ນກຳປະຊາຊົນຄຽງຄູ່ກັບສິດອິດສະຫຼະພາບປະຊາທິປະໄຕອື່ນອີກ. ອຳນາດຂອງເຈົ້າຊີວິດໃນລະບອບສັກດີນາແມ່ນຖືກລົບລ້າງ ແຕ່ສະຫຼຸບລວມແລ້ວການປະຕິວັດດັ່ງກ່າວເປັນສັນຍາລັກບໍ່ສາມາດລົບລ້າງການປະຕິວັດຂອງກຳລັງປະຊາຊົນມັນແມ່ນຜົນສຳເລັດອັນຈົບງາມທີ່ປະຊາຊົນເປັນຜູ້ສ້າງຂຶ້ນ.

ໃນໄລຍະທີ່ລະບອບລາຊາທິປະໄຕຜະເດັດການສັກດີນາ ກຳລັງປົກຄອງທະວີບເອີຣົບສິດທິພື້ນຖານຂອງມະນຸດແມ່ນຖືກຂົ່ມຂູ່ຢ່າງໄຮ້ມະນຸດສະທຳ. ຖະແຫຼງການຄວາມຈິງແລ້ວເປັນເອກະສານ ແລະ ນິຕິກຳປະຫວັດສາດ, ເປັນການຮຽກຮ້ອງໃຫ້ປະຊາຊົນທີ່ຖືກກົດຂີ່ໃຫ້ລຸກຂຶ້ນຕໍ່ສູ້.



ກະສັດ ຫຼຸຍທີ 14 ຂອງຝຣັ່ງ

- **ນະໂຍບາຍຂອງຝ່າຍລັດຖະທຳມະນູນ ແລະ ລັດຖຳທຳມະນູນໃນປີ 1791**

ນະໂຍບາຍກ່ຽວກັບທີ່ດິນແມ່ນສະມາຄົມໄດ້ລົບລ້າງລະບົບຕ່າງໆຂອງລະບອບສັກດີນາ, ບັນດາພາສີພື້ນຖານເຊັ່ນ: ພາສີນ້ຳມັນ, ພາສີແຮງງານ, ພາສີຖ່າຍທອດດິນນາພຽງແຕ່ຖືກລົບລ້າງພາຍຫຼັງທີ່ຊາວນາແລກປ່ຽນຂອງຂວັນອັນມະຫາສານທີ່ເກີນຄວາມສາມາດຈະເຮັດໄດ້ໃຫ້ແກ່ພວກເຈົ້າຂອງທີ່ດິນ ຄິດເປັນເງິນປະມານ 20 ເທື່ອຂອງພາສີໃນແຕ່ລະປີ. ສ່ວນທີ່ດິນຂອງໂບດແມ່ນຂາຍໃຫ້ພວກເຮັດຟາມກະເສດໂດຍໃຫ້ເວລາໃນການຈ່າຍເງິນຄືນເຖິງ 4 ປີ. ຄວາມຈິງແລ້ວປະຊາຊົນແມ່ນບໍ່ໄດ້ຮັບການແກ້ໄຂຫຍັງຕາມທີ່ໄດ້ກຳນົດໃນຖະແຫຼງການຂ້າງເທິງນັ້ນ.

ນະໂຍບາຍທາງດ້ານອຸດສະຫະກຳ-ການຄ້າ ແມ່ນພວກເຂົາໄດ້ລົບລ້າງລະບຽບການຕ່າງໆທີ່ພວກສັກດີນາສ້າງຂຶ້ນ, ໂດຍອະນຸຍາດໃຫ້ມີການຄ້າຂາຍເຂົ້າສາລີ, ຫ້າມນຳເຂົ້າສິນຄ້າຈາກຕ່າງປະເທດແນໃສ່ເພື່ອການສົ່ງເສີມການຜະລິດພາຍໃນປະເທດ.

ນະໂຍບາຍດັ່ງກ່າວເຮັດໃຫ້ປີ 1790 ຢູ່ຝຣັ່ງໄດ້ປະກົດມີຮ່ອງຮອຍຄວາມຈະເລີນຮຸ່ງເຮືອງທຳອິດທາງດ້ານເສດຖະກິດ. ພ້ອມດຽວກັນນັ້ນຂະບວນການຕໍ່ສູ້ຂອງກຳມະກອນເພື່ອທວງໃຫ້ເພີ່ມເງິນເດືອນ, ຫຼຸດຜ່ອນໂມງເຮັດວຽກຈາກ 12 ຊົ່ວໂມງ ເຊິ່ງຂະບວນດັ່ງກ່າວນີ້ນັບມື້ນັບເພີ່ມຂຶ້ນເລື້ອຍໆ. ບັນດາສະມາຄົມ

ຂອງກຳມະກອນໄດ້ເກີດຂຶ້ນຢ່າງຫຼວງຫຼາຍເຊັ່ນ: ສະມາຄົມເພື່ອນມິດຂອງມວນມະນຸດຢູ່ປາລີ, ສະມາຄົມມິດຕະພາບຂອງບັນດານາຍຊ່າງໄມ້ຢູ່ປາຣີທີ່ປະກອບມີສະມາຊິກຫຼາຍພັນຄົນເຂົ້າຮ່ວມສະໂມສອນ ຫຼື ສະມາຄົມທາງການເມືອງ ແລະ ມີຄວາມຮູ້ໃນການພົວພັນກັບບັນດາກຳມະກອນຢູ່ຕ່າງແຂວງ. ເພື່ອເປັນການຈຳກັດຂະບວນການຕໍ່ສູ້ຂອງກຳມະກອນ ສະພາລັດຖະທຳມະນູນ ໄດ້ປະກາດນຳໃຊ້ກົດໝາຍຊາເພີເຣຍ ໃນວັນທີ 14 ມິຖຸນາ 1790 ທີ່ກຳນົດວ່າ: ຖ້າກຳມະກອນຮ່ວມອາຊີບໂອ້ລົມສົນທະນາກັນ, ຮ່ວມສັນຍາກັນເພື່ອບໍ່ຕໍ່ຕ້ານການອອກແຮງງານ ຫຼື ຮຽກຮ້ອງໃຫ້ມີການປັບປຸງເງິນເດືອນໃນການອອກແຮງງານກໍ່ຈະຖືວ່າການສົນທະນາ ແລະ ການພົວພັນດັ່ງກ່າວຜິດຕໍ່ລັດຖະທຳມະນູນ ຫຼື ຜິດຕໍ່ກົດໝາຍ ສິ່ງນີ້ຜິດຕໍ່ອິດສະຫຼະພາບ ແລະ ຖະແຫຼງການສິດທິມະນຸດ. ພວກເຂົາຕ້ອງຖືກຕັດສິດທິຂອງການເປັນກຳມະກອນເປັນເວລາ 1 ປີ ແຖມຍັງຖືກຕັດເງິນເປັນຈຳນວນ 500 ຟຣັງ.

ນັບແຕ່ເດືອນພຶດສະພາຫາເດືອນມິຖຸນາ 1790 ສະພາໄດ້ເອົາໃຈໃສ່ໃນການຈັດຕັ້ງທາງດ້ານການເມືອງຕາມຮູບແບບທິດສະດີໃໝ່, ນະຄອນຫຼວງປາຣີຖືກຕັດແບ່ງອອກເປັນຫຼາຍຂົງເຂດ, ທົ່ວປະເທດຖືກຕັດແບ່ງອອກເປັນ 83 ເມືອງໃຫຍ່ ທີ່ມີເນື້ອທີ່ເທົ່າໆກັນທີ່ມີລະບົບການຈັດຕັ້ງເປັນເອກະພາບ, ລົບລ້າງພາສີພາຍໃນ. ຮູບແບບການແກ້ໄຂນັ້ນມີຄວາມໝາຍສະແດງເຖິງລັກສະນະຕັ້ງໜ້າຢ່າງໃຫຍ່ຫຼວງ ເພາະມັນເປັນການກຳຈັດສາເຫດທີ່ກີດຂວາງການຂະຫຍາຍຕົວທາງອຸດສະຫະກຳການຄ້າ, ລົບລ້າງເຂດແດນລະຫວ່າງຂົງເຂດຕ່າງໆ ແລະ ປະກອບຢ່າງໃຫຍ່ຫຼວງເຂົ້າໃນການຂະບວນການກຳເນີດຊົນເຜົ່າຝຣັ່ງ.

ນະໂຍບາຍກ່ຽວກັບໂບດ ແລະ ນັກບວດ, ສະພາລັດຖະທຳມະນູນໄດ້ຢຶດເອົາຊັບສົມບັດຂອງໂບດມາເປັນຊັບສົມບັດສ່ວນລວມຂອງຊາດ ແລະ ນຳໄປຂາຍ. ຮອດເດືອນພະຈິກ 1790 ລັດຖະສະພາໄດ້ຕົກລົງ ສາສະໜາຈັກຝຣັ່ງຕ້ອງເຊື່ອຟັງ ແລະ ປະຕິບັດຕາມປະເທດຊາດເປັນຜູ້ບັນຊາ, ບໍ່ໃຫ້ຂຶ້ນກັບອາຕິກັດ ໃນວຽກການຄຸ້ມຄອງ ຕຳແໜ່ງນັກບວດແມ່ນໄດ້ມາດ້ວຍວິທີການເລືອກຕັ້ງ, ໄດ້ເງິນເດືອນຈາກລັດຖະບານ ບໍ່ແມ່ນໄດ້ຈາກການເກັບພາສີຄືກັບແຕ່ກ່ອນ. ບັນດາວຽກງານຕ່າງໆທີ່ຂຶ້ນກັບໂບດໃນເມື່ອກ່ອນໄດ້ກາຍມາເປັນວຽກງານຄວາມຮັບຜິດຊອບຂອງລັດຖະບານນີ້ແມ່ນນະໂຍບາຍອັນຕັ້ງໜ້າ.

ໃນປີ 1791 ສະພາໄດ້ປະກາດກົດໝາຍສະບັບໃໝ່ຂຶ້ນເພື່ອສ້າງຕັ້ງລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນຢູ່ປະເທດຝຣັ່ງ, ກະສັດກາຍເປັນປະມຸກລັດ, ເປັນຜູ້ບັນຊາການທະຫານສູງສຸດ, ທີ່ມີສິດໃນການ

ໃຫ້ສັດຕະຍາບັນ, ແຕ່ງຕັ້ງ-ປົດຕໍ່າແໜ່ງບັນດາລັດຖະມົນຕີ, ນັດບອດ, ພະນັກງານພົວພັນຕ່າງປະເທດ ແລະ ບັນດາຕໍາແໜ່ງທາງການທະຫານ... ເຈົ້າຊີວິດມີສິດໃນການຊີ້ນໍານໍາພາເທົ່ານັ້ນ ແຕ່ສະພາລັດຖະທໍາມະນູນ ເປັນຜູ້ມີສິດໃນການກໍານົດກົດໝາຍ. ລັດຖະທໍາມະນູນໄດ້ກໍານົດລະບອບຂອງການເລືອກຕັ້ງໂດຍແບ່ງ ກໍາມະກອນອອກ 2 ປະເພດຮູບແບບຄື: ກໍາມະກອນກ້າວໜ້າ ແລະ ກໍາມະກອນທໍາມະດາແບ່ງຕາມຊັບ ສົມບັດຂອງພວກເຂົາ. ຜູ້ທີ່ບໍ່ມີຊັບສົມບັດ, ກໍາລັງປະຊາຊົນຖືວ່າເປັນກໍາະກອນທໍາະດາ (ກໍາມະກອນທຸກ ຍາກ) ບໍ່ມີສິດໃນການເລືອກຕັ້ງສ່ວນກໍາມະກອນກ້າວໜ້າແມ່ນມີສິດເລືອກຕັ້ງ ໂດຍສະເພາະແມ່ນຜູ້ທີ່ມີ ອາຍຸ 25 ປີຂຶ້ນໄປ, ເປັນກໍາມະກອນທີ່ບໍ່ໄດ້ຮັບຈ້າງໃຜ, ຕ້ອງມີລາຍຊື່ບັນຈຸເຂົ້າໃນກອງທັບ ແລະ ເສຍພາສີ ໜ້ອຍທີ່ສຸດປະມານເງິນຄ່າແຮງງານ ຈໍານວນ 3 ວັນເທົ່ານັ້ນ ຈາກເງື່ອນໄຂດັ່ງກ່າວນັ້ນເປັນການຕັດສິດຂອງ ຊາວຜູ້ອອກແຮງງານຫຼາຍລ້ານຄົນອອກຈາກການເລືອກຕັ້ງ. ມາໃນປີ 1791 ໃນຈໍານວນພົນລະເມືອງ 26 ລ້ານຄົນ ມີພຽງແຕ່ 4.028.000 ຄົນເທົ່ານັ້ນທີ່ເປັນກໍາມະກອນກ້າວໜ້າທີ່ມີເງື່ອນໄຂໃນການເລືອກຕັ້ງ. ຜູ້ທີ່ ຕ້ອງການສະໝັກລົງເລືອກຕັ້ງເຂົ້າໃນສະມາຄົມຂອງບັນດາຫົວໜ່ວຍການປົກຄອງຂັ້ນເມືອງຕ້ອງໄດ້ເສຍພາສີ ເປັນເງິນແຮງງານປະມານ 100 ຫາ 200 ວັນຖ້າຢູ່ໃນເມືອງ ຫຼື ຕ້ອງມີຜົນຜະລິດ ແລະ ຕອນດິນຕ້ອງເສຍ ພາສີຕໍ່າສຸດແຕ່ 150-400 ວັນຂອງເງິນອອກແຮງງານໃນເຂດຊົນນະບົດ.

ຍ້ອນແນວນັ້ນ, ລັດຖະທໍາມະນູນໃນປີ 1791 ໄດ້ເຮັດຜິດຫຼັກການອິດສະຫຼະພາບ, ຄວາມສະເໝີ ພາບ, ຄວາມມີເມດຕາທີ່ລະບຸໃນ ຖະແຫຼງການສິດທິມະນຸດ ແລະ ສິດທິພົນລະເມືອງ ດ້ວຍການບຸກລຸກ ສິດຜົນປະໂຫຍດທາງການເມືອງຂອງກໍາລັງມະຫາຊົນຜູ້ທີ່ເຂົ້າຮ່ວມການປະຕິວັດແບບຕັ້ງໜ້າແຕ່ຄວາມຈິງ ແລ້ວເປັນພຽງການປະຕິວັດທີ່ປົກປ້ອງສິດຜົນປະໂຫຍດຂອງພວກຢຶດຄອງກໍາມະສິດສ່ວນຕົວໃນສັງຄົມເທົ່າ ນັ້ນ.

### 3) ຂະບວນການຕໍ່ສູ້ຂອງກໍາລັງມະຫາຊົນໃນປີ 1789-1791 ແລະ ການເຄື່ອນໄຫວຂອງສະມາຄົມທາງ ການເມືອງ.

#### ຂະບວນການຕໍ່ສູ້ຂອງກໍາລັງມະຫາຊົນ

ບັນດານະໂຍບາຍຂອງລສະພາລັດຖະທໍາມະນູນນັບມື້ຍິ່ງເປີດແປນເຈດຕະນາຂອງຊົນຊັ້ນນາຍທຶນ ໃຫຍ່ທີ່ຕ້ອງການກໍາອໍານາດການປົກຄອງ, ບໍ່ຕ້ອງການແກ້ໄຂບັນຫາຄວາມຕ້ອງການຂອງມະຫາຊົນ ແລະ ບໍ່

ໃສ່ໃຈຕໍ່ກັບການປະທ້ວງ. ສັງຄົມກ້າວເຂົ້າສູ່ຄວາມວຸ້ນວາຍຕໍ່ກັບສະພາບການເປັນຄືແນວນັ້ນເຮັດໃຫ້ເກີດມີຂະບວນການລຸກຂຶ້ນຕໍ່ສູ້ເກີດຂຶ້ນຢ່າງລຽນຕິດ.

ລະດູໃບໄມ້ປົ່ງຂອງປີ 1789 ບັນດາຊ່າງກໍ່ສ້າງ, ຊ່າງເຮັດເກີບ, ພວກພໍ່ຄ້າ ຢູ່ນະຄອນປາຣີ ໄດ້ພາກັນລຸກຂຶ້ນເພື່ອທວງໃຫ້ມີການປັບປຸງຊີວິດການເປັນຢູ່ແຕ່ກໍ່ຍັງຖືກກົດໜ່ວງຖ່ວງດຶງ. ຂະບວນການຕໍ່ສູ້ທີ່ຮຸນແຮງກວ່າໝູ່ແມ່ນຂະບວນການຕໍ່ສູ້ຂອງປະຊາຊົນນະຄອນຫຼວງ ປາຣີ ໃນວັນທີ 5-6 ຕຸລາ 1789. ເຖິງແມ່ນວ່າຈະມີຖະແຫຼງການເຮັດການປະຕິວັດແຕ່ກະສັດ ຫຼຸຍທີ 16 ແລະ ພະຣາຊິນີ ແມຣີແອັງຕົວເນັດ ຍັງສືບຕໍ່ທຳການທໍລະຍົດຕໍ່ປະຊາຊົນ. ກະສັດ ຫຼຸຍ 16 ບໍ່ຍອມໃຫ້ສັດຕະຍາບັນຕໍ່ກົດໝາຍ ຈຶ່ງຖືກສະພາປະກາດໃນຄືນວັນທີ4 ສິງຫາ ກໍ່ປຽບເໝືອນກັບວ່າບໍ່ຍອມຮັບຖະແຫຼງການສິດທິມະນຸດ ແລະ ສິດທິພົນລະເມືອງ. ກຳລັງທະຫານຢູ່ໃນທ່າກຽມພ້ອມໃນການປົກປ້ອງພະລາດຊະວັງແວກຊາຍແນໃນ່ເພື່ອຕໍ່ຕ້ານກັບກຳລັງປະຕິວັດ.

| | |
|---|---|
|  |  |
| ກະສັດ ຫຼຸຍທີ 16 | ພະຣາຊິນີ ແມຣີແອັງຕົວເນັດ |

ຂ່າວຄາວກ່ຽວກັບການກະກຽມກຳລັງເພື່ອທັບມ້າງກຳລັງປະຕິວັດໄດ້ສ້າງຄວາມບໍ່ພໍໃຈອັນໃຫຍ່ຫຼວງແກ່ມະຫາຊົນ. ເວລານີ້ລາຄາສິນຄ້າກໍ່ເພີ່ມຂຶ້ນສູງ, ສະຖານະການໃນການຂາດແປ້ງເຂົ້າຈີ່ຢູ່ໃນຮ້ານຄ້ານັບມື້ນັບເພີ່ມຂຶ້ນອັນໄດ້ສ້າງຄວາມເບື່ອໜ່າຍໃຫ້ແກ່ກຳລັງປະຊາຊົນຊາວຜູ້ອອກແຮງງານ.ວັນທີ 4 ຕຸລາປະຊາຊົນໄດ້ທຳການປິດລ້ອມພະລາດຊະວັງຂອງເຈົ້າຊີວິດ ແລະ ຮ້ອງໂຮຂຶ້ນວ່າ: ຢ່າຫຼົງເຊື່ອພວກນັກບວດ, ຂ້າໃຫ້ກ້ຽງພວກຂຸນນາງ, ດັບສູນພວກລາດຊະວົງ ສຽງຮ້ອງດັງກ້ອງພະລາດຊະວັງແວກຊາຍເພື່ອບັງຄັບໃຫ້ກະສັດກັບມາປາຣີ ເພື່ອຍອມຮັບການກວດກາຂອງປະຊາຊົນ ແລະ ບັງຄັບໃຫ້ລັດຖະບານຕ້ອງຕອບສະໜອງແປ້ງເຂົ້າຈີ່. ຂະບວນການຕໍ່ສູ້ໄດ້ແກ່ຍາວໄປຮອດຕອນເຊົ້າຂອງວັນທີ 6 ຕຸລາ, ພາຍຫຼັງການຕໍ່ສູ້ທີ່ນອງເລືອດຂອງກຳລັງທະຫານປົກປ້ອງແຜ່ນດິນ, ປະຊາຊົນ ທີ່ບຸກໂຈມຕີເຂົ້າພະລາດຊະວັງ ແວກຊາຍ ບັງຄັບໃຫ້ພະເຈົ້າຫຼຸຍທີ 16 ຕ້ອງຫຼົບໜີອອກຈາກພະລາດຊະວັງແວກຊາຍໄປຢູ່ພະລາດຊະວັງ ຕວຽນເລີຣີ ທີ່ນະຄອນປາຣີຕໍ່ໜ້າວົງປິດລ້ອມຂອງປະຊາຊົນ. ໄຊຊະນະຂອງການປະຕິວັດມີຄວາມໝາຍອັນໃຫຍ່ຫຼວງມາດທັບມ້າງສະພາລັດຖະທຳມະນູນ ແລະ ສາມາດທຳລາຍແຜນການຂອງກຳລັງທີ່ປໍລະປັກກັບການປະຕິວັດລົງໄດ້. ແຕ່ກົດດັນກຳລັງມະຫາຊົນໃຫ້ຕອບສະໜອງຄວາມຕ້ອງການຂອງນາຍທຶນ. ສະພາລັດຖະທຳມະນູນໄດ້ປະກາດພາວະສຸກເສີນໃນວັນທີ 21 ຕຸລາ 1789 ວ່າ ຖ້າເກີດມີສິ່ງຄາມແມ່ນຈະອະນຸຍາດໃຫ້ທະຫານນຳໃຊ້ກຳລັງອາວຸດເພື່ອຕໍ່ສູ້ຄືນກັບພວກປະຕິວັດ.

ເຫດການປະຕິວັດໄດ້ສິ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບກຳລັງທະຫານພວກເຂົາໄດ້ສ້າງຕັ້ງຄະນະກຳມະການທະຫານຂຶ້ນຢູ່ຫຼາຍຂົງເຂດເພື່ອຕໍ່ຕ້ານກັບພວກເຈົ້າໜ້າທີ່ສ່ວນຫຼາຍແມ່ນນອນໃນກຸ່ມຂຸນນາງ, ເດັ່ນທີ່ສຸດແມ່ນຂະບວນການຕໍ່ສູ້ຂອງກົມທະຫານທັງ 4 ຢູ່ນະຄອນໜັງຊີແກ່ຍາວແຕ່ວັນທີ 28-30 ສິງຫາ 1790 ແຕ່ກໍ່ຖືກປາບປາມຢ່າງຮຸນແຮງ ມີ 1 ໃນ 7 ຄົນຖືກແຂວນຄໍ.

**ບັນດາສະມາຄົມທາງການເມືອງ**

ບັນດາສະມາຄົມທາງການເມືອງໄດ້ປະກອບສ່ວນອັນໃຫຍ່ຫຼວງໃນໄລຍະແຫ່ງການປະຕິວັດ ເພາະເປັນສະຖານທີ່ໃນການປຶກສາຫາລືວຽກງານກ່ຽວກັບບັນຫາສຳຄັນຂອງປະເທດທີ່ຕ້ອງໄດ້ເອົາໃຈໃສ່. ໃນໄລຍະທຳອິດຂອງການປະຕິວັດ ກຸ່ມຊາໂກແບັງ ມີບົດບາດທີ່ສຸດ, ໃນໄລຍະກໍ່ຕັ້ງທຳອິດມີຄວາມຫຍຸ້ງຍາກສັບສົນ ເພາະວ່າປະກອບມີຫຼາຍກຸ່ມການເມືອງທີ່ມີແນວຄິດແຕກຕ່າງກັນ. ນັບຕັ້ງແຕ່ ບັນດາຜູ້ນຳຂຸນນາງ

ອິດສະຫຼະຈີນເຖາ ພວກນາຍທຶນປະຊາທິປະໄຕ, ນັບແຕ່ຕົວແທນຂອງສະພາລັດຖະທຳມະນູນຈົນເຖິງບັນດາອົງການຈັດຕັ້ງອື່ນທີ່ແຕ່ຕ່າງກັນ ຜ່ານການປ່ຽນແປງທາງດ້ານສັງຄົມອັນຍິ່ງໃຫຍ່. ພາຍໃນກຸ່ມຊາໂກແບັງກໍ່ມີການຈຳແນກກັນອອກໄປອີກ.

ຝ່າຍຂວາຂອງກຸ່ມ ຊາໂກແບັງ ໄດ້ສ້າງຕັ້ງອົງການຈັດຕັ້ງໃໝ່ໜຶ່ງເອີ້ນວ່າສະມາຄົມ ເຟີຍອັງໄດ້ເຕົ້າລວມເອົາບັນດາຕົວແທນຈາກຝ່າຍລາຊາທິປະໄຕໃຕ້ລັດຖະທຳມະນູນແລະ ຂຸນນາງນາຍທຶນໃຫຍ່ທີ່ຮ່ວມມືກັນຕ້ານກັບກຳລັງປະຕິວັດ.

ຝ່າຍຊ້າຍປະກອບດ້ວຍກຳລັງປະຕິວັດທີ່ເດີນຕາມແນວຄິດຂອງຊັກຊັງ ຣຸດໂຊ ທີ່ແຜ່ຂະຫຍາຍຕາມທ້ອງຖິ່ນຕ່າງໆ. ຜູ້ນຳຂອງ ຊາໂກແບັງ ແມ່ນ ໂຣເບີດປີແອ (1858-1894) ເປັນທະນາຍຄວາມຄົນໜຶ່ງຖືກເລືອກໃຫ້ເປັນຜູ້ນຳ ສະພາ 3 ຊົນຊັ້ນ, ທີ່ມີຊື່ສຽງໃນບົດປາໄສຮຽກຮ້ອງໃຫ້ລຸກຂຶ້ນຕໍ່ສູ້ຢ່າງຮຸນແຮງ. ຝ່າຍ ຊາໂກແບັງ ປະກອບສ່ວນສຳຄັນທີ່ເຮັດໃຫ້ຂະບວນການປະຕິວັດຜັນແປໄປໃນທາງທີ່ດີຂຶ້ນ.



ໂຣເບີດປີແອ (1858-1894)

ສະມາຄົມ ກໍເດີຣີເອ ສ້າງຕັ້ງໃນປີ 1790 ເປັນສະມາຄົມຂອງປະຊາຊົນທີ່ມີຊື່ທາງການວ່າ ສະມາຄົມຮ່ວມສຳພັນຂອງສິດທິມະນຸດ ແລະ ສິດທິພົນລະເມືອງ ທີ່ມີສະມາຊິກຜູ້ທີ່ມີຄວາມຮອບຮູ້ຄື: ມາຣາ (1743-1793) ເປັນນັກຮຽນຮູ້, ນັກການແພດ, ນັກຟີຊິກສາດ, ແລະ ນັກໜັງສືພິມຜູ້ທີ່ມີຊື່ສຽງໃນໜັງສືພິມ

ໝູ່ເພື່ອນປະຊາຊົນ, ສຳນັກງານໃນການຕໍ່ສູ້ຂອງຝ່າຍ ປະຕິວັດປະຊາທິປະໄຕ, ທະຍາຍ ດັງໂຕງ, ນັກຂ່າວ ອີແບ ຕໍ່ມາໄດ້ກາຍເປັນຜູ້ນຳທີ່ເກ່ງກ້າຂອງພວກ ຊາໂກແບັງ.

ຄວາມຮູ້ທີ່ມີທ່າອ່ຽງປະຊາທິປະໄຕລວມສູນໃນກຸ່ມສັງຄົມທີ່ນິຍົມແນວຄິດຂອງທ່ານ ຣຸດໂຊ, ທີ່ຮັບເອົາບັນດານາຍຊ່າງຫັດຖະກຳ, ກຳມະກອນ ແລະ ຕົວແທນຂອງຊົນຊັ້ນສາມັນຊົນເຂົ້າມາເປັນສະມາຊິກ ຕົວແທນຂອງກຸ່ມນີ້ແມ່ນ ໂຟເຊ ແລະ ໂບງວິນ ສ່ອງແສງເຖິງແນວຄິດຂອງຊົນຊັ້ນຜູ້ທຸກຍາກໃນສັງຄົມ. ດຳເນີນການຕັດແບ່ງດິນນາ ເພື່ອໃຫ້ທຸກຄົນມີດິນເປັນຂອງຕົນເອງຮັບປະກັນບໍ່ໃຫ້ມີບັນຫາທີ່ວ່າ ບໍ່ມີໃຜທີ່ບໍ່ມີດິນທຳການຜະລິດໃນສັງຄົມ.

ສະມາຄົມປະຊາຊົນ ໄດ້ຂະຫຍາຍຕົວກວ້າງຂວາງຢູ່ແຂວງຕ່າງໆ ແລະ ບັນດາຕົວເມືອງ. ອຳນາດການປົກຄອງຂັ້ນສູນກາງຂອງບັນດາສະມາຄົມໄດ້ຮັບການສ້າງຕັ້ງຂຶ້ນຢູ່ ປາຣີ ໄດ້ຂໍຮ້ອງໃຫ້ສະພາລັດຖະທຳມະນູນລົບລ້າງການແບ່ງແຍກກຳມະກອນທີ່ກ້າວໜ້າ ກັບກຳມະກອນຜູ້ທຸກຍາກ.

**4) ຂະບວນການຕໍ່ສູ້ຕ້ານກັບກຸ່ມກະບົດທຳລະຍົດຕໍ່ກຳລັງປະຕິວັດ ແລະ ສະພາບການທີ່ວ່າ: ປິຕຸພູມທີ່ຕົກໃນຄວາມອັນຕະລາຍ.**

**ກຸ່ມກະບົດທີ່ທຳການທຳລະຍົດຕໍ່ການປະຕິວັດຂອງພະເຈົ້າ ຫຼຸຍ16 ແລະ ພວກຂຸນນາງ**

ຫຼັງຈາກທີ່ທັບມ້າງຖືກບັດສຕິນໃຫ້ພັງທະລາຍລົງ, ພວກຂຸນນາງທີ່ຕໍ່ຕ້ານການປະຕິວັດໄດ້ຄ່ອຍໆຫຼົບໜີຈາກປະເທດຝຣັ່ງ, ນ້ອງຊາຍຂອງເຈົ້າຊີວິດຊື່ວ່າ ອາກຕວາ ພ້ອມດ້ວຍຂ້າລາດຊະບໍລິພານໄດ້ໂຕນໜີໄປຢູ່ຕ່າງປະເທດເພື່ອສ້າງຕັ້ງສູນກາງໃນການພົວພັນບັນດາຂຸນນາງທີ່ຍົກຍ້າຍມາຕັ້ງຖິ່ນຖານຢູ່ທີ່ ໂກແບລນເຊີປະເທດເຢຍລະມັນທີ່ຄອຍໃຫ້ການຊ່ວຍເຫຼືອບັນດາປະເທດຢູ່ທະວີບເອີຣົບ.

ໃນເວລານັ້ນ ພະເຈົ້າ ຫຼຸຍທີ 16 ຍັງບໍ່ລົດລະໃນການຊອກທຸກວິທີການໃນການຕໍ່ຕ້ານກຳລັງການປະຕິວັດ ຍ້ອນໄດ້ຮັບການຊ່ວຍເຫຼືອແບບປິດລັບຈາກພະລາດຊະວົງຢູ່ຕ່າງປະເທດ. ໃນຕອນກາງຄືນຂອງວັນທີ 20 ຕໍ່ໃສ່ວັນທີ 21 ເດືອນມິຖຸນາ 1791ພະເຈົ້າຫຼຸຍ16 ພ້ອມພະລາຊີນີໄດ້ຫຼົບໜີອອກຈາກປາຣີ. ແຕ່ກໍ່ຖືກຈັບກຸມໃນຂະນະທີ່ກຳລັງເດີນທາງ ຢູ່ນະຄອນວາແຣນ. ຕອນເຊົ້າຂອງວັນທີ 21 ຂ່າວການຫຼົບໜີຂອງພະເຈົ້າຫຼຸຍ 16 ພ້ອມດ້ວຍພັກພວກໄປຮອດມວນຊົນ. ສະນັ້ນ, ກຳລັງມວນຊົນປາຣີຈິ່ງບຸກເຂົ້າພະລາດຊະ

ວັງ ຕວຽນເລີຣີ ນາບຂູ່ກໍາລັງອາວຸດ ເພື່ອຮຽກຮ້ອງໃຫ້ ພະເຈົ້າຫຼຸຍ16 ສະຫຼະລາດຊະບັນລັງ ແລະ ປະກາດສ້າງຕັ້ງເປັນປະເທດສາທາລະນະລັດ. ບັນດາແຂວງ ແລະ ນະຄອນຕ່າງໆໃນຂັ້ນທ້ອງຖິ່ນຮູ້ຂ່າວດັ່ງກ່າວນີ້ກໍ່ພາກັນລຸກຂຶ້ນປະກອບກໍາລັງອາວຸດເພື່ອຕ້ານກັບຝ່າຍທີ່ຕໍ່ຕ້ານກັບກໍາລັງປະຕິວັດ. ແຕ່ວ່າອໍານາດການປົກຄອງຂອງກຸ່ມລັດຖະທໍາມະນູນຕ້ອງການຮັກສາອໍານາດຂອງກະສັດຈິ່ງໄດ້ຊອກວິທີການຕໍ່ຕ້ານ ແລະ ປາບປາມບັນດາຂະບວນການລຸກຂຶ້ນປະທ້ວງຂອງກໍາລັງມວນຊົນ. ຍ້ອນແນວນັ້ນກະສັດຈິ່ງຍັງສາມາດຮັກສາລາດຊະບັນລັງຈົນມາຮອດເດືອນສິງຫາ 1792.

ພວກຊຸນນາງປະເທດໂອດຕຣິດ ແລະ ຊຸນນາງປະເທດປຣັດເຊຍ ໄດ້ປະກາດກຽມພ້ອມແຊກແຊງເຂົ້າປະເທດຝຣັ່ງປະຕິວັດ. ສິ່ງດັ່ງກ່າວເປັນການບອກລ່ວງໜ້າວ່າສົງຄາມກໍາລັງຈະລະເບີດຂຶ້ນ ແລະ ປະຊາຊົນຝຣັ່ງກໍ່ເຂົ້າໃຈດີແລ້ວວ່າພວກເຂົາຕ້ອງລຸກຂຶ້ນຈັບອາວຸດຕໍ່ສູ້ເພື່ອອິດສະຫຼະພາບ ແລະ ເອກະລາດຂອງປິຕຸພູມ, ຕ້ານການແຊກແຊງຮຸກຮານຂອງພວກພັນທະມິດຂອງກະສັດທີ່ປະກອບດ້ວຍບັນດາປະເທດສັກດີນາຢູ່ທະວີບເອີຣົບ.

**ສະພາແຫ່ງຊາດ ແລະ ສະຖານະການຂອງມວນຊົນ**

ຕາມລັດຖະທໍາມະນູນສະບັບປີ 1791, ສະພາແຫ່ງຊາດໄດ້ຮັບການແຕ່ງຕັ້ງດ້ວຍວິທີການເລືອກຕັ້ງທີ່ມີລັກສະນະຈໍາກັດຜູ້ເລືອກຕັ້ງ ໄດ້ໄຂຂຶ້ນເປັນທາງການໃນວັນທີ 1 ຕຸລາ 1791 ສະມາຊິກຂອງສະພາລັດຖະທໍາມະນູນແມ່ນບໍ່ມີໃຜໄດ້ເຂົ້າຮ່ວມ ສະພາໃໝ່ນີ້. ບັນດາຜູ້ແທນນາຍທຶນໃຫຍ່ ແລະ ນາຍທຶນຂະໜາດກາງມີບົດບາດດໍາລົງຕໍາແໜ່ງຢູ່ໃນສະພາແຫ່ງຊາດ.

ສະມາຊິກຝ່າຍຊ້າຍ (ຝ່າຍປະຕິວັດ) ກວມຈໍານວນພົນໜ້ອຍຢ່າງເຫັນໄດ້ຈະແຈ້ງຄືມີ 135 ບ່ອນນັ່ງຈາກບ່ອນນັ່ງທັງໝົດ 345 ບ່ອນນັ່ງ ເຮັດໃຫ້ພາຍໃນຂອງກຸ່ມນີ້ບໍ່ມີຄວາມເປັນເອກະພາບ, ສະມາຊິກສ່ວນຫຼາຍແມ່ນພວກນາຍທຶນອຸດສະຫະກໍາ-ການຄ້າທ້ອງຖິ່ນ ແລະ ຍັງມີພວກນາຍທຶນດິນນາ ຫຼື ຊຸນນາງດິນນາງໄດ້ມີການຕິດຕໍ່ພົວພັນກັບບັນດານາຍທຶນທາງພາກໃຕ້ ແລະ ພາກຕາເວັນອອກສ່ຽງໃຕ້ຂອງຝຣັ່ງ. ພວກເຂົາຖືກເລືອກຕັ້ງຢູ່ເຂດປູກອາຫງຸ່ນທີ່ເມືອງ ຊີໂຣງເດີ ສະນັ້ນ, ຈິ່ງເອີ້ນພວກນີ້ວ່າ ພວກ ຊີໂຣງແດັງ ທີ່ມີນັກໜັງສືພິມຊື່ວ່າ ບຣີໂຊ ເປັນຜູ້ນໍາ. ມີພຽງສະມາຊິກຈໍານວນໜ້ອຍຂອງຝ່າຍຊ້າຍເທົ່ານັ້ນ ທີ່ມີແນວຄິດ ກ້າວໜ້າທີ່ສຸດຍ້ອນວ່າແມ່ນນາຍທຶນປະຊາທິປະໄຕເປັນຕົວແທນ, ໄດ້ດໍາເນີນການປະຕິຮູບສັງຄົມ, ເສດຖະກິດ ແລະ

ການເມືອງຢ່າງເລິກເຊິ່ງເພື່ອຮັບໃຊ້ສິດຜົນປະໂຫຍດໃຫ້ແກ່ປະຊາຊົນຢ່າງກວ້າງຂວາງທີ່ປະກອບດ້ວຍນາຍທຶນຂະໜາດນ້ອຍ, ນາຍທຶນຂະໜາດກາງໃນຕົວເມືອງ ແລະ ຊົນນະບົດ. ພວກເຂົາແມ່ນພວກຊາໂກແບັງ. ຢູ່ໃນສະພາເວລາໃດພວກເຂົາກໍ່ໄດ້ດໍາລົງໃນຕໍາແໜ່ງທີ່ສູງສຸດຂອງຝ່າຍຊ້າຍ ສະນັ້ນ, ຈຶ່ງເອີ້ນພວກນີ້ວ່າແມ່ນພວກພູເຂົາ (ຊົນຊັ້ນສູງ). ສະມາຊິກສະພາແຫ່ງຊາດຈໍານວນໜ້ອຍໜຶ່ງເທົ່ານັ້ນທີ່ມີກໍາລັງສະໜັບສະໜູນທີ່ແຂງແກ່ນຈາກພາຍນອກນັ້ນກໍ່ຄື ກຸ່ມ ກໍເດີຣີເອ, ບັນດານັກປະຕິວັດຫຼາຍທີ່ສຸດແມ່ນນອນໃນກຸ່ມ ຊາໂກແບັງ ທີ່ມີ ໂຣເບິດປີແອ ເປັນຜູ້ນໍາພາທີ່ໄດ້ຮັບການສະໜັບສະໜູນຢ່າງຫຼວງຫຼາຍຈາກ ກໍາລັງມະຫາຊົນ. ສະນັ້ນ, ພວກເຂົ້າຈຶ່ງມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມຈໍາເປັນຂອງຂະບວນການປະຕິຮູບພື້ນຖານຂອງສັງຄົມ, ກໍາລັງແຮງຂອງພວກເຂົາໄດ້ຕິດພັນກັບກໍາລັງຂອງປະຊາຊົນຈໍານວນຫຼວງຫຼາຍທີ່ຢູ່ນອກສະພາແຫ່ງຊາດ.

ກຸ່ມຝ່າຍຂວາກວມເອົາ 246 ທີ່ນັ່ງໃນສະພາທີ່ຂຶ້ນກັບກຸ່ມ ເຟີຍອັງ ກວມຈໍານວນພົນສ່ວນຫຼາຍໃນສະພາລັດຖະທໍາມະນູນບໍ່ສາມາດແກ້ໄຂບັນຫາພື້ນຖານທີ່ເປັນປະໂຫຍດຕໍ່ກັບກໍາລັງມະຫາຊົນທີ່ບໍ່ພໍໃຈຕໍ່ກັບນະໂຍບາຍກ່ຽວກັບທີ່ດິນ, ເຮັດໃຫ້ຊາວນາໃນຫຼາຍຂົງເຂດລຸກຂຶ້ນຕໍ່ສູ້ຮຽກຮ້ອງໃຫ້ສະພານໍາໃຊ້ກົດໝາຍໃໝ່. ພ້ອມດຽວກັນນັ້ນຂະບວນການຕໍ່ສູ້ໃນການຍາດແຍ່ງສະບຽງອາຫານເກີດຂຶ້ນລຽນຕິດ ແລະ ແຜ່ລາມຢ່າງກວ້າງຂວາງຕະຫຼອດໄລຍະເວລາ 6 ເດືອນ ນັບແຕ່ທ້າຍປີ ຄ.ສ 1791  ຕໍ່ໃສ່ລະດູໃບໄມ້ຫຼົ່ນຂອງປີ 1792. ກໍາລັງມະຫາຊົນໂດຍສະເພາະແມ່ນພວກຊາວນາດໍາເນີນການຕໍ່ສູ້ຕ້ານກັບຄວາມທຸກຍາກລໍາບາກຂາດເຂີດ ເຂົ້າສາລີ ແລະ ຕ້ານກັບການເພີ່ມລາຄາສິນຄ້າໃນທ້ອງຕະຫຼາດ. ສ່ວນຢູ່ ປາຣີ ແລະ ບັນດານະຄອນຕ່າງໆ ກໍາມະກອນ ແລະ ປະຊາຊົນຜູ້ທຸກຍາກໄດ້ບຸກທໍາລາຍບັນດາຮ້ານຄ້າເພື່ອຕ້ານກັບການຂຶ້ນລາຄາສິນຄ້າໂດຍສະເພາະແມ່ນສິນຄ້າຈໍາເປັນໄດ້ແກ່: ຝ້າຍ, ແປ້ງສາລີ, , ນໍ້າຕານ ແລະ ອື່ນໆ. ຂະບວນການລຸກຂຶ້ນຕໍ່ສູ້ຂອງກໍາມະກອນໄດ້ແຜ່ລາມໄປທົ່ວພາກເໜືອ ແລະ ພາກໃຕ້ຂອງປະເທດຝຣັ່ງ. ເຫດການດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງຄວາມບໍ່ພໍໃຈຂອງປະຊາຊົນຕໍ່ກັບສະພາລັດຖະທໍາມະນູນ ເຮັດໃຫ້ລັດຖະບານຝ່າຍ ເຟີຍອັງ ພັງທະລາຍລົງ. ວັນທີ 23 ມີນາ 1792 ກະສັດຖືກບັງຄັບໃຫ້ສ້າງຕັ້ງລັດຖະບານໃໝ່ຂຶ້ນທີ່ປະກອບມີລັດຖະມົນຕີຂອງພວກ ຊີຣອງແດັງ (ປະຊາຊົນ).

**ຄວາມອັນຕະລາຍ ແລະ ຈຸດສຸດຍອດຂອງການຕໍ່ສູ້ເພື່ອຮັກສາປິຕຸພູມຂອງກຳລັງມະຫາຊົນ.**

ຕົ້ນປີ ຄ.ສ 1792 ການເຮັດສົງຄາມໄດ້ກາຍເປັນບັນຫາທີ່ຮີບຮ້ອນອັນໃຫຍ່ຫຼວງໃນສາຍຕາຂອງມວນມະນຸດເຮັດໃຫ້ທຸກຄົນທີ່ຈະຕ້ອງໄດ້ເອົາໃຈໃສ່. ສະຖານະການທາງສັງຄົມມີຄວາມແຕກຕ່າງກັນໃນແຕ່ລະຊົນຊັ້ນໂດຍອີງໃສ່ແນວຄິດທາງດ້ານການເມືອງຂອງພວກເຂົາ. ຂະບວນການລຸກຂຶ້ນປະທ້ວງທຳອິດຍ້ອນກະສັດຫຼຸຍ 16 ຕ້ອງການໃຫ້ການປະຕິວັດຝຣັ່ງປະສົບກັບຄວາມຫຼົ້ມເຫຼວໃນການຕໍ່ສູ້ສະນັ້ນກະສັດຈຶ່ງໃຫ້ການສະໜັບສະໜູນລະບອບຜະເດັດການ ແລະ ລະບົບສັກດີນາ. ພວກຂຸນນາງທີ່ອົບພະຍົບ ລະ ພວກເສນາບໍດີໄດ້ລວມຕົວກັນກັນກຳລັງທະຫານໜຶ່ງທີ່ມີຈຳນວນພົນ 15.000 ຄົນ ກະກຽມບຸກເຂົ້າຝຣັ່ງໂຈມຕີກຳລັງປະຕິວັດ. ກຸ່ມເຟີຍອັງ ເລີ່ມບໍ່ມີຄວາມເປັນເອກະພາບກັນ, ມີແນວຄິດຢາກເຮັດສົງຄາມນ້ອຍຕ້ານກັບພວກຂຸນນາງອົບພະຍົບ ແລະ ບັນດາປະເທດທີ່ເປັນສັດຕູນ້ອຍຈຶ່ງຈະສາມາດເອົາຊະນະໄດ້ງ່າຍ, ໄດ້ຮັບກຽດສູງສຸດທາງດ້ານການເມືອງພ້ອມດຽວກັນນັ້ນກໍ່ຍັງມີຄວາມຢ້ານກົວຕໍ່ກັບໄພຣຸກຮານຈາກບັນດາປະເທດມະຫາອຳນາດໃນເອີຣົບ. ກຸ່ມ ຊິຣອງແດັງ ເປັນຕົວແທນໃຫ້ແກ່ນາຍທຶນອຸດສະຫະກຳການຄ້າຂະໜາດໃຫຍ່ເຫັນວ່າການເຮັດສົງຄາມບໍ່ພຽງແຕ່ເປັນການປົກປັກຮັກສາສິດຜົນປະໂຫຍດເທົ່ານັ້ນແຕ່ຍັງເປັນການຍາດແຍ່ງສິດຜົນປະໂຫຍດທາງດ້ານເສດຖະກິດໃນທະວີບເອີຣົບ ແລະ ເພື່ອຍາດແຍ່ງສິດອຳນາດທາງດ້ານການເມືອງພາຍໃນປະເທດ. ສ່ວນກຸ່ມຄົນທີ່ອາໄສຢູ່ເທິງພູກໍ່ຄືກັບສະມາຊິກຄົນອື່ນໆໃນກຸ່ມປະຊາທິປະໄຕປະຕິວັດທີ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມຈຳເປັນທີ່ຈະຕ້ອງເຮັດສົງຄາມປ້ອງກັນຕົນເອງ. ແຕ່ໃນສະພາບການທີ່ອຳນາດທາງດ້ານການເມືອງຕົກຢູ່ໃນກຳມືຂອງສັດຕູພວກເຂົາ ແລະ ສິດອຳນາດໃນການບັນຊາທາງການທະຫານແມ່ນຍັງຂຶ້ນກັບເຈົ້າໜ້າທີ່ຕໍ່ຕ້ານການປະຕິວັດໄດ້ດຳເນີນການເຮັດສົງຄາມຢ່າງຮຸນແຮງ. ໂຣເບີດປີແອໄດ້ເປີດໂປງພວກຕໍ່ຕ້ານການປະຕິວັດທີ່ກຳອຳນາດໃນປະເທດ ແລະ ຮຽກຮ້ອງໃຫ້ກຳຈັດພວກເຂົາກ່ອນທີ່ຈະດຳເນີນສົງຄາມ.

ພວກ ຊິຣອງແດັງ ແມ່ນພາກສ່ວນໂຄສະນາຊວນເຊື່ອທີ່ປະກອບສ່ວນອັນຕັ້ງໜ້າໃຫ້ແກ່ສົງຄາມ. ວັນທີ 20 ເມສາ 1792 ຝຣັ່ງດຳເນີນສົງຄາມກັບປະເທດໂອຕຣິດ. ການທີ່ຝຣັ່ງດຳເນີນສົງຄາມກ່ອນບໍ່ໄດ້ເຮັດໃຫ້ມີການປ່ຽນແປງທາດແທ້ຂອງສົງຄາມເລີຍ.

ເລນິນໄດ້ຢັ້ງຢືນວ່າ ທຸກຄົນລ້ວນແຕ່ເຫັນວ່າສົງຄາມໃນຄັ້ງນັ້ນເປັນສົງຄາມອັບຊອບທຳ, ເພື່ອປົກປ້ອງຕົນເອງ ແລະ ຄວາມເປັນຈິງແລ້ວສົງຄາມໃນຄັ້ງນັ້ນກໍ່ເປັນຈິງຄືກັບສິ່ງທີ່ທຸກຄົນຄິດໄວ້. ຝຣັ່ງດຳເນີນການປະຕິວັດເພື່ອປົກປັກຮັກສາລະບອບຕໍ່ຕ້ານກັບພະມະຫາກະສັດໃນເອີຣົບ[10].

ພະລາຊິນີ ແມຣີ ແອັງຕົວເນດ ໄດ້ເປີດເຜີຍຄວາມລັບກ່ຽວກັບແຜນການໃນການຕໍ່ສູ້ໃຫ້ກັບພວກໂອຕຣິດ, ເຮັດໃຫ້ກຳລັງທະຫານຝຣັ່ງທີ່ບັນຊາໂດຍພວກຕໍ່ຕ້ານການປະຕິວັດກໍ່ປຣາໄຊລົງ ແລະ ຕ້ອງຖອນກຳລັງອອກ.

ພະເຈົ້າຫຼຸຍ 16 ໄດ້ສວຍໂອກາດທີ່ລັດຖະບານກຳລັງດຳເນີນການຕັດສິນໃຈ ໂດຍອ້າງວ່າລັດຖະທຳມະນູນໃນປີ 1791 ກຳນົດວ່າບໍ່ອະນຸຍາດໃຫ້ມີກົດໝາຍສ້າງຕັ້ງທະຫານອາສາສະໝັກ 20.000 ຄົນ,ຈິ່ງ ປົດລັດຖະມົນຕີ ຊີຣອງແດງ ແລະ ຮຽກຮ້ອງໃຫ້ພວກ ເຟີຍອັງອອກມາດຳເນີນຄະດີ.

ຕໍ່ໜ້າສະພາບການເປັນຄືແນວນັ້ນ ນ້ຳໃຈຮັກຊາດຂອງປະຊາຊົນໄດ້ແຜ່ລາມໄປທົ່ວປະເທດ, ກຳມະກອນຫຼາຍພັນຄົນ ແລະ ນາຍຊ່າງຫັດຖະກຳຢູ່ປາຣີ ໄດ້ລຸກຂຶ້ນປະທ້ວງດ້ວຍກຳລັງປະກອບອາວຸດ, ກ່າວຫາກະສັດວ່າເປັນຜູ້ທໍລະຍົດຕໍ່ປະເທດຊາດ. ຕໍ່ໜ້າການນາບຂູ່ຂອງກຳລັງມວນຊົນບັງຄັບໃຫ້ ຫຼຸຍ 16 ຕ້ອງຍອມໃຫ້ຄຳໝັ້ນສັນຍາວ່າຈະບໍ່ເຮັດຜິດຕາມກົດໝາຍ. ວັນທີ 11 ກໍລະກົດ ສະພາລັດຖະທຳມະນູນບັງຄັບໃຫ້ມີການປະກາດພາວະສຸກເສີນທີ່ວ່າ: ປະເທດຊາດກຳລັງຕົກຢູ່ໃນຄວາມອັນຕະລາຍ ແລະ ໄດ້ສົ່ງກຳລັງໃຈໃຫ້ທະຫານອາສາສະໝັກ, ຕອບສະໜອງທຸກການຮຽກຮ້ອງຂອງການປະຕິວັດ, ກຳລັງມະຫາຊົນຈຳນວນຫຼາຍພັນຄົນດຳນົນການປະກອບອາວຸດ, ສະໝັກໃຈເຂົ້າຮ່ວມໃນກອງກຳລັງທະຫານ. ກຳລັງທະຫານອາສາສະໝັກໄດ້ບຸກເຂົ້ານະຄອນຫຼວງ ປາຣີ ພ້ອມກັນຮ້ອງເພງ "ການປະຕິວັດເພື່ອຄວາມສຸກຂອງທະຫານທີ່ແມ່ນ້ຳແຮັງ" ໃນທາມກາງສົງຄາມ. ບົດເພງດັ່ງກ່າວນັ້ນນັ້ນມີຊື່ເອີ້ນວ່າ ເພງ ມາກໄຊ ໄດ້ກາຍເປັນບົດເພງແຫ່ງການຕໍ່ສູ້ເພື່ອການປະຕິວັດ (ເພງປະຕິວັດ) ແລະ ປະເທດຊາດຂອງປະຊາຊົນຝຣັ່ງ. ກອງປະຊຸມໃຫຍ່ 48 ອົງການໃນປາຣີສ້າງຂຶ້ນ ເພື່ອກຳອຳນາດການປົກຄອງຂອງການປະຕິວັດເອີ້ນວ່າ ກອມມູນປາຣີ. ນັບແຕ່ວັນທີ 5 ສິງຫາ ກອມມູນປາຣີເລີ່ມຕົ້ນດຳເນີນການໄດ້ປົດປ່ອຍກຳລັງປະກອບອາວຸດ, ຂະບວນການປະຕິວັດກ້າວເຂົ້າສູ່ໄລຍະໃໝ່.

---

[10] ວາລາດີເມຍ ເລນິນ ຄວາມຫາຍະນະກຳລັງຈະມາເຖິງ ແລະ ບັນດາຮູບແບບວິດທີ່ການປ້ອງກັນກັບຄວາມຫາຍະນະນັ້ນ, ເຫຼັ້ມ 34, ໂຮງພິມກ້າວໜ້າ, ແມັດເຊີວາ, 1976, ໜ້າ 262

**2. ໄລຍະທີ 2 ຂອງການປະຕິວັດຄວາມເປັນເອກະພາບຂອງພວກນາຍທຶນສາທາລະນະລັດ ຊີຣອງແດັງ (ນັບແຕ່ວັນທີ 10 ສິງຫາ 1792 ຫາວັນທີ 2 ມິຖຸນາ 1793).**

**1) ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນ ແລະ ການສ້າງຕັ້ງລະບອບສາທາລະນະລັດ.**

**ຂະບວນການລຸກຮື້ຂຶ້ນຕໍ່ສູ້ໃນວັນທີ 10 ສິງຫາ 1792 ລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນ.**

ຄືນຂອງວັນທີ 9 ຕໍ່ໃສ່ວັນທີ 10 ສິງຫາ 1792 ນະຄອນຫຼວງປາຣີ ເຕັມໄປດ້ວຍສຽງຮ້ອງ ແລະ ສຽງປືນ ເປັນການເປີດສາກໃຫ້ແກ່ຂະບວນການລຸກຮື້ຂຶ້ນຕໍ່ສູ້, ບັນດາກຳລັງປະກອບອາວຸດຂອງປະຊາຊົນບຸກເຂົ້າມາເຖິງພະລາດຊະວັງ ຕວຽນເລີຣີ, ບັນດາສະມາຄົມການປະຕິວັດໄດ້ຮັບການສ້າງຕັ້ງຂຶ້ນເພື່ອກຳອຳນາດຢູ່ຕົວຕົວເມືອງຕ່າງໆ. ຂະບວນການຕໍ່ສູ້ເກີດຂຶ້ນ ແລະ ບຸກໂຈມຕີຮອດປະຕູຂອງພະລາດຊະວັງເປັນການຕໍ່ສູ້ລະຫວ່າງປະຊາຊົນ ແລະ ກຳລັງພັກພວກທີ່ຕ້ອງການຮັກສາສະຖາບັນກະສັດໄວ້. ພາຍຫຼັງການຕໍ່ສູ້ອັນດຸເດືອດສຸດທ້າຍປະຊາຊົນກໍ່ສາມາດຍຶດພະລາດຊະວັງ, ບັງຄັບໃຫ້ພະເຈົ້າຫຼຸຍ 16 ຕ້ອງຍອມສະຫຼະລາດຊະບັນລັງ ເຖິງແມ່ນວ່າໃນເບື້ອງຕົ້ນສະພາຈະຊອກທີ່ພັກພິງໃຫ້ແກ່ກະສັດ. ໄດ້ມີການສ້າງຕັ້ງສະພາແຫ່ງຊາດເພື່ອປ່ຽນແທນສະພາລັດຖະທຳມະນູນ ໄດ້ຮັບການສ້າງຕັ້ງຂຶ້ນດ້ວຍລະບອບການເລືອກຕັ້ງທົ່ວໄປດ້ວຍການປ່ອນບັດ ຫຼື ລົງຄະແນນສຽງຂອງຜູ້ຊາຍທັງໝົດທີ່ມີອາຍຸຕັ້ງແຕ່ 21 ປີ ຂຶ້ນໄປ. ລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນພັງທະລາຍລົງ, ລັດຖະບານໃໝ່ໄດ້ຮັບການສ້າງຕັ້ງຂຶ້ນ ເອີ້ນວ່າ “ສະພາແຫ່ງຄວາມສຸກຊົ່ວຄາວ” ທີ່ປະກອບດ້ວຍລັດຖະມົນຕີຝ່າຍ ຊີຣອງແດັງກວມຈຳນວນພົນສ່ວນຫຼາຍ, ມີພຽງ ດັງຕົງລັດຖະມົນຕີກະຊວງຍຸດຕິທຳ ທີ່ເປັນລັດຖະມົນຕີຈາກຝ່າຍ ຊາໂກແບັງ ... ຍ້ອນແນວນັ້ນ, ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນໃນວັນທີ 10 ສິງຫາ 1792 ຈຶ່ງບໍ່ພຽງແຕ່ເປັນການທັບມ້າງລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນ ແລະ ລາດຊະບັນລັງຂອງກະສັດ ຊ້ຳຍັງເປັນການສິ້ນສຸດການປົກຄອງຂອງພວກນາຍທຶນທີ່ຕໍ່ຕ້ານການປະຕິວັດ. ກຸ່ມເຟີຍອັງ ກົດໜ່ວງກຳລັງຕໍ່ຕ້ານການປະຕິວັດ ແລະ ສະໜັບສະໜູນພວກກຳລັງຮຸກຮານຈາກພາຍນອກ.

**ກອມມູນປາຣີ ແລະ ໄຊຊະນະທາງດ້ານການທະຫານ**

ວັນທີ 18 ສິງຫາ 1792 ກຳລັງທະຫານປຣັດເຊຍຈຳນວນ 20 ພັນຄົນ ໄດ້ຍົກທັບຂ້າມມາຊາຍແດນ ແລະ ແຜ່ລາມໄປທົ່ວດິນແດນປະເທດຝຣັ່ງ ແລະ ບຸກເຂົ້າໄປໃນກຳແພງ ແວກດອງ ໃນວັນທີ 2 ກັນຍາ. ປະຕູ

ໄຊ ປາຣີ ຖືກເປີດອອກ. ກຳລັງການເຄື່ອນໄຫວຕໍ່ຕ້ານໃນເອີຣົບ (ໂອຕຣິດ, ປຣັດເຊຍ, ອັງກິດ, ສະເປນ...) ໄດ້ລວມຕົວກັນເປັນພັນທະມິດຕ້ານກັບຝຣັ່ງ. ບັນດານາຍພົນ ແລະ ເຈົ້າໜ້າທີ່ທາງການທະຫານຝຣັ່ງກໍ່ຄື ເຊື້ອສາຍກະສັດໄດ້ມີການຮ່ວມມືກັບພວກຊຸນນາງທີ່ອົບພະຍົບ. ຊະຕາກຳຂອງປະເທດຝຣັ່ງແມ່ນຕົກຢູ່ໃນ ສະພາບທີ່ອັນຕະລາຍທີ່ສຸດ. ຕໍ່ໜ້າສະພາບການເປັນຄືແນວນັ້ນ ກອມູນປາຣີ ໄດ້ຮຽກຮ້ອງ, ປຸກລະດົມ ປະຊາຊົນໃຫ້ພາກັນລຸກຂຶ້ນຕໍ່ສູ້ເພື່ອປົກປັກຮັກສາປິຕຸພູມ, ການປຸກລະດົມຂອງກອມມູນປາລີໄດ້ດັງໄປທົ່ວທຸ ກົນແຫ່ງ: “ຈົ່ງພ້ອມກັນຈັບອາວຸດເຖີດປະຊາຊົນ, ຈົ່ງພ້ອມກັບຈັບອາວຸດລຸກຂຶ້ນຕໍ່ສູ້ເພາະວ່າກຳລັງຂອງສັດຕູ ບຸດເຂົ້າມາຮອດປະຕູເມືອງແລ້ວ” ກຳລັງທະຫານອາສາສະໝັກໄດ້ຮັບການສ້າງຕັ້ງຂຶ້ນໂດຍໄວວາ, ທຸກຄົນໃນ ສັງຄົມນັບແຕ່ຜູ້ໜຸ່ມນ້ອຍ, ຜູ້ໃຫຍ່ແຕ່ລະຄົນລ້ວນແຕ່ມີໜ້າທີ່ຮັບຜິດຊອບໃນການຮັກສາປະເທດຊາດ. ໃນ ຊ່ວງໄລຍະເວລາທີ່ອັນຕະລາຍ ພວກ ຊີຮອງແດັງ ມີແນວຄິດລັງເລຕ້ອງການໂຕນໜີ ແລະ ປະຖິ້ມນະຄອນ ປາຣີ ແຕ່ວ່າພວກ ຊາໂກແບັງ ແມ່ນຢືນຢັດເຮັດການຕໍ່ສູ້ຢ່າງພິລະອາດຫານ. ໃນເວລາທີ່ກຳລັງອາສາສະໝັກ ກ້າວເຂົ້າສູ່ສະໜາມຮົບ, ກອມມູນປາຣີ ໄດ້ດຳເນີນການປາບປາມກຳລັງຕໍ່ຕ້ານກັບກຳລັງປໍລະປັກ, ພາຍໃນ ເວລາ 3 ວັນຂອງຕົ້ນເດືອນກັນຍາ ປະຊາຊົນສາມາດປະຫານຊີວິດກຸ່ມຄົນທີ່ເປັນປໍລະປັກໄດ້ຫຼາຍກວ່າ 1.000 ຄົນ. ຂະບວນການກໍ່ການຮ້າຍດັ່ງກ່າວນັ້ນຄວາມຈິງແລ້ວເປັນການເຄື່ອນໄຫວເພື່ອປົກປັກຮັກສາຕົນ ເອງຂອງປະຊາຊົນແນໃສ່ເພື່ອຮັບປະກັນໄຊຊະນະຂອງການປະຕິວັດ.

ວັນທີ 20 ກັນຍາ ເທິງຈອມພູບ້ານ ວານມີ (ແຂວງ ຊຳປັນເຮີ) ເກີດມີສະໜາມຮົບຕໍ່ສູ້ກັນລະຫວ່າງ ທະຫານຝຣັ່ງ-ປຣັດເຊຍ. ທຳອິດກຳລັງທະຫານປຣັດເຊຍຖືກຕີຖອຍ. ໄຊຊະນະທີ່ວານມີ ເຮັດໃຫ້ນ້ຳໃຈຕໍ່ສູ້ ກູ້ຊາດຂອງປະຊາຊົນຝຣັ່ງຍິ່ງເພີ່ມທະວີຂຶ້ນ. ກຳລັງທະຫານຝຣັ່ງບຸກຕີເຂົ້າແບນຊິກ, ບຸກຢຶດເອົາຕອນ ກາງຂອງແມ່ນ້ຳແຣັງ (ປະເທດປຣັດເຊຍ) ແລະ ຢຶດຄອງ ຊາໄວອາ (ພາກຕາເວັນອອກສ່ຽງໃຕ້ຂອງ ປະເທດຝຣັ່ງ). ປະເທດຝຣັ່ງໄດ້ຮັບການຊ່ວຍເຫຼືອຈາກປະຊາຊົນຜູ້ມີນ້ຳໃຈຮັກຊາດຢ່າງດູດດື່ມເປັນຈຳນວນ ຫຼາຍລ້ານຄົນ ແລະ ບວກກັບການນຳພາອັນຖືກຕ້ອງຂອງກອມມູນປາຣີ ແລະ ກຸ່ມ ຊາໂກແບັງ.

**ສະພາຊົນເຜົ່າ ແລະ ການສ້າງຕັ້ງລະບອບສາທາລະນະລັດ**

ໃນມື້ໜຶ່ງພາຍຫຼັງໄຊຊະນະຢູ່ ວານມີ, ວັນທີ 21 ກັນຍາ ກອງປະຊຸມສະພາຊົນເຜົ່າໄດ້ໄຂຂຶ້ນ, ທ່າມກາງ ສຽງຕົບມືອັນຈິງໃຈ ກອງປະຊຸມໄດ້ປະກາດລົບລ້າງລັດຖະບານຂອງເຈົ້າຊີວິດ ແລະ ສ້າງຕັ້ງລະບອບສາທາ

ລະນະລັດຂຶ້ນ ເປັນການໄຂສັງກາດໃໝ່ໃນປະຫວັດສາດຂອງປະເທດຝຣັ່ງ. ນັບແຕ່ນັ້ນມາບັນດາໜັງສືທາງການ ແລະ ເອກະສານຕ່າງໆລ້ວນແຕ່ບັນທຶກໄວ້ວ່າ "ເປັນປີທຳອິດແຫ່ງລະບອບສາທາລະນະລັດ". ສະພາປະກອບມີຜູ້ແທນທັງໝົດ 750 ຄົນ. ຝ່າຍຂວາແມ່ນພວກຊີຣອງແດັງ ປະກອບມີ 200 ທີ່ນັ່ງ, ຝ່າຍຊ້າຍແມ່ນພວກຊາໂກແບັງ (ຝ່າຍພູສູງ ຫຼື ພວກທີ່ອາໄສຢູ່ພູສູງ) ປະກອບມີ 100 ບ່ອນນັ່ງ, ສ່ວນທີ່ຍັງເຫຼືອແມ່ນຕົວແທນໃຫ້ແກ່ພວກທີ່ມີແນວຄິດບໍ່ຊັດເຈນ ເຊິ່ງເປັນບ່ອນອີງໃຫ້ແກ່ຝ່າຍ ຊີຣອງແດັງ.

ເດືອນທັນວາ 1792 ກອມມູນໄດ້ແຕ່ງຕັ້ງກັນໃໝ່ໃນຝ່າຍ ຊີຣອງແດັງ ເພື່ອຊອກວິທີທາງສວຍໂອກາດຕອນທີ່ກຳລັງທະຫານໄດ້ຮັບໄຊຊະນະ ແລະ ອີງໃສ່ການຊ່ວຍເຫຼືອສະໜັບສະໜູນຂອງພວກທີ່ມີແນວຄິດບໍ່ຊັດຈນຕີຕ້ານກຳລັງຝ່າຍ ຊາໂກແບັງ. ແຕ່ວ່າກຳລັງຂອງກອມມູນທີ່ສ້າງຂຶ້ນໃໝ່ມີນ້ຳໃຈປະຕິວັດທີ່ແຂງແກ່ນຊຶ່ງປະກອບດ້ວຍຜູ້ແທນທີ່ມີຄວາມເດັດດ່ຽວ ແລະ ມີແນວຄິດກ້າວໜ້າທີ່ສຸດ.

**2) ຂະບວນການຕໍ່ສູ້ຊົນຊັ້ນເກີດຂຶ້ນຢ່າງຮຸນແຮງໃນສະໄໝຂອງພວກ ຊີຣອງແດັງ.**

**ຄວາມຂັດແຍ່ງອັນຮຸນແຮງຂອງສອງຝ່າຍ ຊາໂກແບັງ ແລະ ຝ່າຍ ຊີຣອງແດັງ**

ພວກຊາໂກແບັງທີ່ເປັນຕົວແທນໃຫ້ແກ່ພວກນາຍທຶນປະຊາທິປະໄຕປະຕິວັດ, ເປັນຕົ້ນແມ່ນນາຍທຶນຊັ້ນຕ່ຳ, ໄດ້ລວມຕົວກັນເປັນພັນທະມິດກັບພວກນາຍທຶນນ້ອຍກັບຊົນຊັ້ນສາມັນຊົນທົ່ວໄປເຊັ່ນ: ເຈົ້າຂອງທຸລະກິດນ້ອຍ, ນາຍຊ່າງຫັດຖະກຳ, ກຳມະກອນກໍ່ສ້າງ ແລະ ຊາວນາ. ໃນຊ່ວງໄລຍະເວລາໃດໜຶ່ງ ຝ່າຍ ນາຍທຶນປະຊາທິປະໄຕປະຕິວັດໄດ້ແຍກຕົວໄປຮ່ວມມືກັບປະຊາຊົນຜູ້ອອກແຮງງານຕາມຕົວເມືອງ ແລະ ຊາວນາ, ພະຍາຍາມຊຸກຍູ້ຂະບວນການປະຕິວັດໃຫ້ກ້າວຂຶ້ນສູ່ລະດັບສູງຈົນສາມາດແກ້ໄຂບັນຫາປະຊາທິປະໄຕນາຍທຶນທີ່ກຳລັງເກີດຂຶ້ນ. ໃນທາມກາງການປະຕິວັດ ຝ່າຍ ຊາໂກແບັງໄດ້ເອກະພາບກັບປະຊາຊົນໃນການຕັດສິດໃຈປົກປ້ອງ ແລະ ຊຸກຍູ້ຂະບວນການປະຕິວັດໃຫ້ກ້າວໄປເຖິງການກຳຈັດສັດຕູພາຍນອກ. ທ່າແຮງສຳຄັນຂອງພວກ ຊາໂກແບັງແມ່ນພົວພັນຮ່ວມມືກັບປະຊາຊົນ.

ກົງກັນຂ້າມຝ່າຍ ຊີຣອງແດັງ ເປັນຕົວແທນໃຫ້ແກ່ພວກນາຍທຶນອຸດສະຫະກຳການຄ້າ ແລະ ນາຍທຶນທີ່ດິນ. ພວກເຂົາເປັນຊົນຊັ້ນກຳອຳນາດ ແລະ ໄດ້ຮັບສິດຜົນປະໂຫຍດຈາກຂະບວນການລຸກຮື້ຂຶ້ນຕໍ່ສູ້ໃນວັນທີ 10 ສິງຫາ 1792 ສະນັ້ນ, ພວກເຂົາຈິ່ງບໍ່ຕ້ອງການດຳເນີນການປະຕິວັດຕໍ່ໄປອີກ, ຄວາມຢ້ານກົວຕໍ່ກັບການຂະຫຍາຍອຳນາດຂອງກຳລັງມະຫາຊົນຈະຈຳກັດສິດອຳນາດ ແລະ ພາລະບົດບາດຂອງພວກ

ເຂົາ. ສະນັ້ນ, ພວກ ຊີ້ຣອງແດັງ ຈິ່ງກາຍເປັນກໍາລັງອະນຸລັກນິຍົມ ແລະ ຄ່ອຍໆປ່ຽນເປັນກໍາລັງປໍລະປັກທີ່ຕໍ່ຕ້ານກັບທຸກຄໍາຮຽກຮ້ອງຂອງກໍາລັງມະຫາຊົນ.

ສິ່ງດັ່ງກ່າວນັ້ນເຮັດໃຫ້ເກີດມີຂໍ້ຂັດແຍ່ງລະຫວ່າງຝ່າຍຊີຣອງແດັງ ແລະ ຝ່າຍ ຊາໂກແບັງ ເຊິ່ງເປັນສິ່ງທີ່ບໍ່ສາມາດແກ້ໄຂໄດ້.

ທ້າຍປີ 1792 ຊະຕາກໍາຂອງກະສັດໄດ້ກາຍເປັນບັນຫາທີ່ຂັດແຍ່ງກັນຢ່າງຮຸນແຮງ, ຍ້ອນວ່າພວກເຂົາໄດ້ພົບເຫັນຕູ້ເຫຼັກອັນໜຶ່ງຖືກເຊື່ອງໄວ້ຢູ່ກໍາແພງຂອງພະລາດຊະວັງຕວຽນເລີຣີ ເຊິ່ງໃນຕູ້ເຕັມໄປດ້ວຍເອກະສານລັບຂອງພະເຈົ້າຫຼຸຍ16 ທີ່ພົວພັນກັບຕ່າງປະເທດ ແລະ ພວກອົບພະຍົບທີ່ມີເນື້ອໃນກ່ຽວກັບການກໍ່ກະບົດຊາດ. ຝ່າຍ ຊາໂກແບັງ ແມ່ນເປັນຕົວແທນໃຫ້ແກ່ກອມມູນປາຣີ ແລະ ກໍາລັງມະຫາຊົນສ່ວນຫຼາຍຮຽກຮ້ອງໃຫ້ປະຫານຊີວິດກະສັດ. ກົງກັນຂ້າມຝ່າຍ ຊີຣົງແດັງ ຕ້ອງການຮັກສາສະຖາບັນກະສັດໄວ້ ໄດ້ລະບຸໄວ້ໃນສະພາຊົນເຜົ່າຕໍ່ກັບຄວາມປາດຖະໜາຂອງຜູ້ແທນສ່ວນຫຼາຍແມ່ນບໍ່ພຽງແຕ່ກໍາຈັດເຈົ້າຫຼຸຍ 16 ເທົ່ານັ້ນແຕ່ຍັງຕ້ອງກໍາຈັດທັດສະນະຄະຕິທາງດ້ານການເມືອງ ແລະ ລະບອບຜະເດັດການລາຊາທິປະໄຕໃຫ້ໝົດໄປ. ພາຍໃຕ້ການສະໜັບສະໜູນຂອງກໍາລັງມະຫາຊົນ, ເດືອນທັນວາ 1792 ສານ ສະພາຊົນເຜົ່າໄດ້ຕັດສິນປະຫານເຈົ້າຊີວິດ. ມາໃນວັນທີ 21 ມັງກອນ 1793 ເຈົ້າຊີວິດ ຫຼຸຍທີ 16 ກໍ່ຖືກປະຫານຊີວິດ. ກະແສແນວຄິດຄຽດແຄ້ນຂອງປະຊາຊົນ ແລະ ແລະ ຝ່າຍປ່ອງບ້າ.



**ເຈົ້າຊີວິດ ຫຼຸຍ 16 ຖືກປະຫານຊີວິດໃນວັນທີ 21 ມັງກອນ 1793**

ສົງຄາມໄດ້ເຮັດໃຫ້ສະພາບທາງດ້ານເສດຖະກິດຂອງຝຣັ່ງອ່ອນແອລົງ, ຕະຫຼາດພາຍໃນ ແລະ ພາຍນອກຖືກຈຳກັດ, ການຜະລິດອ່ອນເພຍລົງ, ບັນຫາອັດຕາເງິນເຟີ້ເກີດຂຶ້ນຢ່າງໄວວາ, ກຳມະກອນ ແລະ ນາຍຊ່າງຫັດຖະກຳບໍ່ມີເງິນເດືອນ. ໃນເວລານັ້ນເຈົ້າຂອງຟາມ, ເຈົ້າຂອງທີ່ດິນ ແລະ ພວກຄ້າຂາຍໄດ້ທຳການກັກຕູນເຂົ້າສາລີ ຫຼື ຂາຍໃນລາຄາທີ່ແພງກວ່າປົກກະຕິເຖິງ 3 ເທົ່າ. ຊີວິດການເປັນຢູ່ຂອງຄົນໃນຕົວເມືອງແມ່ນມີຄວາມທຸກຍາກລຳບາກຫຼາຍ. ນັບແຕ່ເດືອນກັນຍາ 1792 ຢູ່ຫຼາຍຂົງເຂດເກີດມີເຫດການປຸ້ນສະດົມລົດຂົນເຂົ້າສາລີ. ກຳມະກອນລຸກຂຶ້ນຕໍ່ສູ້ເພື່ອທວງໃຫ້ເພີ່ມເງິນເດືອນ ແລະ ກຳນົດລາຄາສິນຄ້າໃຫ້ເປັນເອກະພາບກັນໃນສັງຄົມ.

ບັນຫາພື້ນຖານຂອງການປະຕິວັດແມ່ນບັນຫາທີ່ດິນນາເຊິ່ງບໍ່ໄດ້ຮັບການແກ້ໄຂ. ຊາວນາບໍ່ສາມາດຫາເງິນຈຳນວນຫຼວງຫຼາຍເພື່ອມາໄຖ່ຖອນເອົາດິນນາຄືນ ສະພາບັນດາເຜົ່າໄດ້ຜ່ານຂໍ້ຮຽກຮ້ອງໃໝ່ຂຶ້ນໃນເດືອນສິງຫາ 1792 ຕັດສິນໃຈແບ່ງປັນດິນຂອງພວກອົບພະຍົບ ແລະ ດິນນາລວມ ແຕ່ກໍ່ບໍ່ສາມາດປະຕິບັດໄດ້. ປີ ຄ.ສ 1792-1793 ຂະບວນການລຸກຂຶ້ນຕໍ່ສູ້ຂອງຊາວນາໄດ້ລະເບີດຂຶ້ນໃນທົ່ວປະເທດ, ມີບາງບ່ອນຊາວນາກໍ່ດຳເນີນການແບ່ງປັນດິນາດ້ວຍຕົນເອງ. ຂະບວນການຕໍ່ສູ້ລະຫວ່າງຊາວນາຜູ້ທຸກຍາກກັບຊາວນາຜູ້ຮັ່ງມີເລີຍຕົ້ນຂະຫຍາຍຕົວຫຼາຍຂຶ້ນ.

ປານນັ້ນລັດຖະບານ ຊີຣອງແດັງ ກໍ່ຍັງບໍ່ຍອມແກ້ໄຂບັນຫາ ຫຼື ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງກຳລັງມະຫາຊົນ. ສະນັ້ນຍິ່ງເຮັດໃຫ້ປະຊາຊົນເກີດຄວາມບໍ່ພໍໃຈນັບມື້ນັບສູງຂຶ້ນ, ເຊິ່ງເຮັດໃຫ້ອຳນາດການປົກຄອງຂອງພວກນາຍທຶນໃຫຍ່າສັ່ນຄອນ.

ສິດຜົນປະໂຫຍດຂອງມະຫາຊົນໄດ້ສະແດງອອກຊັດເຈນໃນກຸ່ມຄົນທີ່ໃຫ້ການຊຸກຍູ້ປະຊາຊົນຄື: ຊັກເກີຣູ, ເລີກລີແອ, ວາກລີ... ພວກເຂົາຖືກລັດຖະບານ ຊີຣອງແດັງ ກຽດຊັງຈົນໃຫ້ສົມຍານາມພວກເຂົາວ່າເປັນ "ພວກປ່ວງບ້າ" ນັບແຕ່ນັ້ນມາໃນປະຫວັດສາດກໍ່ຈະໃຊ້ຄຳຄຸນນາມນີ້ເພື່ອຮຽກຊື່ເອີ້ນພວກເຂົາ. ກຸ່ມຄົນປ່ວງບ້າແມ່ນພວກຝ່າຍກົງກັນຂ້າມກັບຝ່າຍປະຊາທິປະໄຕປະຕິວັດ ເປັນຕົວແທນໃຫ້ແກ່ປະຊາຊົນຜູ້ທຸກຍາກ ແລະ ຊົນຊັ້ນກຳມະຊີບ. ພາຍໃຕ້ຮູບການເປີດທະເລສາບ, ມີບາງຄັ້ງກໍ່ຂັດແຍ່ງກັນ. ຄຳຮຽກຮ້ອງຂອງພວກເຂົາສະແດງໃຫ້ເຫັນເຖິງຄວາມຕັ້ງໃຈທີ່ບໍ່ທັນໄດ້ຮັບການຕອບສະໜອງຂອງກຸ່ມຄົນທີ່ຕ້ອງການປົດແອກປົກຄອງ, ການກົດຂີ່ຂູດຮີດ ແລະ ຊອກລະບົບສັງຄົມໃໝ່ທີ່ມີຄວາມຈະເລີນ ແລະ ສວຍງາມກວ່າ.

ພວກເຂົາຕ້ອງການຊັບສິນບັດ ແລະ ແບ່ງປັນຊັບສິນບັດເທົ່ານັ້ນ ແຕ່ບໍ່ໄດ້ທຳການກຳຈັດລະບອບປົກຄອງກຳມະສິດ. ພວກເຂົາໄດ້ຮຽກຮ້ອງໃຫ້ມີການກຳນົດລາຄາສິນຄ້າ. ຄຳຮຽກຮ້ອງຂອງພວກເຂົາຢຸດຢູ່ທີ່ການຮຽກຮ້ອງລະບອບກະຈາຍຄວາມຍຸດຕິທຳ ແຕ່ບໍ່ທັນໂຈມຕີລະບອບປົກຖືກຳມະສິດສ່ວນຕົວໃຫ້ພັງທະລາຍລົງ. ລັດຖະບານ ຊີຣອງແດັງ ມີຄວາມກຽດຊັງພວກຊາໂກແບັງທີ່ທຳອິດບໍ່ອະນຸມັດນະໂຍບາຍໃນການກຳນົດລາຄາສິນຄ້າ ແຕ່ຕໍ່ມາເຫັນວ່າຖ້າບໍ່ຕອບສະໜອງຕາມຄວາມຕ້ອງການຂອງປະຊາຊົນຜູ້ທຸກຍາກ ເຮັດແນວໃດກໍ່ບໍ່ສາມາດຕີເອົາຊະນະສັດຕູໄດ້ ພວກເຂົາຈິ່ງດຳເນີນການທັນທີ ແລະ ກົດດັນຝ່າຍສະພາຊົນເຜົ່າ, ສະນັ້ນ, ຕໍ່ກັບພວກຊາໂກແບັງການໃຫ້ການສະໜັບສະໜູນແກ່ ກຸ່ມພວກບ້າປ່ວງ ເປັນພຽງແຕ່ບັນຫາກ່ຽວກັບກົນລະຍຸດເທົ່ານັ້ນ. ວັນທີ 4 ພຶດສະພາ 1793 ສະມາຄົມຊົນເຜົ່າໄດ້ກຳນົດລາຄາຂອງເຂົ້າສາລີໃນທົ່ວປະເທດ, ນີ້ແມ່ນໝາກຜົນທຳອິດຂອງໃນການອ່ຽງເອນຊົ່ວຄາວໄປຫາຝ່າຍບ້າປ່ວງຂອງພວກ ຊາໂກແບັງ.

### 3) ຄວາມຫຼົ້ມເຫຼວຂອງລັດຖະບານ ຊີຣອງແດັງ.

ບັນດາກອງທັບປະຕິວັດຝຣັ່ງ ບຸກເຂົ້າແບບຊົກ, ເຢຍລະມັນ ບັນດາລາຊະອານາຈັດເຢຍລະມັນ, ຊາໂວອາ, ນີເຊີ ກ້າວຂຶ້ນສູ່ລະດັບສູງພາຍໃຕ້ຄຳຂວັນທີ່ວ່າ " ສັນຕິພາບດ້ວຍຕູບ, ຕໍ່ສູ້ຢ່າງຍາວນານ" ເຊິ່ງປະຊາຊົນຕ້ອນຮັບຢ່າງສຸດໃຈ. ກົງກັນຂ້າມພວກກຳອຳນາດປະເທດອັງກິດ ແລະ ບັນດາປະເທດລາຊາທິປະໄຕຢູ່ ເອີຣົບມີຄວາມກັງວົນຍ້ອນການປະຕິວັດຝຣັ່ງທີ່ກຳລັງຄ່ອຍໆຫຍັບນາບຂູ່ເຂົ້າມາໃກ້ຕະຫຼາດຂອງອັງກິດ ແລະ ປ່ຽນແປງລະບົບການປົກຄອງແບບລາຊາທິປະໄຕສົມບູນສິດຢູ່ບັນດາປະເທດເອີຣົບ.

ປີ 1793 ບັນດາປະເທດອັງກິດ, ໂອຕຣິດ, ປຣັດເຊຍ, ໂຮນລັງ, ສະເປນ, ລາຊະອານາຈັກ ນາໂປລີ, ຊາກດັນຍາ ແລະ ເຢຍລະມັນ ໄດ້ນຳພາກັນລວມຕົວເປັນພັນທະມິດ ອັງກິດຕ້ອງການກຳຈັດກຳລັງປະຕິວັດຝຣັ່ງ ເພື່ອຄອບຄອງຕະຫຼາດຈຳໜ່າຍສິນຄ້າຢູ່ບັນດາຫົວເມືອງຂຶ້ນຂອງຝຣັ່ງ, ຈັກກະພັກລັດເຊຍສະໜັບສະໜູນພັນທະມິດ ແລະ ປະກາດຕັດຂາດສາຍພົວພັນທາງການທູດກັບຝຣັ່ງໃນເດືອນກຸມພາ 1793 ຍ້ອນສາທາລະນະລັດຝຣັ່ງຍັງອ່ອນນ້ອຍບວກກັບມີກຳລັງປໍລະປັກທັງພາຍໃນ ແລະ ພັນທະມິດສັກດີນາຈາກພາຍນອກ. ມາໃນເດືອນ ມີນາ 1793 ພວກສັກດີນາທີ່ເປັນປໍລະປັກໄດ້ລຸກຂຶ້ນຕໍ່ສູ້ຢູ່ ວັງເດີ . ບັນດາເຈົ້າໜ້າທີ່ ຊີຣອງແດັງ ໄດ້ປະເຊີນໜ້າກັບສັດຕູຢູ່ຫຼາຍບ່ອນ ພວກຂຸນນາງສັກດີນາມີການພົວພັນ ແລະ ຮ່ວມມື

ກັນກັບພວກຊີຣອງແດັງເດັ່ນທີ່ສຸດຢູ່ເມືອງລີອອງ, ສາມາດສັງຫານສະມາຊິກ ກຸ່ມ ຊາໂກແບັງເປັນຈຳນວນຫຼາຍສິບຄົນ, ສະພາບການມີຄວາມອັນຕະລາຍທີ່ສຸດ.

ນັບແຕ່ເດືອນເມສາ ກຸ່ມຄົນບ້າປ່ວງ ຕ້ອງການຂັບໄລພວກ ຊີຣອງແດັງອອກຈາກການເປັນສະມາຊິກສະພາກໍ່ບໍ່ສາມາດເຮັດໄດ້. ຈົນມາຮອດໄລຍະທີ່ມີນະໂຍບາຍໃນການຕໍ່ຕ້ານພວກ ຊີຣົງແດັງຊັດເຈນຝ່າຍຝ່າຍຊາໂກແບັງຈຶ່ງໄດ້ມີການສະໜັບສະໜູນຄວາມຕ້ອງການຂອງພວກ ບ້າປ່ວງ. ພາຍໃຕ້ຄວາມກົດດັນຂອງພວກຊາໂກແບັງ, ສານຕັດສິນລົງໂທດພວກທີ່ຕໍ່ຕ້ານການປະຕິວັດຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ, ນະໂຍບາຍໃນການກຳນົດລາຄາສິນຄ້າໄດ້ຮັບການປະຕິບັດ, ຄະນະກຳມະການການປະຕິວັດກໍ່ໄດ້ຮັບການສ້າງຕັ້ງຂຶ້ນ. ວັນທີ 31 ພຶດສະພາຄະນະກຳມະການການປະຕິວັດຮຽກຮ້ອງໃຫ້ປະຊາຊົນທຸກທົ່ວໜ້າລຸກຂຶ້ນເຮັດການປະຕິວັດ, ປະຊາຊົນໄດ້ຈັບອາວຸດປິດລ້ອມສະພາ ແລະ ຂັບໄລ່ສະມາຊິກກຸ່ມ ຊີຣອງແດັງ ອອກຈາກສະພາ. ແຕ່ຂ່າວຄາວການກໍ່ກະບົດຂອງພວກ ຊີຣອງແດັງ ຢູ່ໃນທ້ອງຖິ່ນຍິ່ງເຮັດໃຫ້ປະຊາຊົນຍິ່ງມີຄວາມກຽດຊັງຕໍ່ພວກຊີຣອງແດັງ ຍິ່ງຂຶ້ນ. ວັນທີ 2 ມິຖຸນາ ສະພາຖືກປິດລ້ອມດ້ວຍກອງກຳລັງປືນໃຫຍ່ຮັກສາປະເທດ ແລະ ກຳລັງມວນຊົນຫຼາຍພັນຄົນບັງຄັບໃຫ້ວາງຂໍ້ກຳນົດໃໝ່ຈັບຜູ້ແທນກຸ່ມ ຊີຣອງແດັງ ຈຳນວນ 22 ຄົນ. ອຳນາດການປົກຄອງຂອງພວກ ຊີຣອງແດັງ ພັງທະລາຍລົງ ແລະ ອຳນາດປ່ຽນມາຢູ່ໃນກຳມືຂອງພວກຊາໂກແບັງ. ຂະບວນການລຸກຮື້ຂຶ້ນເຮັດການປະຕິວັດໃນວັນທີ 31 ພຶດສະພາ ຫາ ວັນທີ 2 ມິຖຸນາເປັນອີກເຫດການໜຶ່ງທີ່ມີຄວາມໝາຍສະແດງໃຫ້ເຫັນນ້ຳໃຈຕໍ່ສູ້ຂອງກຳລັງປະຊາຊົນທີ່ຊຸກຍູ້ໃຫ້ການປະຕິວັດຊາດກ້າວຂຶ້ນສູ່ລະດັບໜຶ່ງອີກ. ໄລຍະໃໝ່ເຊິ່ງເປັນໄລຍະແຫ່ງການຂະຫຍາຍຕົວກວ່າເກົ່າຂອງການປະຕິວັດຝຣັ່ງໄດ້ເລີ່ມຕົ້ນຂຶ້ນ.

**3. ໄລຍະທີ 3 ລະບອບປະເດັດການປະຊາທິປະໄຕ ຊາໂກແບັງ ນັບແຕ່ວັນທີ 2 ມິຖຸນາ 1793 ຫາ ວັນທີ 27 ກໍລະກົດ 1794.**

**1) ການສ້າງຕັ້ງລັດຖະບານອຳນາດຜະເດັດການປະຊາທິປະໄຕ ຊາໂກແບັງ.**

**ວິກິດການຂອງປະເທດສາທາລະນະລັດຝຣັ່ງໃນລະດູນ້ອນຂອງປີ 1793.**

ອຳນາດການປົກຄອງຂອງພວກ ຊາໂກແບັງ ໄດ້ຮັບການສ້າງຕັ້ງຂຶ້ນໃນສະພາບການທີ່ເກີດວິກິດການ ແລະ ມີຄວາມຫຍຸ້ງຍາກຫຼາຍຢ່າງ. ກຳລັທະຫານ ຝຣັ່ງ ສືບຕໍ່ຫຼົ້ມເຫຼວ. ກຳລັງທະຫານພັນທະມິດສັກດີນາໄດ້ຍົກກຳລັງຂ້າມມາຊາຍແດນມຸ້ງໜ້າສູ່ປະເທດຝຣັ່ງ. ທະຫານອັງກິດໄດ້ທຳການປິດລ້ອມບັນດາທ່າເຮືອ, ບຸກຕີ

ແລະ ຍຶດຄອງໝູ່ເກາະ ຊ້ອກເຊີ. ການກໍ່ກະບົດວັງເດີບອກກັບຂະບວນການລຸກຂຶ້ນຕໍ່ສູ້ຂອງພວກ ຊີຣອງ ແດັງ ເກີດຂຶ້ນໃນທົ່ວພາກຕາເວັນຕົກສ່ຽງໃຕ້, ພາກຕາເວັນອອກສ່ຽງໃຕ້ ແລະ ພາກໃຕ້ຂອງປະເທດຝຣັ່ງ ສາມາດຍຶດຄອງ 60 ຕົວເມືອງ ຈາກ 83 ຕົວເມືອງທັງໝົດ, ລະບອບສາທາລະນະລັດພວມຢືນຢູ່ຄອງເຫວ ເລິກ. ຈາກສະພາບຄວາມກົດດັນ ແລະ ການຂົ່ມຂູ່ຄືແນວນັ້ນກຳລັງປະຊາຊົນເປັນອີກຄັ້ງທີ່ຈະໄດ້ສະແດງ ຄວາມມຸ້ງມາດປາດຖະໜາອັນແຮງງກ້າ, ເຈດຈຳນົງອັນແຂງແກ່ນ ແລະ ຈິດວິນຍານຮູ້ແຈ້ງທາງດ້ານ ການເມືອງຢ່າງເລິກເຊິ່ງ. ແນວຄິດຂອງ ດັງຕົງ ຜູ້ນຳຂອງຄະນະກຳມະການຮັກສາຄວາມສະຫງົບຍັງຕ້ອງການ ຊອກຫາວິທີການເພື່ອທຳການປະນປະນອມກັບພວກ ຊາໂກແບັງ ຂະບວນການປະຕິວັດນຳພາໂດຍ ໂຣເບີດ ປີແອ, ມາຣາ, ແຊັງກວິດ ມີຄວາມເຫັນວ່າຖ້າຕ້ອງການຮັກສາລະບອບສາທາລະນະລັດໄວ້ຕ້ອງປຸກລະດົມໃຫ້ ປະຊາຊົນເຂົ້າຮ່ວມຂະບວນການຕໍ່ສູ້ຕ້ານກຳອິດທິກຳລັງປໍລະປັກຈາກພາຍນອກ.

**ນະໂຍບາຍດິນນາຂອງລັດຖະບານ ຊາໂກແບັງ**

ການປະຕິວັດຜ່ານມາໄດ້ 2 ໄລຍະ ແຕ່ສິດຜົນປະໂຫຍດອັນຊອບທຳຂອງຊາວນາແມ່ນຍັງບໍ່ທັນໄດ້ ຮັບການຕອບສະໜອງພໍເທົ່າໃດ, ມີພຽງແຕ່ຊ່ວງໄລຍະທີ່ຂຶ້ນກຳອຳນາດທຳອິດທີ່ພວກຊາໂກແບັງ ໄດ້ແກ້ໄຂ ບັນຫາກ່ຽວກັບດິນນາ.

ວັນທີ 3 ມິຖຸນາ ສະພາຊົນເຜົ່າໄດ້ປະກາດຂໍ້ກຳນົດກ່ຽວກັບດິນນາໂດຍການຍຶດເອົາດິນນາຂອງພວກ ທີ່ອົບພະຍົດໜີອອກຈາກປະເທດແລ້ວແບ່ງເປັນຕອນດິນນ້ອຍໆເພື່ອຂາຍເປັນເງິນຜ່ອນເປັນໄລຍະເວລາ 10 ປີ ຂໍ້ກຳນົດໄດ້ຕົກລົງແບ່ງດິນນາໃຫ້ຊາວນາຄົນໜຶ່ງຈະໄດ້ຮັບດິນເກືອບເຄິ່ງເຮັກຕາໃນຈຳນວນດິນຂອງພວກ ຂຸນນາງທີ່ອົບພະຍົບໜີ ຖ້າຫາກຂົງເຂດນັ້ນບໍ່ມີດິນທີ່ເປັນຂອງສ່ວນລວມ.

ວັນທີ 10 ມິຖຸນາ ສະພາຊົນເຜົ່າຕົກລົງແບ່ງດິນລວມໃຫ້ຊາວນາ ແນໃສ່ເພື່ອໃຫ້ຊາວນາທຸກຄົນມີດິນ ນາໃນຈຳນວນເທົ່າໆກັນ.

ວັນທີ 17 ກໍລະກົດ ສະພາຊົນເຜົ່າ ຕົກລົງລົບລ້າງສິດອຳນາດຂອງສັກດີນາ, ຊາວນາໄດ້ຮັບການປົດ ປ່ອຍ ແລະ ຍົກເລີຍທຸກພັນທະທີ່ປະກອບສ່ວນໃຫ້ພວກຂຸນນາງສັກດີນາໂດຍບໍ່ມີສິ່ງຕອບແທນ. ບັນດາ ສັນຍາລັກ ແລະ ເອກກະສານຂອງລະບອບສັກດີນາຖືກຈູດເຜົາທຳລາຍ, ການຮັກສາເອກະສານດັ່ງກ່າວນີ້ໄວ້ ຖືວ່າເປັນສິ່ງທີ່ຜິດກົດໝາຍຢ່າງຮ້າຍແຮງ ອາດຈະຖືກຈັບເຂົ້າຄຸກກໍ່ເປັນໄດ້.

ກົດໝາຍກ່ຽວກັບທີ່ດິນມີຄວາມໝາຍປະຫວັດສາດອັນໃຫຍ່ຫຼວງ, ພຽງແຕ່ສອງເດືອນລັດຖະບານ ຊາໂກແບັງສາມາດແກ້ໄຂບັນຫາທີ່ລັດຖະບານໃນຊຸດກ່ອນບໍ່ສາມາດເຮັດໄດ້ພາຍໃນເວລາຫຼາຍປີສົມຄວນ. ມັນເປັນການທຳລາຍກົກເຫງົ້າຂອງລະບອບສັກດີນາປ່ຽນຊາວນາທີ່ຂຶ້ນກັບພວກສັກດີນາໃນເມື່ອກ່ອນມາ ເປັນພວກທີ່ມີສິດປົກຄອງກຳມະສິດສ່ວນຕົວຢ່າງອິດສະຫຼະ ແລະ ສ້າງພື້ນຖານເສດຖະກິດກະສິກຳຍ່ອຍ. ເຊິ່ງເປັນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດທຶນນິຍົມຢູ່ ປະເທດຝຣັ່ງ.

ນະໂຍບາຍກ່ຽວກັບດິນນາຂອງລັດຖະບານ ຊາໂກແບັງແມ່ນກົດໝາຍຂອງການປະຕິວັດໃນ ປະຫວັດສາດຂອງການປະຕິວັດນາຍທຶນ. ຊົນຊັ້ນກະສິກອນຍ່ອຍກຳເນີດຂຶ້ນຢ່າງຫຼວງຫຼາຍຍ້ອນນະໂຍບາຍ ກ່ຽວກັບທີ່ດິນເຊິ່ງເປັນການທະນຸບຳລຸງຮັກສາການປະຕິວັດຂອງປະເທດຝຣັ່ງ, ກາຍເປັນກຳລັງຕົ້ນຕໍໃນການ ສ້າງສັນເພື່ອຍາດເອົາໄຊຊະນະໃນການຕໍ່ສູ້ກູ້ຊາດ, ປົກປັກຮັກສາປິຕຸພູມອັນແສນຮັກໃນປີ 1793-1794.

**ລັດຖະທຳມະນູນ ໃນປີ 1793 ແລະ ລະບົບຜະເດັດການປະຊາທິປະໄຕປະຕິວັດຊາໂກແບັງ.**

2 ອາທິດຫຼັງຈາກການຈັດພິທີກະກຽມ, ວັນທີ 24 ມິຖຸນາ 1793 ສະພາຊົນເຜົ່າໄດ້ປະກາດກົດໝາຍ ໃໝ່ຂຶ້ນເຊິ່ງເປັນລັດຖະທຳມະນູນສາທາລະນະລັດສະບັບທຳອິດ. ກ່ອນໜ້ານີ້ໄດ້ມີການກຳນົດຖະແຫຼງການ ສິດທິມະນຸດ ແລະ ສິດທິພົນລະເມືອງທີ່ທ່ານ ໂຣເບີດປີແອ ເປັນຜູ້ກຳນົດອອກມາ. ຖະແຫຼງການໄດ້ຍົກໃຫ້ ເຫັນຢ່າງຈະແຈ້ງກ່ຽວກັບຈຸດປະສົງຂອງສັງຄົມແມ່ນເພື່ອຄວາມສຸກຂອງສ່ວນລວມ ແລະ ລັດຖະບານມີໜ້າ ທີ່ໃນການຮັບປະກັນ “ສິດທິໂດຍພື້ນຖານທີ່ບໍ່ສາມາດລ່ວງລະເມີດໄດ້” ນັ້ນກໍ່ຄື: ສິດອິດສະຫຼະພາບ, ສິດ ສະເໝີພາບ, ມີຄວາມປອດໄພສະຫງົບສຸກ ແລະ ສິດໃນການເປັນເຈົ້າຂອງກຳມະສິດ. ກຳມະກອນມີ ອິດສະຫຼະໃນການເຊື່ອຖືສາສະໜາ, ການອອກແຮງງານ, ມີສິດປະກອບຄຳເຫັນ ແລະ ຮ້ອງຂໍຕ່າງໆ...

ລັດຖະທຳມະນູນປີ 1793 ໄດ້ລົບລ້າງລະບອບການຈຳແນກກຳມະກອນກ້າວໜ້າ ແລະ ກຳມະກອນ ທຸກຍາກ, ຕົກລົງໃຫ້ພົນລະເມືອງຜູ້ຊາຍທີ່ມີອາຍຸກແຕ່ 21 ປີຂຶ້ນໄປມີສິດເລືອກຕັ້ງສະພາແຫ່ງຊາດ. ສະພາ ແຫ່ງຊາດໄດ້ຮັບການເລືອກຕັ້ງໃນແຕ່ລະປີໂດຍກຳນົດເອົາວັນທີ 1 ພຶດສະພາຂອງທຸກປີ. ບັນດາກົດໝາຍ ແມ່ນຖືກສະພາແຫ່ງຊາດນຳສະເໜີຂຶ້ນໃນກອງປະຊຸມເພື່ອໃຫ້ປະຊາຊົນສະແດງຄວາມຄິດເຫັນໃນກອງ ປະຊຸມ.

ລັດຖະທຳມະນູນໄດ້ກຳນົດສະມາຄົມໜຶ່ງເຮັດໜ້າທີ່ບໍລິຫານທີ່ມີສະມາຊິກ 24 ຄົນ ໂດຍແມ່ນສະພານິຕິບັນຍັດເປັນຜູ້ເລືອກ. ແຕ່ລະປີສະມາຊິກຂອງຄະນະກຳມະການຈະຖືກປ່ຽນໃໝ່ເລື້ອຍໆ.

ລັດຖະທຳມະນູນໃນປີ 1793 ໄດ້ສິ່ງຜົນສະທ້ອນ ແລະ ເປັນຂີດໝາຍແຫ່ງການໄຊສັງກາດໃໝ່, ເປັນໄລຍະແຫ່ງການປະຕິວັດກ້າວຂຶ້ນສູ່ລະດັບທີ່ສູງກວ່າເກົ່າອີກ. ເປັນການປະກາດໃຫ້ໂລກໄດ້ຮູ້ວ່າ: ບັນດາຫຼັກການອິດສະຫຼະພາບ ແລະ ປະຊາທິປະໄຕ, ນີ້ເປັນລະບົບປະຊາທິປະໄຕນາຍທຶນທີ່ກ້າວໜ້າກວ່າລັດຖະທຳມະນູນທີ່ສ້າງໃນປີ 1791. ເຊິ່ງເຮັດໃຫ້ປະຊາຊົນມີຄວາມປິຕິຍິນດີຢ່າງສຸດອົກສຸດໃຈ, ແມ່ນໄຊຊະນະອັນໃຫຍ່ຫຼວງຂອງການປະຕິວັດ.

ລັດຖະທຳມະນູນ 1793 ໄດ້ຮັບການປະກາດໃຊ້ ແຕ່ບໍ່ໄດ້ຮັບການປະຕິບັດ , ຕໍ່ໜ້າສະພາບການທີ່ເປັນອັນຕະລາຍທີ່ສຸດຂອງລະອບສາທາລະນະລັດ, ອິດທິກຳລັງປໍລະປັກຈາກພາຍນອກໄດ້ລວມຕົວກັບເພື່ອໂຈມຕີຝຣັ່ງ, ລັດຖະບານ ຊາໂກແບັງໄດ້ຕັດສິນໃຈຍຸດຕິຂໍ້ກຳນົດຕ່າງໆທີ່ລະບຸໄວ້ໃນລັດຖະທຳມະນູນ ແນ່ໃສ່ເພື່ອປ້ອງກັນສັດຕູທີ່ກຳລັງສວຍໃຊ້ເງື່ອນໄຂຕ່າງໆຂອງລະບອບປະຊາທິປະໄຕ. ນັ້ນແມ່ນວິທີການທີ່ຖືກຕ້ອງທີ່ສຸດໃນເວລານັ້ນເພາະວ່າສະຖານະການທີ່ເກີດຂຶ້ນໄດ້ຮຽນຮ້ອງໃຫ້ເພີ່ມທະວີຜະເດັດການກັບກຳລັງຕໍ່ຕ້ານການປະຕິວັດ.

ລັດຖະບານການປະຕິວັດແມ່ນອີງໃສ່ການຈັດຕັ້ງຂອງປະຊາຊົນ, ແຕ່ກຳລັງຂອງພວກ ຊາໂກແບັງກໍ່ມີບົດບາດສຳຄັນ. ບັນດານະໂຍບາຍ, ຮ່າງເອກະສານ ແລະ ວິທີການກ່ຽວກັບການເມືອງ ລ້ວນແຕ່ໄດ້ນຳເອົາມາສົນທະນາໃນກຸ່ມ ຊາໂກແບັງ ເສຍກ່ອນ ແລ້ວຈິ່ງນຳມາສະເໜີຢູ່ຕໍ່ໜ້າສະພາຊົນເຜົ່າ, ກຳລັງມວນຊົນ, ປະຊາຊົນມີສິດປະກອບຄວາມຄິດເຫັນກ່ຽວກັບທິດທາງການເມືອງ, ນະໂຍບາຍໄດ້ຖືກນຳສະເໜີຜ່ານຄະນະກຳມະການປະຕິວັດທີ່ປະກອບມີ 12 ຄົນ ຊຶ່ງປະຊາຊົນເປັນຜູ້ຄັດເລືອກຢູ່ໃນທ້ອງຖິ່ນ, ຫ້ອງການບໍລິຫານມີສິດເທົ່າທຽມກັບລັດຖະບານ ປະກອບມີ 21 ກຳມະການ ໃນນັ້ນສຳຄັນກວ່າໝູ່ແມ່ນຄະນະກຳມະການຮັກສາຄວາມສະຫງົບມີໜ້າທີ່ປາບປາມຂະບວນການຕໍ່ຕ້ານ, ສ້າງຕັ້ງກຳລັງປະຊາຊົນປະກອບອາວຸດ, ເພີ່ມທະວີຜະເດັດການປະຕິວັດ, ທ່ານ ເລນິນໄດ້ເວົ້າວ່າ: “ ພວກຊາໂກແບັງ ໄດ້ຖືເອົາປີ 1793 ເປັນປີແຫ່ງປະຫວັດສາດປຽບສະເໝືອນແວ່ນແຍງໃຫ້ແກ່ຂະບວນການຕໍ່ສູ້ການປະຕິວັດ ຢ່າງແທ້ຈິງຕ້ານກັບຊົນຊັ້ນກົດຂີ່ຂູດຮີດ

ໂດຍຊາວຜູ້ອອກແຮງງານ ແລະ ກຸ່ມຄົນທີ່ຖືກກົດຂີ່ຂູດຮີດເຮັດໃຫ້ການເຄື່ອນໄຫວຕ່າງໆຂອງລັດຖະບານມີຄວາມກ້າວໜ້າຂຶ້ນ"[11].

**2) ສົງຄາມປ້ອງກັນປິຕຸພູມ**

**ນະໂຍບາຍການກໍ່ການຮ້າຍຂອງລັດຖະບານ ຊາໂກແບັງ**

ການເຄື່ອນໄຫວຕໍ່ຕ້ານການປະຕິວັດຂອງພວກລາດຊະວົງ ແລະ ພວກຊີຣອງແດັງ ນັບມື້ນັບເພີ່ມຂຶ້ນ, ການລອບຄາຕະກຳເກີດຂຶ້ນລຽນຕິດ. ວັນທີ 13 ກໍລະກົດ 1793 ທ່ານ ມາຣາ ແມ່ນໜຶ່ງໃນນັກເຄື່ອນໄຫວປະຕິວັກທີ່ເກັ່ງກ້າຮອບດ້ານຂອງຝ່າຍ ຊາໂກແບັງ ຖືກລອບສັງຫານຢູ່ໃນເຮືອນຂອງທ່ານເອງ. 3 ວັນຕໍ່ມານາຍຍົກເທດສະມົນຕີຂອງສະຫະກອນທີ່ເມືອງ ລີອົງ ກໍ່ຖືກຄາດຕະກຳ.

ເພື່ອຕອບໂຕ້ກັບການເຄື່ອນໄຫວລອບຄາດຕະກຳນັ້ນ ສະພາຊົນເຜົ່າ ປະກາດເພີ່ມທະວີບການປາບປາມພວກຕໍ່ຕ້ານການປະຕິວັດ ແລະ ເລີ່ມມີການກວດລ້າງພວກກຸ່ມກອງໂຈນ. ພະລາຊີນີ ແມຣີແອັງຕົວເນັດ ແລະ ພວກຕໍ່ຕ້ານການປະຕິວັດຫຼາຍຄົນຖືກປະຫານຊີວິດ ແລະ ຖືກຍຶດຊັບສົມບັດທັງໝົດ. ສະພາຊົນເຜົ່າໄດ້ຈັດສົ່ງຄະນະກຳມະການຜູ້ມີອຳນາດລົງໄປທ້ອງຖິ່ນຕ່າງໆເພື່ອກຳຈັດພວກທີ່ທຳການຕໍ່ຕ້ານການປະຕິວັດຢູ່ສຳນັກງານອົງການ ແລະ ສ້າງຕັ້ງອຳນາດການປະຕິວັດຂຶ້ນມາແທນ. ພວກສໍ້ລາດບັງຫຼວງ ແລະ ລັດຖະມົນຕີຂອງຝ່າຍ ຊີຣອງແດັງ ແມ່ນຖືກຮຽກຂຶ້ນສານ. ອົງການໄອຍະການສານປະຕິວັດໄດ້ຮັບການສ້າງຕັ້ງຂຶ້ນ, ໄລຍະເວລາໃນການສອບສວນແມ່ນສັ້ນລົງແນ່ໃສ່ເພື່ອແກ້ໄຂບັນຫາຢ່າງໄວວາໃນກໍລະນີທີ່ເຮັດຜິດກົດໝາຍ. ເພີ່ມທະວີຜະເດັດການນັ້ນກໍ່ຄື: ການບຸກໂຈມຕີຂອງກຳລັງຕໍ່ຕ້ານການປະຕິວັດ ແລະ ກຳລັງສະໜັບສະໜູນທີ່ຢູ່ເບື້ອງຫຼັງຂອງກຳລັງຕໍ່ຕ້ານປະຕິວັດ.

ພ້ອມດຽວກັນນັ້ນການປະຕິບັດນະໂຍບາຍກ່ຽວກັບທີ່ດິນໄດ້ສ້າງຄວາມບໍ່ພໍໃຈໃຫ້ແກ່ປະຊາຊົນສ່ວນຫຼາຍເຮັດໃຫ້ພວກເຂົາບໍ່ໃຫ້ການສະໜັບສະໜູນແກ່ພວກກະບົດອີກຕໍ່ໄປ ຊໍ້າບໍ່ໜໍ່າປະຊາຊົນຍັງລຸກຂຶ້ນຕໍ່ສູ້ເພື່ອຮັກສາປະເທດສາທາລະນະລັດ. ສ່ວນຝ່າຍ ຊີຣອງແດັງແມ່ນໝົດອຳນາດພື້ນຖານຢ່າງໄວວາໃນຂັ້ນທ້ອງຖິ່ນ, ຖານທີ່ໝັ້ນຂອງພວກເຂົາຢູ່ພາກໃຕ້ ທີ່ເມືອງ ລີອົງ ແມ່ນຖືກບຸກຍຶດ. ບັນດາທະຫານປະຊາຊົນປະກອບອາວຸດໄດ້ບຸກໂຈມຕີ ແລະ ຂັບໄລ່ພວກ ຊີຣອງແດັງ ແລະ ສູນກາງການເຄື່ອນໄຫວຕໍ່ຕ້ານຂອງພວກ

---

[11] ເລນິນ, ສັດຕູຂອງປະຊາຊົນ,ເຫຼັ້ມ 32 ໂຮງພິມກ້າວໜ້າ ສັງລວມເອກະສານ ຊຸດ ມາກເຊີວາ 1981 ໜ້າ 388

ນິຍົມກະສັດຢູ່ ວັງເດີ ຖືກປິດລ້ອມຢ່າງແໜ້ນໜາ. ລັດຖະບານປະຕິວັດໄດ້ຫັນທິດບຸກໂຈມຕີໂດຍອາໄສການຊ່ວຍເຫຼືອ ແລະ ສະໜັບສະໜູນຈາກປະຊາຊົນ, ລະບອບຜະເດັດການ ຊາໂກແບັງ ໄດ້ທັບມ້າງພື້ນຖານກຳລັງຕໍ່ຕ້ານການປະຕິວັດພາຍໃນປະເທດລົງ, ສ້າງເງື່ອນໄຂອຳນວຍຄວາມສະດວກໃນການຕີເອົາຊະນະກຳລັງປໍລະປັກຈາກພາຍນອກ.

**ການສ້າງຕັ້ງກຳລັງທະຫານປະຕິວັດ ແລະ ໄຊຊະນະທາງດ້ານການທະຫານ.**

ອີງໃສ່ແນວຄິດລິເລີ່ມຂອງກຳລັງມວນຊົນ ມາໃນວັນທີ 23 ສິງຫາ 1793 ສະພາຊົນເຜົ່າໄດ້ປະກາດລະດົມພົນໃນທົ່ວປະເທດ. ປະເທດຝຣັ່ງປະຕິວັດທີ່ເຕັມໄປດ້ວຍຜູ້ທີ່ມີຈິດວິນຍານຮັກປະເທດຊາດຢ່າງດູດດື່ມ. ພຽງແຕ່ການປຸກລະດົມຄັ້ງທຳອິດກໍ່ມີຜູ້ສະໝັກໃຈເຂົ້າຮ່ວມກອງທັບເຖິງ 42 ພັນຄົນ. ຕົ້ນປີ 1794 ມີກຳລັງທະຫານອາສາສະໝັກເຖິງ 60.000 ຄົນ ກອງກຳລັງສຳຮອງເຄິ່ງປະກອບອາວຸດໄດ້ຮັບການສ້າງຕັ້ງຂຶ້ນໃນຂັ້ນທ້ອງຖິ່ນ. ກອງທັບທະຫານຂາດແຄນເຄື່ອງນຸ່ງຫົ່ມ, ສະບຽງອາຫານ ແລະ ເກີບໃສ່ ແຕ່ຈິດໃຈຂອງພວກເຂົາເຕັມໄປດ້ວຍຄວາມພິລາດອາດຫານ ແລະ ມີນ້ຳໃຈເສຍສະຫຼະ.

ບັນດາຂະແໜງອຸດສະຫະກຳມີທ່າອ່ຽງໃນການສະໜັບສະໜູນເພື່ອປົດປ່ອຍປະເທດຊາດ, ບັນດາໂຮງຈັກໂຮງງານອຸດສະຫະກຳ ແລະ ບໍລິສັດກໍ່ສ້າງໄດ້ທຳການຜະລິດປືນ ໄຣເຟີນ, ປືນໃຫຍ່, ຫອກດາບ... ບັນດານັກວິທະຍາສາດທີ່ມີຊື່ສຽງເຊັ່ນ: ບັກໂຕເລ, ລາໂວອາຊີເອໄດ້ເຂົ້າຮ່ວມຂະບວນການດັ່ງກ່າວເຊິ່ງມີບົດບາດໃນການຄົ້ນຄວ້າສິ່ງປະດິດໃໝ່ໃນການເຮັດສົງຄາມ ແລະ ໄດ້ສ້າງຕັ້ງລະບົບຄຸ້ມກັນແມ່ນ ທ່ານ ເລດາກາກໂນ ເປັນນັກຄະນິດສາດທີ່ມີຊື່ສຽງ ແລະ ທ່ານ ແຊັງຊວຽດແມ່ນຜູ້ນຳທີ່ມີອາຍຸນ້ອຍກວ່າໝູ່ໃນກຸ່ມ ຊາໂກແບັງ. ກຳລັງທະຫານປະຕິວັດໄດ້ທຳການເລື່ອນຕຳແໜ່ງຜູ້ບັນຄັບບັນຊາທາງການທະຫານ. ມີນາຍທະຫານທີ່ມີຄວາມສາມາດເກີດຈາກກຳລັງມະຫາຊົນຊາວຜູ້ອອກແຮງງານ: ຄົນລ້ຽງມ້າ ໂຮເຊີ ໄດ້ກາຍມາເປັນພົນໂທທີ່ບັນຊາການທະຫານຕັ້ງແຕ່ອາຍຸ 25 ປີ, ນັກທຸລະກິດນ້ອຍ ຊວກດັງ ໄດ້ເຂົ້າມາເປັນທະຫານ ແລະ ກ້າວຂຶ້ນໃນາເປັນຜູ້ບັນຊາການທະຫານສູງສຸດຢູ່ກອງທັບທາງພາກເໜືອຕອນອາຍຸ 31 ປີ. ນາຍພົນເຄແບ ແມ່ນລູກຂອງນາຍຊ່າງຫຼອມໂລຫະ, ນາຍພົນ ມາກໂຊແມ່ນເຄີຍເປັນນັກຂຽນຮັບຈ້າງ... ລະບອບທີ່ໄດ້ເອື້ອອຳນວຍໃຫ້ແກ່ຄົນໜຸ່ມນ້ອຍທີ່ມີເຊື້ອສາຍຂຸນນາງ ຫຼື ພວກນາຍທຶນໃຫຍ່ໃຫ້ບັນຈຸເຂົ້າໃນກຳລັງທະຫານແມ່ນຖືກລົບລ້າງລົງ.



ການປະຫານພະລາຊິນີ ແມຣີ ແອັງຕົວເນັດ ໃນຕອນເຊົ້າຂອງວັນທີ 16 ຕຸລາ 1793.

ໄຊຊະນະທັງສອງສະໜາມຣົບໃນເດືອນກັນຍາ ແລະ ເດືອນຕຸລາ ຢູ່ທາງພາກຕາເວັນອອກສ່ຽງເໜືອຂອງປະເທດຝຣັ່ງໄດ້ເຮັດໃຫ້ສະຖານະການຂອງສົງຄາມມີການປ່ຽນແປງ. ກອງທັບທະຫານໂອຕຣິດຖືກປາໄຊ, ເຮັດໃຫ້ກຳລັງທະຫານອັງກິດ ແລະ ທະຫານເຢຍລະມັນຕ້ອງຖອຍທັບ. ຝຣັ່ງຍັງບໍ່ສາມາດຕີເອົາໄຊຊະນະທັງໝົດ. ເບິ່ງຄືວ່າປະເທດຝຣັ່ງຈະສາມາດຫຼຸດພົ້ນອອກຈາກວິກິດການທາງການທະຫານ. ຈົນຮອດລະດູໜາວຕໍ່ໃສ່ລະດູໃບໄມ້ຫຼົ່ນຂອງປີ 1793-1794 ທະຫານຝຣັ່ງຢູ່ໃນທ່າເປັນເຈົ້າການໃນສະໜາມຣົບ. ຕູລົງ ໄດ້ຮັບການປົດປ່ອຍຈາກອັງກິດ, ອານດັງ ປົດປ່ອຍອອກຈາກປຣັດເຊຍ ແລະ ໂອຕຣິດ. ພາກຕາເວັນອອກໄດ້ຮັບການຟື້ນຟູ, ກຳລັງສັດຕູຖືກກວາດລ້າງ ແລະ ຖືກຂັບໄລ່ອອກຈາກດິນແດນຂອງປະເທດຝຣັ່ງ.

**3) ການລົ້ມສະຫຼາຍຂອງພັນທະມິດຝ່າຍ ຊາໂກແບັງ ແລະ ການລົ້ມລະລາຍຂອງຝ່າຍບ້າປ່ວງ.**

ໃນໄລຍະທຳອິດລະບອບຜະເດັດການ ຊາໂກແບັງ ໃນປະເທດຕົກຢູ່ໃນສະພາບພົບຄວາມຫຍຸ້ງຍາກໂດຍສວຍໂອກາດທີ່ເກີດສົງຄາມ ພວກພໍ່ຄ້າໄດ້ສວຍໂອກາດກັກຕຸນສະບຽງອາຫານ ແລະ ເຄື່ອງໃຊ້ສອຍ, ມີການເພີ່ມລາຄາສິນຄ້າ, ບັນດາຕົວເມືອງເກີດບັນຫາຂາດແຄນເຂົ້າຈີ່, ກົດໝາຍກ່ຽວກັບລາຄາສິນຄ້າທີ່

ປະກາດໃຊ້ ໃນວັນທີ 4 ພຶດສະພາ 1795 ແມ່ນບໍ່ໄດ້ຖືກນໍາໃຊ້. ກຸ່ມບ້າປ່ວງ ໂດຍ ຊັກເກີຣູ ເປັນຜູ້ນໍາຕາງໜ້າໃຫ້ປະຊາຊົນຜູ້ທຸກຍາກຮຽກຮ້ອງໃຫ້ປະຫານຊີວິດພວກຊີ້ຖືກຂາຍແພງສິນຄ້າ, ທໍາການຢຶດຊັບສົມບັດ ແລະ ສະບຽງອາຫານຂອງພວກພໍ່ຄ້າ, ຕົກລົງກໍານົດລາຄາສິນຄ້າປະເພດຕ່າງໆ. ເຈດຈໍານົງຂອງພວກບ້າປ່ວງໄດ້ດັງກ້ອງໄປທົ່ວມວນຊົນຢ່າງກວ້າງຂວາງ. ແຕ່ເມື່ອພວກເຂົາບໍ່ພໍໃຈຕໍ່ກັບລັດຖະທໍາມະນູນສະບັບປີ 1793 , ຮຽກຮ້ອງໃຫ້ເພີ່ມທະວີໃນການກໍາຈັດພວກອາດຊະຍາກອນ. ເຖິງແມ່ນວ່າຈະມີການຮຽກຮ້ອງໃຫ້ມີການນໍາໃຊ້ລັດຖະທໍາມະນູນທັນທີ ແຕ່ໂດຍພື້ນຖານແລ້ວຄວາມຕ້ອງການດັ່ງກ່າວແມ່ນບໍ່ໄດ້ຕອບສະໜອງກັບສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນເລີຍ ນັບທັງຜົນປະໂຫຍດຂອງພວກ ຊາໂກແບັງ. ໃນເງື່ອນໄຂທາງດ້ານສັງຄົມມີການຮຽກຮ້ອງໃຫ້ເພີ່ມທະວີລະບອບຜະເດັດການເພື່ອກໍາຈັດສັດຕູພາຍນອກ, ຄວາມຕ້ອງການໃນການປະຕິບັດ ແລະ ນໍາໃຊ້ລັດຖະທໍາມະນູນແມ່ນເປັນວິທີການທີ່ບໍ່ຖືກຕ້ອງເພາະຈະເປັນການເຮັດໃຫ້ກຸ່ມພວກ ຊາໂກແບັງ ຝ່າຍຂວາສວຍໂອກາດດັ່ງກ່າວນັ້ນຫັນປ່ຽນມາເປັນກຸ່ມຝ່າຍຊ້າຍ ແລະ ດໍາເນີນການກົດຂີ່ພວກເຂົາຢ່າງຕໍ່ເນື່ອງ. ເດືອນກັນຍາ 1793 ຊັກເກີຣູ ຜູ້ນໍາກຸ່ມ ບ້າປ່ວງ ຖືກຈັບ, ຕໍ່ມາທ່ານໄດ້ຂ້າຕົວເອງຕາຍ ນັບແຕ່ນັ້ນມາກຸ່ມບ້າປ່ວງກໍ່ສະຫຼາຍຕົວ. ການກໍາຈັດ ກຸ່ມບ້າປ່ວງ ຄວາມຈິງແລ້ວເປັນການຕັດສາຍພົວພັນລະຫວ່າງພວກ ຊາໂກແບັງ ກັບກໍາລັງມະຫາຊົນ ເຮັດໃຫ້ກໍາລັງມະຫາຊົນຄ່ອຍໆຫ່າງເຫີນອອກຈາກພວກ ຊາໂກແບັງ.

ໃນເວລານັ້ນ ຂະບວນການລຸກຂຶ້ນປະທ້ວງໃຫຍ່ຂອງກໍາລັງມະຫາຊົນໄດ້ລະເບີດຂຶ້ນເຊິ່ງປະກອບມີ: ກໍາມະກອນ, ນາຍຊ່າງຫັດຖະກໍາ, ປະຊາຊົນຜູ້ທຸກຍາກໃນຕົວເມືອງ (ວັນທີ 4-5 ກັນຍາ 1793) ພາຍໃຕ້ຄໍາຂວັນຂອງຝ່າຍ "ບ້າປ່ວງ" ຄໍາຂວັນຂອງພວກເຂົາແມ່ນຖືກພວກຊາໂກແບັງຝ່າຍຊ້າຍເຊັ່ນ: ອີເບ, ໂຊເມດ ໃຫ້ການສະໜັບສະໜູນ. ລັດຖະບານ ຊາໂກແບັງ ຮັບຮອງເອົາບັນດາຄໍາຮຽກຮ້ອງຂອງກໍາລັງມະຫາຊົນ. ຄະນະກໍາມະການຮັກສາຄວາມສະຫງົບໄດ້ຮັບການສ້າງຕັ້ງຂຶ້ນອີກຄັ້ງໜຶ່ງ, ເພີ່ມທະວີການປາບປາມພວກຕໍ່ຕ້ານ, ສະໜັບສະໜູນກໍາລັງທະຫານ ແລະ ສານຍຸດຕິທໍາການປະຕິວັດ. ວັນທີ 29 ກັນຍາສະພາຊົນເຜົ່າໄດ້ກໍານົດລາຄາສິນຄ້າທີ່ເປັນເຄື່ອງໃຊ້ສອຍທີ່ຈໍາເປັນຢູ່ໃນປະເທດຝຣັ່ງ. ແຕ່ພ້ອມດຽວກັນນັ້ນ, ສະພາຍັງໄດ້ກໍານົດເງິນເດືອນສູງສຸດໃຫ້ກໍາມະກອນຖືວ່າເປັນຈໍານວນເງິນຂ້ອນຂ້າງຕໍ່າຖ້າທຽບໃສ່ກັບແຮງງານທີ່ເສຍໄປ. ກົດໝາຍ ຊາເພີຣິເອ ແມ່ນຍັງຄົງຮັກສາໄວ້. ສິ່ງດັ່ງກ່າວນັ້ນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບໍ່ໄດ້ຮັບການປ່ຽນແປງໄປໃນທາງທີ່ດີພໍເທົ່າໃດ.

**ຂໍ້ຂັດແຍ່ງພາຍໃນ ແລະ ການພັງທະລາຍຂອງພັນທະມິດພວກຊາໂກແບັງ.**

ຕະຫຼອດໄລຍະຂອງການຕໍ່ສູ້ຕ້ານກັບກຳລັງຣຸກຮານຈາກພາຍນອກ ແລະ ກຳລັງຕໍ່ຕ້ານທີ່ຢູ່ພາຍໃນ, ພາຍໃນກຸ່ມ ຊາໂກແບັງ ກໍ່ເກີດມີການຈຳແນກແບ່ງພັກພວກນັບມື້ນັບຊັດເຈນ.

ເຖິງວ່າຈະມີວິທີການປ້ອງກັນອຳນາດການປົກຄອງຂອງຝ່າຍຂອງລັດຖະບານ ຊາໂກແບັງ, ສົງຄາມໄດ້ສ້າງເງື່ອນໄຂໃຫ້ແກ່ພວກພໍ່ຄ້າ ແລະ ຊາວກະສິກອນຜູ້ຮັ່ງມີລໍ້າລວຍຂຶ້ນ. ພວກ ຊາໂກແບັງ ໄດ້ກັກຕຸນສະບຽງອາຫານ, ສິນຄ້າ, ເງິນຄຳ ແລະ ຊັບສິນບັດຂອງຊາດ. ພວກເຂົາສ້າງຮັ່ງຄູນມີຢ່າງໄວວາດ້ວຍເລືອດເນື້ອເຫື່ອແຮງຂອງກຳລັງທະຫານ ແລະ ປະຊາຊົນຊາວຜູ້ອອກແຮງງານ ແລ້ວພວກເຂົາກໍ່ຄ່ອຍໆກາຍເປັນຊົນຊັ້ນນາຍທຶນຂຸນນາງໃໝ່. ຕົວແທນຂອງຊົນຊັ້ນນີ້ແມ່ນທ່ານ ດັງຕົງ ເຊິ່ງເປັນບຸກຄົນທີ່ເຄີຍຖືກຝ່າຍບ້າປ່ວງກ່າວປະນາມ. ຍ້ອນຄວາມກຽດຊັງຂອງຄະນະກຳມະການຮັກສາຄວາມສະຫງົບທີ່ມີຕໍ່ດັງຕົງ, ພວກເຂົານັບມື້ນັບດຳເນີນການເປີດເຜີຍທັດສະນະຄະຕິ ແລະ ແນວຄິດຂອງ ດັງຕົງ. ວັນທີ 10 ກໍລະກົດ ສະພາຊົນເຜົ່າໄດ້ຕັດສິນໃຈປະຕິຮູບຄະນະກຳມະການຮັກສາຄວາມສະຫງົບ, ດຳເນີນການຂັບໄລ່ ດັງຕົງ ໂດຍອີງໃສ່ບັນດາກຳລັງຜູ້ທີ່ມີຄວາມເດັດດ່ຽວເຊັ່ນ: ແຊັງກວິດ, ກູຕົງ... ໂດຍມີ ໂຣເບີດປີແອ ເປັນຜູ້ນຳ.

ກຸ່ມພັກຝ່າຍຊ້າຍຂອງພວກ ຊາໂກແບັງ ປະກອບມີ ພາກສ່ວນທີ່ເດັດດ່ຽວຍຶດໝັ້ນໃນການປະຕິວັດ, ໄດ້ສືບທອດເຈດຕະນາລົມຫຼາຍຢ່າງຂອງ ພວກ ບ້າປ່ວງ ພາຍຫຼັງທີ່ກຸ່ມດັ່ງກ່າວສະຫຼາຍຕົວໄປ ນຳພາໂດຍ ອີແບ (ສະນັ້ນຝ່າຍຊ້າຍຈຶ່ງຖືກເອີ້ນວ່ ຝ່າຍ ອີແບ), ໂຊເມດ... ພວກເຂົາຮຽກຮ້ອງຢ່າງເດັດດ່ຽວໃຫ້ມີການກຳນົດລາຄາສິນຄ້າ, ດຳເນີນການປາບປາມພວກຝ່າຍກົງກັນຂ້າມ, ຮຽກຮ້ອງໃຫ້ມີການແບ່ງປັນດິນ ແລະ ຟາມເພື່ອມອບໃຫ້ແກ່ພວກທີ່ບໍ່ມີດິນທຳການຜະລິດ. ພວກເຂົາໄດ້ນຳພາຈັດຕັ້ງຄ້າຂາຍຍ່ອຍ ແລະ ແຈກຈ່າຍຄູປ່ອງໃນການແລກຊື້ເຂົ້າຈີໃຫ້ແກ່ປະຊາຊົນ, ຊອກທຸກວິທີທາງເພື່ອເອົາຊະນະກັບວິກິດການທີ່ເກີດຂຶ້ນ. ພ້ອມດຽວກັນນັ້ນບາງບັນຫາພວກເຂົາກໍ່ອະທິບາຍໄດ້ຍາກ, ຮຽກຮ້ອງໃຫ້ບັງຄັບໃຫ້ດຳເນີນການແກ້ໄຂດ້ວຍວິທີການທີ່ສ່ຽງ ແລະ ບໍ່ເໝາະສົມກັບສະພາບການຕອນນັ້ນເຊັ່ນ: ການຮຽກຮ້ອງໃຫ້ມີການປິດປະຕູໂບດ, ຈັບກຸມຄຸມຂັງນັກບວດ, ດຳເນີນການກໍ່ການຮ້າຍຢູ່ໃນຂົງເຂດອັນກວ້າງຂວາງ.

ແຕ່ບັນດາການນຳຂອງຝ່າຍ ຊາໂກແບັງ ທີ່ມີໂຣເບີດປີແອເປັນຜູ້ນຳພາໄດ້ຍົກໃຫ້ເຫັນວ່າ ເສັ້ນທາງຂອງການປະຕິວັດທີ່ຖືກຕ້ອງທີ່ສຸດແມ່ນການຮັກສາພັນທະມິດໄວ້, ຄຽງຄູ່ກັບການລົບລ້າງແນວຄິດ ຫຼື ທ່າ

ອ່ຽງ ແບ່ງເປັນຝ່າຍຂວາ ແລະ ຝ້າຍຊ້າຍທີ່ພວກເຂົາເຫັນວ່າອັນຕະລາຍເພື່ອຮັກສາຄວາມເປັນເອກະພາບໃນເບື້ອງຕົ້ນ.

ຄວາມແຕກຕ່າງຂອງທັງສອງກຸ່ມນັບມື້ນັບນັບເປີດແປນເຫັນໄດ້ຢ່າງຈະແຈ້ງ, ໃນໄລຍະສົງຄາມພວກຊາໂກແບັງເຫັນວ່າຖ້າຕ້ອງການເອົາຊະນະໃນສົງຄາມຕ້ອງເປັນພັນທະມິດກັບກຳລັງມະຫາຊົນທີ່ປະກອບມີ: ປະຊາຊົນຜູ້ທຸກຍາກທີ່ອາໄສຕາມຕົວເມືອງ ແລະ ເຂດຊົນນະບົດ. ສະນັ້ນ, ພວກເຂົາຈຶ່ງຍອມຮັບຄຳຮຽກຮ້ອງຂອງປະຊາຊົນ: ພວກເຂົາກຳນົດລາຄາສິນຄ້າສູງ, ບໍ່ໃຫ້ຮຽກຜົນກຳໄລຫຼາຍ ແລະ ບໍ່ໃຫ້ກັກຕູນສະບຽງອາຫານ... ສິ່ງດັ່ງກ່າວນັ້ນສ້າງຄວາມບໍ່ພໍໃຈໃຫ້ແກ່ພວກນາຍທຶນ ແລະ ຊົນຊັ້ນຊາວນາຜູ້ຮັ່ງມີກຳລັງຮັ່ງມີ ໂດຍອາໄສສົງຄາມ ຕ້ອງໄດ້ອຶດທົນກັບນະໂຍບາຍຂອງພວກ ຊາໂກແບັງ, ໂດຍຖືຊ່ວງເວລານີ້ເປັນຊ່ວງເວລາພຽງຊົ່ວຄາວ ແລະ ເປັນຊ່ວງແຫ່ງການຖືກບັງຄັບຈາກການຄຸກຄາມທີ່ອັນຕະລາຍເພື່ອຟື້ນຟູລະບອບສັກດີນາ. ສິ່ງດັ່ງກ່າວນັ້ນສະແດງໃຫ້ເຫັນວ່າຝ່າຍ ຊາໂກແບັງ ແມ່ນພັນທະມິດທີ່ບໍ່ໝັ້ນຄົງ ໂດຍປະກອບມີຫຼາຍຊົນຊັ້ນທີ່ຜົນປະໂຫຍດແຕກຕ່າງກັນ, ພຽງແຕ່ຕ້ອງການຍາດໄຊຊະນະໃນການເຮັດສົງຄາມຕ້ານການຮຸກຮານຈາກພາຍນອກ. ເປັນສັນຍາລັກຢັ້ງຢືນວ່າປະເທດຝຣັ່ງມີຫຼາຍກຸ່ມກ້ອນເຊິ່ງແຕ່ລະກຸ່ມລ້ວນແຕ່ມີການກຳນົດວິທີການໃນການປົກປັກຮັກສາສິດຜົນປະໂຫຍດຂອງໃຜລາວ. ຄວາມຂັດແຍ່ງພາຍໃນກຸ່ມ ຊາໂກແບັງໄດ້ສະແດງອອກຢ່າງຈະແຈ້ງ.

ຄວາມຫຼົ້ມເຫຼວໃນການປະຕິບັດກົດໝາຍເດືອນລົມ (ມີນາ)[12] ແມ່ນໜຶ່ງໃນສັນຍາລັກທຳອິດທີ່ສະແດງໃຫ້ເຫັນເຖິງຂໍ້ຂັດແຍ່ງພາຍໃນ.

ວັນທີ 26 ກຸມພາ ຫາວັນທີ 3 ມີນາ 1794 (ວັນທີ 8 ແລະ ວັນທີ 13 ຂອງເດືອນລົມ) ສະພາໄດ້ມອບໝາຍໃຫ້ຄະນະຮັກສາຄວາມສະຫງົບ ແລະ ຕຳຫຼວດ ໃຫ້ທົບທວນພິຈະລະນາຄືນຄະດີທີ່ໄດ້ມີການຈັບກຸມຄຸມຂັງໃນວັນທີ 1 ພຶດສະພາ 1789 ເພື່ອອະໄພຍະໂທດໃຫ້ແກ່ພວກທີ່ຮູ້ເທົ່າບໍ່ເຖິງການ ແລະ ພວກຕໍ່ຕ້ານການປະຕິວັດ. ຊັບສິນບັດຂອງພວກຕໍ່ຕ້ານການປະຕິວັດແມ່ນຖືກຍຶດແລ້ວນຳເອົາໄປແບ່ງປັນໃຫ້ແກ່

---

[12] ຕາມປະຕິທິນ ສາທາລະນະລັດ ແມ່ນວັນທີ 22 ກັນຍາ 1793 (ວັນປະກາດສ້າງຕັ້ງສາທາລະນະລັດ) ແມ່ນວັນທຳອິດຂອງປີທຳອິດ ນັບແຕ່ນັ້ນມາການຕັ້ງຊື່ຂອງເດືອນຈຶ່ງຕັ້ງຕາມສະພາບອາກາດ ຫຼື ລະດູການ.

- ເດືອນ ຫິມະ, ເດືອນຝົນ, ເດືອນລົມ ແມ່ນນັບແຕ່ເດືອນ 1 ຫາ ເດືອນ 3.
- ເດືອນ ແຫ່ງການຕົກກ້າ, ເດືອນອອກດອກ, ເດືອນແຫ່ງທົ່ງຫຍ້າ: ປະມານ ເດືອນທີ 4-6
- ເດືອນເກັບກ່ຽວ, ເດືອນຮ້ອນ, ເດືອນອອກໝາກ: ປະມານເດືອນ7-9
- ເດືອນ ເກັບອາຫງຸ່ນ, ເດືອນນ້ຳໝອກ ແລະ ເດືອນຂາຍຜົນຜະລິດ: ປະມານ ເດືອນ 10-12.

ພວກກຳລັງຮັກຊາດທີ່ຍັງບໍ່ທັນມີດິນທຳການຜະລິດ ນະໂຍບາຍໃນເດືອນລິມສະແດງອອກຊັດເຈນເຖິງຄວາມສະເໝີພາບຂອງກຳລັງປະຊາຊົນໃນການປະຕິວັດນາຍທຶນເຮັດໃຫ້ການປະຕິວັດພັດທະນາຂຶ້ນໄປອີກລະດັບໜຶ່ງບົນເສັ້ນທາງແຫ່ງການສ້າງຄວາມສະເໝີພາບໃນຄວາມປາດຖະໜາທ່ານ ຣຸດໂຊ ເຮັດໃຫ້ບັນດາທຸລະກິດເອກະຊົນເກີດຂຶ້ນຫຼາຍ ເດັ່ນທີ່ສຸດແມ່ນຢູ່ເຂດຊົນນະບົດເຮັດໃຫ້ປະຊາຊົນມີຄວາມປີຕິຍິນດີເປັນຢ່າງຍິ່ງ. ພວກຊາໂກແບັງຝ່າຍຊ້າຍ ເຫັນວ່ານີ້ເປັນນະໂຍບາຍປະຊາທິປະໄຕ ແລະ ມີຄວາມກ້າວໜ້າທີ່ສຸດຂອງການປະຕິວັດ.

ບັນດານາຍທຶນໃຫຍ່ ແລະ ຊາວນາຜູ້ຮັ່ງມີເຫັນຄວາມອັນຕະລາຍທີ່ກຳລັງຈະທຳລາຍຕົນ, ສະນັ້ນ, ພວກກຳລັງປໍລະປັກຈິ່ງຄ່ອຍໆແຊກຊ້ອນອາໄສຢູ່ຕາມສຳນັກງານ ແລະ ສະພາຊົນເຜົ່າ. ສ່ວນພວກຂຸນນາງນາຍທຶນແມ່ນບໍ່ຕ້ອງການໃຫ້ການປະຕິວັດດຳເນີນການໄປຕໍ່ ຍິ່ງໄປກວ່ານັ້ນບັນດາກຳລັງປໍລະປັກຍັງມີຄວາມເຂັ້ມແຂງທີ່ສຸດ. ໝາກຜົນຂອງມັນກໍ່ແມ່ນຂໍ້ກຳນົດໃນເດືອນລິມແມ່ນບໍ່ໄດ້ຮັບການປະຕິບັດ

ເດືອນມີນາ 1794 ເມື່ອກຳລັງທະຫານຢູ່ໃນທ່າເປັນເຈົ້າການໃນສະໜາມຮົບຕ້ານກັບສັດຕູພາຍນອກ, ແຕ່ສົງຄາມພາຍໃນປະເທດກໍ່ສືບຕໍ່ຮຸນແຮງຂຶ້ນເລື້ອຍໆ.

ວັນທີ 4 ມີນາ ຝ່າຍ ອີແບ ປະສົບກັບຄວາມຫຼົ້ມເຫຼວຍ້ອນການປາບປາມຂອງ ໂຣເບີດປີແອ ຕໍ່ມາ ອີແບ , ບັນດາຜູ້ນຳຝ່າຍຊ້າຍໄດ້ຖືກຈັບ ແລະ ຖືກນຳເຂົ້າເຄື່ອງປະຫານ.

ພາຍຫຼັງບຸກໂຈມຕີເຂົ້າຝ່າຍ ອີແບແ ລ້ວ ລັດຖະບານ  ຊາໂກແບັງ ກໍ່ຫັນທິດບຸກໂຈມຕີຝ່າຍ ດັງຕົງ. ໃນວັນທີ 30 ມີນາ ດັງຕົງ ແລະ ຄົນສະໜິດຖືກຈັບ, ຖືກຕັດສິນໃນຂໍ້ຫາກະບົດຕໍ່ການປະຕິວັດ ແລະ ຖືກປະຫານຊີວິດ. ຊົນຊັ້ນນາຍທຶນເກີດຄວາມບໍ່ພໍໃຈຕໍ່ກັບເຫດການດັ່ງກ່າວ.

ສຸດທ້າຍ ໂຊເມດ ກໍ່ຖືກຈັບ ແລະ ຖືກປະຫານຊີວິດໃນວັນທີ 13 ເມສາ ເຖິງວ່າທ່ານຈະບໍ່ໄດ້ເຂົ້າຮ່ວມໃນຂະບວນການຂອງ ອີແບ ກໍ່ຕາມ ແຕ່ວ່າການທີ່ ໂຊເມດໃຫ້ການສະໜັບສະໜູນແກ່ອີແບ ແລະ ພວກຝ່າຍຊ້າຍ ເຮັດໃຫ້ ໂຣເບີດປີແອ ຂາດກຳລັງສະໜັບສະໜູນຈາກກຳລັງມວນຊົນ.

ວິກິດການພາຍໃນໄດ້ເຮັດໃຫ້ລັດຖະບານ ຊາໂກແບັງ ກ້າວເຂົ້າສູ່ໄລຍະໂດດດ່ຽວ, ກຳລັງການປະຕິວັດອ່ອນເພຍລົງ, ອຳນາດການປົກຄອງທັງໝົດຕົກຢູ່ໃນກຳມືຂອງ ທ່ານ ໂຣເບີດປີແອ, ແຊັງກວິດ ແລະ ກູຕົງ.

ໂຣເບີດປີແອ ບໍ່ມີກຳລັງທີ່ແຂງແກ່ນເປັນບ່ອນອີງໃນສັງຄົມ ທ່ານ ເລນິນ ໄດ້ກ່າວວ່າ: "ສະພາຊິນເຜົ່າ" ໄດ້ວາງຍຸດທະສາດແຜນໃຫຍ່ ແຕ່ບໍ່ມີກຳລັງທີ່ແໜ້ນແກ່ນເພື່ອເຮັດການປະຕິບັດ, ບໍ່ຮູ້ວ່າຈະເອົາພາກສ່ວນໃດເປັນບ່ອນອີງເພື່ອປະຕິບັດຍຸດທະສາດນີ້ ຫຼື ຍຸດທະສາດອື່ນ[13] ຍ້ອນແນວນັ້ນການພັງທະລາຍຂອງລັດຖະບານ ຊາໂກແບັ ງໄດ້ກາຍເປັນສິ່ງທີ່ບໍ່ສາມາດຫຼີກລ້ຽງໄດ້ອີກ.

ຂະບວນການສູ້ຮົບກັບສັດຕູພາຍນອກໄດ້ຜັນແປໄປຢ່າງໄວວາ, ສະໜາມຮົບລະດູໃບໄມ້ຫຼົ່ນ ປີ 1794 ໄດ້ນຳເອົາໄຊຊະນະອັນໃຫຍ່ຫຼວງມາສູ່ປະເທດຝຣັ່ງ. ຢູ່ ອີຕາລີ ກຳລັງທະຫານຂອງຝຣັ່ງບຸກຕີເຂົ້າເຈນນົວາ, ຢູ່ ແອັດສະປາຍ ກຳລັງທະຫາຍຝຣັ່ງບຸກຕີເຂົ້າສາຍພູ ປີເຣເນ; ຢູ່ພາກເໜືອ ແລະ ພາກພາກຕາເວັນຕົກສ່ຽງເໜືອ ໂອຕຣິດ ປະລາໄຊກຳລັງທະຫານຝຣັ່ງຢ່າງໜັກໜ່ວງ. ໃນວັນທີ 26 ມິຖຸນາ ກອງກຳລັງພັນທະມິດຂອງພວກສັກດີນາລົ້ມສະຫຼາຍລົງທີ່ ເຟີລຣິສທ໌. ພາຍຫຼັງການສູ້ຮົບຢ່າງດຸເດືອດຢູ່ເຟີລຣິສທ໌ ບໍ່ພຽງແຕ່ສາມາດປາບປາມຄວາມອັນຕະລາຍຈາກການຮຸກຮານຂອງສັດຕູພາຍນອກເທົ່ານັ້ນຍັງເປັນການເປີດເສັ້ນທາງໃຫ້ກອງກຳລັງທະຫານຝຣັ່ງແຜ່ອຳນາດອອກສູ່ພາຍນອກຢ່າງກວ້າງຂວາງ. ພຽງສອງອາທິດເທົ່ານັ້ນທະຫານຝຣັ່ງກໍ່ສາມາດຢຶດຄອງປະເທດແບນຊິກ ແລະ ສາມາດບຸກເຂົ້າໄປຮອດຊາຍແດນປະເທດ ໂຮນລັງຄຽງຄູ່ກັນນັ້ນໄຊຊະນະໃນການສູ້ຮົບກັບພາຍນອກຍັງສິ່ງຜົນສະທ້ອນເຮັດໃຫ້ການປະຕິວັດນາຍທຶນຂະຫຍາຍຕົວ ແລະ ເຮັດໃຫ້ລະບອບ ຊັກໂກແບັງ ກ້າວເຂົ້າສູ້ເສັ້ນທາງແຫ່ງການລົ້ມລະລາຍລົງ.

**ແຜນການຕໍ່ຕ້ານກັບຂະບວນການປະຕິວັດ ແລະ ການເຮັດລັດຖະປະຫານໃນວັນທີ 9 ແຫ່ງເດືອນ ແຕກມີດໍ (ເດືອນກໍລະກົດ)**

ລະດູຮ້ອນຂອງປີ 1794 ຂະບວນການຕໍ່ສູ້ຕ້ານກັບອຳນາດຂອງ ໂຣເບີດປີແອ ນັບມື້ນັບມີຄວາມຊັດເຈນຂຶ້ນເລື້ອຍໆ. ບັນດາໂຄງການ ຫຼື ຂໍ້ກຳນົດຕ່າງໆທີ່ ໂຣເບີດປີແອ ແລະ ກູຕົງ ກຳນົດຂຶ້ນເພື່ອເພີ່ມທະວີລະບອບຜະເດັດການ ແລະ ການເກັບເກນຜົນຜະລິດໃນປີ 1794 ຖືກຄັດຄ້ານຢ່າງໜັກໃນສະພາຊິນເຜົ່າ. ສາຍລັບໄດ້ເຂົ້າໄປແຝງຕົວຢູ່ໃນຄະນະລັດຖະບານ ແລະ ເຂົ້າໄປຮ່ວມໃນສະພາຊິນເຜົ່າໄດ້ລວມຕົວກັນຕໍ່ຕ້ານ ໂຣເບີດປີແອ: ພັກຂອງ ດັງຕົງ, ອີເບ ແລະ ຝ່າຍທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນນາຍທຶນໃນຕົວເມືອງ ແລະ ຊາວນາຜູ້ຮັ່ງມີໄດ້ດຳເນີນການຄັດຄ້ານ, ເຊິ່ງໃນເວລານັ້ນກອງກຳລັງມະຫາຊົນທີ່ເປັນກຳມະກອນໄດ້

[13] ເລນິນ, ບົດລາຍງານວຽກງານໃນຊົນນະບົດຢູ່ກອງປະຊຸມໃຫຍ່ຄັ້ງທີ 8 ຂອງພັກຄອມມູນິດຣັດເຊຍ, ເຫຼັ້ມທີ 38 ໂຮງພິມກ້າວໜ້າ, 1977 ໜ້າ 236.

ສືບຕໍ່ລຸກຂຶ້ນປະທ້ວງເພື່ອທວງໃຫ້ແກ້ໄຂຊີວິດການເປັນຢູ່, ທວງໃຫ້ມີການກຳນົດເງິນເດືອນ ແລະ ກຳນົດກົດໝາຍ ຊາເພີລີເອ (ກົດໝາຍວ່າດ້ວຍແຮງງານ).

ວັນທີ 26 ກໍລະກົດ (ວັນທີ 8 ແຫ່ງເດືອນແຕກມີດໍ- ເດືອນແຫ່ງອາກາດຮ້ອນອົບເອົ້າ) ໃນກອງປະຊຸມສະພາຊິນເຜົ່າ ໂຣເບີດປີແອ ໄດ້ກ່າວຄຳປາໄສ ແລະ ກ່າວຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ສະມາຊິກກອງປະຊຸມ. ໃນຄ່ຳຄືນຂອງມື້ນັ້ນເອງທ່ານກໍ່ໄດ້ອ່ານບົດປາໄສຢູ່ທີ່ສະໂມສອນ ຊາໂກແບັງ ແລະ ໄດ້ຮັບການສະໜັບສະໜູນຈາກສະມາຊິກສ່ວນຫຼາຍ ທ່ານໄດ້ຕັດສິນໃຈລວບລວມອຳນາດຜະເດັດການ ແລະ ສະກັດກັ້ນກອງກຳລັງຂອງຝ່າຍຄ້ານ ເພື່ອຜັນປ່ຽນກຳລັງຈາກຝ່າຍຂວາມາເປັນກຳລັງຝ່າຍຊ້າຍ ແຕ່ບໍ່ປະສົບຜົນສຳເລັດເຮັດໃຫ້ມີກຳລັງຕໍ່ຕ້ານການປະຕິວັດນັບມື້ນັບຕ້ອງການໂຄ່ນລົ້ມອຳນາດຂອງ ໂຣເບີດປີແອ.

ຕໍ່ມາວັນທີ 9 ແຫ່ງເດືອນແຕກມີດໍ ຢູ່ທີ່ສະພາຊິນເຜົ່າ ແຊງກວິດ ໄດ້ອ່ານບົດລາຍງານເຊິ່ງເປັນວິທີການຕໍ່ສູ້ທີ່ແນບນຽນ ແລະ ແນ່ນອນ. ກຳລັງພວກຕໍ່ຕ້ານໄດ້ທຳການຄັດຄ້ານ ໂຣບິດປີແອ, ແຊັງກວິດ,  ກູຕົງ, ບັນດາຊຸມຊົນ ສະມາຄົມ ຊັກໂກແບັງ ໄດ້ຮຽກຮ້ອງໃຫ້ລຸກຂຶ້ນປາບປາມຕໍ່ຕ້ານ. ກຳລັງມະຫາຊົນ, ກອງກຳລັງປ້ອງກັນຊາດ ແລະ ກຳລັງຂອງສະພາຊິນເຜົ່າ. ໃນຂະນະທີ່ກຳລັງລັດຖະປະຫານມຸ້ງໜ້າຮອດ ກົມຕຳຫຼວດ ໂຣເບີດປີແອ ພ້ອມດ້ວຍພັກພວກໄດ້ຍອມວາງມື ຖອຍກຳລັງອອກມາເຕົ້າລວມກັນ ທີ່ກົມ ສະຫະກອນ ຕໍ່ໜ້າສະພາບການອັນເຄັ່ງຕຶງນັ້ນກຳລັງມວນຊົນໄດ້ຮຽກຮ້ອງ ແລະ ບັງຄັບ ໂຣເບີດປີແອ ຕ້ອງຕັດສິດໃຈຢ່າງຮີບດ່ວນ,  ສະມາຄົມ ຊັກໂກແບັງ ມີການປັ່ນປ່ວນ ແລະ ລົ້ມສະຫຼາຍລົງ. ພວກເຂົາບໍ່ສາມາດອອກຂໍ້ກຳນົດ, ດຳລັດທັນກັບສະພາບການໄດ້ຄືກັບເຫດການໃນວັນທີ 10 ສິງຫາ 1792, ວັນທີ 31 ພຶດສະພາ ແລະ ວັນທີ 2 ມິຖຸນາ 1793 ໄດ້ອີກ.

ໃນເວລານັ້ນກຳລັງຕໍ່ຕ້ານການປະຕິວັດໄດ້ດຳເນີນການໄປຢ່າງໄວວາ ພວກເຂົາໄດ້ປະກາດເນລະເທດ ໂຣເບີດປີແອ ພ້ອມດ້ວຍພັກພວກອອກຈາກປະເທດ, ກຳລັງຕໍ່ຕ້ານໃຊ້ກຳລັງທະຫານປະກອບອາວຸດບຸກເຂົ້ານະຄອນຫຼວງ ປາລີ. ຮອດກາງຄືນກຳລັງຕໍ່ຕ້ານສາມາດບຸກຍຶດເຂົ້າກົມສະຫະກອນ. ໂຣເບີດປີແອ ພ້ອມດ້ວຍພັກພວກ ແລະ ຜູ້ໃກ້ຊິດຖືກຈັບ. ມື້ຕໍ່ມາ ໂຣເບີດປີແອ ພ້ອມດ້ວຍພັກພວກຖືກຂ້າຕາຍ ເຮັດໃຫ້ອຳນາດຜະເດັດການຊາໂກແບັງພັງທະລາຍລົງຢ່າງຮາບກ້ຽງ.

## III. ທາດແທ້ ແລະ ຄວາມໝາຍປະຫວັດສາດຂອງການປະຕິວັດນາທຶນຢູ່ຝຣັ່ງ.

1. ຂະບວນການປະຕິວັດໃນທ້າຍສະຕະວັດທີ 18 ຢູ່ປະເທດຝຣັ່ງ ແມ່ນການປະຕິວັດປະຊາທິປະໄຕນາຍທຶນ. ການປະຕິວັດອັງກິດແມ່ນການປະຕິວັດນາຍທຶນຄັ້ງຍິ່ງໃຫຍ່ທີ່ສາມາດໂຄ່ນລົ້ມອຳນາດຜະເດັດການຂອງພວກສັກດີນາ. ການປະຕິວັດນາຍທຶນຝຣັ່ງໄດ້ກ້າວເຂົ້າສູ່ລະບອບການເມືອງຂອງສັງຄົມໃໝ່ ຢູ່ທະວີບເອີຣົບ, ລະບົບການຈັດຕັ້ງໃໝ່ ແລະ ອິດສະຫຼະພາບປະຊາທິປະໄຕ. ການປະຕິວັດໄດ້ລົບລ້າງກຳມະສິດທີ່ດິນຂອງລະບອບສັກດີນາ, ປົດປ່ອຍຊາວນາ, ສາມາດລົບລ້າງພື້ນຖານຂອງແນວຄິດສັກດີນາທີ່ມີມາແຕ່ເຫິງນານ, ເປັນການເປີດໂອກາດໃຫ້ພື້ນຖານເສດຖະກິດທຶນນິຍົມມີການຂະຫຍາຍຕົວຢ່າງແຂງແຮງ. ຍ້ອນແນວນັ້ນຈິ່ງເຮັດໃຫ້ລະບອບທຶນນິຍົມເກີດຂຶ້ນທົ່ວທຸດທົ່ນແຫ່ງ. ມັນໄດ້ກາຍເປັນຂະບວນການປະຕິວັດທີ່ສົ່ງຜົນສະທ້ອນອັນໃຫຍ່ຫຼວງໃນຂົງເຂດເອີຣົບ ແລະ ມີຄວາມໝາຍອັນໃຫຍ່ຫຼວງເປັນການໄຂສັງກາດໃໝ່ຂອງສັງຄົມມະນຸດ.
2. ໃນການປະຕິວັດນັ້ນ ຍ້ອນຖືເອົາບົດບາດທາງດ້ານເສດຖະກິດ ແລະ ສັງຄົມ ໄດ້ກຳນົດວ່າພວກນາຍທຶນແມ່ນເປັນຜູ້ນຳພາຂະບວນການປົດປ່ອຍ ແຕ່ຄວາມຈິງແລ້ວຍ້ອນຄວາມອົງອາດກ້າຫານ, ບໍ່ຍອມຈຳນົນຂອງກອງກຳລັງປະຊາຊົນຊາວຜູ້ອອກແຮງງານຈິ່ງເຮັດໃຫ້ການປະຕິວັດໄດ້ຮັບໄຊຊະນະ. ກອງກຳລັງມະຫາຊົນ, ປະຊາຊົນຜູ້ອອກແຮງງານແມ່ນກອງກຳລັງຕົ້ນຕໍໃນການປະກອບສ່ວນສ້າງເຫດການປະຫວັດສາດໃນວັນທີ 14 ກໍລະກົດ 1789, ວັນທີ 5-6 ຕຸລາ 1789 , ວັນທີ 10 ສິງຫາ 1792, ວັນທີ 31 ພຶດສະພາ ແລະ ວັນທີ 2 ມິຖຸນາ 1793 ນັ້ນກໍ່ຄືການບຸກໂຈມຕີຢ່າງຮຸນແຮງ ເຮັດໃຫ້ການປະຕິວັດກ້າວຂຶ້ນສູ່ໄລຍະໃໝ່ທີ່ມີລັກສະນະປະຕິວັດສູງຂຶ້ນກວ່າເກົ່າ. ການປະຕິວັດດຳເນີນໄປເປັນ 3 ໄລຍະເປັນ 3 ບາດກ້າວແຫ່ງການຂະຫຍາຍຕົວຂອງການປະຕິວັດຈາກຕ່ຳຫາສູງ ຕາມທິດທາງກ້າວຂຶ້ນໄປສູ່ລະດັບສູງເລື້ອຍໆ ລະບອບຜະເດັດການ ຊັກໂກແບັງ ແມ່ນຈຸດສູງສຸດຂອງການປະຕິວັດ. ເປັນຫຍັງຈິ່ງເວົ້າແບບນັ້ນກໍ່ຍ້ອນວ່າພວກ ຊັກໂກແບັງ ໃນເວລານັ້ນແນມເຫັນ ແລະ ຮູ້ໄດ້ເຖິງໄພອັນຕະລາຍຂອງກອງກຳລັງມະຫາຊົນ. ການເຂົ້າຮ່ວມຂະບວນການປະຕິວັດຂອງກຳລັງມວນຊົນໄດ້ກາຍເປັນພື້ນຖານແລະ ເງື່ອນໄຂໃນການຄົງຕົວຂອງລະບອບຜະເດັດການຂອງພວກພັນທະມິດ.
3. ການປະຕິວັດນານທຶນຝຣັ່ງໃນທ້າຍສະຕະວັດທີ 18 ແມ່ນມີພະລາກິດອັນໃຫຍ່ຫຼວງ ແຕ່ຍັງມີຂໍ້ຈຳກັດຫຼາຍຢ່າງ. ການປະຕິວັດນາຍທຶນຝຣັ່ງແມ່ນບໍ່ໄດ້ແນໃສ່ທຳລາຍລະບອບກົດຂີ່ຂູດຣີດ ແຕ່ຊ້ຳພັດສືບຕໍ່ຮັກສາລະບອບທີ່ຍຶດຄອງກຳມະສິດສ່ວນຕົວໄວ້ອີກ, ບໍ່ສາມາດປົດປ່ອຍປະຊາຊົນຜູ້ອອກແຮງງານ

ອອກຈາກແອກປົກຄອງຂອງຊົນຊັ້ນຂູດຮີດໄດ້. ເຖິງຢ່າງໃດກໍ່ຕາມນັ້ນກໍ່ແມ່ນເຫດການທາງປະຫວັດສາດທີ່ມີຄວາມໝາຍອັນໃຫຍ່ຫຼວງຕໍ່ກັບການຂະຫຍາຍຕົວຂອງປະເທດຝຣັ່ງກໍ່ຄືການຂະຫຍາຍຕົວຂອງສັງຄົມໂລກ.

## IV.ລະບົບການປົກຄອງຂອງຊົນຊັ້ນນາຍທຶນຕ້ານກັບຂະບວນການປະຕິວັດໃນປີ 1794-1815.

ການເຮັດລັດຖະປະຫານໃນວັນທີ 9 ກໍລະກົດ 1794 ໄດ້ເຮັດໃຫ້ອໍານາດຂອງພວກນາຍທຶນປະຕິວັດຊັກໂກແບັງ ຕົກມາຢູ່ໃນກໍາມືຂອງພວກນາຍທຶນທີ່ຕໍ່ຕ້ານການປະຕິວັດ ເຊິ່ງເປັນຊົນຊັ້ນທີ່ກໍາລັງຮັ່ງມີ ຈາກການສວຍໂອກາດໃນເວລາທີ່ມີການປະຕິວັດ ແລະ ມີເສິກສົງຄາມທໍາທຸລະກິດຄ້າຂາຍດ້ວຍວິທີຄ້າຂາຍແບບໂກງລາຄາໂກງຕາຊັ່ງດ້ວຍການຄາດຄະເນເອົາເວລາຊັ່ງຕາຊັ່ງຊື້ຂາຍສິນຄ້າ, ທໍາການປຶດດິນນາຮົ້ວສວນ, ບີແບ່ງເອົາສະບຽງອາຫານທີ່ສົ່ງໃຊ້ເຂົ້າໃນເວລາດໍາເນີນສົງຄາມ. ພວກເຂົາດໍາເນີນການປະຖິ້ມ ແລະ ລົບລ້າງໝາກຜົນຂອງການປະຕິວັດເຊັ່ນ: ລົບລ້າງກົດໝາຍວ່າດ້ວຍລາຄາສິນຄ້າ (ກົດໝາຍນີ້ຈະຫ້າມບໍ່ໃຫ້ກໍານົດລາຄາສິນຄ້າສູງເກີນໄປ), ລົບລ້າງກົດໝາຍ ວັງໂຕ, ກໍາຈັດຝ່າຍປະຕິວັດ, ປິດລ້ອມ ແລະ ປິດປະຕູສະມາຄົມຂອງຝ່າຍປະຕິວັດບໍ່ໃຫ້ມີການເຄື່ອນໄຫວ. ລັດຖະທໍາມະນູນໃນປີ 1795 ໄດ້ຈັດກັດສິດເສລີພາບປະຊາທິປະໄຕ ແລະ ກັບຄືນສູ່ລະບອບການເລືອກຕັ້ງໂດຍມີເງື່ອນໄຂທາງດ້ານການມີຊັບສົມບັດ (ໝາຍຄວາມວ່າຜູ້ຮັ່ງມີຈິ່ງມີສິດໃນການເລືອກຕັ້ງ). ສ້າງຕັ້ງຄະນະກໍາມະການການປົກຄອງ ເພື່ອລວບລວມອໍານາດໃຫ້ຕົກຢູ່ໃນກໍາມືຂອງ 5 ຄົນ ຜູ້ທີ່ມີອໍານາດສູງສຸດໃນການປົກຄອງ ແມ່ນ ບາຣາ ທີ່ເປັນນາຍພົນ, ນັກການເມືອງ ທີ່ບໍ່ມີຄວາມຍຸດຕິທໍາ ແລະ ງ່າຍຕໍ່ການຊື້ຈ້າງຈອບອອຍ ເຊິ່ງເຄີຍໃຊ້ຊັບສົມບັດໃນການໃຫ້ສິນບົນເພື່ອສໍ້ລາດບັງຫຼວງ.

ພາຍໃຕ້ລະບອບການປົກຄອງນີ້ຊີວິດການເປັນຢູ່ຂອງປະຊາຊົນທຸກຍາກລໍາບາກ, ສອງເຫດການລຸກຮື້ຂຶ້ນຕໍ່ສູ້ຂອງຊົນຊັ້ນກໍາມະກອນຢູ່ຝຣັ່ງໃນວັນທີ 1 ເມສາ ແລະ ວັນທີ 20 ພຶດສະພາ ປີ ‘1794 ພາຍໃຕ້ຄໍາຂວັນທີ່ວ່າເພື່ອເຂົ້າຈີ່ ແລະ ລັດຖະທໍາມະນູນປີ 1793 ໄດ້ຖືກປາບປາມລົງ. ໃນປີ 1796 ຂະບວນການເຄື່ອນໄຫວປະຕິວັດຂອງພວກຮັກຄວາມສະເໝີພາບໄດ້ເກີດຂຶ້ນຢູ່ທີ່ ປາຣີ ນໍາພາໂດຍ ເອັຟ ອີ ບາເບີບ (1760-1797) ເພິ່ນກໍາເນີດໃນຄອບຄົວສາມັນຊົນທົ່ວໄປທີ່ດໍາລົງຊີວິດໃນເມືອງ ແລະ ເຄີຍເຂົ້າຮ່ວມເຮັດ

ການປະຕິວັດໃນປີ 1789 ແນວຄິດຂອງທ່ານແມ່ນຍຶດໝັ້ນຫຼັກການສະເໝີພາບ, ລົບລ້າງລະບອບຢຶດຖື ກຳມະສິດສ່ວນຕົວ ທຸກຄົນມີສິດໃນການເຂົ້າຮ່ວມເປັນສະມາຊິກຂອງສະມາຄົມ ແຕ່ລະຄົນມີພັນທະດຽວ ກັນຄືການເຮັດວຽກຮ່ວມກັນ ແລະ ມີສິດໃນການຊົມໃຊ້ສິດຜົນປະໂຫຍດເທົ່າໆກັນ ທ່ານດຳເນີນການ ປະຕິວັດເພື່ອຜົນປະໂຫຍດຂອງຜູ້ອອກແຮງງານຢ່າງແທ້ຈິງ ນັ້ນແມ່ນການກ້າວເຂົ້າສູ່ແນວຄິດລັດທິຄອມມູ ນິດແບບໄຝ່ຝັນ ແຕ່ມັນກໍ່ມີຂໍ້ບົກຜ່ອງຫຼາຍຢ່າງມາສູ່ສັງຄົມເຊັ່ນ: ການແບ່ງປັນຜົນຜະລິດບໍ່ສາມາດເຮັດ ໃຫ້ການຜະລິດມີການຂະຫຍາຍຕົວ ເພາະວ່າໃນຕົວຈິ່ງແລ້ວການແບ່ງປັນຜົນຜະລິດນັ້ນເກີດຂຶ້ນກັບກຸ່ມຄົນ ໃດໜຶ່ງທີ່ມີອຳນາດເທົ່ານັ້ນ ເຊິ່ງຜົນຜະລິດນັ້ນບໍ່ມາຮອດກຳມືຂອງປະຊາຊົນຢ່າງແທ້ຈິງ ນັ້ນໝາຍຄວາມວ່າ ລັດຖະທຳມະນູນຄຸ້ມຄອງສະເພາະກຸ່ມຄົນໃດໜຶ່ງທີ່ມີອຳນາດ ແຕ່ບໍ່ສາມາດຮັບໃຊ້ສິດຜົນປະໂຫຍດຂອງ ປະຊາຊົນໄດ້ ແລະ ຍັງບໍ່ທັນເຫັນບົດບາດຂອງຊົນຊັ້ນກຳມະຊີບໃນການຕໍ່ສູ້ຕ້ານກັບລັດທິທຶນນິຍົມ. ແຜນການຕໍ່ສູ້ແບບຮຸນແຮງໃນປີ 1796 ປະສົບຄວາມຫຼົ້ມເຫຼວ ບາເບີບ ຖືກຈັບ ແລະ ຖືກປະຫານຊີວິດ ຂະບວນການລຸກຮື້ຂຶ້ນຕໍ່ສູ້ກໍ່ສະຫຼາຍຕົວລົງ. ເຖິງຢ່າງໃດກໍ່ຕາມແນວຄິດຂອງ ບາເບີບ ໄດ້ສິ່ງຜົນສະທ້ອນອັນ ໃຫຍ່ຫຼວງຕໍ່ກັບປະຫວັດສາດຝຣັ່ງໃນໄລຍະຕໍ່ມາ.

**2.ລະບອບຜະເດັດການ (1799-1804) ແລະ ຈັກກະພັດທີ 1 (1804-1815)**

ໃນຂະນະທີ່ພວກນາຍທຶນກຳລັງຕື່ນຕົກໃຈຕໍ່ກັບຂະບວນການລຸກຂຶ້ນຕໍ່ສູ້ຂອງມວນຊົນທີ່ກຳລັງ ລະເບີດຂຶ້ນນັ້ນ ພ້ອມດຽວກັນນັ້ນກໍ່ມີຄວາມກັງວົນຕໍ່ກັບອຳນາດຂອງພວກສັກດີນາ ບວກບົງ ທີ່ກຳລັງຟື້ນ ຕົວຂຶ້ນມາ, ພວກນາຍທຶນຕ້ອງການອຳນາດທີ່ມີຄວາມເຂັ້ມແຂງ ຕາມລະບອບຜະເດັດການຂອງໂຄຣມແວນ ຢູ່ອັງກິດ. ນາຍທະຫານຜູ້ໜຸ່ມນ້ອຍຊື່ວ່າ ນາໂປລີອົງ ໂບນາປັກ (1769-1621) ມີຊື່ສຽງທາງດ້ານການ ທະຫານ, ເປັນບຸກຄົນທີ່ຊົນຊັ້ນນາຍທຶນໃຫ້ຄວາມສົນໃຈ. ການເຮັດລັດຖະປະຫານໃນວັນທີ 18 ຂອງເດືອນ ແຫ່ງເມກໝອກ (ກົງກັບວັນທີ 9 ພະຈິກ 1799)ໄດ້ທັບມ້າງລະບອບຜະເດັດການ ແລະ ສ້າງຕັ້ງລະບອບການ ປົກຄອງໃໝ່ (1799-1804) ຕໍ່ມາໄດ້ກາຍເປັນ ລະບອບຈັກກະພັດທີ1 (1804-1815) ມີໂບນາປັກເປັນຜູ້ ກຳອຳນາດ ແລະ ໄດ້ສະຖາປະນາຕົນເປັນ ຈັກກະພັດນາໂປລີອົງ1 . ຖ້າການເຮັດລັດຖະປະຫານ ແຕັກມີໂນ ເຮັດໃຫ້ກ້າວເຂົ້າສູ່ຍຸກນາຍທຶນຕ້ານກັບການປະຕິວັດຢູ່ຝຣັ່ງ ແລະ ການເຮັດລັດຖະປະຫານໃນວັນທີ 18 ຂອງ ເດືອນແຫ່ງເມກໝອກຍັງໄດ້ຊຸກຍູ້ໃຫ້ຝຣັ່ງກ້າວເຂົ້າສູ່ການປົກຄອງແບບລະບອບຜະເດັດການທາງການ ທະຫານ

ເພື່ອສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນ, ລັດຖະບານ ນາໂປລີອົງ1 ໄດ້ສືບຕໍ່ເຮັດສົງຄາມຍາດອະທິປະໄຕ(ຍາດດິນແດນ) ຢູ່ທະວີບເອີຣົບ. ນັບແຕ່ນັ້ນມາສົງຄາມທີ່ຝຣັ່ງກໍ່ຂຶ້ນໄດ້ປ່ຽນແປງສະຖານະການຄືຈາກການຕໍ່ສູ້ເພື່ອປ້ອງກັນຕົວມາເປັນການຕໍ່ສູ້ເພື່ອຮຸກຮານ ແລະ ຂະຫຍາຍອະນາເຂດຮຸກຮານຈາກຊາດອື່ນ.

ຍ້ອນມີກຳລັງທະຫານທີ່ເຂັ້ມແຂງ ນາໂອລີອົງ 1 ສາມາດທັບມ້າງ 5 ພັນທະມິດທີ່ຕໍ່ຕ້ານກັບຝຣັ່ງທີ່ອັງກິດ ແລະ ໂອຕຣິດສ້າງຕັ້ງຂຶ້ນມາ ໂດຍຜ່ານຫຼາຍສະໜາມຮົບ ແຕ່ ນາໂປລີອົງ ກໍ່ສາມາດຍາດໄຊຊະນະຢ່າງໃຫຍ່ຫຼວງມາໄດ້. ຮອດ ປີ 1812 ຈັກກະພັດ ນາໂປລີອົງ ສາມາດຍຶດຄອງດິນແດນທີ່ມີພົນລະເມືອງອາໄສຢູ່ເຖິງ 75 ລ້ານຄົນຖືວ່າເປັນຈຳນວນຄົນເກືອບເຄິ່ງໜຶ່ງຂອງພົນລະເມືອງໃນຫົວເມືອງຂຶ້ນຢູ່ເອີຣົບ ແລະ ເກືອບ 3 ເທົ່າຂອງພົນລະເມືອງຂອງປະເທດຝຣັ່ງ. ຂອບເຂດຊາຍແດນຂອງຝຣັ່ງກໍ່ຂະຫຍາຍອອກຢ່າງກວ້າງຂວາງກວມຮອດປະເທດແບນຊິກ, ໂຮນລັງ ລຽບຕາມຝັ່ງແມ່ນ້ຳ ແຣັງ, ທັງໝົດຂອງແມ່ນ້ຳຢູ່ທາງພາກເໜືອ, ຊາວາ , ນີເຊີ ແລະ ດິນແດນສ່ວນໃຫຍ່ທີ່ຢູ່ທາງພາກເໜືອ ແລະ ພາກກາງຂອງ ອີຕາລີ ບັນດາເຂດແຂວງຢູ່ພາກອີລີຣີ ລ້ວນແຕ່ຂຶ້ນກັບຈັກກະພັດຝຣັ່ງທັງສິ້ນ. ຊາຍແດນອ້ອມຂ້າງຢູ່ທາງທິດຕາເວັນອອກ ແລະ ທິດໃຕ້ ລ້ວນແຕ່ແມ່ນປະເທດທີ່ເປັນພັນທະມິດ, ບ້ານໃກ້ເຮືອນຄຽງຮັກແພງກັນຄືກັບອ້າຍນ້ອງຮ່ວມສາຍເລືອດກັບ ໂບນາປັກ. ລ້ວນແຕ່ແມ່ນຄົນຮັກແພງ ຫຼື ຄົນໃກ້ຊິດຂອງ ນາໂປລີອົງ ຂຶ້ນກຳອຳນາດ.

ເຖິງວ່າຝຣັ່ງຈະມີອຳນາດທາງການທະຫານຢູ່ໃນເອີຣົບຕາເວັນຕົກກໍ່ຕາມແຕ່ເຂົາບໍ່ສາມາດເອົາຊະນະສັດຕູທີ່ສຳຄັນນັ້ນກໍ່ຄືອັງກິດ. ນະໂຍບາຍຂວ້ຳບາດ (ປິດລ້ອມ) ທາງດ້ານເສດຖະກິດອັງກິດຂອງນາໂປລີອົງໃນປີ 1806-1809 ລ້ວນແຕ່ປະສົບຄວາມຫຼົ້ມເຫຼວ ຍ້ອນວ່າ ພື້ນຖານການຄ້າ ການອຸດສະຫະກຳຂອງຝຣັ່ງຍັງຫຼ້າຫຼັງຖ້າທຽບໃສ່ອັງກິດ.

ສົງຄາມທີ່ເກີດຂຶ້ນຢູ່ຣັດເຊຍໃນປີ 1812 ໄດ້ສົ່ງຜົນສະທ້ອນອັນໃຫຍ່ຫຼວງ ແລະ ເປັນການທຳລາຍແຜນການຍຶດຄອງໂລກຂອງຝຣັ່ງ ພາຍໃຕ້ການນຳພາຂອງນາຍພົນຜູ້ມີຄວາມສະຫຼາດສ່ອງໃສຂອງຣັດເຊຍຊື່ວ່າ ກູຕູຄົບ ບັນດາກອງກຳລັງທະຫານ ແລະ ກຳລັງມວນຊົນ ລັດເຊຍ ໄດ້ຮ່ວມແຮງໃຈກັນຕີຕ້ານກຳລັງຂອງນາໂປລີອົງ ໃນສະໜາມຮົບທີ່ມີຊື່ສຽງ ໂບໂລດີໂນ ໃນວັນທີ 7 ສິງຫາ 1812 . ຕໍ່ມາກຳລັງຂອງນາໂປລີອົງໄດ້ບຸກຕີເຂົ້າ ແມັດເຊີວາ ກຳລັງທະຫານ ຣັດເຊຍໄດ້ຕີຕ້ານຄືນກຳລັງຂອງຝ່າຍຝຣັ່ງ ອອກຈາກດິນແດນ ບອກ

ກັບຂະບວນລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນຢູ່ທະວີບເອີຣົບ ໄດ້ຂັບໄລ່ນາໂປລີອົງໃຫ້ກັບຄືນປະເທດຝຣັ່ງ. ຄວາມຫຼົ້ມເຫຼວທາງດ້ານການທະຫານ ບວກກັບວິກິດການພາຍໃນປະເທດ ຍ້ອນກຳລັງມະຫາຊົນບໍ່ພໍໃຈຕໍ່ກັບຊົນຊັ້ນນາຍທຶນ, ຮູ້ສຶກເບື່ອໜ່າຍຕໍ່ການເຮັດສົງຄາມ ເຮັດໃຫ້ອຳນາດຂອງຈັກກະພັດ ນາໂປລີອົງພັງທະລາຍລົງ. ຕົ້ນປີ 1814 ນາໂປລີອົງ ຖືກຂັບໄລ່ອອກຈາກເກາະ ແອນເບີ (ທະເລເມດີແຕລະເນ) ລາດຊະວົງບວກບົງ ພ້ອມກັບຂຸນນາງທີ່ເຄີຍອົບພະຍົບໜີໄດ້ກັບຄືນມາປະເທດຝຣັ່ງເຊິ່ງມີນ້ອງຊາຍຂອງພະເຈົ້າຫຼຸຍ 16 ຂຶ້ນກຳອຳນາດ ແລະ ມີນາມວ່າພະເຈົ້າ ຫຼຸຍ ທີ 18 ໄດ້ຟື້ນຟູລະບອບລາຊາທິປະໄຕ ແລະ ທວງຄືນບັນດາຕອນດິນທີ່ພວກຊັກໂກແບັງໄດ້ຂາຍໃຫ້ຊາວນາໃນເມື່ອກ່ອນ ສິ່ງດັ່ງກ່າວນັ້ນເຮັດໃຫ້ປະຊາຊົນທຸກຊັ້ນຄົນເກີດຄວາມບໍ່ພໍໃຈຢ່າງໜັກ ໂດຍສວຍໂອກາດດັ່ງກ່າວນັ້ນ ນາໂປລີອົງ ທີ່ລີ້ໄພຢູ່ເກາະ ແອນເບີ ໄດ້ນຳກຳລັງກັບຄືນມາບຸກໂຈມຕີຝຣັ່ງ, ໂດຍໄດ້ຮັບການສະໜັບສະໜູນຈາກກຳລັງມວນຊົນສາມາດບຸກຕີເຂົ້າຮອດປາຣີ ເຊິ່ງເປັນອີກຄັ້ງໜຶ່ງທີ່ລາດຊະວົງ ບວກບົງ ກຳລັງຟື້ນຟູອຳນາດໄດ້ພຽງແຕ່ 100 ວັນກໍ່ຈຳເປັນຕ້ອງໂຕນໜີອອກນອກປະເທດອີກ. ບັນດາກຳລັງພັນທະມິດຂອງລະບອບສັກດີນາ ຮ່ວມຕົວກັນຕໍ່ສູ້ຕ້ານ ນາໂອລີອົງ ໃຫ້ປາໄຊລົງໃນບັ້ນຮົບສຸດທ້າຍທີ່ ແອແຕັກໂລ ໃນເດືອນມິຖຸນາ 1815 ເຮັດໃຫ້ນາໂປລີອົງ ຖອນກຳລັງໄປອາໄສຢູ່ເກາະແຊັງເຮແລັນ (ທະເລເມດີແຕລະເນ) ແລະ ກະສັດ ຫຼຸຍທີ 18 ກໍ່ກັບຄືນມາ ນະຄອນປາຣີອີກຄັ້ງ. ເປັນອັນວ່າ 25 ປີຕໍ່ມາ ອຳນາດສັກດີນາຝຣັ່ງໄດ້ຮັບການຟື້ນຟູ ເປັນກາດເປີດສັງກາດໃໝ່ກ້າວເຂົ້າສູ່ ຍຸກກາງ (1815-1830). ແຕ່ນັ້ນກໍ່ເປັນພຽງການປ່ຽນແປງໂຄງສ້າງລະບົບການເມືອງຂອງປະເທດຝຣັ່ງເທົ່ານັ້ນ. ແຕ່ວ່າພື້ນຖານທາງດ້ານເສດຖະກິດລັດທິທຶນນິຍົມ ນັບທັງລະບອບທີ່ຍຶດຖືດິນນາ ໄດ້ຮັບການຈັດຕັ້ງປະຕິບັດ ໃນສະໄໝຊັກໂກແບັງ ແມ່ນຍັງຖືກຮັກສາໄວ້ ເຊິ່ງບໍ່ມີກຳລັງໃດ ຫຼື ກຸ່ມຄົນໃດສາມາດລົບລ້າງລົງໄດ້. ດ້ານການເມືອງລາດຊະວົງ ບວກບົງ ລ້ວນແຕ່ຍອມຮັບຂໍ້ຈຳກັດຕ່າງໆຂອງລັດຖະທຳມະນູນ. ສົງຄາມລະຫວ່າງພວກສັກດີນາ, ກຳລັງມະຫາຊົນ ແລະ ຊົນຊັ້ນນາຍທຶນຄ່ອຍໆກ້າວເຂົ້າສູ່ການປະຕິວັດໃນເດືອນ ກໍລະກົດ ປີ 1830 ສາມາດລົບລ້າງອຳນາດການປົກຄອງຂອງລາດຊະວົງບວກບົງ.

# ບົດທີ 5

# ການປະຕິວັດນາຍທຶນ ແລະ ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງກຳມະກອນຢູ່ເອີຣົບ ແຕ່ປີ ຄ.ສ 1815-1848

## I ກອງປະຊຸມທາງການທູດໃນປີ 1815 ແລະ ການສ້າງຕັ້ງກຸ່ມພັນທະມິດໃນປີ 1848

ກ່ອນທີ່ຈະບຸກໂຈມຕີເຂົ້ານະຄອນຫຼວງປາຣີ, ບັນດາປະເທດຕົ້ນຕໍທີ່ເຂົ້າຮ່ວມໃນການເຮັດສົງຄາມຕ້ານກັບນາໂປລີອົງ ໄດ້ເປີດກອງປະຊຸມທາງດ້ານການທູດຢູ່ທີ່ ກຸງວຽນ (ປະເທດໂອຕຣິດ)ຂຶ້ນໃນເດືອນກັນຍາ ປີ 1814 ມີຜູ້ແທນເຂົ້າຮ່ວມ 216 ຄົນ ສ່ວນໃຫຍ່ແມ່ນມາຈາກບັນດາປະເທດເອີຣົບ ແຕ່ສິດໃນການຕັດສິນຊີ້ຂາດແມ່ນຂຶ້ນກັບ ໂຊຫວຽດ, ອັງກິດ ແລະ ໂອຕຣິດ. ກອງປະຊຸມມີຈຸດປະສົງ 3 ປະການດັ່ງລຸ່ມນີ້:

1) ສະກັດກັ້ນຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນບັນດາເຜົ່າຢູ່ບັນດາປະເທດເອີຣົບ ແລະ ຟື້ນຟູຄືນລະບອບສັກດີນາຢູ່ບັນດາປະເທດທີ່ກຳລັງຖືກນາໂປລີອົງຢຶດຄອງ ໂດຍການຟື້ນຟູອຳນາດຂອງບັນດາລາດຊະວົງເກົ່າໃຫ້ມາມີອຳນາດຄືນອີກຄັ້ງ.
2) ຍາດເອົາໄຊຊະນະມາໃຫ້ໄດ້ເພື່ອສະກັດກັ້ນການຟື້ນຕົວໃໝ່ຂອງຝຣັ່ງດ້ວຍການນຳເອົາບັນດາປະເທດທີ່ມີຊາຍແດນໃກ້ກັບຝຣັ່ງເປັນກຳແພງເປັນເກາະປ້ອງກັນຕົວ.
3) ແບ່ງປັນດິນແດນຢູ່ເອີຣົບ ແລະ ບັນດາປະເທດຫົວເມືອງຂຶ້ນແນໃສ່ເພື່ອຕອບສະໜອງຄວາມຕ້ອງການຂອງບັນດາປະເທດມະຫາອຳນາດໂດຍບໍ່ຄຳນຶງເຖິງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.

ກອງປະຊຸມແກ່ຍາວເວລາເກືອບເປັນເດືອນຍ້ອນຂໍ້ຂັດແຍ່ງທາງດ້ານສິດຜົນປະໂຫຍດຂອງບັນດາປະເທດຊະນະສົງຄາມ ໂດນສວຍໂອກາດດັ່ງກ່າວນັ້ນ ນາໂປລີອົງໃນໄດ້ເຕົ້າໂຮມກຳລັງທະຫານຢູ່ເກາະ ແອນເບີ ກັບຄືນມາປະເທດຝຣັ່ງ ເຮັດໃຫ້ບັນດາປະເທດທີ່ເຂົ້າຮ່ວມກອງປະຊຸມຮີບຮ້ອນເຕົ້າໂຮມກຳລັງເພື່ອຕ້ານກັບນາໂປລີອົງ ບັ້ນຮົບ ອວາແຕັກໂລ (13 ມິຖຸນາ 1815) ເປັນບັ້ນຮົບສຸດທ້າຍໃນການເຮັດສົງຄາມຮຸກຮານຂອງນາໂປລີອົງຜູ້ຜະເດັດການໄດ້ສິ້ນສຸດລົງ.

ວັນທີ 9 ມິຖຸນາ 1815 ສົນທິສັນຍາ ໄດ້ຮັບການລົງນາມເຊິ່ງມີເນື້ອໃນລຸ່ມນີ້:

1) ຝຣັ່ງຕ້ອງຍອມມອບດິນແດນຄືນໃຫ້ປະເທດຕ່າງໆຕາມຊາຍແດນທີ່ເຄີຍຢຶດເອົາມາໃນເມື່ອກ່ອນພ້ອມທັງໃຊ້ໜີ້ສົງຄາມ ແລະ ຊົດເຊີຍຄ່າເສຍໃຫ້ໃຫ້ແກ່ກອງກຳລັງພັນທະມິດພາຍໃນເວລາ 3 ປີ.
2) ສ້າງກຳແພງປ້ອງກັນເພື່ອຕ້ານກັບຈັກກະພັດຝຣັ່ງຢູ່ເອີຣົບ, ລວບລວມເອົາດິນແດນບໍລິເວນແມ່ນ້ຳແຮັງ ແລະ ແວັດຟາແຮນໃຫ້ຂຶ້ນກັບເປຍລະມັນ, ລວບລວມເອົາແບນຊິກ ແລະ ເນເທີແລັນ (ໂຮນລັງ)ງ ຂຶ້ນກັບລາຊະອານາຈັກໂຮນລັງ ນັບທັງປະເທດລຸກຊຳບວກກໍ່ຍັງຢູ່ພາບໃຕ້ອຳນາດຂອງກະສັດ

ໂຣນລັງ ຟື້ນຟູອຳນາດເປັນກາງຂອງປະເທດສະວິດເຊີແລັນ ແລະ ຟື້ນຟູລາດຊະອານາຈັກຊາກເດັນ ຣາ. ບັນດາປະເທດທີ່ກ່າວມາຂ້າງເທິງນັ້ນໄດ້ກາຍເປັນກຳແພງທະຫານໃນການຕໍ່ສູ້ຕ້ານກັບຈັກກະ ພັດຝຣັ່ງ.

3) ບັນດາປະເທດຊະນະສົງຄາມໄດ້ແບ່ງປັນດິນແດນເອີຣົບ ແລະ ບັນດາຫົວເມືອງຂຶ້ນຄືນໃໝ່, ພວກ ຊະນະສົງຄາມໄດ້ສ້າງແຜນທີ່ຂຶ້ນມາເພື່ອຕອບສະໜອງຄວາມຕ້ອງການຂອງບັນດາປະເທດມະຫາ ອຳນາດໃຫຍ່, ສ້າງອຳນາດຊຸມນາງສັກດິນາຕໍ່ຕ້ານການປະຕິວັດຂອງພວກສັກດິນາເກົ່າ. ຫຼາຍ ປະເທດຕົກຢູ່ໃນສະຖານະການຖືກແບ່ງແຍກຊົນຊາດຊົນເຜົ່າຊ້ຳຍັງຕ້ອງຍອມຢູ່ໃຕ້ແອກປົກຄອງ ຂອງອານາຈັກສັກດິນາ[14]

## II. ຂະບວນການປະຕິວັດນາຍທຶນ ແລະ ການຂະຫຍາຍຕົວຂອງລັດທິທຶນນິຍົມ

### 1. ຂະບວນການປະຕິວັດນາຍທຶນ

ພາຍຫຼັງສົງຄາມຕ້ານກັບນາໂປລີອົງສິ້ນສຸດລົງ ສະຖານະການທາງດ້ານການເມືອງຢູ່ເອີຣົບເວົ້າລວມ ແລ້ວກ້າວເຂົ້າສູ່ຍຸກແຫ່ງການຕໍ່ຕ້ານ. ກຳລັງສັກດິນາໄດ້ຟື້ນຟູ ແລະ ອອກແຮງໃນການຟື້ນຟູອຳນາດຕ່າງໆທີ່ ກຳລັງສັ່ນຄອນຍ້ອນຜົນກະທົບຂອງການປະຕິວັດນາຍທຶນ. ລາດຊະວົງ ບວກບົງ ຢູ່ຝຣັ່ງໄດ້ກັບມາມີອຳນາດ ອີກຄັ້ງ, ສ້າງຕັ້ງລະບອບຜະເດັດການສັກດິນາ (ກ້າວເຂົ້າສູ່ຍຸກກາງ) ແຕ່ກໍ່ບໍ່ສາມາດເຮັດໄດ້ຢ່າງສົມບູນ. ພື້ນຖານເສດຖະກິດຕາມລັດທິນິນນິຍົມ ແລະ ລະບອບການຢຶດຖືດິນນາທີ່ປະກາດໃຊ້ໃນຍຸກຊາກໂກແບັງ ຍັງຄົງຖືກຮັກສາໄວ້. ອຳນາດຂອງພະເຈົ້າຫຼຸຍ 18 (ຕໍ່ມາແມ່ນພະເຈົ້າຊາກເລີ 10) ແມ່ຖືກຈຳກັດ. ຢູ່ປະເທດ ອື່ນ, ພວກສັກດິນາລ້ວນແຕ່ຊອກວິທີລົບລ້າງທຸກຮູບການທີ່ມີລັກສະນະປະຕິຮູບທີ່ມີລັກສະນະທຶນນິຍົມ ແລະ ກໍ່ສ້າງອຳນາດການປົກຄອງແບບຜະເດັດການ. ເຖິງຢ່າງໃດກໍ່ຕາມມັນເປັນບາດກ້າວໜຶ່ງຂອງປະ ຫວັດ ສາດມວນມະນຸດ, ຂະບວນການປະຕິວັດຍາຍທຶນໄດ້ເກີດຂຶ້ນຢ່າງເນືອງນິດລຽນຕິດໃນຊຸມປີທີ 20,30 ແລະ 40 ຂອງສະຕະວັດທີ 19 ຢູ່ເອີຣົບ ແລະ ອາເມຣິກາລາຕິນ.

ນັບແຕ່ຕົ້ນສະຕະວັດທີ 19 ປະຊາຊົນ ແຊກບີ ບໍ່ເຄີຍຢຸດຕິການຕໍ່ສູ້ຕ້ານກັບແອກປົກຄອງຂອງຕວຽກ ກີ. ພາຍໃຕ້ການນຳພາຂອງ ກາຣາ ຈູກກາ (ຄ.ສ 1752-1817) ທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນນາຍທຶນ ແລະ

---

[14] ຕາມການຕົກລົງໃນສົນທິສັນຍາຣັດເຊຍແມ່ນໄດ້ດິນແດນສ່ວນໃຫຍ່ຂອງໂປແລນ, ຟິນແລນ ແລະ Betxarabi. ອັງກິດ ແມ່ນຢຶດຄອງເກາະ ມານຕາ, ບັນດາອະນານິຄົມຂອງໂຮນລັງ ແລະ ຝຣັ່ (ອາຟຣິກກາໃຕ້ ແລະ ເກາະ ໄຊລານ ແມ່ນຈຸດຍຸດທະ ສາດສຳຄັນ, ເປັນເສັ້ນທາງອອກສູ່ຕາເວັນອອກ) ສ່ວນໂອຕຣິດ ໄດ້ທຳການຟື້ນຟູຄືນອຳນາດການປົກຄອງແບບຜະເດັດການສັກດິ ນາຢູ່ຕາເວັນອອກສ່ຽງເໜືອຂອງອີຕາລີ. ປະເທດອີຕາລີຖືກຕັດແບ່ງອອກເປັນຫຼາຍອານຈັກນ້ອຍ ແຕ່ສ່ວນໃຫຍ່ຂຶ້ນກັບອຳນາດ ການປົກຄອງຂອງໂອຕຣິດ ສະເພາະນາໂປລີໄດ້ຟື້ນຟູຄືນອຳນາດສັກດິນາ ບວກບົງ ແລະ ໂຣມັນ ແມ່ນນອນຢູ່ພາຍໃຕ້ອຳນາດຂອງ ສັນທະປາປາ. ສະຫະພາບເຢຍລະມັນໄດ້ຮັບການສ້າງຕັ້ງຂຶ້ນປະກອບມີ 34 ລັດນ້ອຍ ແລະ 4 ນະຄອນເອກະລາດ (ຮຳບົວ, ເບີ ແມນ, ລີອູເບັກ ແລະ ຟຣັງຟົວ ບໍລິເວນແມ່ນ້ຳ ມາຍເນີ) ໃນນັ້ນບົດບາດໃນການຕັດສິນຊີຂາດແມ່ນຂຶ້ນກັບໂອຕຣິດ ແລະ ປຣັດ ເຊຍ. ນອກຈາກນັ້ນກອງປະຊຸມຍັງໃຫ້ນໍເວທີ່ເຄີຍເປັນຂອງເດັນໝາກໄປຂຶ້ນກັບປະເທດສະວີເດັນ

ພໍ່ຄ້າຊາວຂາຍສິນຄ້າການກະເສດ ເຊິ່ງມີຊື່ສຽງໃນໝູ່ມະຫາຊົນ. ແຊກບີ ໄດ້ກາຍເປັນປະເທດເອກະລາດ (ພາຍຫຼັງທີ່ຕົກຢູ່ໃຕ້ແອກປົກຄອງຂອງຕວກກີເກືອບ 400 ປີ). ເດືອນກັນຍາ 1805 ອົງການຈັດຕັ້ງທຳອິດທີ່ໄດ້ຮັບການສ້າງຕັ້ງຂຶ້ນແມ່ນ ສະພາລັດຖະບານ ແຊກບີ. ປີ ຄ.ສ 1813 ໂດຍສວຍໃຊ້ໂອກາດຄວາມຫຍຸ້ງຍາກທີ່ເກີດຈາກການເຮັດສົງຄາມຂອງ ນາໂປລີອົງ ນັ້ນຕວກກີໄດ້ກັບຄືນມາ ແຊກບີ ອີກຄັ້ງ ນັບແຕ່ນັ້ນມາປະຊາຊົນບັນດາເຜົ່າ ແຊກບີ ໄດ້ລຸກຂຶ້ນຕໍ່ສູ້ເພື່ອປົດປ່ອຍຕົນເອງມາຕະຫຼອດ ແລະ ບັງຄັບໃຫ້ຕວກກີຕ້ອງຍອມຮັບເອກະລາດຂອງ ແຊກບີ ໃນເດືອນສິງຫາ 1830. ນັບແຕ່ນັ້ນມາ ແຊກບີ ກໍ່ໄດ້ກາຍເປັນລັດເອກະລາດ ພາຍຫຼັງສົງຄາມຣັດເຊຍ-ຕວກກີ (ຄສ 1877-1878) ອິດສະຫຼະພາບຂອງ ແຊກບີ ຈິ່ງໄດ້ຮັບການຮັບຮອງຢ່າງເປັນທາງການ. ໃນບັນດາປະຊາຊົນຢູ່ໃນແຫຼມບານກັງ, ແຊກບີ ແມ່ນກຸ່ມຄົນທຳອິດ ທີ່ສາມາດປົດປ່ອຍຕົນເອງອອກຈາກອຳນາດການປົກຄອງຂອງຕວກກີ.

ໃນໄລຍະແຕ່ປີ 1820-1823 ຂະບວນການປະຕິວັດໄດ້ເກີດຂຶ້ນຢູ່ແອັດສະປາຍ (ສະເປນ) ໄດ້ຮຽກຮ້ອງໃຫ້ມີລັດຖະທຳມະນູນໃນປີ ຄ.ສ 1812 ເຊິ່ງເປັນລັດຖະທຳມະນູນທີ່ມີລັກສະນະທຶນນິຍົມເກີດຂຶ້ນໃນການປະຕິວັດຄັ້ງທຳອິດ (ຄ.ສ 1808-1814). ຊົນຊັ້ນນາຍທຶນຜູ້ກ້າວໜ້າ, ປະຊາຊົນ ແລະ ປັນຍາຊົນໃນຕົວເມືອງໄດ້ກາຍເປັນກ້ອນກຳລັງຕົ້ນຕໍຂອງການປະຕິວັດ. ມີບົດບາດສຳຄັນໃຫ້ແກ່ກຳລັງທະຫານ ພັນເອກ ຊາຟາແອນ ຣີເອໂກ ແມ່ນຜູ້ນຳທີ່ເກັ່ງກ້າຂອງຂອງຂະບວນການຕໍ່ສູ້. ຕໍ່ໜ້າສະພາບການປະຕິວັດກ້າວຂຶ້ນສູ່ລະດັບສູງ ເຈົ້າຊີວິດ ເຟີດີນັນ 7 ຈຳຕ້ອງຍອມຮັບຮູ້ລັດຖະທຳມະນູນ ໃນປີ 1812 ຍ້ອນແນວນັ້ນຈິ່ງເຮັດໃຫ້ການປະຕິວັດນາຍທຶນເກີດຂຶ້ນ. ແຕ່ຮອດເດືອນພະຈິກ 1823 ກຳລັງທະຫານຝຣັ່ງຖືກກຳລັງພັນທະມິດປາບປາມ, ຣີເອໂກ ຖືກຈັບໄປປະຫານຊີວິດ.

ການນຳຂອງຂະບວນການປະຕິວັດແມ່ນພວກຂຸນນາງຊັ້ນສູງ ພວກເຂົາບໍ່ຕ້ອງການປະຕິຮູບລະບອບປະຊາທິປະໄຕນາຍທຶນ ແລະ ບໍ່ກ້າທີ່ຈະເດີນຕາມເສັ້ນທາງການປະຕິວັດ, ບໍ່ຕ້ອງການພົວພັນກັບປະຊາຊົນ ແລະ ບໍ່ມີຄວາມສາມາດໃນການຊີ້ນຳ-ນຳພາ ມະຫາຊົນ ພ້ອມດຽວກັນນັ້ນກຳລັງຂອງພວກຕ້ານການປະຕິວັດໃນປະເທດ ແລະ ການແຊກແຊງຂອງຝຣັ່ງເຮັດໃຫ້ການປະຕິວັດຢຸດຕິລົງ.

ເຫດການທີ່ແອັດສະປາຍປຸກລະດົມໃຫ້ຂະບວນການປະຕິວັດຢູ່ອີຕາລີ, ຂະບວນການປະຕິວັດທຳອິດແມ່ນ ສະມາຄົມ ຊາກໂບນາຣີ ແມ່ນອົງການຈັດຕັ້ງໜຶ່ງທີ່ປະກອບດ້ວຍນາຍທຶນ, ຂຸນນາງອິດສະຫຼະ, ນັກຮຽນຮູ້ປັນຍາຊົນ ທີ່ວອີຕາລີ. ເດືອນກໍລະກົດ 1820 ກອງກຳລັງທະຫານຢູ່ ນາໂປລີ ລຸກຂຶ້ນຕໍ່ສູ້ເພື່ອຮຽກຮ້ອງໃຫ້ປະຕິບັດຕາມລັດຖະທຳມະນູນນາຍທຶນ. ຂະບວນການຕໍ່ສູ້ໄດ້ແຜ່ລາມຢ່າງໄວວາ ຮອດເດືອນມັງກອນ 1821 ຈຸດສະນວນຂອງການປະຕິວັດໄດ້ລະເບີດຂຶ້ນຢູ່ ປີເອໂມງ. ແຕ່ພວກພັນທະມິດໄດ້ສົ່ງກຳລັງໂອຕຣິດເຂົ້າມາແຊກແຊງ ແລະ ທັບມ້າງຂະບວນການປະຕິວັດ. ຍ້ອນຂາດການຕິດຕໍ່ພົວພັນກຳລັງມວນຊົນເຮັດໃຫ້ການປະຕິວັດອ່ອນແອ ແລະ ບໍ່ສາມາດຄົງຕົວຢູ່ໄດ້.

ປີ ຄ.ສ 1821 ຂະບວນການປະຕິວັດກ້າວຂຶ້ນສູ່ລະດັບສູງຢູ່ ເກຼັກ ແນໃສ່ເພື່ອຕ້ານກັບແອກປົກຄອງຂອງຕວກກີທີ່ປົກຄອງມາເປັນເວລາຫຼາຍກວ່າ 400 ປີ ແລະ ເປັນການເປີດເສັ້ນທາງໃຫ້ລັດທິທຶນນິຍົມ

ຂະຫຍາຍຕົວ. ປະຊາຊົນເກຼັກ ດຳເນີນການຕໍ່ສູ້ຢ່າງອົງອາດກ້າຫານ ເພື່ອເອກະລາດຂອງປິຕຸພູມອັນແສນຮັກ ໂດຍສວຍໂອກາດໃນຂະນະທີ່ຕວງກກີມີຂໍ້ຂັດແຍ່ງກັບບັນດາປະເທດເອີຣົບ, ເຮັດໃຫ້ເກຼັກກາຍເປັນປະເທດ ເອກະລາດ (ໃນປີ 1830).

ປີ ຄ.ສ 1825 ພວກຂຸນນາງ ແລະ ເຈົ້າໜ້າທີ່ຜູ້ທີ່ມີຄວາມກ້າວໜ້າ ຢູ່ຣັດເຊຍໄດ້ລວມຕົວກັນໃນພັກ ເດືອນທັນວາ (Decamber pảty) ດຳເນີນການປະຕິວັດຢູ່ ເປແຕກບົວ ແລະ ພາກໃຕ້ຂອງງປະເທດຣັດເຊຍ ແນໃສ່ເພື່ອໂຄ່ນລົ້ມອຳນາດການປົກຄອງ, ຮຽກຮ້ອງໃຫ້ມີການລົບລ້າງລະບອບທາດດິນນາ ແລະ ສ້າງຕັ້ງ ລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນ. ແຕ່ຍ້ອນບໍ່ມີການຈັດຕັ້ງທີ່ແຂງແກ່ນ ແລະ ຂາດການພົວພັນກັບ ກຳລັງມະຫາຊົນເຮັດໃຫ້ການປະຕິວັດເຄື່ອນໄຫວໃນຂົງເຂດແຄບບໍ່ກວ້າງຂວາງເປັນພຽງຄວາມຮຸນແຮງຂອງ ກຸ່ມທະຫານຂະໜາດນ້ອຍເທົ່ານັ້ນ ສະນັ້ນ, ຈຶ່ງຖືກລັດຖະບານປາບປາມຂະບວນການປະຕິວັດລົງ.

ປີ ຄ.ສ 1930 ຂະບວນການປະຕິວັດນາຍທຶນໄດ້ລະເບີດຂຶ້ນອີກຄັ້ງຢູ່ປະເທດຝຣັ່ງແນ່ໃສ່ເພື່ອໂຄ່ນລົ້ມ ອຳນາດການປົກຄອງຂອງລາດຊະວົງ ບວກບົງ ແທນທີ່ການປະຕິວັດໃນເດືອນກໍລະກົດທີ່ມີ ຫຼຸຍຟີລິບ ເປັນ ເຈົ້າຊີວິດ ເຊິ່ງເປັນຕົວແທນໃຫ້ແກ່ພວກນາຍທຶນທະນາຄານ (ນາຍທຶນໃຫຍ່)ເຊິ່ງແມ່ນເຊື້ອສາຍຂອງພວກ ຂຸນນາງ ອັອກເລອັງ . ແຕ່ນັ້ນຍັງບໍ່ທັນແມ່ນລັດຖະບານລວມຂອງຊົນຊັ້ນນາຍທຶນ ເພາະສິດຜົນປະໂຫຍດ ພຽງແຕ່ຮັບໃຊ້ກຸ່ມຄົນຈຳນວນໜ້ອຍເທົ່ານັ້ນ ນັ້ນຄືຜົນປະໂຫຍດຂອງພວກນາຍທຶນທະນາຄານເທົ່ານັ້ນ. ສະນັ້ນ, ຄວາມຂັດແຍ່ງລະຫວ່າງຊົນຊັ້ນນາຍທຶນເວົ້າລວມ, ເວົ້າສະເພາະແມ່ນພວກນາຍທຶນທີ່ກຳອຳນາດທີ່ ບໍ່ໄດ້ຮັບການຕອບສະໜອງຄວາມຕ້ອງການຈຶ່ງຄ່ອຍໆກາຍເປັນຂະບວນການປະຕິວັດໃໝ່ຂຶ້ນມາ.

ຂະບວນການປະຕິວັດໃນປີ 1930 ຢູ່ຝຣັ່ງກາຍເປັນກະບອກສຽງອັນໃຫຍ່ຫຼວງຢູ່ເອີຣົບ, ຂະບວນການ ປະຕິວັດເພື່ອຄວາມເປັນເອກະລາດ ແລະ ປະຊາທິປະໄຕ ໄດ້ລະເບີດຂຶ້ນຢ່າງຮຸນແຮງ ໂດຍສະເພາະແມ່ນ ຂະບວນການລຸກຂຶ້ນຕໍ່ສູ້ຂອງປະຊາຊົນບັນດາເຜົ່າ ໂປແລນ ເພື່ອຕ້ານກັບແອກປົກຄອງຂອງປະເທດຣັດເຊຍ ເຊິ່ງໄດ້ຮັບການສະໜັບສະໜູນສາກົນເປັນຈຳນວນຫຼວງຫຼາຍແຕ່ສຸດທ້າຍກໍ່ຍັງບໍ່ປະສົບຜົນສຳເລັດ.

ຄຽງຄູ່ກັນນັ້ນໃນປີ 1930 ຂະບວນການປະຕິວັດນາຍທຶນກໍ່ເກີດຂຶ້ນຢູ່ປະເທດ ແບນຊິກ. ອຳນາດການ ປົກຄອຂອງ ໂຮນລັງ ຢູ່ ແບນຊິກ ເປັນທັງການກົດຂີ່ຂູດຮີດປະຊາຊົນບັນດາເຜົ່າ ແລະ ເປັນທັງການກີດຂວາງ ການຂະຫຍາຍຕົວຂອງເສດຖະກິດແບບລັດທິທຶນນິຍົມຢູ່ ແບນຊິກ. ຂະບວນການລຸກຂຶ້ນຕໍ່ສູ້ຂອງປະຊາຊົນ ແບນຊິກໄດ້ຮັບໄຊຊະນະລຽນຕິດ, ບັງຄັບໃຫ້ລັດຖະບານໂຮນລັງຕ້ອງຮັບຮູ້ເອກະລາດຂອງ ແບນຊິກ. ປີຕໍ່ ມາ ບັນດາປະເທດມະຫາອຳນາດຢູ່ເອີຣົບກໍ່ຮັບຮູ້ຄວາມເປັນເອກະລາດຂອງ ແບນຊິກ ແລະ ຮັບປະກັນ ຄວາມເປັນກາງຂອງ ແບນຊິກ. ລັດຖະທຳມະນູນ ປີ 1931 ເປັນການສ້າງຕັ້ງລະບອບລາຊາທິປະໄຕນາຍທຶນ ທີ່ມີການລົງຄະແນນສຽງເລືອກຕັ້ງຢ່າງເຂັ້ມງວດ. ຍົກເວັ້ນກຳລັງມະຫາຊົນຊາວຜູ້ອອກແຮງງານ ເຊິ່ງແມ່ນຜູ້ ຕັດສິນໄຊຊະນະຂອງການປະຕິວັດ.

ໃນຊຸມປີທີ 18-20 ຂອງຕົ້ນສະຕະວັດທີ 19 ຂະບວນການລຸກຂຶ້ນຕໍ່ສູ້ເພື່ອຄວາມເປັນເອກະລາດໄດ້ເກີດຂຶ້ນຢູ່ທະວີບອາເມຣິກາລາຕິນປະຊາຊົນບັນດາເຜົ່າຢູ່ອາເມຣິກາລາຕິນໄດ້ລຸກຂຶ້ນຕໍ່ສູ້ລຽນຕິດເພື່ອຕ້ານກັບແອກປົກຄອງຂອງ ແອດສະປາຍ, ປອກຕຸຍການ ແລະ ອັງກິດ ຄ່ອຍໆໄດ້ຮັບເອກະລາດເຊັ່ນ: ປະເທດອາເຈນຈີນາ, ແມັກຊີໂກ, ບຣາຊິນ, ໂຄລຳເບຍ, ຊີເລ. ບັນດາປະເທດເອີຣົບ ແລະ ພັນທະມິດ ຄ່ອຍໆນຳກຳລັງເຂົ້າມາປາບປາມກຳລັງປະຕິວັດ ແຕ່ກໍ່ບໍ່ສາມາດປາບປາມກຳລັງປະຕິວັດໄດ້. ພາຍຫຼັງໄດ້ຮັບການປົດປ່ອຍບັນດາປະເທດ ອາເມຣິກາລາຕິນ ຍັງຄົງຮັກສາຮ່ອງຮອຍການປົກຄອງແບບສັກດີນາທີ່ຫຼ້າສະໄໝຈຶ່ງເຮັດໃຫ້ລັດທິທຶນນິຍົມຂະຫຍາຍຕົວຊ້າ ເຊິ່ງເປັນການສ້າງເງື່ອນໄຂອັນສຸກງອມໃຫ້ກວ່າພວກຈັກະພັດຜູ້ຮຸກຮານພາຍນອກ. ໂດຍສະເພາະພວກນາຍທຶນອາເມຣິກາເໜືອມີຄວາມສົນໃຈໃນດິນແດນຂົງເຂດນີ້ເປັນພິເສດ. ເພື່ອປ້ອງກັນບໍ່ໃຫ້ບັນດາປະເທດ ເອີຣົບ ກ້າວເຂົ້າມາຮຸກຮານຂົງເຂດນີ້ ແລະ ຕ້ອງການເຂົ້າມາຮຸກຮານໃນຂົງເຂດນີ້. ໃນປີ 1823 ປະທານາທິບໍດີ ອາເມຣິກາ ຊື່ວ່າ ເມີນໂຣ ໄດ້ນຳໃຊ້ທິດສະດີທີ່ເອີ້ນວ່າ ທິດສະດີ ເມີນໂຣ. ເນື້ອໃນສຳຄັນຖືກຫຍໍ້ລົງໃນຄຳຂວັນທີ່ວ່າ ທະວີບອາເມຣິກາຕ້ອງເປັນຂອງຄົນທະວີບອາເມຣິກາ ແຕ່ຄວາມຈິງແລ້ວເປັນພຽງແຕ່ປ່ຽນທະວີບ ອາເມຣິກາ ໃຫ້ຕົກມາຢູ່ໃນກຳມືຂອງອາເມຣິກາເທົ່ານັ້ນ. ຄວາມຈິງແລ້ວການກະທຳຂອງສະຫະລັດອາເມຣິການັບມື້ນັບກົດຂີ່ຂູດຮີດປະຊາຊົນ ອາເມຣິກາລາຕິນ.

## 2. ການຂະຫຍາຍຕົວຂອງເສດຖະກິດຕາມແບບລັດທິທຶນນິຍົມ

ໃນການປະຕິວັດທຶນນິຍົມແມ່ນບໍ່ສາມາດຢຸດການຂະຫຍາຕົວຂອງເສດຖະກິດທຶນນິຍົມ ແຕ່ມັນເປັນບາດກ້າວສຳຄັນ. ປະເທດ ອັງກິດ ມີບົດບາດນຳໜ້າກ່ຽວກັບເສດຖະກິດແບບທຶນນິຍົມຂອງໂລກ. ນັບແຕ່ ປີ 1930 ລະດັບການຂະຫຍາຍຕົວທາງດ້ານອຸດສະຫະກຳນັບມື້ນັບເພີ່ມຂຶ້ນ ການນຳໃຊ້ເຄື່ອງກົນຈັກເຂົ້າໃນການຜະລິດນັບມື້ນັບເພີ່ມຂຶ້ນສູງ ຂະແໜງຫຼອມໂລກຫະ ແລະ ເຄື່ອງກົນຈັກຂະຫຍາຍຕົວຢ່າງໄວວາແນໃສ່ເພື່ອຕອບສະໜອງຄວາມຕ້ອງການອຸປະກອນເຕັກນິກໃນຂົງເຂດອຸດສະຫະກຳ. ພ້ອມດຽວກັນນັ້ນການສ້າງທາງລົດໄຟກໍ່ມີເພີ່ມຂຶ້ນຢ່າງໄວວາ. ປີ 1930 ເສັ້ນທາງລົດໄຟທີ່ເຊື່ອມຕໍ່ລະຫວ່າງ ແມນເຊດເຕີ ແລະ ລີເວີພູ ເປີດການນຳໃຊ້ ແລະ ຮອດປີ 1850 ອັງກິດມີເສັ້ນທາງລົດໄຟຍາວຮອດ 10 ພັນກິໂລແມັດ ສິ່ງດັ່ງກ່າວນັ້ນໄດ້ຊຸກຍູ້ໃຫ້ຕະຫຼາດຈຳໜ່າຍສິນຄ້າຂະຫຍາຍຕົວ ແລະ ເພີ່ມທະວີບໃນການພົວພັນເສດຖະກິດລະຫວ່າງສູນກາງອຸດສະຫະກຳ. ເຖິງວ່າຈະຢູ່ໃນໄລຍະການພັດທະນາເສດຖະກິດອຸດສະຫະກຳການຄ້າຂອງອັງກິດກໍ່ຍັງບໍ່ສາມາດຫຼີກລ້ຽງວິກິດການທາງເສດຖະກິດ. ວິກິດການທາງດ້ານເສດຖະກິດຄັ້ງຍິ່ງໃຫຍ່ເກີດຂຶ້ນທຳອິດໃນປີ 1825 ແຕ່ນັ້ນມາຮອດ 10 ປີໃດ ກໍ່ຈະມີວິກິດການເກີດຂຶ້ນມາຄືໃນປີ 1837 ແລະ ປີ 1847 ເຮັດໃຫ້ເກີດມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບເສດຖະກິດລວມຂອງບັນດາປະເທດ ເອີຣົບ.

ປະເທດ ຝຣັ່ງ ເປັນມະຫາອຳນາດທີ 2 ທີ່ມີບົດບາດທາງດ້ານເສດຖະກິດຂອງໂລກ, ການປະຕິວັດອຸດສະຫະກຳມີທ່າອ່ຽງກ້າວໜ້າ. ປະລິມານເຄື່ອງຈັກອາຍນ້ຳໄດ້ຖືກນຳໃຊ້ເພີ່ມຂຶ້ນຢ່າງໄວວາ, ປີ ຄ.ສ 1820 ມີ 65 ເຄື່ອງ, ປີ ຄ.ສ 1830 ເພີ່ມເປັນ 616 ເຄື່ອງ, ປີຄ.ສ 1848 ເພີ່ມເປັນ 4853 ເຄື່ອງ. ປະລິມານຜະລິດຕະພັນຈາກຂະແໜງອຸກສະຫະກຳໜັກເພີ່ມຂຶ້ນຢ່າງຈະແຈ້ງ: ຖ່ານຫີນໃນປີ 1832 ມີ 225 ພັນໂຕນ ຫຼື 225.000 ໂຕນຮອດປີ 1846 ເພີ່ມຂຶ້ນເປັນ 586. 000 ໂຕນ. ເຫຼັກ ແລະ ເຫຼັກກ້າໃນປີ 1932 ມີ 148.000

ໂຕນ, ຮອດປີ 1846 ເພີ່ມຂຶ້ນເຖິງ 373.000 ໂຕນ. ການສ້າງເສັ້ນທາງລົດໄຟໄດ້ຮັບການສະໜັບສະໜູນຄື: ແຕ່ປີ 1831-1841 ມີຄວາມຍາວ 38-573 ກິໂລແມັດຮອດປີ 1845 -1847 ຍາວ 880-1832 ກິໂລແມັດ . ບັນດາຄວາມກ້າວໜ້າຢູ່ໃນຂົງເຂດດິນແດນທະວີບ ເອີຣົບ ຖືວ່າອຸດສະຫະກຳຝຣັ່ງມີການຂະຫຍາຍຕົວກວ່າໝູ່. ລະດັບການຂະຫຍາຍຕົວຍັງຊ້າຢູ່ໃນຂະແໜງການນ້ອຍ ຍ້ອນການຄົງຕົວຢ່າງຫຼວງຫຼາຍຂອງລະບອບປົດຖືກະສິກຳຂະໜາດນ້ອຍເຮັດໃຫ້ຕະຫຼາດຈຳໜ່າຍສິນຄ້າຖືກຮັດແຄບ, ຂາດແຄນວັດຖຸດິບ. ການປົກຄອງຂອງ ລັດຖະບານ ຫຼຸຍຟີລິບ ໄດ້ກາຍເປັນບັນຫາຢ່າງໃຫຍ່ຫຼວງ ຍ້ອນພວກຂຸນນາງການເງິນເມົາມົວແຕ່ນຳການສ້າງຮັ່ງຄູນມີທາງທະເລ ແລະ ການອອກເງິນໃຫ້ກູ້ຢືມບໍ່ແມ່ນການຂະຫຍາຍຕົວທາງດ້ານການຜະລິດ. ເຖິງແມ່ນວ່າປະເທດຝຣັ່ງເດີນຕາມທິດສະດີລັດທິທຶນນິຍົມແຕ່ກໍ່ຍັງບໍ່ສາມາດຫຼີກລ້ຽງວິກິດການທາງດ້ານເສດຖະກິດ ໂດຍສະເພາະແມ່ນວິກິດການໃນປີ 1847 ເຊິ່ງສົ່ງຜົນສະທ້ອນຢ່າງຮຸນແຮງ.

ປະເທດ ສະຫະລັດອາເມຣິກາ ສຳເລັດໃນການດຳເນີນການຕໍ່ສູ້ເພື່ອຍາດເອກະລາດນັບແຕ່ກາງສະຕະວັດທີ 18 ສະນັ້ນ, ຈິ່ງເປັນເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍຕົວຂອງເສດ ຖະກິດທຶນນິຍົມ. ຈຸດພິເສດຂອງເສດຖະກິດ ອາເມຣິກາ ຈະແຕກຕ່າງຈາກ 3 ຂົງເຂດເສດຖະກິດຢູ່ທາງພາກໃຕ້. ລະບົບການຜະລິດກະສິກຳອີງໃສ່ກຳລັງແຮງງານຂອງຂ້າທາດຜິວດຳຖືກນຳໃຊ້ຢ່າງກວ້າງຂວາງ. ຢູ່ພາກຕາເວັນອອກສ່ຽງເໜືອລັດທິທຶນນິຍົມໂດຍລວມແລ້ວແມ່ນບໍ່ມີບັນຫາຫຍັງດັ່ງນັ້ນ, ຈິ່ງມີການຂະຫຍາຍຕົວຢ່າງໄວວາ. ສ່ວນຢູ່ພາກຕາເວັນຕົກພື້ນຖານເສດຖະກິດຕົ້ນຕໍແມ່ນການຜະລິດກະສິກຳມີບົດບາດ. ການປະຕິວັດອຸດສະຫະກຳເກີດຂຶ້ນທຳອິດໃນສະຕະວັດທີ 19 ໂດຍເລີ່ມຈາກຂະແໜງກະສິກຳຕໍ່າແຜນໄປສູ່ຂະແໜງຫຼອມໂລຫະ, ອຸດສະຫະກຳໜັກ ແລະ ອຸດສະຫະກຳທາງລົດໄຟ. ປະມານປີ 1830-1837 ປະລິມານແຮ່ເຫຼັກເພີ່ມຂຶ້ນ 51% ຖ່ານຫີນເພີ່ມຂຶ້ນ 226%. ໃນຊ່ວງປີ 1830-1850 ເສັ້ນທາງລົດໄຟເພີ່ມຂຶ້ນແຕ່ 23 ໄມ-9.000 ໄມ. ເຖິງຢ່າງໃດກໍ່ຕາມໃນຊຸມປີ 30-50ຂອງສະຕະວັດທີ 19 ສະຫະລັດ ອາເມຣິກາ ຍັງເປັນປະເທດໜຶ່ງທີ່ມມີຂະແໜງກະສິກຳເປັນພື້ນຖານຕົ້ນຕໍທາງດ້ານເສດຖະກິດ, ເປັນຕະຫຼາດຈຳໜ່າຍວັດຖຸດິບທີ່ເປັນໄມ້ອຸດສະຫະກຳໃຫ້ແກ່ທະວີບ ເອີຣົບ ໂດຍສະເພາະແມ່ນປະເທດ ອັງກິດ. ເປັນເວລາດົນນານພື້ນຖານເສດຖະກິດຂອງ ອາເມຣິກາ ໄດ້ມີບົດບາດເປັນອະນານິຄົມຂອງ ເອີຣົບ. ສາຍເຫດຕົ້ນຕໍກໍ່ຍ້ອນວ່າການຄົງຕົວຂອງລະບອບຂ້າທາດໃນນິຄົມການກະເສດຂອງຢູ່ພາກໃຕ້. ພວກເຈົ້າທາດທີ່ກຳອຳນາດບໍ່ສົນໃຈຕໍ່ກັບການຂະຫຍາຍຕົວຂອງລັດທິທຶນນິຍົມ ແຕ່ພັດເອົາໃຈໃສ່ກໍ່ກັບການຜະລິດສິນຄ້າສົ່ງໃຫ້ກັບ ອັງກິດ ເພື່ອທຳການຄ້າຂາຍຝ້າຍ ແລະ ສິນຄ້າກະສິກຳອື່ນ.ພາຍຫຼັງວິການທາງດ້ານເສດຖະກິດໃນຄັ້ງທຳອິດປີ 1837-1842 ອຸດສະຫະກຳຂອງ ອາເມຣິກາຈິ່ ງຄ່ອຍມີການຂະຫຍາຍຕົວຢ່າງແຂງແຮງ. ໂດຍສະເພາະແມ່ນການຂະ ຫຍາຍຕົວຂອງຂແໜງຂຸດຄົ້ນຄຳຢູ່ ຄາຣີຟໍເນຍ ນັບມື້ນັບເຮັດໃຫ້ ອາເມຣິກາ ຫັນມາສູ່ການຜະລິດອຸດສະຫະກຳ.

ປະເທດ ອີຕາລີ ມີລັກສະນະຄ້າຍຄືກັບຢູ່ປະເທດເຢຍລະມັນແມ່ນຍັງບໍ່ທັນມີການປະຕິວັດທຶນນິຍົມການພົວພັນການຜະລິດແບບສັກດີນາຍັງຄອບງຳ. ປະເທດຊາດຖືກຕັດແບ່ງ. ຍິ່ງໄປກວ່ານັ້ນ ດິນແດນບາງສ່ວນຂອງ ອີຕາລີ ຍັງຖືກ ປະເທດ ໂອຕຣິດ, ພື້ນຖານເສດຖະກິດຕົ້ນຕໍແມ່ນການກະສິກຳ, ມີພຽງແຕ່ພາກ

ເໜືອເທົ່ານັ້ນເຊັ່ນ: ໂລງບາເດຍ, ປີເອໂມງ ປະກົດມີໂຮງງານຕໍ່າແຜ່ນແພ. ມາຮອດຊຸມປີ 40 ເລີ່ມມີການນໍາໃຊ້ເຄື່ອງກົນຈັກເຂົ້າໃນການຜະລິດ.

ລາດຊະອານາຈັກສັກດີນາ ໂອຕຣິດ ມີຫຼາຍຊົນເຜົ່າແຕ່ການຈັດຕັ້ງລັດທິທຶນນິຍົມເກີດຂຶ້ນຂ້ອນຂ້າງໄວ ແຕ່ພັດຂະຫຍາຍຕົວຊ້າ.

ລັດທິທຶນນິຍົມບໍ່ພຽງແຕ່ດໍາເນີນໃນຂົງເຂດອຸດສະຫະກໍາ-ການຄ້າເທົ່ານັ້ນແຕ່ຍັງແຊກແຊງເຂົ້າຂະແໜງກະສິກໍາ. ການດໍາເນີນທຸລະກິດກ່ຽວກັບທີ່ດິນແມ່ນໄປຕາມທິດທາງລັດທິທຶນນິຍົມ. ການນໍາໃຊ້ເຕັກນິກອັນໃໝ່ຢູ່ໃນຫຼາຍປະເທດເຮັດໃຫ້ຜົນຜະລິດກະສິກໍາເພີ່ມຂຶ້ນແລະ ມີຄຸນນະພາບສູງຂຶ້ນ.

ສະນັ້ນ, ໃນຊ່ວງກາງຂອງຕົ້ນສະຕະວັດທີ 19 ປະມານປີ ຄ.ສ 1815-1848 ການປະຕິວັດອຸດສະຫະກໍາໄດ້ຂະຫຍາຍຕົວຢູ່ບັນດາປະເທດມະຫາອໍານາດ ເຮັດໃຫ້ຂະແໜງເສດຖະກິດກ້າງຂຶ້ນສູ່ລະດັບສູງ. ສ່ວນຢູ່ປະເທດອື່ນເຖິງແມ່ນວ່າບໍ່ທັນມີການປະຕິວັດອຸດສະຫະກໍາກໍ່ຕາມແຕ່ເສດຖະກິດທຶນນິຍົມກໍ່ສາມາດຍາດເອົາຜົນສໍາເລັດຫຼາຍພໍສົມຄວນ ຕໍ່ໜ້າສະພາບການເປັນຄືແນວນັ້ນຈິ່ງກາຍເປັນແຫຼ່ງສະໜອງວັດຖຸດິບທີ່ອຸດົມສົມບູນ ແລະ ເປີດກວ້າງຄວາມສາມາດໃນການຜະລິດອັນໃຫຍ່ຫຼວງ. ເວລາດຽວກັນນັ້ນມັນກໍ່ຍັງສົ່ງຜົນສະທ້ອນຕໍ່ກັບການເພີ່ມຂໍ້ຂັດແຍງທາງສັງຄົມ. ຄຽງຄູ່ກັບຄວາມຂັດແຍ່ງລະຫວ່າງລັດທິທຶນນິຍົມ ແລະ ລະບອບສັກດີນາ ກໍ່ຍັງມີຂໍ້ຂັດແຍ່ງລະຫວ່າງຊົນຊັ້ນນາຍທຶນ ແລະ ຊົນຊັ້ນກໍາມະຊີບ. ສິ່ງດັ່ງກ່າວນັ້ນໄດ້ສົ່ງຜົນສະທ້ອນຕໍ່ກັບການປ່ຽນແປງການປະຕິວັດໃນຊ່ວງກາງສະຕະວັດທີ 19.

### 3. ບັນດາທິດສະດີກ່ຽວກັບການເມືອງ, ເສດຖະກິດ ແລະ ປັດຊະຍາຄລາສິກ

ປະເທດອັງກິດເປັນບ່ອນກໍາເນີດການປະຕິວັດອຸດສະຫະກໍາ ແລະ ມີເສດຖະກິດທຶນນິຍົມຂະ ຫຍາຍຕົວ ທັງເປັນບ່ອນກໍາເນີດຫຼາຍທິດສະດີຂອງເສດຖະກິດທຶນນິຍົມ. ໃນສະຕະວັດທີ 18 ອາດາມສະມິດ (1723-1790) ໄດ້ປະກອບສ່ວນສໍາຄັນໃນການສ້າງທິດສະດີເສດຖະກິດທຶນນິຍົມຂອງລັດທິທຶນນິຍົມ. ທ່ານເປັນຄົນທໍາອິດທີ່ປະກາດວ່າ: ການອອກແຮງງານແມ່ນກົກເຄົ້າຂອງມູນຄ່າລາຄາສິນຄ້າ, ລາຄາສິນຄ້າຂຶ້ນກັບກໍາລັງແຮງຂອງການອອກແຮງງານເພື່ອຜະລິດສິນຄ້າເປັນເປັນຕົວກໍານົດ. ເງິນຄ່າແຮງງານ ຫຼື ເງິນເດືອນຂອງກໍາມະກອນ ແມ່ນພາກສ່ວນໜຶ່ງໃນການຜະລິດຂອງກໍາມະກອນ ແລະ ສິ່ງນັ້ນເປັນການວັດແທກລາຄາ ແລະ ເປັນສິ່ງຕັດສິນຊີ້ຂາດລາຄາສິນຄ້າ.ກໍາໄລແມ່ນພາກສ່ວນທີ່ຫັກອອກຈາກມູນຄ່າສິນຄ້າທີ່ກໍາມະກອນເປັນຜູ້ຜະລິດອອກມາ. ແຕ່ທ່ານ ໄດ້ເວົ້າວ່າໃນເງື່ອນໄຂທີ່ລັດທິທຶນນິຍົມຂະຫຍາຍຕົວ ແຕ່ລາຄາສິນຄ້າຍັງຂຶ້ນກັບເງິນເດືອນ, ການຫັກກໍາໄລ ແລະ ການເສຍພາສີເປັນບ່ອນກໍານົດ. ຍ້ອນແນວນັ້ນທ່ານຈິ່ງບໍ່ສາມາດເວົ້າເຖິງຄ່າທຶນຄົງທີ່ໃນການຜະລິດສິນຄ້າອອກມາ ຍ້ອນແນວນັ້ນຈິ່ງບໍ່ສາມາດຮູ້ໄດ້ກ່ຽວກັບຂະບວນການຜະລິດສິນຄ້າ. ທ່ານຍັງເປັນຜູ້ທໍາອິດທີ່ໄດ້ນໍາສະເໜີກ່ຽວກັບໂຄງສ້າງທາງສັງຄົມທຶນນິຍົມປະກອບມີ 3 ຊົນຊັ້ນຄື: ກໍາມະກອນ, ນາຍທຶນ ແລະ ເຈົ້າທີ່ດິນ ແຕ່ບໍ່ໄດ້ເວົ້າເຖິງການຕໍ່ສູ້ຂອງຊົນຊັ້ນໃນສັງຄົມນັ້ນ



ອາດາມສະມິດ (1723-1790)

ເດວິດ ຣິກາກໂດ (1772-1823) ແມ່ນຜູ້ສືບຕໍ່ຜັນຂະຫຍາຍທິດສະດີການເມືອງ, ເສດຖະກິດໃນຕົ້ນສະຕະວັດທີ 19. ໂດຍເລີ່ມຈາກແນວຄິດທີ່ວ່າແຮງງານແມ່ນກົກເຄົ້າຂອງການກຳນົດມູນຄ່າສິນຄ້າ, ທ່ານໄດ້ອະທິບາຍຂໍ້ຂັດແຍ່ງລະຫວ່າງສິດຜົນປະໂຫຍດຂອງຊົນຊັ້ນໃນສັງຄົມທຶນນິຍົມ ແຕ່ທ່ານເຫັນວ່າ ຂໍ້ຂັດແຍ່ງດັ່ງກ່າວແມ່ນກົດເກນທຳມະຊາດໃນການດຳລົງຊີວິດ. ທ່ານໄດ້ອະທິບາຍຢ່າງຖືກຕ້ອງວ່າເງິນເດືອນຂອງກຳມະກອນຍິ່ງສູງຜົນກຳໄລຂອງພວກນາຍທຶນຍິ່ງຕໍ່າ ແລະ ກົງກັນຂ້າມກັບແນວຄິດເສດຖະກິດຂອງ ອາດາມສະມິດ ແລະ ເດວິດ ຣິກາກໂດ ເຖິງແມ່ນວ່າຈະຖືກພວກຊົນຊັ້ນນາຍທຶນກຳຈັດກໍ່ຕາມແຕ່ມັນກໍ່ປະກອບສ່ວນສຳຄັນເຂົ້າໃນການຂະຫຍາຍຕົວຂອງທິດສະດີການເມືອງເສດຖະກິດທຶນນິຍົມ ກາກມາກ ໄດ້ຕີລາວ່າອອກມາວ່າ ບັນດາທ່ານທັງສອງແມ່ນຕົວແທນຂອງລະບອບການເມືອງ, ເສດຖະກິດນາຍທຶນ ແລະ ຖືເອົາທິດສະດີຂອງທ່ານເປັນກົກເຄົ້າຂອງການກຳເນີດໜໍ່ແໜງຂອງລັດທິສັງຄົມນິຍົມແບບວິທະຍາສາດ.



ເດວິດ ຣິກາກໂດ (1772-1823)

ໂທມັດ ມານທວິດ **Thomas Malthus** (1766-1834) ໄດ້ອະທິບາຍເຫດຜົນແຫ່ງຕົ້ນເຫດຂອງຄວາມທຸກຍາກລໍາບາກຂອງມະຫາຊົນຂອງລັດທິທຶນນິຍົມແມ່ນຍ້ອນຈໍານວນພົນຫຼາຍກວ່າສະບຽງອາຫານທີ່ທໍາມະຊາດຕອບສະໜອງໃຫ້. ຍ້ອນແນວນັ້ນ ຄວາມອຶດຫິວ, ຄວາມທຸກຍາກລໍາບາກ, ການລະບາດຂອງພະຍາດ ແລະ ການເຮັດເສິກສົງຄາມ ແມ່ນປະກົດເການທໍາມິຊາດໃນການແກ້ໄຂບັນຫາ "ພົນລະເມືອງຫຼາຍ" . ທາດແທ້ແມ່ນການກົດຂີ່ຂູດຮີດຂອງຊົນຊັ້ນນາຍທຶນຂອງກັບຊາວຜູ້ອອກແຮງງານ.



ດ້ານປັດຊະຍາ ກາງສະຕະວັດທີ 19, ເຢຍລະມັນເປັນບ່ອນກຳເນີດປັດຊະຍາຄລາສິກ ວິນແຮມ ຟີລດຣິກ ເຮແກນ (1770-1831) ແມ່ນນັກປັດຊະຍາເຢຍລະມັນ, ນອນໃນຝ່າຍຈິດຕະນິຍົມ, ທ່ານໄດ້ອະທິບາຍກ່ຽວກັບການຄົງຕົວຂອງ "ແນວຄວາມຄິດ" ເຊິ່ງຄວາມຈິງແລ້ວເປັນພຽງເກາະຫຸ້ມບັງໃຫ້ພະເຈົ້າ (ຄວາມເຊື່ອ). ຄຸນຄ່າຂອງປັດຊະຍາ ເຮແກນ ແມ່ນວິທີການພິສູດ ການຮັບຮູ້ຂະບວນການຂະຫຍາຍຕົວຂອງສິ່ງວັດຖຸເລີ່ມຈາກການຕໍ່ສູ້ລະຫວ່າງດ້ານທີ່ກົງກັນຂ້າມ ແລະ ປ່ຽນຈາກປະລິມານມາເປັນຄຸນນະພາບ. ຄວາມຈິງແລ້ວທ່ານເຫັນວ່າເປັນສັງຄົມແບບເລື່ອນລອຍ. ບໍ່ຍອມຮັບການຕໍ່ສູ້ລະຫວ່າງດ້ານທີ່ກົງກັນຂ້າມກັນໃນສັງຄົມທ່ານໄດ້ສະໜັບສະໜູນໃຫ້ມີການປະນີປະນອມເພື່ອຫຼຸບຜ່ອນຄວາມຂັດແຍ່ງຊົນຊັ້ນຢ່າງເລິກເຊິ່ງຢູ່ປະເທດເຢຍລະມັນ.




ວິນແຮມ ຟີລດຣິກ ເຮແກນ (1770-1831)

ມາກ ແລະ ອັງແກນໄດ້ນຳໃຊ້ແນວຄິດປັດຊະຍາວັດຖຸນິຍົມເພື່ອວິຈານອົງປະກອບຂອງແນວຄິດໃນປັດຊະຍາ ເຮແກນ ແລະ ແຕ່ນັ້ນມາທິດສະດີສັດຈະວິພາກແມ່ນທິດສະດີກ່ຽວກັບການຂະຫຍາຍຕົວ ແລະ ການປ່ຽນແປງ ເຊິ່ງປ່ຽນຈາກປະລິມານໄປສູ່ຄຸນນະພາບ. ໃນຊຸມປີ 30-40 ຂອງສະຕະວັດທີ 19ໄດ້ເກີດມີກະແສແນວຄິດໜຶ່ງຢູ່ໃນກຸ່ມນີ້ເອີ້ນວ່າຝ່າຍ ເຮແກນໜຸ່ມນ້ອຍ ອີງໃສ່ວິທີສັດຈະວິພາກຂອງເຮແກນ ດ້ວຍສະຕິຂອງຕົນ ແລະ ຖືສິ່ງນັ້ນເປັນແຮງຈູງໃຈແກ່ການຂະຫຍາຍຕົວຂອງປະຫວັດສາດສະແດງອອກໃນ

ປະເທດ ແລະ ປັນຍາຊົນຜູ້ກ້າວໜ້າ ພວກເຂົາມັກຈະນຳໃຊ້ຄຳເວົ້າເຮັດການປະຕິວັດ ແຕ່ກໍ່ເປັນພຽງຄຳເວົ້າ ເພື່ອການນາບຂູ່ ເພື່ອສະແດງໃຫ້ເຫັນທາດແທ້ຂອງຄວາມອ່ອນແອຂອງຊົນຊັ້ນນາຍທຶນເຢຍລະມັນ ແລະ ການບໍ່ມີອຳນາດຂອງພວກເຂົາໃນການຕໍ່ສູ້ຕ້ານກັບອຳນາດສັກດີນາ.

ລຸດວິດ ເຟີແບັກ 1804-1872 ແມ່ນນັກປັດຊະຍາເຢຍລະມັນຝ່າຍວັດຖຸນິຍົມ ໃນເວລາໃນຂະນະທີ່ວິຈານ ເຮແກນ ແລະ ຕໍ່ສູ້ຕ້ານກັບຄຣິສຕະຈັກ ທ່ານໄດ້ອະທິບາຍກ່ຽວກັບບັນຫາພື້ນຖານຂອງປັດຊະຍາວັດຖຸນິຍົມ: ຄົນເຮົາຮັບຮູ້ການຄົງຕົວແບບພາວະວິໄສຂອງທຳມະຊາດ ແລະ ການຄົງຕົວຢ່າງເອກະລາດຕໍ່ຄວາມຄິດຂອງມະນຸດ. ແນວຄິດວັດຖຸນິຍົມຂອງ ເຟີແບັກ ມີລັກສະນະແບບໄຝ່ຝັນ ເລື່ອນລອຍບໍ່ຄົງຕົວບໍ່ຮັບຮູ້ ແລະ ເຂົ້າໃຈວິທີສັດຈະວິພາກ. ກ່ຽວກັບບັນຫາໃນສັງຄົມ ເຟີແບັກ ຍັງບໍ່ສາມາດຊອກຫາວິທີການຮັບຮູ້ທາງດ້ານຄວາມຄິດ. ທ່ານໄດ້ອະທິບາຍທຸກປະກົດການແມ່ນເກີດຈາກມະນຸດແບບລວມໆແຕ່ບໍ່ຍົກໃຫ້ເຫັນສາຍພົວພັນລະຫວ່າງພວກເຂົາກັບການພົວພັນການຜະລິດແມ່ນປັດໄຈໃນການຕັດສິນຊີ້ຂາດ ທ່ານດຳເນີນການສ້າງສັງຄົມໃໝ່ດ້ວຍຄວາມຮັກຂອງມະນຸດ. ຄວາມຈິງແລ້ວເປັນການຫຼຸດຜ່ອນການຕໍ່ສູ້ຊົນຊັ້ນ. ຍົກເວັ້ນການປະຕິວັດ. ມາກ ແລະ ອັງແກນໄດ້ເວົ້າວ່ານັບແຕ່ນັ້ນມາທິດສະດີວັດຖຸນິຍົມ ແລະ ການຂະຫຍາຍຕົວຈົນປັດຊະຍາໄດ້ກາຍເປັນວິທະຍາສາດຂະແໜງໜຶ່ງ.



ລຸດວິດ ເຟີແບັກ 1804-1872

ເຖິງວ່າຍັງມີຂໍ້ຈຳກັດຫຼາຍຢ່າງແຕ່ ເຮແກນ ແລະ ເຟີແບັກ ໄດ້ປະກອບສ່ວນ ແລະ ມີບົດບາດສຳຄັນໃນປັດຊະຍາຄລາສິດຂອງເຢຍລະມັນ. ມາກ ແລະ ອັງແກນໄດ້ສືບຕໍ່ແນວຄິດສັດຈະວິພາກຂອງປັດຊະຍາດັ່ງກ່າວນັ້ນຢ່າງສ້າງສັນເພື່ອສ້າງແນວຄິດວັດຖຸນິຍົມສັດຈະວິພາກ ແລະ ວັດຖຸນິຍົມປະຫວັດສາດ.

ຍ້ອນແນວນັ້ນການກຳເນີດທິດສະດີການເມືອງ, ເສດຖະກິດ ແລະ ປັດຊະຍາ ທີ່ກ່າວມາຂ້າງເທິງກ່ຽວພັນກັບການຂະຫຍາຍຕົວຂອງພື້ນຖານເສດຖະກິດລັດທິທຶນນິຍົມ. ບັນດານັກວິຊາການຜູ້ກ້າວໜ້າໄດ້ພະຍາຍາມອະທິບາຍປະກົດການໃໝ່ຂອງສັງຄົມ. ເຖິງວ່າຈະຍັງມີຂໍ້ຈຳກັດຫຼາຍຢ່າງກໍ່ຕາມແຕ່ມັນກໍ່ຍັງປະກອບສ່ວນສຳຄັນເຂົ້າໃນສະຕິປັນຍາຂອງມວນມະນຸດ. ດ້ວຍວິທີການທີ່ມີການວິພາກວິຈານ. ມາກ ແລະ ອັງແກນໄດ້ນຳເອົາໝາກຜົນຂອງແນວຄວາມຄິດສ້າງສັນນັ້ນເພື່ອເປັນພາກສ່ວນໜຶ່ງຂອງລັດທິຄອມມູນິດວິທະຍາສາດ.

## III.ຂະບວນການລຸກຮື້ນຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນ ແລະ ບັນດາການເຄື່ອນໄຫວທາງສັງຄົມກ່ອນລັດທິມາດ

### 1. ສະຕາກຳຂອງຊົນຊັ້ນກຳມະກອນ

ການຂະຫຍາຍຕົວຂອງລັດທິທຶນນິຍົມເຮັດໃຫ້ຄວາມສາມາດໃນການຜະລິດຂອງໂລກສູງຂຶ້ນ. ບັນສູນກາງອຸດສະຫະກຳການຄ້າເກີດຂຶ້ນຢ່າງຫຼວງຫຼາຍ, ເຮັດໃຫ້ບັນຍາກາດຂອງທ່າເຮືອ ແລະ ຕົວເມືອງມີຄວາມຄຶກຄື້ນ, ເສັ້ນທາງຄົມມະນາຄົມທາງບົກ-ທາງນ້ຳມີຫຼວງຫຼາຍ ແລະ ພາຫະນະໂທລະຄົມສື່ສານມີຄວາມທັນສະໄໝ. ແຕ່ຄຽງຄູ່ກັບການຂະຫຍາຍຕົວດັ່ງກ່າວຄວາມຂັດແຍ່ງລະຫວ່າງນາຍທຶນ ແລະ ກຳມະກອນນັບມື້ນັບມີການກົດຂີ່ຂູດຮີດກັນຫຼາຍຂຶ້ນ. ທຸກຂົງເຂດຢູ່ບັນດາປະເທດຕ່າງໆຊີວິດການເປັນຢູ່ຂອງຊົນຊັ້ນກຳມະກອນພົບກັບຄວາມທຸກຍາກລຳບາກ.

ຂໍຍົກເອົາປະເທດອັງກິດເຊິ່ງເປັນປະເທດທີ່ມີອຸດສະຫະກຳການຄ້າຂະຫຍາຍຕົວທີ່ສຸດມາເປັນຕົວຢ່າງ. ການອອກແຮງງານໃນແຕ່ລະວັນກວມເວລາ 16-18 ຊົ່ວໂມງ, ຕົວເລກຂອງກຳມະກອນທີ່ເປັນຊາຍສະກັນກວມ 30% ສ່ວນທີ່ຍັງແມ່ນກຳມະກອນທີ່ມີອາຍຸບໍ່ເຖິງກະສຽນ (ບໍ່ຮອດ 18ປີ), ເງິນເດືອນຂອງກຳມະກອນຜູ້ຍິງ, ເດັກນ້ອຍຕ່ຳກວ່າຊາຍສະກັນຫຼາຍ. ໃນໄລຍະເວລາ 20 ປີ ແຕ່ປີ ຄ.ສ 1815-1835 ເງິນເດືອນຂອງກຳມະກອນຫຼຸດລົງ 3 ເທົ່າ. ເງື່ອນໄຂໃນການກິນຢູ່ ແລະ ດຳລົງຊີວິດແມ່ນຂ້ອນຂ້ອງລຳບາກ.

ເບື້ອງຫຼັງຄວາມສວຍງາມຂອງລັດທິທຶນນິຍົມ, ຄວາມເປັນຈິ່ງທີ່ເກີດຂຶ້ນກັບຊີວິດການເປັນຢູ່ຂອງກຳມະກອນ ທ່ານ ກາກມາກ ແລະ ທ່ານຟີລິບອັງແກນ ໄດ້ອະທິບາຍໃກ້ຄຽງຄວາມເປັນຈິງ ແລະ ມີຊີວິດຊີວາທີ່ສຸດໃນໃນຜົນງານການຂຽນທີ່ມີຊື່ສຽງທີ່ວ່າ "ສະຕາກຳຂອງຊົນຊັ້ນຜູ້ອອກແຮງງານຢູ່ອັງກິດ". ການກົດຂີ່ຂູດຮີດອັນໜັກໜ່ວງຂອງລັດທິທຶນນິຍົມເຮັດໃຫ້ຄວາມສຳພັນລະຫວ່າງນາຍທຶນ ແລະ ກຳມະກອນ ນັບມື້

ນັບເຄັ່ງຕຶງ ແລະ ຄວາມຂັດແຍ່ງທາງສັງຄົມນັບມື້ນັບຮຸນແຮງການຕໍ່ສູ້ຊົນຊັ້ນລະຫວ່າງຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະຊີບນັບມື້ຮຸນແຮງຂຶ້ນ ແລະ ບໍ່ສາມາດຢຸດຕິລົງໄດ້.

## 2. ລັດທິສັງຄົມນິຍົມແບບໄຝ່ຝັນ

ຄວາມທຸກຍາກລຳບາກອັນໜັກໜ່ວງຂອງມວນຊົນໄດ້ສະແດງອອກຜ່ານຕົວລະຄອນທີ່ກ້າວໜ້າຂອງຊົນຊັ້ນຜູ້ຮັ່ງມີ. ພວກເຂົາຮັບຮູ້ໄດ້ເຖິງລັກສະນະກົງກັນຂ້າມໃນສັງຄົມຂອງລັດທິທຶນນິຍົມ, ພວກເຂົາໄດ້ຊອກວິທີການໃນການສ້າງສັງຄົມໃໝ່ທີ່ດີກວ່າເກົ່າ, ເຊິ່ງເປັນສັງຄົມທີ່ບໍ່ມີການກົດຂີ່ຂູດຮີດ. ພວກເຂົາໄດ້ຍົກຂຶ້ນມາສະເໜີໃນບົດວິທະຍານິພົນສັງຄົມນິຍົມ ແລະ ແຜນການສ້າງລັດທິສັງຄົມນິຍົມ. ແຕ່ນັ້ນມັນກໍ່ປະກົດມີລັດທິສັງຄົມນິຍົມແບບໄຝ່ຝັນຜູ້ທີ່ເປັນຕົວແທນອັນສະຫຼາດສ່ອງໃສໃນເຄິ່ງຕົ້ນສະຕະວັດທີ 19 ແມ່ນທ່ານ ແຊັງ ຊີໂມງ ແລະ ຊາກເລີ ຟົວລີເອ ຢູ່ຝຣັ່ງ ແລະ ໂຣເບີດ ໂອແວນ ແຫ່ງອັງກິດ.




ແຊັງ ຊີໂມງ Saint Simon (1760 - 1825) Robert Owen (1771 - 1858)

ແຊັງ ຊີໂມງ Saint Simon (1760 - 1825) ກຳເນີດໃນຄອບຄົວຂຸນນາງ, ໄດ້ເຂົ້າຮ່ວມໃນສົງຄາມຍາດເອກະລາດຢູ່ອາເມຣິກາເໜືອ, ມີແນວຄິດກ້າວໜ້າ, ຕ້ອງການຊອກເສັ້ນທາງເພື່ອປົດປ່ອຍຄວາມທຸກຍາກຂອງມວນມະນຸດ. ແນວຄວາມຄິດຂອງທ່ານຖືກນຳສະເໜີໃນບົດປະພັນ" ຈົດໝາຍຈາກເຈນນີວາ (ປີ 1802)" ແລະ ບົດປະພັນອື່ນໆອີກ. ຕາມແນວຄິດຂອງທ່ານປະຫວັດສາດແມ່ນວິວັດທະນາການ, ທີ່ບໍ່ສາມາດຢຸດ, ລະບອບໃໝ່ທີ່ເກີດຂຶ້ນຕາມຫຼັງຍ່ອມມີຄວາມກ້າວໜ້າກວ່າລະບອບເກົ່າທີ່ມີຢູ່ກ່ອນແລ້ວ, ແຮງຈູງໃຈ ແມ່ນຢູ່ທີ່ຄວາມຮູ້ຂອງຄົນ. ທ່ານຮັບຮູ້ໄດ້ກ່ຽວກັບການຕໍ່ສູ້ຊົນຊັ້ນໃນສັງຄົມລະຫວ່າງພວກທີ່ກິນບໍ່

ຮູ້ຈັກພໍ້ນັ້ນກໍ່ຄືພວກຂຸນນາງກັບນັກອຸດສະຫະກຳປະກອບດ້ວຍນາຍທຶນ ແລະ ກຳມະກອນ. ທ່ານໄດ້ດຳເນີນການສ້າງສັງຄົມໃໝ່ພາຍໃຕ້ການປົກຄອງຂອງນັກອຸດສະຫະກຳໃນນັ້ນທຸກຄົນລ້ວນແຕ່ອອກແຮງງານຢູ່ຕາມຫົວໜ່ວຍການຜະລິດທີ່ມີສິດສະເໝີພາບ. ການວາງແຜນທາງດ້ານເສດຖະກິດ ແລະ ການລົບລ້າງກິດລະບຽບການທຳມາຫາກິນແບບກາຝາກ (ນາຍທຶນອາໄສແຮງງານຂອງກຳມະກອນ) . ບໍ່ຮັບຮູ້ພາລະກິດທາງປະຫວັດສາດຂອງຊົນຊັ້ນກຳມະຊີບ. ທ່ານດຳເນີນການປະຕິຮູບສັງຄົມ ໂດຍການຫັນໄປສູ່ສັນຕິພາບ ບໍ່ແມ່ນປ່ຽນແປງດ້ວຍວິທີການເຮັດການປະຕິວັດ. ຊົນຊັ້ນນາຍທຶນແມ່ນບໍ່ໄດ້ຫົວຊາຕໍ່ກັບການຕົກລົງກ່ຽວກັບແຜນການທີ່ທ່ານໄດ້ສົ່ງມາໃຫ້.

ຊາກເລີ ພົວລີເອ (1772-1837) ຖືກຳເນີດໃນຄອບຄົວພໍ່ຄ້າ, ລ້ຽງເຄີຍກັບການຄ້າຂາຍມາແຕ່ຍັງນ້ອຍ, ສະນັ້ນທ່ານຈິ່ງເຫັນໄດ້ເຖິງຄວາມເຫັນແກ່ຕົວຂອງພວກນາຍທຶນມາແຕ່ຍັງນ້ອຍ. ທ່ານໄດ້ອະທິບາຍກ່ຽວກັບຫັກເອົາກຳໄລໃນການຄ້າຂາຍຂອງພວກນາຍທຶນ ແລະ ການໃຫ້ຄຳໝັ້ນສັນຍາແບບລອຍໆ ແຕ່ຄວາມຈິງປະປະຊາຊົນໃນສັງຄົມນາຍທຶນແມ່ນໜ້າສົງສານທີ່ສຸດ. ຜ່ານສຽງຮຽກຮ້ອງເພື່ອປະຊິດປະຊັນ ແລະ ເພື່ອເປີດໂປງທາດແທ້ຂອງລັດທິທຶນນິຍົມ. ທ່ານໄດ້ກຳນົດໄລຍະປະຫວັດສາດຂອງສັງຄົມມະນຸດຜ່ານ 4 ໄລຍະຄື: ການກຳເນີດ, ປ່າເຖື່ອນຄ້າຍຄືເດຍລະສານ, ການແບ່ງງານ ແລະ ຍຸກແຫ່ງຄວາມສີວິໄລ. ຄວາມສີວິໄລແມ່ນຊ່ວງເວລາຂອງລັດທິທຶນນິຍົມ, ໄດ້ປ່ຽນແປງສິ່ງຕ່າງໆທີ່ເຄີຍເຮັດໃນເມືອກ່ອນທີ່ມີລັກສະນະງ່າຍດາຍກາຍມາເປັນສິ່ງທີ່ມີຄວາມຫຍຸ້ງຍາກ, ບໍ່ຈະແຈ້ງ, ຄຸມເຄືອ, ມີລັກສະນະສອງດ້ານ. ທ່ານເວົ້າວ່າຄວາມສຸກຄົນໆໜຶ່ງຢູ່ເທິງບົນຄວາມທຸກຂອງຄົນອື່ນ. ຄວາມທຸກຍາກຂາດເຂີນເກີດມາຈາກຄວາມສົ້ນເປືອງຟຸມເຟືອຍ. ລະບອບສັງຄົມມະນຸດໃນອະນາຄົດຂອງ ພົວລີເອ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ຮູບແບບຂອງລວມໝູ່ (ສາມາດອະທິບາຍໄດ້ເປັນຄືລັກສະນະສະຫະກອນແບບລວມໝູ່) ແຕ່ລະສະຫະກອນປະກອບມີຫຼາຍຂະແໜງການຜະລິດ, ຕິດພັນສະໜິດແໜ້ນລະຫວ່າງອຸດສະຫະກຳ ແລະ ກະສິກຳ. ການອອກແຮງງານແມ່ນໜ້າທີ່, ແມ່ນຄວາມສຸກ ແລະ ຄວາມຕ້ອງການຂອງໝົດທຸກຄົນ, ບໍ່ມີໃຜເປັນກາຝາກຫາກິນບົນຄວາມທຸກຂອງຄົນອື່ນ. ຄວາມແຕກຕ່າງລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງການອອກແຮງງານດ້ວຍມັນສະໝອງ ແລະ ການອອກແຮງງານດ້ວຍຕີນມື ຄ່ອຍໆຖືກລົບລ້າງໄປ. ຕໍ່ກັບຄວາມກະລີລີລົ້ນໃນການຜະລິດ, ຊັບສິນບັດຂອງສະຫະກອນມີຄວາມອຸດົມສົມບູນຖືກນຳມາແບ່ງປັນຕາມຄວາມສາມາດໃນການຜະລິດ ແລະ ຄວາມສາມາດໃນການອອກແຮງງານຄື: 5/12 ແມ່ນຄ່າອອກແຮງງານ, 4/12 ແມ່ນຄ່າຄວາມສາມາດ ແລະ 3/12 ແມ່ນມອບໃຫ້ນາຍທຶນ. ທ່ານກໍ່ເຊັ່ນດຽວກັບ ແຊັງຊີໂມງ ບໍ່ໄດ້ກ່າວເຖິງພະລາກຳທາງປະຫວັດສາດຂອງຊົນຊັ້ນກຳມະຊີບ, ການປະທ້ວງການນຳໃຊ້ຄວາມຮຸນແຮງເຂົ້າໃນການປະຕິວັດ. ທ່ານໄດ້ສົ່ງແຜນການເຄື່ອນໄຫວຈັດຕັ້ງຂອງ ສະຫະກອນລວມໝູ່ເຖິງຊົນຊັ້ນຮັ່ງມີ ແລະ ຫວັງວ່າພຽງແຕ່ມີຄົນປະກອບເງິນຊ່ວຍເຫຼືອເກືອບ 4.000 ຄົນ ສັງຄົມໃໝ່ກໍ່ຈະໄດ້ຮັບການສ້າງຕັ້ງຂຶ້ນທັນທີ. ແຕ່ວ່າບໍ່ມີໃຜຈັກຄົນສົນໃຈຕໍ່ກັບສິ່ງທີ່ທ່ານຕ້ອງການ.

ໂຣເບີດ ໂອແວນ (1771 - 1858) ແມ່ນນັກສັງຄົມນິຍົມແບບໄຝ່ຝັນຂອງອັງກິດ ທ່ານໄດ້ທົດລອງສ້າງຕັ້ງສັງຄົມໃໝ່ຢູ່ໃນໂຮງງານສ່ວນຕົວຂອງທ່ານເອງ ທີ່ ລາແນັກ (ສະກັອດແລນ) ດ້ວຍວິທີການຄື: ກຳນົດ

ເວລາໃນການອອກແຮງງານໃນມື້ໜຶ່ງປະມານ 10 ຊົ່ວໂມງເຄິ່ງ, ລົບລ້າງຮູບການປັບໄໝດ້ວຍເງິນ, ມີການໃຫ້ເງິນໂບນັດ ແລະ ສ້າງໂຮງຮຽນລ້ຽງເດັກສຳລັບລູກກຳມະກອນ.

ທ່ານໄດ້ເວົ້າວ່າຕົ້ນເຫດຂອງຄວາມທຸກຍາກແມ່ນມາຈາກລະບອບການຍຶດຖືກຳມະສິດ ແລະ ການອອກແຮງງານຮັບຈ້າງເປັນຕົ້ນເຫດ.. ທ່ານໄດ້ດຳເນີນການສ້າງສະຫະກອນລວມໝູ່ ໃນນັ້ນຊັບສິນບັດເປັນຂອງສ່ວນລວມ, ລົບລ້າງຄວາມທຸກຍາກ, ການອອກແຮງງານໄດ້ກາຍເປັນໜ້າທີ່ ແລະ ຄວາມສຸກຂອງໝົດທຸກຄົນ ທ່ານເຫັນວ່າ ມີ 3 ການຕໍ່ສູ້ເພື່ອສ້າງຕັ້ງສັງຄົມໃໝ່ຄື: ລະບອບຍຶກຖືກຳມະສິດ, ສາສະໜາ ແລະ ການແຕ່ງງານຂອງພວກນາຍທຶນ. ທ່ານໄດ້ທຳການສະໜັບສະໜູນສັນຕິພາບ, ຕ້ານການນຳໃຊ້ກຳລັງເຂົ້າໃນການປະຕິວັດ, ບໍ່ໄດ້ອີງໃສ່ກຳລັງຂອງຊົນຊັ້ນກຳມະກອນ. ການທົດລອງສ້າງສັງຄົມໃໝ່ຂອງທ່ານຢູ່ທະວີບອາເມຣິກາໃນໄລຍະຕໍ່ມາກໍ່ພົບກັບຄວາມຫຼົ້ມເຫຼວຢ່າງຈະແຈ້ງເພາະແນວຄິດກົງກັນຂ້າມຂອງທ່ານ.

ແຊັງຊີໂມງ, ຟົວຣເອ, ໂອແວນ ແມ່ນຕົວແທນອັນສະຫຼາດສ່ອງໃສຂອງລັດທິສັງຄົມນິຍົມແບບໄຝ່ຝັນໃນ 30 ປີ ຂອງຕົ້ນສະຕະວັດທີ 19 ນັ້ນແມ່ນທິດສະດີໜຶ່ງທີ່ຍັງບໍ່ທັນເໝາະສົມກັບພື້ນຖານກັບການຜະລິດແບບລັດທິທຶນນິຍົມ, ບໍ່ທັນເໝາະສົມກັບການພົວພັນຊົນຊັ້ນ[15]. ທ່ານໄດ້ວິພາວິຈານ, ກ່າວປະນາມລະບອບທຶນນິຍົມ ແລະ ຕ້ອງການລົບລ້າງສັງຄົມດັ່ງກ່າວສ້າຕັ້ງສັງຄົມໃໝ່ທີ່ດີກວ່າ. ຊອກຫາວິທີທາງເພື່ອເຮັດໃຫ້ຊົນຊັ້ນຮັ່ງມີຮັບຮູ້ວ່າການກົດຂີ່ຂູດຮີດແມ່ນການກະທຳທີ່ໄຮ້ມະນຸດສະທຳ. ແຕ່ລັດທິສັງຄົມນິຍົມແບບໄຝ່ຝັນແມ່ນສັງຄົມທີ່ເໝາະສົມກັບຄວາມເປັນຈິງ ທີ່ບໍ່ສາມາດອະທິບາຍໄດ້ກ່ຽວກັບລະບອບຂ້າທາດຮັບຈ້າງຂອງລະບອບທຶນນິຍົມ ແລະ ບໍ່ສາມາດປະກາດໃຊ້ຂໍ້ກຳນົດໃນການຂະຫຍາຍຕົວຂອງລະບອບນັ້ນໄດ້ ແລະ ກໍ່ບໍ່ສາມາດຊອກຫາກຳລັງພົນຜູ້ທີ່ມີຫົວຄິດປະດິດສ້າງເພື່ອສ້າງສັງຄົມໃໝ່ນັ້ນກໍ່ຄືຊົນຊັ້ນກຳມະກອນ. ເຖິງຢ່າງໃດກໍ່ຕາມເງື່ອນໄຂທາງປະຫວັດສາດໃນເວລານັ້ນ ລັດທິສັງຄົມນິຍົມແບບໄຝ່ຝັນເປັນການເຄື່ອນໄຫວທາງດ້ານແນວຄິດທີ່ມີລັກສະນະຕັ້ງໜ້າ ແລະ ເປັນກົກເຄົ້າໜຶ່ງຂອງການກຳເນີດທິດສະດີມາກ.

### 3. ຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະກອນ

ຊົນຊັ້ນກຳມະກອນເກີດຂຶ້ນ ແລະ ຂະຫຍາຍຕົວຄຽງຄູ່ກັບການກຳເນີດ ແລະ ການຂະຫຍາຍຕົວຂອງຊົນຊັ້ນນາຍທຶນ. ແບບແຜນການດຳລົງຊີວິດຂອງພວກເຂົານັບມື້ນັບທຸກຍາກລຳບາກຍ້ອນການກົດຂີ່ຂູດຮີດຂອງຊົນຊັ້ນນາຍທຶນ, ສະນັ້ນພວກເຂົາຈຶ່ງເບື່ອໜ່າຍລະບອບການປົກຄອງນັ້ນ

[15] ທ່ານອັງກິດເວົ້າວ່າ: ສັງຄົມນິຍົມຂະຫຍາຍຕົວຈາກແນວຄວາມຄິດແບບໄຝ່ຝັນໄປສູ່ວິທະຍາສາດ